# ຜູ້ແທນປະຊາຊົນ

PHOUTHEN PASAXON

ສຽງຂອງສະພາແຫ່ງຊາດ

ສຳນັກງານຕັ້ງຢູ່ອາຄານຄະນະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na


# ປະທານ ສຸພານຸວົງ

## ຜູ້ນຳທີ່ດີເດັ່ນ ແລະ ເຄົາລົບຮັກຂອງປະຊາຊົນລາວບັນດາເຜົ່າ ຍືນຍົງໃນດວງໃຈຂອງພວກເຮົາຕະຫຼອດການະນານ



ວັນທີ 13 ກໍລະກົດ 1909 - 13 ກໍລະກົດ 2023 ຄົບຮອບ 114 ປີ

# ສະບັບພິເສດ

## ປະມວນເອກະສານການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX

ວັນທີ 26 ມິຖຸນາ - 18 ກໍລະກົດ 2023

ຜູ້ແທນປະຊາຊົນ
ສຽງຂອງສະພາແຫ່ງຊາດ PHOUTHEN PASAXON
ວັນທີ 26/06-18/07/2023

# ປະມວນຮູບພາບກອງປະຊຸມສະໄໝສາມັນ ເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX



ສຽງຂອງສະພາແຫ່ງຊາດ

# ຜູ້ແທນປະຊາຊົນ
PHOUTHEN PASAXON

ສຳນັກງານຕັ້ງຢູ່ອາລາມລະບະເລຂາທິການສະພາແຫ່ງຊາດ, ໂທ: 021 840 430 email: phouthen.na@gmail.com; www.na.gov.la; app: Lao na

ສະບັບພິເສດ
ປີທີ 12
26 ມິຖຸນາ - 18 ກໍລະກົດ
2023

## ປະມວນເອກະສານການດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX

## ປະທານສະພາແຫ່ງຊາດ ກ່າວສູນທອນພິດໄຂກອງປະຊຸມສະໄໝສາມັນເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX

ມື້ນີ້, ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ໃນທ່າມກາງບັນຍາກາດທີ່ທົ່ວພັກ-ລັດ, ທົ່ວກຳລັງປະກອບອາວຸດ ແລະ ທົ່ວປວງຊົນລາວທັງຊາດພວມສຸມໃສ່ຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ຄັ້ງທີ XI ຂອງພັກ, ມະຕິກອງປະຊຸມຄົບຄະນະ ຄັ້ງທີ 6 ຂອງຄະນະບໍລິຫານສູນກາງພັກ ສະໄໝທີ XI ກໍຄືແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX, ການດຳເນີນກອງປະຊຸມຄົບຄະນະກາງສະໄໝຂອງບັນດາອົງຄະນະພັກກະຊວງ, ອົງການທຽບເທົ່າ ແລະ ທ້ອງຖິ່ນ ໄດ້






ຮັບການຈັດຕັ້ງປະຕິບັດຢ່າງເປັນຂະບວນແຂງແຮງ ແລະ ມີຜົນສຳເລັດຢ່າງຈົບງາມ.

ໃນໂອກາດທີ່ມີຄວາມໝາຍສຳຄັນນີ້, ກອງປະຊຸມມີຄວາມພາກພູມໃຈ ແລະ ຄວາມປິຕິຍິນດີເປັນຢ່າງຍິ່ງ ທີ່ໄດ້ຕ້ອນຮັບທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມທີ່ມີຄວາມສຳຄັນຄັ້ງນີ້, ຂໍສະແດງຄວາມຂໍ່ານັບຊົມເຊີຍ ຢ່າງສຸດອົກສຸດໃຈ.

ຂໍສະແດງຄວາມຂໍ່ານັບຊົມເຊີຍ ແລະ ຍິນດີຕ້ອນຮັບບັນດາທ່ານຜູ້ນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານອະດີດຜູ້ນຳຂັ້ນສູງຂອງພັກ-ລັດ, ບັນດາທ່ານສະມາຊິກລັດຖະບານ, ຜູ້ຕາງໜ້າອົງການຈັດຕັ້ງພັກ-ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າແຫ່ງຊາດລາວ, ອົງການຈັດຕັ້ງມະຫາຊົນຂັ້ນສູນກາງ ຜູ້ຊົງຄຸນວຸດທິ, ສະຖາບັນການສຶກສາ, ຫົວໜ່ວຍທຸລະກິດ ທີ່ໄດ້ໃຫ້ກຽດເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງສຸດໃຈ.

ຂໍສະແດງຄວາມຊົມເຊີຍມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຊຸດທີ IX ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ທີ່ໄດ້ເຂົ້າຮ່ວມກອງປະຊຸມຄັ້ງນີ້ ຢ່າງພ້ອມພຽງ.

ການເຄື່ອນໄຫວຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາແຫ່ງຊາດ ໃນໄລຍະຕົ້ນປີ 2023 ແມ່ນຢູ່ໃນສະພາບການຂອງພາກພື້ນ ແລະ ສາກົນ ທີ່ມີການຜັນແປໄປຢ່າງສະຫຼັບຊັບຊ້ອນ, ເຄັ່ງຮ້ອນ ແລະ ມີຄວາມຫຼໍ່ແຫຼມຫຼາຍດ້ານ ທີ່ຄາດຄະເນໄດ້ຍາກ ເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ປະເທດຕ່າງໆໃນໂລກ ລວມທັງ ສປປ ລາວ ຂອງພວກເຮົາ ໂດຍສະເພາະຢ່າງຍິ່ງມີຜົນກະທົບຕໍ່ການແກ້ໄຂສະພາບຄວາມຫຍຸ້ງ

ອ່ານຕໍ່ໜ້າ 2

## ນາຍົກລັດຖະມົນຕີ ລາຍງານການເຄື່ອນໄຫວວຽກງານພົ້ນເດັ່ນຂອງລັດຖະບານ

ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການເຄື່ອນໄຫວວຽກງານພົ້ນເດັ່ນຂອງລັດຖະບານ ໃນ 6 ເດືອນຕົ້ນປີ 2023 ດັ່ງນີ້:

1. ການຂະຫຍາຍຕົວດ້ານເສດຖະກິດ: ໄດ້ຊຸກຍູ້ໃຫ້ບັນດາຫົວໜ່ວຍການຜະລິດກະສິກຳ, ອຸດສາຫະກຳ ແລະ ບໍລິຫານທີ່ເປັນທ່າແຮງຂັບ



ເຄື່ອນການຂະຫຍາຍຕົວຂອງເສດຖະກິດໃຫ້ດີຂຶ້ນ ອີງໃສ່ການຄິດໄລ່ GDP ຄາດຄະເນ 6 ເດືອນ (ໃສ່ຄາດຄະເນເບື້ອງຈາກການຄິດໄລ່ GDP ແມ່ນໄລ່ເປັນໄຕມາດ) ເຫັນວ່າເສດຖະກິດແຫ່ງຊາດຈະຂະຫຍາຍຕົວຢູ່ໃນລະດັບບໍ່ຫຼຸດ 4,8% (ໃນນີ້: ໄຕມາດ 1 ຂະຫຍາຍຕົວ 4,8% ແລະ ໄຕມາດ 2 ຄາດວ່າຈະຂະຫຍາຍຕົວ 4,9% ຄິດເປັນມູນຄ່າຕາມລາຄາໃນປີເທົ່າກັບ 118.467 ຕື້ກີບ ເທົ່າກັບ 51% ຂອງແຜນການປີ (ຕາມມະຕິສະພາແຫ່ງຊາດໝົດປີໃຫ້ບັນລຸ 4,5% ເທົ່າກັບ 234.160 ຕື້ກີບ).

2. ການເກັບລາຍຮັບງົບປະມານ ໄດ້ເພີ່ມທະວີການຄຸ້ມຄອງ ແລະ ຕ້ານການຮົ່ວໄຫຼຂອງລາຍຮັບງົບປະມານແຫ່ງລັດ, ດ້ວຍການສຸມໃສ່ການຫັນການເກັບລາຍຮັບເປັນທັນສະໄໝ ແລະ ອອກນິຕິກຳລຸ່ມກົດໝາຍຈຳນວນໜຶ່ງ, ສຸມໃສ່ສ້າງຖານອາກອນມູນຄ່າເພີ່ມໄດ້ 10.887 ຫົວໜ່ວຍ ໃນຈຳນວນທັງໝົດ 14.657 ຫົວ

ອ່ານຕໍ່ໜ້າ 2

## ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນໃສ່ບົດລາຍງານຂອງລັດຖະບານ



(ສພຊ) ໃນວັນທີ 26 ມິຖຸນາ 2023 ທ່ານ ສົມມາດ ພົລເສນາ ຮອງປະທານຄະນະປະຈຳສະພາແຫ່ງຊາດ ໄດ້ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023, ທິດທາງແຜນການລົງທຶນຂອງລັດ ປະຈຳປີ 2024 ດັ່ງນີ້:

ອ່ານຕໍ່ໜ້າ 10

## ຕີລາຄາການຈັດຕັ້ງປະຕິບັດແຜນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023



ທ່ານ ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ຄຳເຈນ ວົງໂພສີ ລາຍງານຜົນການຕີລາຄາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023 ດັ່ງນີ້:

**ພາກທີ 1**

ການຕີລາຄາສະພາບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃນໄລຍະ 6 ເດືອນຕົ້ນປີ 2023

I. ສະພາບແວດລ້ອມສາກົນ ແລະ ພາຍໃນ.

ບັນດາສິ່ງທ້າທາຍຫຼາຍດ້ານ ໄດ້ສົ່ງຜົນກະທົບໃຫ້ເສດຖະກິດຂອງຫຼາຍປະເທດມີການຂະຫຍາຍຕົວຊ້າລົງ ໃນປີ 2023 ເປັນຕົ້ນ ອາເມລິກາ

ອ່ານຕໍ່ໜ້າ 4

## ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນ ທ້າຍປີ 2023



ໃນວັນທີ 26 ມິຖຸນາ 2023 ທ່ານ ສັນຕິພາບ ພົມວິຫານ ລັດຖະມົນຕີກະຊວງການເງິນ ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນ ແລະ ທິດທາງແຜນວຽກຈຸດສຸມ 6 ທ້າຍປີ 2023 ດັ່ງນີ້:

ການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ: ອີງຕາມມະຕິສະພາແຫ່ງຊາດ ສະບັບເລກທີ 63/ສພຊ, ລົງວັນທີ 9 ທັນວາ 2022 ວ່າດ້ວຍການຮັບຮອງແຜນງົບປະມານແຫ່ງລັດ ປີ 2023, ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 90/ນຍ, ລົງວັນທີ 31 ມັງກອນ 2023 ວ່າດ້ວຍການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-

ອ່ານຕໍ່ໜ້າ 7

## ລາຍງານການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນເດືອນທ້າຍປີ 2023

ທ່ານ ບຸນເຫຼືອ ສິນໄຊວໍຣະວົງ ຜູ້ວ່າການທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 26 ມິຖຸນາ 2023 ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ 2023 ແລະ ແຜນການ 6 ເດືອນທ້າຍປີ 2023 ເຊິ່ງໃຫ້ຮູ້ວ່າ: ເສດຖະກິດຂອງ ສປປ ລາວ ແມ່ນຍັງຢູ່ໃນລະຫວ່າງການຟື້ນຕົວ ແຕ່



ອ່ານຕໍ່ໜ້າ 8

**ຊົມເຊີຍ ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງສຸດໃຈ!**

## ປະທານສະພາ...

(ຕໍ່ຈາກໜ້າ 1)

ຍາກທາງດ້ານເສດຖະກິດ-ການເງິນ ພາຍໃນປະເທດຂອງພວກເຮົາ, ການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍກົດໝາຍ ພົບຫຼາຍສິ່ງທ້າທາຍໃໝ່ ເປັນຕົ້ນ ເງິນເຟີ້, ອັດຕາແລກປ່ຽນ, ລາຄານ້ຳມັນເຊື້ອໄຟ ແລະ ສິນຄ້າ ໄດ້ມີການເໜັງຕີງເພີ່ມຂຶ້ນ ເຊິ່ງສົ່ງຜົນກະທົບຕໍ່ຊີວິດການເປັນຢູ່ຂອງປະຊາຊົນມີຄວາມຝືດເຄືອງ. ແຕ່ດ້ວຍຄວາມເອົາໃຈໃສ່ນຳພາ-ຊີ້ນຳ ຂອງຄະນະບໍລິຫານງານສູນກາງພັກ, ການບໍລິຫານຂອງລັດຖະບານ ແລະ ການຕິດຕາມກວດກາຂອງສະພາແຫ່ງຊາດ ໂດຍສະເພາະຢ່າງຍິ່ງການປະສານສົມທົບ, ການປຶກສາຫາລືຮ່ວມກັນ ຢ່າງໃກ້ຊິດ ລະຫວ່າງສະພາແຫ່ງຊາດ ແລະ ລັດຖະບານ, ການປະກອບສ່ວນຂອງພາກສ່ວນຕ່າງໆໃນສັງຄົມ ກໍຄືບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ເພື່ອຊອກມາດຕະການແກ້ໄຂ ເພື່ອບໍ່ເຮັດໃຫ້ປະເທດເຮົາຕົກ ເຂົ້າສູ່ວິກິດການດ້ານເສດຖະກິດ ຈາກອັນນີ້ ເຮັດໃຫ້ບັນດາຄາດໝາຍໃນການພັດທະນາເສດຖະກິດ-ສັງຄົມ ບາງຄາດໝາຍກໍບັນລຸໄດ້ຕາມແຜນການເຮັດໃຫ້ປະເທດຊາດ ຍັງສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບໂດຍພື້ນຖານ, ສາມາດປະຄັບປະຄອງເສດຖະກິດ ບໍ່ໃຫ້ຕົກໃນສະພາບຫຍຸ້ງ ຍາກກວ່ານີ້ ແລະ ຮັບປະກັນໃຫ້ສືບຕໍ່ມີການຂະຫຍາຍຕົວ, ແນວທາງການຕ່າງປະເທດຂອງພັກ ໄດ້ຮັບການຈັດຕັ້ງຜັນຂະຫຍາຍຢ່າງເລິກເຊິ່ງ ແລະ ກວ້າງຂວາງ ເຊິ່ງເຮັດໃຫ້ບົດບາດອິດທິພົນຂອງປະເທດເຮົາ ໄດ້ຮັບການຍົກສູງຢ່າງຕໍ່ເນື່ອງໃນເວທີພາກພື້ນ ແລະ ສາກົນ.

ປະຕິບັດຕາມລັດຖະທຳມະນູນ ແລະ ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ຈະໄດ້ພິຈາລະນາຮັບຮອງບັນດາເນື້ອໃນທີ່ສຳຄັນ ດັ່ງນີ້:

1. ບົດລາຍງານໂດຍສັງເຂບຂອງທ່ານນາຍົກລັດຖະມົນຕີ ກ່ຽວກັບການເຄື່ອນໄຫວວຽກງານພົ້ນເດັ່ນ ຂອງລັດຖະບານ 6 ເດືອນຕົ້ນປີ ແລະ ສະເໜີທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023;

2. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງ ຄົມ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ທິດທາງການລົງທຶນຂອງລັດປະຈຳປີ 2024;

3. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

4. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດແຜນເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023;

5. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

6. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຢາເສບຕິດ;

7. ບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035;

8. ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມ;

9. ບົດລາຍງານຂອງລັດຖະບານ ກ່ຽວກັບຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030;

10. ບົດລາຍງານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ 4 ສະບັບ; ໃນນີ້ ມີ ຂົງເຂດສານປະຊາຊົນສູງສຸດ 2 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ແລະ ຂົງເຂດຂອງອົງການໄອຍະການປະຊາຊົນສູງສຸດ 2 ສະບັບ ຄື: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

11. ພິຈາລະນາ, ຮັບຮອງເອົາການສ້າງ ແລະ ປັບປຸງກົດໝາຍ ຈຳນວນ 10 ສະບັບ ໃນນີ້ມີກົດໝາຍສ້າງໃໝ່ 4 ສະບັບ ຄື: ຮ່າງກົດໝາຍວ່າດ້ວຍວຽກງານສາທາລະນະສຸກ, ຮ່າງກົດໝາຍວ່າດ້ວຍການຈັດຫາງານ, ຮ່າງກົດໝາຍວ່າດ້ວຍອາກອນທີ່ດິນ, ຮ່າງກົດໝາຍວ່າດ້ວຍເຍົາວະຊົນລາວ ແລະ ກົດໝາຍປັບປຸງ 6 ສະບັບ ຄື: ກົດໝາຍວ່າດ້ວຍທະນາຄານທຸລະກິດ, ກົດໝາຍວ່າດ້ວຍສັດນ້ຳ ແລະ ການປະມົງ, ກົດໝາຍວ່າດ້ວຍສັດປ່າ, ກົດໝາຍວ່າດ້ວຍການພິມຈຳໜ່າຍ, ກົດໝາຍວ່າດ້ວຍການປົກປ້ອງສິດ ແລະ ຜົນປະໂຫຍດຂອງເດັກ ແລະ ກົດໝາຍວ່າດ້ວຍສານທະຫານ;

12. ບົດລາຍງານຂອງຄະນະປະຈຳສະພາແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາເທື່ອທີ 5 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.

ນອກນັ້ນ, ຍັງຈະໄດ້ຮັບຟັງການຊີ້ແຈງຂອງພາກສ່ວນກ່ຽວຂ້ອງຈຳນວນໜຶ່ງ ຕໍ່ຄຳຊັກຖາມຂອງບັນດາສະມາຊິກສະພາແຫ່ງຊາດ.

ສະພາແຫ່ງຊາດ ຈະພິຈາລະນາ, ປະກອບຄຳເຫັນ ແລະ ຮັບຮອງເອົາຫຼາຍເນື້ອໃນສຳຄັນ ເຊິ່ງເປັນບັນຫາສ້າງຄວາມສົນໃຈໃຫ້ແກ່ຜູ້ມີສິດເລືອກຕັ້ງ, ປະຊາຊົນໃນທົ່ວປະເທດ ກໍຄືພີ່ນ້ອງຮ່ວມຊາດຢູ່ຕ່າງປະເທດ. ເພື່ອພິຈາລະນາຮັບຮອງເອົາບັນຫາສຳຄັນພື້ນຖານຂອງປະເທດຊາດ ທີ່ມີຈຳນວນຫຼາຍຄືດັ່ງກ່າວໃຫ້ມີຄຸນນະພາບ, ປະສິດທິຜົນ ແລະ ບັນລຸຜົນຕາມແຜນການທີ່ວາງໄວ້, ໃນນາມປະທານກອງປະຊຸມ ຂ້າພະເຈົ້າຂໍຮຽກຮ້ອງມາຍັງທຸກພາກສ່ວນທີ່ກ່ຽວຂ້ອງ ຈົ່ງສືບຕໍ່ໃຫ້ການຮ່ວມມື ແລະ ສະໜອງຂໍ້ມູນຕໍ່ບັນດາເນື້ອໃນທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງໃນກອງປະຊຸມຄັ້ງນີ້, ຮຽກຮ້ອງມາຍັງບັນດາທ່ານສະມາຊິກສະພາແຫ່ງຊາດ ຈົ່ງໄດ້ນຳໃຊ້ສິດປະຊາທິປະໄຕ ແລະ ເຊີດຊູຄວາມຮັບຜິດຊອບການ ເມືອງຂອງຕົນ ໃນການສຸມໃສ່ຄົ້ນຄວ້າຢ່າງເລິກເຊິ່ງ, ປະກອບສ່ວນປະກອບຄຳເຫັນ ຕໍ່ທຸກບັນຫາຢ່າງຖີ່ຖ້ວນ, ສ້າງສັນ, ພາວະວິໄສ, ມີເຫດມີຜົນ, ຮັດກຸມ ບົນພື້ນຖານແນວທາງນະໂຍບາຍຂອງພັກ, ກົດໝາຍຂອງລັດ ແລະ ສະພາບຄວາມເປັນຈິງທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາໃນປັດຈຸບັນ ເພື່ອເຮັດໃຫ້ເນື້ອໃນທີ່ນຳມາພິຈາລະນາ, ຮັບຮອງຄັ້ງນີ້ ມີຄຸນນະພາບ ແລະ ສາມາດນຳໄປຈັດຕັ້ງປະຕິ ບັດຢ່າງເປັນຮູບປະທຳຢ່າງແທ້ຈິງ.

ໃນໂອກາດອັນສະຫງ່າລາສີນີ້, ໃນນາມປະທານກອງປະຊຸມ, ຂ້າພະເຈົ້າ ຂໍປະກາດໄຂກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຢ່າງເປັນທາງການ ນັບແຕ່ເວລານີ້ເປັນຕົ້ນໄປ.

## ບົດລາຍງານກ່ຽວກັບການຮັບຮອງເອົາການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ທີ່ໄດ້ອອກຈາກການເປັນສະມາຊິກສະພາແຫ່ງຊາດ



ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ລາຍງານ ກ່ຽວກັບການຮັບຮອງເອົາການເລືອກຕັ້ງແທນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ທີ 1 ນະຄອນຫຼວງວຽງຈັນ ທີ່ໄດ້ລາອອກຈາກການເປັນສະມາຊິກສະພາແຫ່ງຊາດ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ດັ່ງນີ້:

ຂ້າພະເຈົ້າ ຕາງໜ້າຄະນະປະຈຳສະພາແຫ່ງຊາດ ຂໍລາຍງານຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ກ່ຽວກັບການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ທີ່ໄດ້ລາອອກຈາກການເປັນສະມາຊິກສະພາແຫ່ງຊາດ ດັ່ງນີ້ :

ເນື່ອງຈາກ ທ່ານ ປອ. ແອງພອນ ແພງສຸວັນ ສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ ໄດ້ຂໍລາອອກຈາກການເປັນສະມາຊິກສະພາແຫ່ງຊາດ ເພື່ອສ້າງເສດຖະກິດຄອບຄົວ ຈຶ່ງເຮັດໃຫ້ຈຳນວນສະມາຊິກສະພາແຫ່ງຊາດ ໃນເຂດເລືອກຕັ້ງດັ່ງກ່າວຫຼຸດລົງ, ຊຶ່ງເປັນສາເຫດພາໃຫ້ມີການເລືອກຕັ້ງແທນ ຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍການເລືອກຕັ້ງສະມາ ຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ສະບັບປັບປຸງປີ 2020 ມາດຕາ 41 ໄດ້ກຳນົດວ່າ: “ການເລືອກຕັ້ງແທນ ຈະໄດ້ຈັດຂຶ້ນ ເມື່ອສະມາຊິກສະພາ ໃນເຂດເລືອກຕັ້ງໃດໜຶ່ງ ຫາກຫຼຸດລົງ ຕາມກຳລະນີທີ່ກຳນົດໄວ້ໃນມາດຕາ 31 ແລະ ມາດຕາ 34 ຂອງກົດໝາຍວ່າດ້ວຍ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ການເລືອກຕັ້ງແທນຈະດຳເນີນໄດ້ ກໍຕໍ່ເມື່ອອາຍຸການຂອງສະພາຊຸດນັ້ນຍັງເຫຼືອຢ່າງໜ້ອຍສອງປີ ນັບແຕ່ວັນທີ່ສະມາຊິກສະພາເຂດເລືອກຕັ້ງນັ້ນຫຼຸດລົງ”.

ສະນັ້ນ, ອີງໃສ່ສະພາບຕົວຈິງ ຊຶ່ງອາຍຸການຂອງສະພາແຫ່ງຊາດ ຊຸດທີ IX ຍັງເຫຼືອປະມານສອງປີກວ່າ, ຄະນະປະຈຳສະພາແຫ່ງຊາດ ຈຶ່ງຕົກລົງໃຫ້ມີການເລືອກຕັ້ງແທນ ຕາມກົດໝາຍດັ່ງກ່າວ ດ້ວຍວິທີສະເພາະ, ຊຶ່ງໄດ້ອອກມະຕິຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 09/ຄປຈ, ລົງວັນທີ 10 ມັງກອນ 2023: ເລືອກຕັ້ງເອົາ ທ່ານ ສາລະພົດ ສູນວໍລະວົງ ຫົວໜ້າພະແນກແຮງງານ ແລະ ສະຫວັດດີການສັງຄົມ, ນະຄອນຫຼວງວຽງຈັນ ເຊິ່ງເປັນຜູ້ສະໝັກຮັບເລືອກຕັ້ງທີ່ໄດ້ຮັບຄະແນນສຽງຫຼາຍ ຖັດຈາກຜູ້ໄດ້ຮັບການເລືອກຕັ້ງເປັນສະມາຊິກສະພາແຫ່ງຊາດໃນເຂດເລືອກຕັ້ງດັ່ງກ່າວ.

ດັ່ງນັ້ນ, ຈຶ່ງລາຍງານມາຍັງ ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອຊາບດ້ວຍ.

## ນາຍົກ...

(ຕໍ່ຈາກໜ້າ 1)

ໜ່ວຍໃນຂອບເຂດທົ່ວປະເທດ ກວມເອົາ 74% ແລະ ໄດ້ຊຸກຍູ້ ແລະ ບັງຄັບໃຫ້ຫົວໜ່ວຍທຸລະກິດ ຖືບັນຊີໃນຂອບເຂດໄດ້ 14.283 ຫົວໜ່ວຍ, ໄດ້ສຸມໃສ່ຊຸກຍູ້ ແລະ ຕິດຕາມການເກັບລາຍຮັບຈາກຫົວໜ່ວຍລາຍຮັບໃຫຍ່ທີ່ມີແລ້ວຜ່ານມາ ໄດ້ເພີ່ມຂຶ້ນທຽບໃສ່ປີຜ່ານມາ (ຢ່າງເຊັ່ນ: ເກັບລາຍຮັບຈາກບໍລິສັດ ພູເບ້ຍມາຍນິ້ງ ໄດ້364ຕື້ກີບເພີ່ມຂຶ້ນ463% ຫຼື ເພີ່ມຂຶ້ນ 299 ຕື້ກີບທຽບໃສ່ປີຜ່ານມາ, ບໍລິສັດລ້ານຊ້າງມິເນໂຣ ໄດ້ 460 ຕື້ກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 59% ຫຼື ເປັນເງິນ 195 ຕື້ກີບ, ບໍລິສັດແຮ່ເຫຼັກ ໂກອິໂກ ຈຳກັດຜູ້ດຽວ ໄດ້ 191 ຕື້ກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 435% ຫຼື ເປັນເງິນ 155 ຕື້ກີບ, ບໍລິສັດເທີນຫີນບູນ ພາວເວີ້ຈຳກັດ ໄດ້ 276 ຕື້ກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 21% ຫຼື ເປັນເງິນ 48 ຕື້ກີບ, ບໍລິສັດຖືຮຸ້ນລາວ ໄດ້ 121 ຕື້ກີບ ທຽບໃສ່ປີຜ່ານມາເພີ່ມຂຶ້ນ 751% ຫຼື ເປັນເງິນ 107 ຕື້ກີບ); ໄດ້ມອບຫົວໜ່ວຍວິສາຫະກິດທີ່ສູນກາງຄຸ້ມຄອງໃຫ້ 101 ຫົວໜ່ວຍ ໃຫ້ 9 ແຂວງ ເປັນຜູ້ເກັບ ເຊິ່ງຜ່ານການຈັດຕັ້ງປະຕິບັດເຫັນວ່າ ມີ 5 ແຂວງ ທີ່ກວມເອົາ 69 ຫົວໜ່ວຍສາມາດເກັບໄດ້ເກີນດຸນ ແລະ ເກັບໄດ້ເພີ່ມຂຶ້ນເຖິງ 41%ທຽບໃສ່ປີຜ່ານມາ; ການເຮັດທົດລອງແຮ່ທາດ ສາມາດສ້າງລາຍຮັບທີ່ເປັນຄ່າຊື້ສິດສຳປະທານ, ຄ່າຊັບພະຍາກອນທຳມະຊາດລ່ວງໜ້າ ແລະ ລາຍຮັບຈາກການສົ່ງອອກແຮ່ທາດ ໄດ້ເປັນເງິນກີບ 105 ຕື້ກີບ ແລະ ເປັນເງິນໂດລາໄດ້ 48,71 ລ້ານໂດລາ, ນອກຈາກນັ້ນ, ຍັງໄດ້ທົດລອງປະຕິບັດໂຄງການຂຸດຄົ້ນ Bitcoin ແລະ ຊື້-ຂາຍເງິນຄຣິບໂຕ ເຊິ່ງສາມາດສ້າງລາຍຮັບເປັນເງິນກີບ 5,7 ຕື້ກີບ ແລະ ເປັນເງິນໂດລາ 26,5 ລ້ານໂດລາ (ຄ່າລິຂະສິດ, ຄ່າອາກອນມອບເໝົາ), ມູນຄ່າການຊົມໃຊ້ໄຟຟ້າ ເປັນຈຳນວນ 195,5 ລ້ານໂດລາ ສາມາດແກ້ໄຂບັນຫາກະແສໄຟຟ້າເຫຼືອໃນບາງບ່ອນ. ສະນັ້ນ, ຈຶ່ງເຮັດໃຫ້ການເກັບລາຍຮັບງົບປະມານມາຮອດໝົດເດືອນພຶດສະພາ 2023 ບັນລຸໄດ້ 15.155 ຕື້ກີບ ຫລື ປະມານ 39% ຂອງແຜນການປີ(ຕາມມະຕິສະພາ: ແຜນລາຍຮັບໝົດປີ 38.448 ຕື້ກີບ)ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 41% ຫຼື ເປັນເງິນ 4.495 ຕື້ກີບ). ໃນນັ້ນ ພົ້ນເດັ່ນແມ່ນລາຍຮັບພາຍໃນສາມາດບັນລຸໄດ້ 11.848ຕື້ກີບ, ເທົ່າກັບ43% ຂອງແຜນການປີ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ຄາດຄະເນລາຍຮັບ 6 ເດືອນຈະປະຕິບັດໄດ້ປະມານ 18.424 ຕື້ກີບ ເທົ່າກັບ 48%, ໃນນີ້ພົ້ນເດັ່ນ ມາຮອດໝົດເດືອນພຶດສະພາ ມີ 9 ແຂວງສາມາດເກັບລາຍຮັບໄດ້ເກີນ 50% ແລ້ວ.

3. ການປະຕິບັດລາຍຈ່າຍງົບປະມານ: ລັດຖະບານປະຕິບັດລາຍຈ່າຍງົບປະມານບົນຈິດໃຈປະຢັດ ຕາມດຳລັດວ່າດ້ວຍການປະຢັດ ແລະ ຕ້ານການຟຸມເຟືອຍ ກໍຄືດຳລັດວ່າດ້ວຍລົດຂອງລັດ ຢ່າງເປັນເຈົ້າການ. ພ້ອມນັ້ນ, ຍັງສາມາດປະຕິບັດລາຍຈ່າຍງົບປະມານໄປຕາມແຜນການ ແລະ ຮັບ

ອ່ານຕໍ່ໜ້າ 3...

## ນາຍົກ...

(ຕໍ່ຈາກໜ້າ 2)

ປະກັນການເບີກຈ່າຍທີ່ຈຳເປັນໄດ້ຕາມປົກກະຕິເປັນຕົ້ນ: ເງິນເດືອນ, ເງິນນະໂຍບາຍ, ການຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ ແລະ ອື່ນໆ. ລາຍຈ່າຍງົບປະມານມາຮອດໝົດເດືອນພຶດສະພາ ສາມາດບັນລຸໄດ້ 10.905 ຕື້ກີບ ເທົ່າກັບ 25% ຂອງແຜນການປີ, ລາຍຈ່າຍຕົ້ນຕໍແມ່ນສຸມໃສ່ການເບີກຈ່າຍເງິນເດືອນ ແລະ ເງິນອຸດໜູນ ເຊິ່ງເກືອບ 100% ແມ່ນສາມາດເບີກຈ່າຍໄດ້ບໍ່ກາຍວັນທີ 25 ຂອງທຸກໆເດືອນ (ຍົກເວັ້ນ 2 ກຳລັງ), ສຸມໃສ່ຈ່າຍຊຳລະໜີ້ສິນຕ່າງປະເທດຕາມສັນຍາ. ພ້ອມກັນນັ້ນ, ກໍໄດ້ມີກົນໄກໃຫ້ບັນດາແຂວງປະຕິບັດເງິນເກີນແຜນປີ 2022 ໂດຍໃຫ້ແຂວງສາມາດນຳໃຊ້ 80% ເພື່ອແກ້ໄຂໜີ້ສິນ ແລະ ກະຕຸ້ນເສດຖະກິດໃນລະດູຝົນ.

4. ໄດ້ເອົາໃຈໃສ່ຊີ້ນຳ-ບັນຊາການປະຕິບັດ 5 ແຜນວຽກຈຸດສຸມໃນປີ 2023 ຂອງລັດຖະບານ:

- ການແກ້ໄຂໜີ້ສິນລັດຖະບານ ໄດ້ສືບຕໍ່ເອົາໃຈໃສ່ເປັນພິເສດຕໍ່ການຄຸ້ມຄອງ ແລະ ແກ້ໄຂບັນຫາໜີ້ສິນ ໄປຕາມຂອບແຜນທີ່ໄດ້ກຳນົດໄວ້ ແລະ ສາມາດປະຄັບປະຄອງໃນການຊຳລະໜີ້ສິນໄດ້ ໂດຍສາມາດເຮັດໃຫ້ປະເທດເຮົາ ບໍ່ໃຫ້ຕົກເປັນປະເທດທີ່ຊຳລະໜີ້ສິນບໍ່ໄດ້, ໃນນັ້ນ ໄດ້ສຸມໃສ່ແກ້ໄຂໜີ້ສິນຕ່າງປະເທດ ໂດຍການເຈລະຈາດັດແກ້ໂຄງສ້າງໜີ້ ແລະ ເລື່ອນໄລຍະເວລາການຊຳລະອອກໄປຕື່ມ, ພ້ອມກັນນັ້ນ ກໍໄດ້ເຈລະຈາກັບບັນດາບໍລິສັດພາຍໃນຈຳນວນໜຶ່ງທີ່ກູ້ຢືມເງິນຈາກທະນາຄານໃນເມື່ອກ່ອນ ໃຫ້ດັດແກ້ສັນຍາເງິນກູ້ ໂດຍດັດແກ້ຈາກໄລຍະເວລາເລີ່ມຊຳລະຕົ້ນທຶນໃນປີ 2028 ມາໃຫ້ເລີ່ມຊຳລະໃນປີ 2023, ຊຶ່ງສາມາດໄດ້ເງິນຈາກບັນດາບໍລິສັດດັ່ງກ່າວ ມາແກ້ໄຂໜີ້ສິນປະມານ 40 ລ້ານກວ່າໂດລາ. ນອກນັ້ນ, ກໍໄດ້ເຈລະຈາດັດແກ້ສັນຍາເງິນກູ້ກັບ 5 ກຸ່ມບໍລິສັດໃຫຍ່ ກວມເອົາ 90% ຂອງຍອດໜີ້ຂອງ 17 ບໍລິສັດ ທີ່ກູ້ຢືມນຳລັດຖະບານ ເຊິ່ງຕາມສັນຍາດັດແກ້ປີນີ້ ຄາດວ່າຈະໄດ້ເງິນຕົວຈິງປະມານ 30% ຂອງມູນຄ່າທີ່ໄດ້ເຊັນສັນຍາດັດແກ້ນັ້ນ ເຊິ່ງຈະສາມາດເປັນກຳລັງແຮງໜຶ່ງທີ່ສຳຄັນໃຫ້ແກ່ຄັງສຳຮອງເງິນຕາຂອງພວກເຮົາ. ພ້ອມນັ້ນ, ກໍໄດ້ສຸມໃສ່ການແກ້ໄຂໜີ້ສິນໂຄງການລົງທຶນລັດ ດ້ວຍຮູບການອ່າຍໜີ້ 3 ແຈ ບ້ວງ 8.000 ຕື້ກີບ ສາມາດຈັດສັນສຳເລັດແລ້ວ ແລະ ປະຕິບັດໄດ້ 600 ຕື້ກີບ.

- ການແກ້ໄຂບັນຫາຢາເສບຕິດ: ໄດ້ສຸມໃສ່ກວດກາ, ລາດຕະເວນ ເຊິ່ງໃນໄລຍະເກືອບ 6 ເດືອນ ສາມາດແກ້ໄຂມ້າງລາຍຄະດີຢາເສບຕິດໄດ້ທັງໝົດ: 2.240 ເລື່ອງ, ຍຶດຢາບ້າ ໄດ້ 33.93 ລ້ານເມັດ, ນ້ຳໜັກລວມ3.393,19 ກິໂລກຣາມ, ເຮໂຣອິນ 184,07 ກິໂລກຣາມ, ຢາຝິ່ນ 125,35 ກິໂລກຣາມ ແລະ ສິ່ງເສບຕິດອື່ນ, ພ້ອມກັນນັ້ນ ຍັງຍຶດວັດຖຸດິບ ແລະ ສານເຄມີທີ່ຈະໄປຜະລິດສິ່ງເສບຕິດໄດ້ອີກຈຳນວນຫຼາຍ ຄື: ຍຶດແປ້ງຝຸ່ນປະສົມຢາເສບຕິດ 26.235,53 ກິໂລກຣາມ, ສານເຄມີຕົ້ນປະເພດທາດແຫຼວ ແລະ ກ້ອນ 61 ໂຕນ. ນອກນັ້ນ ຍັງຍຶດລົດໃຫຍ່ໄດ້ 46 ຄັນ, ລົດຈັກ 205 ຄັນ, ໄດ້ສຳຫຼວດເນື້ອທີ່ລັກລອບປູກຝິ່ນ ຢູ່ 8 ແຂວງພາກເໜືອ ກວດພົບສວນຝິ່ນ ເນື້ອທີ່ 357,6 ເຮັກຕາ ແລະ ໄດ້ທຳລາຍຖິ້ມ ຈຳນວນ 251,7 ເຮັກຕາ, ໄດ້ສຸມໃສ່ປິ່ນປົວຜູ້ຕິດຢາ ຢູ່ສູນບຳບັດປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ 13 ແຫ່ງ, ມີທັງໝົດ 2.648 ຄົນ, ສາມາດປິ່ນປົວດີແລ້ວກັບຄືນບ້ານມີ 259 ຄົນ. ພ້ອມທັງ ໄດ້ເອົາໃຈໃສ່ຈັດສັນເນື້ອທີ່ດິນສຳລັບໂຄງການປູກພືດ ເພື່ອທົດແທນການປູກຝິ່ນຢູ່ບັນດາແຂວງພາກເໜືອ. ນອກນັ້ນ ກໍໄດ້ເອົາໃຈໃສ່ເປັນພິເສດວຽກງານໂຄສະນາ, ສຶກສາອົບຮົມ ດ້ວຍຫຼາຍຮູບການ ແລະ ຫຼາຍວິທີ ທັງເຜີຍແຜ່ຢູ່ບັນດາສະຖາບັນການສຶກສາ, ໂຮງຮຽນ ແລະ ໃຫ້ພໍ່ແມ່ປະຊາຊົນຢູ່ບັນດາບ້ານຮັບຮູ້ ແລະ ເຂົ້າໃຈຕໍ່ຜົນຮ້າຍຂອງຢາເສບຕິດ ເພື່ອໃຫ້ສັ່ງສອນລູກຫຼານຂອງຕົນບໍ່ໄປຫຍຸ້ງກ່ຽວກັບຢາເສບຕິດ.

- ການພັດທະນາການບໍລິການແລະໂຄງລ່າງພື້ນຖານເພື່ອຮອງຮັບການທ່ອງທ່ຽວ: ຊຸກຍູ້ສົ່ງເສີມໃຫ້ຜູ້ປະກອບການທ່ອງທ່ຽວປັບປຸງພື້ນຖານໂຄງລ່າງການທ່ອງທ່ຽວ ໂດຍສະເພາະໂຮງແຮມ, ຮ້ານອາຫານ ແລະ ພາຫະນະຂົນສົ່ງ ດ້ວຍນະໂຍບາຍສົ່ງເສີມດ້ານສິນເຊື່ອໃຫ້ຜູ້ປະກອບການ ຈິນເຮັດໃຫ້ທຸລະກິດສາມາດຟື້ນຕົວໄດ້ໄວ ເຊິ່ງໃນ 6 ເດືອນຕົ້ນປີ 2023 ສາມາດເກັບລາຍຮັບງົບປະມານຈາກຜູ້ປະກອບການທ່ອງທ່ຽວເພີ່ມຂຶ້ນ 132% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ສຸມໃສ່ການປັບປຸງການບໍລິການທ່ອງທ່ຽວ ໂດຍສະເພາະການບໍລິການຜູ້ໂດຍສານລົດໄຟ ລາວ-ຈີນ ທີ່ໃນເບື້ອງຕົ້ນກໍມີຫາງສຽງຈົ່ມວ່າຫຼາຍ, ຜ່ານການປັບປຸງກໍເຫັນວ່າດີຂຶ້ນກວ່າເກົ່າ, ໄດ້ສຸມໃສ່ຊີ້ນຳການປັບປຸງຂັ້ນຂອດການອຳນວຍຄວາສະດວກ ໃນການຂົນສົ່ງສິນຄ້າ ຢູ່ດ່ານຊາຍແດນ, ຢູ່ທ່າບົກ ແລະ ການຂົນສົ່ງຜ່ານທາງລົດໄຟ ລາວ-ຈີນ ເຊິ່ງກໍສາມາດຫຼຸດຜ່ອນຫາງສຽງຈົ່ມວ່າ ແລະ ຂັດຂ້ອງຂອງຜູ້ປະກອບການລົງ, ແຕ່ກໍຍັງຈະໄດ້ສືບຕໍ່ປັບປຸງຢ່າງແຂງແຮງ ເພື່ອເພີ່ມຄວາມສາມາດແຂ່ງຂັນກັບປະເທດໃກ້ຄຽງ.

- ການປັບປຸງ ແລະ ແກ້ໄຂກົນໄກ, ຂັ້ນຂອດ ເພື່ອສ້າງສະພາບແວດລ້ອມທີ່ອຳນວຍຄວາມສະດວກໃຫ້ແກ່ການດຳເນີນທຸລະກິດ ແລະ ການລົງທຶນ ໄດ້ສືບຕໍ່ປັບປຸງກົນໄກອຳນວຍຄວາມສະດວກ ແລະ ສົ່ງເສີມການລົງທຶນ ຕາມນະໂຍບາຍ ແລະ ຄຳສັ່ງຂອງລັດຖະບານ ເປັນຕົ້ນ ການຄົ້ນຄວ້າປັບປຸງບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບຄະນະກຳມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງແລະຂັ້ນແຂວງ (ຄລທ.ສ ແລະ ຄລທ.ຂ) ໂດຍໄດ້ຂັ້ນຕອນ ແລະ ເອກະສານທີ່ບໍ່ຈຳເປັນອອກ ເພື່ອເຮັດໃຫ້ການອະນຸຍາດລົງທຶນວ່ອງໄວ, ໂປ່ງໃສ ແລະ ສະດວກກວ່າເກົ່າ; ພ້ອມກັນນັ້ນ ກໍໄດ້ຊຸກຍູ້ ແລະ ຕິດຕາມການຈັດຕັ້ງໂຄງການຂະໜາດໃຫຍ່ໃຫ້ດຳເນີນຕາມແຜນທີ່ກຳນົດໄວ້ ໂດຍສະເພາະໂຄງການພະລັງງານໄຟຟ້າຄວາມຮ້ອນຢູ່ພາກໃຕ້ ທີ່ໄດ້ເຊັນສັນຍາຊື້ຂາຍໄຟຟ້າກັບ ກຳປູເຈຍແລ້ວ, ໄດ້ເລັ່ງປັບປຸງຂັ້ນຂອດການບໍລິການຂົນສົ່ງສິນສິນຄ້າຜ່ານດ່ານຊາຍແດນ ແລະ ບັນດາທ່າບົກໃຫ້ງ່າຍດາຍ, ວ່ອງໄວ ແລະ ສະດວກກວ່າເກົ່າ, ພ້ອມກັນນັ້ນ ກໍເລັ່ງຄົ້ນຄວ້າການເກັບຄ່າບໍລິການຜ່ານທ່າບົກໃຫ້ສົມເຫດສົມຜົນ ແລະ ເປັນເອກະພາບກັນ;

- ການແກ້ໄຂຜົນການກວດສອບ ແລະ ກວດກາ: ໄດ້ເອົາໃຈໃສ່ຊີ້ນຳການແກ້ໄຂຜົນການກວດສອບແຫ່ງລັດ ໂດຍສະເພາະຜົນການກວດສອບທີ່ຕິດພັນກັບການລົງທຶນຂອງລັດ ເຊິ່ງສາມາດຫັກລົບມູນຄ່າໂຄງການທີ່ນອນໃນແຜນການລົງທຶນຂອງລັດທີ່ບໍ່ໄດ້ປະຕິບັດອອກ ໄດ້ຈຳນວນ 134 ໂຄງການ, ມູນຄ່າ 880,11 ຕື້ກີບ (ຕາມມະຕິສະພາ: ຜົນກວດສອບເຫັນມີ 363 ໂຄງການມູນຄ່າ 1.347,72 ຕື້ກີບ ແລະ 104.891,81 ໂດລາສະຫະລັດ); ໄດ້ເອົາໂຄງການນອກແຜນຈຳນວນ 13 ໂຄງການ, ມູນຄ່າ 128,44 ຕື້ກີບ ເຂົ້າບັນຈຸໃນແຜນ ແລະ ໄດ້ໂຈະການປະຕິບັດ 2 ໂຄງການມູນຄ່າ 19,54 ຕື້ກີບ.

5. ການຮັກສາສະຖຽນລະພາບດ້ານເງິນຕາ: ລັດຖະບານ ໄດ້ສຸມໃສ່ແກ້ໄຂບັນຫາການເໜັງຕີງຂອງອັດຕາແລກປ່ຽນເງິນຕາຕ່າງປະເທດ ແລະ ອັດຕາເງິນເຟີ້ ເພື່ອປະຄັບປະຄອງການເໜັງຕີງດັ່ງກ່າວໃຫ້ຊະລໍຕົວໃນຈັງຫວະທີ່ຊ້າລົງ ແລະ ເຮັດໃຫ້ສ່ວນຕ່າງລະຫວ່າງອັດຕາແລກປ່ຽນໃນລະບົບທະນາຄານ ແລະ ນອກລະບົບ ຫຍັບເຂົ້າໃກ້ກັນ (ແຕ່ໄລຍະເດືອນມິຖຸນາ ເລີ່ມມີການເໜັງຕີງແຮງ), ໃນນີ້: ໄດ້ປິດຮ້ານແລກປ່ຽນເງິນທັງໝົດ ແລະ ມອບໃຫ້ທະນາຄານທຸລະກິດສ້າງເປັນປ່ອງບໍລິການຂອງທະນາຄານຄືກັບປະເທດອື່ນໆ, ປັດຈຸບັນ ບັນດາທະນາຄານກຳລັງສຸມໃສ່ຂະຫຍາຍປ່ອງບໍລິການແລກປ່ຽນເງິນຕາຂອງຕົນໃຫ້ຫຼາຍຂຶ້ນ ແລະ ກຳລັງທົດລອງອະນຸມັດໃຫ້ທະນາຄານສາມາດແລກປ່ຽນເງິນຜ່ານລະບົບອອນລາຍທາງບັນຊີ. ພ້ອມນັ້ນ, ກໍໄດ້ຄຸມເຂັ້ມການໂອນເງິນຊື້-ຂາຍສິນຄ້າ ແລະ ເງິນທີ່ນຳເຂົ້າມາລົງທຶນ ຕ້ອງຜ່ານລະບົບທະນາຄານ; ໄດ້ແກ້ໄຂການສະໜອງເງິນຕາຕ່າງປະເທດ ຈຳນວນ 264,08 ລ້ານໂດລາ ໃຫ້ແກ່ບໍລິສັດທີ່ນຳເຂົ້ານ້ຳມັນເຊື້ອໄຟກວມເອົາ 49,96% ຂອງຄວາມຕ້ອງການເງິນຕາທັງໝົດໃນການຊື້ນ້ຳມັນ ເຊິ່ງສາມາດສະໜອງນ້ຳມັນເຊື້ອໄຟໃຫ້ສັງຄົມໄດ້ຢ່າງປົກກະຕິ (ເຖິງລາຄາແພງແດ່ ແຕ່ກໍບໍ່ໄດ້ລຽນຄິວ).

6. ການປະຕິຮູບລັດວິສາຫະກິດ ລັດຖະບານ ໄດ້ອອກເປັນມະຕິໃນການແບ່ງຄວາມຮັບຜິດຊອບໃນການປັບປຸງລັດວິສາຫະກິດ ທັງໄດ້ກຳນົດບັນຊີລັດວິສາຫະກິດທີ່ຈະປັບປຸງຢ່າງລະອຽດ. ການປັບປຸງແມ່ນສຸມໃສ່ປັບປຸງປະສິດທິຜົນຂອງການບໍລິຫານ ໂດຍໂຮມບັນດາພະແນກ ຫຼື ໜ່ວຍງານເຂົ້າກັນ ແລະ ພະແນກ ຫຼື ໜ່ວຍງານໃດທີ່ບໍ່ຈຳເປັນ ກໍໄດ້ລົບລ້າງ, ປັບໂຄງສ້າງໜີ້ສິນຂອງລັດວິສາຫະກິດ ແລະ ປັບປຸງໂຄງສ້າງການຖືຮຸ້ນ ເພື່ອໃຫ້ການບໍລິຫານຈັດການເປັນມືອາຊີບ ແລະ ມີຄວາມໂປ່ງໃສ. ຜ່ານການປັບປຸງ ເຫັນວ່າການເຄື່ອນໄຫວທຸລະກິດຂອງລັດວິສາຫະກິດຈຳນວນໜຶ່ງມີທ່າອ່ຽງທີ່ດີຂຶ້ນ ສົມທຽບໃນໄລຍະຜ່ານມາ.

7. ໄດ້ເອົາໃຈໃສ່ ແລະ ໃຫ້ຄວາມສຳຄັນຕໍ່ວຽກງານວັດທະນະທຳ-ສັງຄົມ, ສຶກສາ, ສາທາລະນະສຸກ ແລະ ແຮງງານສະຫວັດດີການສັງຄົມ, ໃນນັ້ນໄດ້ສຸມໃສ່ການເຝົ້າລະວັງ ແລະ ປ້ອງກັນການແຜ່ລະບາດຂອງພະຍາດຕາມລະດູການ ແຕ່ຫືອທີ, ສຳລັບການແຜ່ລະບາດຂອງພະຍາດໂຄວິດ-19 ເຖິງວ່າອົງການອະນາໄມໂລກ ຈະປະກາດວ່າໂຄວິດ-19 ບໍ່ເປັນໄພຂົ່ມຂູ່ດ້ານສາທາລະນະສຸກແລ້ວກໍຕາມ ແຕ່ພວກເຮົາກໍບໍ່ປະໝາດ, ຍັງສືບຕໍ່ຕິດຕາມເຝົ້າລະວັງຢ່າງໃກ້ຊິດ.

- ໄດ້ສຸມໃສ່ຄົ້ນຄວ້າວິທີແກ້ໄຂບັນຫາຄູອາສາສະໝັກ ແລະ ການຂາດແຄນຄູສອນໃນເຂດຊົນນະບົດ, ຄຽງຄູ່ກັນນັ້ນ ກໍຄົ້ນຄວ້າວິທີແກ້ໄຂສະພາບການປະລະການຮຽນໃນເຂດຊົນນະບົດທີ່ມີທ່າອ່ຽງເພີ່ມຂຶ້ນ ເຊິ່ງຜົນການຄົ້ນຄວ້າທັງໝົດຈະນຳເຂົ້າພິຈາລະນາໃນກອງປະຊຸມລັດຖະບານເປີດກວ້າງ ທີ່ຈະມາເຖິງ, ຈາກນັ້ນຈຶ່ງມອບໃຫ້ບັນດາຂະແໜງການກ່ຽວຂ້ອງ ແລະ ທ້ອງຖິ່ນນຳໄປຈັດຕັ້ງປະຕິບັດ.

- ສຸມໃສ່ສ້າງ ແລະ ພັດທະນາສີມືແຮງງານ ເພື່ອສະໜອງໃຫ້ຕະຫລາດພາຍໃນ ແລະ ຕ່າງປະເທດ, ໃນນັ້ນ ໄດ້ສຸມໃສ່ຄົ້ນຄົ້ນຄວ້າມາດຕະການແກ້ໄຂການຂາດແຄນແຮງງານຢູ່ພາຍໃນ ເນື່ອງຈາກສະພາບເງິນກີບອ່ອນຄ່າເຮັດໃຫ້ແຮງງານລາວຫລັ່ງໄຫຼອອກໄປເຮັດວຽກຢູ່ປະເທດເພື່ອນບ້ານເພີ່ມຂຶ້ນ, ຄຽງຄູ່ກັນນັ້ນ ກໍໄດ້ເອົາໃຈໃສ່ຄຸ້ມຄອງແຮງງານລາວທີ່ໄປອອກແຮງງານຢູ່ຕ່າງປະເທດ. ພ້ອມກັນນັ້ນ ລັດຖະບານ ກໍໄດ້ປັບຄ່າແຮງຂັ້ນຕ່ຳຈາກ 1.100.000 ກີບ/ຄົນ/ເດືອນ ຂຶ້ນເປັນ 1.300.000 ກີບ/ຄົນ/ເດືອນ ແລະ ກຳລັງຄົ້ນຄວ້າປັບຂຶ້ນຕື່ມ ໃນໄຕມາດ.

8. ດ້ານການແກ້ໄຂຜົນກະທົບຈາກສິ່ງແວດລ້ອມ: ໄດ້ເອົາໃຈໃສ່ນຳພາ-ຊີ້ນຳໃນການແກ້ໄຂບັນຫາສິ່ງແວດລ້ອມໂຄງການແຮ່ທົດລອງ ແລະ ໂຄງການລົງທຶນບໍ່ແຮ່ຂະໜາດໃຫຍ່, ພ້ອມກັນນັ້ນ ປີນີ້ເກີດມີສະພາບການຖາງປ່າ ແລະ ຈູດປ່າ ເພື່ອປູກພືດກະສິກຳ ໂດຍສະເພາະປູກເຂົ້າ, ສາລີ, ມັນຕົ້ນ ແລະ ອື່ນໆ ເຊິ່ງໄດ້ມີຜົນກະທົບຕໍ່ສະພາບແວດລ້ອມທາງອາກາດໜັກສົມຄວນ ໂດຍລັດຖະບານໄດ້ມອບໃຫ້ກຳລັງປ້ອງກັນຊາດ ສົມທົບກັບອົງການປົກຄອງທ້ອງຖິ່ນ ໂດຍສະເພາະຂັ້ນເມືອງ, ຂັ້ນບ້ານຮັບຜິດຊອບມອດໄຟ ແລະ ເຝົ້າລະວັງຢ່າງໃກ້ຊິດ, ພ້ອມກັນນັ້ນ ກໍກຳລັງຈະອອກຄຳສັ່ງຂອງນາຍົກລັດຖະມົນຕີເພື່ອເພີ່ມທະວີການຄຸ້ມຄອງປ່າໄມ້ ໃຫ້ລະອຽດເພື່ອບໍ່ໃຫ້ເກີດຂຶ້ນອີກໃນຕໍ່ໜ້າ.

9. ດ້ານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ໄດ້ສຸມໃສ່ວຽກງານ ປກສ-ປກຊ ທົ່ວປວງຊົນຮອບດ້ານ ອັນໄດ້ເຮັດໃຫ້ປະເທດຊາດພວກເຮົາສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ເປັນລະບຽບຮຽບຮ້ອຍໂດຍພື້ນຖານ, ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ກໍມີບາດກ້າວທີ່ດີຂຶ້ນ ໂດຍສະເພາະສາມາດມ້າງຄະດີ ແລະ ຈັບກຸມຜູ້ຄ້າລາຍໃຫຍ່, ຜູ້ເສບຢາເສບຕິດໄດ້ຫລາຍກໍລະນີ.

## ຕີລາຄາ...

(ຕໍ່ຈາກໜ້າ 1)

ເສດຖະກິດຈະຂະຫຍາຍຕົວ 1,6% (ປີ 2022: 2,1%), ສະຫະພາບເອີລົບຂະຫຍາຍຕົວ 0,8% (ປີ 2022: 3,5%), ແຕ່ກໍມີບາງປະເທດເຫັນວ່າ ເສດຖະກິດມີທ່າອ່ຽງຟື້ນຕົວ ເປັນຕົ້ນ ສປ ຈີນ ຄາດວ່າຈະຂະຫຍາຍຕົວ 5,2% (ປີ 2022: 3%), ສສ ຫວຽດນາມ ຄາດວ່າຈະຂະຫຍາຍຕົວ 5,8% (ປີ 2022: 8%) ແລະ ໄທ ຄາດວ່າຈະຂະຫຍາຍຕົວ3,4%(ປີ2022:2,6%) ເຊິ່ງສັງລວມແລ້ວ ເສດຖະກິດໂລກ ໃນປີ 2023 ຄາດວ່າຈະຂະຫຍາຍຕົວຊ້າລົງທຽບໃສ່ປີຜ່ານມາ ຫຼຸດລົງຈາກ 3,4% ໃນປີ 2022 ມາຢູ່ໃນລະດັບ 2,8% ໃນປີ 2023.

II. ການຈັດຕັ້ງປະຕິບັດວຽກງານຈຸດສຸມຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 6 ເດືອນຕົ້ນປີ 2023.

**1. ດ້ານການຄຸ້ມຄອງເສດຖະກິດມະຫາພາກ.**

**1.1 ດ້ານການເຕີບໂຕເສດຖະກິດ (ມີທັງໝົດ 12 ຕົວຊີ້ບອກ).**

ໃນໄລຍະ 6 ເດືອນຕົ້ນປີ 2023 ໂດຍລວມ, ພາຍຫຼັງການລະບາດຂອງໂຄວິດ-19 ຜ່ອນຄາຍລົງຢ່າງຕໍ່ເນື່ອງ ຈຶ່ງໄດ້ເຮັດໃຫ້ສະພາບການຜະລິດ ແລະ ການບໍລິການ ໄດ້ມີທ່າອ່ຽງຂະຫຍາຍຕົວດີພໍສົມຄວນ, ເຊິ່ງລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວ ໃນລະດັບ 4,8%, ໃນໄຕມາດ 1 ຂະຫຍາຍຕົວ 4,8% ແລະ ໄຕມາດ 2 ຂະຫຍາຍຕົວ 4,9% (ມະຕິສະພາ: ໝົດປີໃຫ້ບັນລຸ 4,5%), ຄິດເປັນມູນຄ່າຕາມລາຄາໃນປີ ເທົ່າກັບ 118.467 ຕື້ກີບ ເທົ່າກັບ 51% ຂອງແຜນການ (ມະຕິສະພາ: 234.160 ຕື້ກີບ), ສໍາລັບຕົວເລກລວມຍອດຜະລິດຕະພັນພາຍໃນ (GDP) ຕໍ່ຫົວຄົນ ແລະ ລາຍໄດ້ແຫ່ງຊາດ(GNI) ຕໍ່ຫົວຄົນ ແມ່ນທ້າຍປີ ຈຶ່ງຈະສາມາດລາຍງານໄດ້. (ສໍາລັບການຕີລາຄາຂອງສາກົນຕໍ່ທ່າອ່ຽງການເຕີບໂຕເສດຖະກິດຂອງ ສປປ ລາວ ໝົດປີ ຈາກການຄາດຄະເນຂອງ IMF: 4%, ທະນາຄານໂລກ: 3,8%, ທະນາຄານພັດທະນາອາຊີ: 4%), ໃນນີ້:

- ຂະແໜງກະສິກໍາ ຂະຫຍາຍຕົວ 3,8%, ກວມເອົາ 14,6% ຂອງ GDP (ມະຕິສະພາ: ໝົດປີໃຫ້ຂະຫຍາຍຕົວ2,5% ແລະ ກວມເອົາ 17,2% ຂອງ GDP);

- ຂະແໜງອຸດສາຫະກໍາ ຂະຫຍາຍຕົວ 4,7%, ກວມເອົາ 36,6% ຂອງ GDP (ມະຕິສະພາ: ໝົດປີໃຫ້ຂະຫຍາຍຕົວ5,0%ແລະກວມ34,2% ຂອງ GDP);

- ຂະແໜງບໍລິການ ຂະຫຍາຍຕົວ 5,6%, ກວມເອົາ 37,6% ຂອງ GDP (ມະຕິສະພາ: ໝົດປີໃຫ້ຂະຫຍາຍຕົວ 4,7% ແລະ ກວມເອົາ 37,5% ຂອງ GDP).

- ພາສີ-ອາກອນຜະລິດຕະພັນ ຂະຫຍາຍຕົວ 3,7%, ກວມເອົາ 11,2% ຂອງ GDP (ມະຕິສະພາ: ໝົດປີໃຫ້ຂະຫຍາຍຕົວ 4,3% ແລະ ກວມ 11,1% ຂອງ GDP).

- ສາເຫດຂອງຄວາມແຕກຕ່າງກັນລະຫວ່າງການຄິດໄລ່ຂອງສູນແຫ່ງຊາດກັບສາກົນແມ່ນ:

+ ສູນສະຖິຕິແຫ່ງຊາດ: ນໍາໃຊ້ລະບອບການຄາດຄະເນລວມຍອດຜະລິດຕະພັນພາຍໃນ ໂດຍອີງໃສ່ການຜະລິດຂອງຂະແໜງການ ເປັນຕົ້ນຕໍ ໂດຍອີງໃສ່ການຂະຫຍາຍຕົວຕົວຈິງຂອງຂະແໜງການຜະລິດ.

+ ສາກົນ: ແມ່ນຄາດຄະເນ ເສດຖະກິດລາວ ໂດຍອີງໃສ່ສະພາບການຂອງເສດຖະກິດໂລກ ແລະ ປະເທດໃກ້ຄຽງ. ພ້ອມນັ້ນ ກໍຕີລາຄາໂດຍອີງໃສ່ການສະໜອງ ແລະ ຄວາມຕ້ອງການທາງດ້ານການເງິນ, ການລົງທຶນ ແລະ ຕະຫຼາດໂລກ, ດຸນການຊໍາລະລະຫວ່າງປະເທດ, ດຸນບັນຊີທຶນ, ດຸນບັນຊີງົບປະມານ, ແລະ ສົມມຸດຕິຖານການນໍາໃຊ້ນະໂຍບາຍເງິນຕາ ແລະ ການເງິນ.

1.2 ດ້ານເງິນຕາ.

- ປະລິມານເງິນ M2: ມາຮອດທ້າຍເດືອນ 5/2023 ຂະຫຍາຍຕົວໃນລະດັບ 26,12% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ແຕ່ຖ້າທຽບໃສ່ທ້າຍປີ 2022ຂະຫຍາຍຕົວໃນລະດັບ 7,87%ແລະຮອດທ້າຍເດືອນ 6/2023ຄາດວ່າຈະຂະຫຍາຍຕົວ 27,32% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ, ຖ້າທຽບໃສ່ທ້າຍປີ 2022 ຂະຫຍາຍຕົວໃນລະດັບ 13,11% (ມະຕິສະພາ: ບໍ່ໃຫ້ເກີນ 26%).

- ອັດຕາເງິນເຟີ້: ສະເລ່ຍ 5 ເດືອນຕົ້ນປີ ຢູ່ໃນລະດັບ 40,26% ແລະ ສະເລ່ຍ 6 ເດືອນຕົ້ນປີ ຢູ່ໃນລະດັບ 38,06% (ມະຕິສະພາ: ສະເລ່ຍໝົດປີບໍ່ໃຫ້ເກີນ 9%), ໃນນີ້ ອັດຕາເງິນເຟີ້ ໃນເດືອນມັງກອນ ເພີ່ມຂຶ້ນໃນລະດັບ 40,30%, ໃນເດືອນກຸມພາ ເພີ່ມຂຶ້ນຢູ່ໃນລະດັບ 41,26%, ໃນເດືອນມີນາ ເພີ່ມຂຶ້ນຢູ່ໃນລະດັບ 40,97%, ໃນເດືອນເມສາ ເພີ່ມຂຶ້ນໃນລະດັບ 39,89%, ເດືອນພຶດສະພາ ເພີ່ມຂຶ້ນໃນລະດັບ 38,86% ແລະ ໃນເດືອນມິຖຸນາ ເພີ່ມຂຶ້ນຢູ່ໃນລະດັບ 28,64%. ໃນໄລຍະ 6 ເດືອນຕົ້ນປີ ແມ່ນໝວດສິນຄ້າ ແລະ ບໍລິການ ທີ່ເພີ່ມຂຶ້ນສູງກວ່າໝູ່ແມ່ນໝວດສະບຽງອາຫານແລະເຄື່ອງດື່ມບໍ່ແມ່ນທາດເຫຼົ້າ ສະເລ່ຍເພີ່ມຂຶ້ນ49,07%, ຖັດລົງມາແມ່ນໝວດຮັກສາສຸຂະພາບ ແລະ ຢາສະເລ່ຍເພີ່ມຂຶ້ນ38,77%, ໝວດຮ້ານອາຫານ ແລະ ໂຮງແຮມ ສະເລ່ຍເພີ່ມຂຶ້ນ 35,21%, ໝວດຄົມມະນາຄົມ ແລະ ການຂົນສົ່ງ ສະເລ່ຍເພີ່ມຂຶ້ນ 32,97%, ໝວດເຄື່ອງໃຊ້ໃນເຮືອນ ສະເລ່ຍເພີ່ມຂຶ້ນ 32,86%. ນອກຈາກນີ້, ເຫັນວ່າປັດໄຈທີ່ເຮັດໃຫ້ອັດຕາເງິນເຟີ້ເພີ່ມຂຶ້ນສູງ ແມ່ນມາຈາກຕົ້ນທຶນການຜະລິດ (ນໍ້າມັນເຊື້ອໄຟ, ປັດໄຈການຜະລິດກະສິກໍາ, ຫົວອາຫານສັດ, ຝຸ່ນ-ປຸ໋ຍ ແລະ ອື່ນໆ) ແລະ ອັດຕາແລກປ່ຽນທີ່ອ່ອນຄ່າລົງຫຼາຍ ທັງເຮັດໃຫ້ລາຄາສິນຄ້ານໍາເຂົ້າເພີ່ມຂຶ້ນຕາມມາ.

- ອັດຕາແລກປ່ຽນ: ສະເລ່ຍໃນເດືອນພຶດສະພາ 2023 ທຽບໃສ່ທ້າຍປີ 2022 ເຫັນວ່າ ເງິນກີບມີທ່າອ່ຽງອ່ອນຄ່າ ເງິນກີບທຽບເງິນໂດລາ ໃນລະບົບທະນາຄານ ອ່ອນຄ່າ 1,41% (ຈາກ 17.312,27 ກີບ/ໂດລາ ມາເປັນ 17.599,16 ກີບ/ໂດລາ), ນອກລະບົບອ່ອນຄ່າ 5,5% (ຈາກ 17.421,67 ກີບ/ໂດລາ ມາເປັນ 18.434,89 ກີບ/ໂດລາ); ເງິນກີບທຽບເງິນບາດ ໃນລະບົບທະນາຄານ ອ່ອນຄ່າ 4,26% (ຈາກ 502,75 ກີບ/ບາດ ມາເປັນ 525,11 ກີບ/ບາດ), ນອກລະບົບ ອ່ອນຄ່າ 6,89% (ຈາກ 504,25 ກີບ/ບາດ ມາເປັນ 541,55 ກີບ/ບາດ). ສ່ວນຕ່າງລະຫວ່າງອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ ໃນໄລຍະຕົ້ນປີ ຫາ ກາງເດືອນເມສາ ສະເລ່ຍຕໍ່າກວ່າ 2%, ນັບແຕ່ກາງເດືອນເມສາ ເຫັນວ່າ ສ່ວນຕ່າງອັດຕາແລກປ່ຽນແມ່ນພຸ່ງສູງຂຶ້ນຫຼາຍເກີນ 2% ສະເລ່ຍໃນເດືອນພຶດສະພາ ສ່ວນຕ່າງອັດຕາແລກປ່ຽນໃນລະບົບທະນາຄານທຸລະກິດ ແລະ ຕະຫຼາດນອກລະບົບ ເງິນກີບທຽບເງິນໂດລາ ຢູ່ໃນລະດັບ 4,99% ແລະ ເງິນກີບທຽບເງິນບາດຢູ່ໃນລະດັບ3,13%. ໃນ 6 ເດືອນຕົ້ນປີ ສູ້ຊົນຄຸ້ມຄອງໃຫ້ອັດຕາແລກປ່ຽນເໜັງຕີງໃຫ້ສອດຄ່ອງກັບລະດັບດຸນຍະພາບທາງດ້ານເສດຖະກິດ-ເງິນຕາ ແລະ ບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້ (ມະຕິສະພາ: ຄຸ້ມຄອງອັດຕາແລກປ່ຽນໃຫ້ເໜັງຕີງສອດຄ່ອງກັບລະດັບດຸນຍະພາບທາງດ້ານເສດຖະກິດ-ເງິນຕາ ແລະ ບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້).

- ຄັງສໍາຮອງເງິນຕາຕ່າງປະເທດ: ຮອດທ້າຍເດືອນພຶດສະພາ 2023 ສາມາດກຸ້ມການນໍາເຂົ້າໄດ້ 4,03 ເດືອນ ແລະ ໃນທ້າຍເດືອນ 6 ຄາດວ່າຈະໃຫ້ສາມາດກຸ້ມການນໍາເຂົ້າໄດ້ບໍ່ຫຼຸດ 4 ເດືອນ (ມະຕິສະພາ: ບໍ່ໃຫ້ຫຼຸດ 3 ເດືອນ).

- ຍອດເຫຼືອເງິນຝາກຂອງທະນາຄານທຸລະກິດ: ໃນ 5 ເດືອນຕົ້ນປີ ກວມເອົາ 84,79% ຂອງ GDP ໃນ 6 ເດືອນຕົ້ນປີ ຄາດວ່າຈະຢູ່ໃນລະດັບ 85,5% ຂອງ GDP (ມະຕິສະພາ: ບັນລຸໄດ້ 85% ຂອງ GDP) ແລະ ຍອດເຫຼືອສິນເຊື່ອຂອງຂະແໜງການທະນາຄານ ກວມເອົາ 57,95% ຂອງ GDP ແລະ ໃນ 6 ເດືອນຕົ້ນປີ ຄາດວ່າຈະຢູ່ໃນລະດັບ 58% ຂອງ GDP (ມະຕິສະພາ: ບັນລຸໄດ້ 65% ຂອງ GDP).

- ອັດຕາສ່ວນໜີ້ບໍ່ເກີດດອກອອກຜົນ (NPLs): ຮອດທ້າຍເດືອນເມສາ 2023 ຢູ່ໃນລະດັບ 2,1%. ຄາດຄະເນ 6 ເດືອນຕົ້ນປີ ຈະຢູ່ໃນລະດັບຕໍ່າກວ່າ 3% (ມະຕິສະພາ: ບໍ່ເກີນ 3%).

1.3 ດ້ານງົບປະມານ.

ໃສ່ເກັບພັນທະຕ່າງໆ ຈາກບໍລິສັດບໍ່ແຮ່ ແລະ ໄຟຟ້າ ເພື່ອຈັດຕັ້ງປະຕິບັດ 3 ຕົວຊີ້ບອກທີ່ສະພາຮັບຮອງໃຫ້ບັນລຸແຜນການທີ່ກໍານົດໄວ້. ເຊິ່ງໃນ 5 ເດືອນຕົ້ນປີ ສາມາດເກັບລາຍຮັບທັງໝົດໄດ້ 15.155 ຕື້ກີບ, ເທົ່າກັບ 39% ຂອງແຜນການ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 42% ຫຼື ເທົ່າກັບ 4.495 ຕື້ກີບ, ຄາດຄະເນ 6 ເດືອນຕົ້ນປີ ລາຍຮັບທັງໝົດ ຈະປະຕິບັດໄດ້ 18.424 ຕື້ກີບ, ເທົ່າກັບ 48% ຂອງແຜນການ (ມະຕິສະພາ: 38.448 ຕື້ກີບ), ໃນນີ້: ລາຍຮັບພາຍໃນ ປະຕິບັດໄດ້ 14.848 ຕື້ກີບ ເທົ່າກັບ43% ຂອງແຜນການແລະໃນ 6 ເດືອນຕົ້ນປີ ຄາດວ່າຈະໄດ້ 17.963 ຕື້ກີບ ເທົ່າກັບ 50% ຂອງແຜນການປີ. ລາຍຈ່າຍງົບປະມານທັງ ໝົດ ໃນ 5 ເດືອນຕົ້ນປີ ປະຕິບັດໄດ້ 10.905 ຕື້ກີບ ເທົ່າກັບ 25% ຂອງແຜນການ (ມະຕິສະພາ: 43.498 ຕື້ກີບ).

1.4 ດ້ານການດຸ່ນດ່ຽງຂາອອກ-ຂາເຂົ້າ (ມີ 3 ຕົວຊີ້ບອກ)

ມູນຄ່າການຄ້າຕ່າງປະເທດ ປະຕິບັດໄດ້ 6.290,41 ລ້ານໂດລາ, ເທົ່າກັບ 41,05% ຂອງແຜນການ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 3,46% ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 7.546,04 ລ້ານໂດລາ, ເທົ່າກັບ 49,24% ຂອງແຜນການ (ແຜນການ: 15.325 ລ້ານໂດລາ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 2,55%; ໃນນີ້: ມູນຄ່າການສົ່ງອອກ ປະຕິບັດໄດ້ 3.644,49 ລ້ານໂດລາ, ເທົ່າກັບ 44,31% ຂອງແຜນການ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4,74% ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 4.272,15 ລ້ານໂດລາ, ເທົ່າກັບ 51,94% ຂອງແຜນການ (ມະຕິສະພາ: 8.225 ລ້ານໂດລາ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 2,49%. ສິນຄ້າສົ່ງອອກຕົ້ນຕໍແມ່ນໄຟຟ້າ, ຄໍາປະສົມ, ຄໍາແທ່ງ, ມັນຕົ້ນ, ເຈ້ຍ ແລະ ເຄື່ອງທີ່ເຮັດດ້ວຍເຈ້ຍ, ເກືອກາລີ, ແຮ່ທອງ, ເຍື່ອໄມ້ ແລະ ເຈ້ຍເສດ, ແຮ່ເຫຼັກ, ເຄື່ອງນຸ່ງຫົ່ມ, ໝາກກ້ວຍ, ນໍ້າຕານ ແລະ ຢາງພາລາ. ມູນຄ່າການນໍາເຂົ້າ ປະຕິບັດໄດ້ 2.645,91 ລ້ານໂດລາ, ເທົ່າກັບ 37,27% ຂອງແຜນການ ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ1,75%ແລະຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 3.273,89 ລ້ານໂດລາ, ເທົ່າກັບ 46,11% ຂອງແຜນການ (ມະຕິສະພາ: 7.100 ລ້ານໂດລາ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 2,62%; ໃນນີ້: ສິນຄ້ານໍາເຂົ້າຕົ້ນຕໍແມ່ນນໍ້າມັນເຊື້ອໄຟ, ອຸປະກອນກົນຈັກ, ພາຫະນະທາງບົກ, ເຫຼັກ ແລະເຄື່ອງທີ່ເຮັດດ້ວຍເຫຼັກ, ເຫຼັກກ້າ, ເຄື່ອງໃຊ້ທີ່ເຮັດດ້ວຍພລາສະຕິກ, ຊິ້ນສ່ວນອາໄຫຼ່ລົດ, ເຄື່ອງໄຟຟ້າ ແລະ ອຸປະກອນໄຟຟ້າ, ສາຍໄຟຟ້າ, ເຄເບີ້ລ ແລະ ຜະລິດຕະພັນທາງເຄມີ. ດຸນການຄ້າ ເກີນດຸນ 998,58 ລ້ານໂດລາ, ເທົ່າກັບ 88,76% ຂອງແຜນການ, ແຕ່ການຊໍາລະສະສາງຜ່ານລະບົບທະນາຄານໄດ້ 33% ແລະ ຄາດຄະເນ 6 ເດືອນຕົ້ນປີ ແມ່ນເກີນດຸນ 998,26 ລ້ານໂດລາ, ເທົ່າກັບ 88,73% ຂອງແຜນການ (ມະຕິສະພາ: 1.125 ລ້ານໂດລາ); ຖ້າບໍ່ລວມຕົວເລກນໍາເຂົ້າ ແລະ ສົ່ງອອກໄຟຟ້າ ສປປ ລາວ ໃນໄລຍະ 5 ເດືອນຕົ້ນປີ ແມ່ນຂາດດຸນການຄ້າ ປະມານ 76,33 ລ້ານໂດລາ ແລະ ໄລຍະ 6 ເດືອນຕົ້ນປີ ຂາດດຸນປະມານ 218,64 ລ້ານໂດລາ.

1.5 ດ້ານການລົງທຶນເພື່ອການພັດທະນາ (ມີ 5 ຕົວຊີ້ບອກ) ໃນ 5 ເດືອນຕົ້ນປີ ປະຕິບັດໄດ້ 23.452,86 ຕື້ກີບ ເທົ່າກັບ 45% ຂອງແຜນການ ແລະ 6 ເດືອນຕົ້ນປີ ຄາດວ່າຈະປະຕິບັດໄດ້ 29.088,25 ຕື້ກີບ ເທົ່າກັບ 55,8% ຂອງແຜນການປີ (ມະຕິສະພາ: 52.098 ຕື້ກີບ), ໃນນີ້:

1) ການລົງທຶນຈາກງົບປະມານພາຍໃນ: ສໍາລັບແຜນການລົງທຶນຂອງລັດ ປະຈໍາປີ 2023 ມີທັງ ໝົດ 4.318 ຕື້ກີບ; ໃນນີ້: ບ້ວງການລົງທຶນປົກກະຕິ ຈໍານວນ 2.500 ຕື້ກີບ ແລະ ບ້ວງການລົງທຶນອື່ນ ຈໍານວນ 1.818 ຕື້ກີບ.

ໃນໄລຍະ 5 ເດືອນ ບ້ວງທຶນປົກກະຕິຈັດຕັ້ງປະຕິບັດໄດ້ 1.820,50 ຕື້ກີບ, ສາມາດອະນຸມັດເບີກຈ່າຍຕົວຈິງ 327,25 ຕື້ກີບ ເທົ່າກັບ 7,57% ຂອງແຜນການ ແລະ 6 ເດືອນຕົ້ນປີ ຄາດຄະເນຈະປະຕິບັດໄດ້ 476,07 ຕື້ກີບ ເທົ່າກັບ 11% ຂອງແຜນການປີ.

- ການລົງທຶນຂອງລັດປີ 2023 ລັດຖະບານໄດ້ຄົ້ນຄ້ວາສະເໜີໂຄງປະກອບການລົງທຶນ ຄື: ໂຄງການໜີ້ສິນ 30,79%, ໂຄງການສືບຕໍ່ 57,68% ແລະ ໂຄງການໃໝ່ 11,53%, ໂດຍໄດ້ດໍາເນີນຕາມຂັ້ນຕອນຕ່າງໆທີ່ກົດໝາຍກ່ຽວຂ້ອງກໍານົດ, ແຕ່ມະຕິສະພາແຫ່ງຊາດ ຮັບຮອງໂຄງປະກອບການລົງທຶນ ຄື: ໂຄງການໜີ້ສິນ 60%, ໂຄງການສືບຕໍ່ 30% ແລະ ໂຄງການໃໝ່ 10%, ພາຍຫຼັງດໍາເນີນຫຼາຍຫຼົບຫຼາຍຕ່າວ ຄະນະປະຈໍາສະພາແຫ່ງຊາດ ໄດ້ຮັບຮອງໃນສຸດທ້າຍ ແມ່ນໂຄງການໜີ້ສິນ 36%, ໂຄງການສືບຕໍ່ 51% ແລະ ໂຄງການໃໝ່ 13% ແລະ

ອ່ານຕໍ່ໜ້າ 5...

## ຕິລາຄາ...

(ຕໍ່ຈາກໜ້າ 4)

ມາຮອດທ້າຍເດືອນພຶດສະພາ 2023 ແຕ່ລະພາກສ່ວນພວມ ຊຸ້ນຂ້ຽວຈັດຕັ້ງປະຕິບັດຕົວຈິງ.

2) ການລົງທຶນຈາກການຊ່ວຍເຫຼືອທາງການເພື່ອການພັດທະນາ ໃນ 5 ເດືອນຕົ້ນປີ ປະຕິບັດໄດ້ 3.537,02 ຕື້ກີບ ຫຼືເທົ່າກັບ 204,49 ລ້ານໂດລາ ເທົ່າກັບ 30% ຂອງແຜນການ ແລະ 6 ເດືອນຕົ້ນປີ ຄາດວ່າຈະປະຕິບັດໄດ້ 5.106 ຕື້ກີບ ເທົ່າກັບ 295,20 ລ້ານໂດລາ ເທົ່າກັບ 44% ຂອງແຜນການ (ມະຕິສະພາ: 12.990 ຕື້ກີບ ເທົ່າກັບ 676,77 ລ້ານໂດລາ), ໃນນີ້:

-ການຊ່ວຍເຫຼືອລ້າປະຕິບັດໄດ້ 1.434,25 ຕື້ກີບ ຫຼື ເທົ່າກັບ 82,92 ລ້ານໂດລາ ເທົ່າກັບ 35% ຂອງແຜນການ ແລະ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 1.823,6 ຕື້ກີບ ຫຼືເທົ່າກັບ 105,43 ລ້ານໂດລາ ເທົ່າກັບ 44% ຂອງແຜນການ.

- ການກູ້ຢືມ ປະຕິບັດໄດ້ 2.102,77 ຕື້ກີບ 121,57 ລ້ານໂດລາ, ເທົ່າກັບ 28% ຂອງແຜນການ ແລະ 6 ເດືອນຕົ້ນປີ ຄາດວ່າຈະປະຕິບັດໄດ້ 3.282,41 ຕື້ກີບ ຫຼືເທົ່າກັບ 189,77 ລ້ານໂດລາ ເທົ່າກັບ 43,15% ຂອງແຜນການ.

3) ການລົງທຶນຈາກພາກເອກະຊົນພາຍໃນ ແລະ ຕ່າງປະເທດ: ໃນ 5 ເດືອນຕົ້ນປີ ໄດ້ອະນຸມັດການລົງທຶນຈາກຂະແໜງແຜນການ ແລະ ການລົງທຶນ, ຂະແໜງອຸດສາຫະກຳ ແລະ ການຄ້າ ແລະ ເຂດເສດຖະກິດພິເສດ ມີທັງໝົດ 8.673 ກິດຈະການ ເປັນມູນຄ່າທັງໝົດ 154.761,98 ຕື້ກີບ ຫຼື ເທົ່າກັບ 8.947,43 ລ້ານໂດລາ ແລະ 6 ເດືອນຕົ້ນປີ ຄາດວ່າຈະປະຕິບັດໄດ້ 158.679,63 ຕື້ກີບ 9.173,93 ລ້ານໂດລາ, ໃນນີ້ ທຶນນຳເຂົ້າຕົວຈິງ 19.588,59 ຕື້ກີບ ຫຼື ເທົ່າກັບ 1.132,49 ລ້ານໂດລາ ເທົ່າກັບ 63,41% ຂອງແຜນການ ແລະ ໃນ 6 ເດືອນຕົ້ນປີ ຄາດຄະເນຈະປະຕິບັດໄດ້ 23.506,17 ຕື້ກີບ ຫຼືເທົ່າກັບ 1.358.99 ລ້ານໂດລາ ເທົ່າກັບ 76% ຂອງແຜນການປີ (ມະຕິສະພາ: 30.890 ຕື້ກີບ).

**2. ດ້ານການຜະລິດ, ການບໍລິການ.**

1) ຂະແໜງກະສິກຳ-ປ່າໄມ້ (ມີ 5 ຕົວຊີ້ບອກ): ໃນໄລຍະ 6 ເດືອນຕົ້ນປີ 2023 (1) ການຜະລິດເຂົ້ານາແຊງ ປະຕິບັດໄດ້ 442.000 ໂຕນ, ເທົ່າກັບ 11,60% ຂອງແຜນການຜະລິດເຂົ້າລວມ (ມະຕິສະພາ: 3,81 ລ້ານໂຕນ); (2) ການຜະລິດພືດສະບຽງອາຫານ ປະຕິບັດໄດ້ 1,08 ລ້ານໂຕນ, ເທົ່າກັບ 45,18% ຂອງແຜນການ (ມະຕິສະພາ: 2,39 ລ້ານໂຕນ); (3) ການຜະລິດພືດສິນຄ້າ ປະຕິບັດໄດ້ 191 ພັນໂຕນ, ເທົ່າກັບ 2,23% ຂອງແຜນການ (ມະຕິສະພາ: 8,56 ລ້ານໂຕນ); (4) ການຜະລິດຊີ້ນ, ໄຂ່ ແລະ ປາ ປະຕິບັດໄດ້ 263.095 ໂຕນ, ເທົ່າກັບ 49,55% ຂອງແຜນການ (ມະຕິສະພາ: 531.000 ໂຕນ); (5) ການສົ່ງອອກຜະລິດຕະພັນກະສິກຳ-ປ່າໄມ້: ໃນ 5 ເດືອນຕົ້ນປີ 2023 ປະຕິບັດໄດ້ 901,72 ລ້ານໂດລາສະຫະ ລັດ, ເທົ່າກັບ 75,14% ຂອງແຜນການ; ໃນນີ້: ການສົ່ງອອກພືດ ແລະ ຜະລິດຕະພັນພືດ ລວມທັງໄມ້, ຜະລິດຕະພັນໄມ້, ຢາງພາລາ ແລະ ເຄື່ອງປ່າຂອງດົງ ປະຕິບັດໄດ້ 900,96 ລ້ານໂດລາສະຫະລັດ, ເທົ່າກັບ 81,90% ຂອງແຜນການ (ມະຕິສະພາ: 1.100 ລ້ານໂດລາສະຫະລັດ), ເຊິ່ງມາຈາກການສົ່ງອອກພືດ ແລະ ຜະລິດຕະພັນພືດ ປະຕິບັດ 736 ລ້ານໂດລາສະຫະລັດ ແລະ ການສົ່ງອອກໄມ້, ຜະລິດຕະພັນໄມ້, ຢາງພາລາ ແລະ ເຄື່ອງປ່າຂອງດົງ 164,96 ລ້ານໂດລາສະຫະລັດ. ການສົ່ງອອກສັດ ແລະ ຜະລິດຕະພັນສັດ ປະຕິບັດໄດ້ 0,76 ລ້ານໂດລາສະຫະລັດ, ເທົ່າກັບ 0,76% ຂອງແຜນການ (ມະຕິສະພາ: 100 ລ້ານໂດລາສະຫະລັດ). ຄາດຄະເນ 6 ເດືອນຕົ້ນປີ 2023 ຈະສາມາດສົ່ງອອກຜະລິດຕະພັນກະສິກຳ-ປ່າໄມ້ ໄດ້ 1.089 ລ້ານໂດລາສະຫະລັດ, ເທົ່າກັບ 90,75% ຂອງແຜນການ (ມະຕິສະພາ: 1.200 ລ້ານໂດລາສະຫະລັດ).

2) ມູນຄ່າການຜະລິດອຸດສາຫະກຳປຸງແຕ່ງ ແລະ ຫັດຖະກຳ: ບັນລຸໄດ້ 5.815,28 ຕື້ກີບ, ເທົ່າກັບ 41,45% ຂອງແຜນການ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4,41% ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 6.978,34 ຕື້ກີບ, ເທົ່າກັບ 49,74% ຂອງແຜນການ (ມະຕິສະພາ: 14.029,09 ຕື້ກີບ) ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 4,41%; ໃນນີ້: ໂຄງປະກອບຂອງການຜະລິດອຸດສາຫະກຳປຸງແຕ່ງ ທີ່ກວມອັດຕາສ່ວນສູງກວ່າໝູ່ແມ່ນການຜະລິດສະບຽງອາຫານ ກວມເອົາ 23,24%, ການຜະລິດເຄື່ອງດື່ມກວມເອົາ 17,43%, ການຜະລິດເຄື່ອງນຸ່ງຫົ່ມ ກວມເອົາ 11,81%, ການຜະລິດເຈ້ຍ ແລະ ຜະລິດຕະພັນເຈ້ຍ ກວມເອົາ 11,30%, ການຜະລິດເຄື່ອງໃຊ້ໄຟຟ້າ ແລະ ເຄື່ອງເອເລັກໂຕຣນິກ ກວມເອົາ 6,50% ແລະ ການຜະລິດຢາງ ແລະ ຜະລິດຕະພັນພລາສຕິກ ກວມເອົາ 4,65%.

3) ມູນຄ່າການຈໍລະຈອນສິນຄ້າ(ຂາຍຍົກ-ຂາຍຍ່ອຍ ແລະ ສ້ອມແປງ): ບັນລຸໄດ້ 31.360,78 ຕື້ກີບ, ເທົ່າກັບ 42,64% ຂອງແຜນການ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 3,41% ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 37.632,93 ຕື້ກີບ, ເທົ່າກັບ 51,17% ຂອງແຜນການ (ມະຕິສະພາ: 73.541,8 ຕື້ກີບ) ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 3,41%. ໃນນີ້, ໝວດສິນຄ້າທີ່ກວມອັດຕາສ່ວນສູງກວ່າໝູ່ແມ່ນໝວດສະບຽງອາຫານກວມ 17,70%; ໝວດກໍ່ສ້າງ ກວມ 15,88%; ໝວດນ້ຳມັນເຊື້ອໄຟ ແລະ ອາຍແກັສ ກວມ 12,22%; ໝວດເຄື່ອງຫັດຖະກຳ ແລະ ຈັກສານກວມ 10,14%; ໝວດສິນຄ້າຮັບໃຊ້ການຜະລິດກະສິກຳ ກວມ 10,01%; ໝວດພາຫະນະ ແລະ ອາໄຫຼ່ ກວມ 7,29%; ໝວດເຄື່ອງດື່ມ, ເຫຼົ້າ ແລະ ຢາສູບ ກວມ 4,57% ແລະ ໝວດເຄື່ອງໃຊ້ສອຍປະຈຳວັນ ແລະ ເຄື່ອງສຳອາງ ກວມ 1,84%.

4) ການຜະລິດກະແສໄຟຟ້າ: ປະຕິບັດໄດ້ 18.210 ລ້ານກິໂລວັດໂມງ, ເທົ່າກັບ 35,61% ຂອງແຜນການ ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 24.316 ລ້ານກິໂລວັດໂມງ, ເທົ່າກັບ 47,55% ຂອງແຜນການ (ມະຕິສະພາ: 51.134 ລ້ານກິໂລວັດໂມງ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 1,69%; ຄິດເປັນມູນຄ່າ ໃນ 5 ເດືອນຕົ້ນປີ ເທົ່າກັບ 19.457 ຕື້ກີບ, ເທົ່າກັບ 47,09% ຂອງແຜນການ ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 21.965 ຕື້ກີບ, ເທົ່າກັບ 53,16% ຂອງແຜນການ (ມະຕິສະພາ: 41.321 ຕື້ກີບ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 21,35%; ໃນນີ້: ສົ່ງອອກກະແສໄຟຟ້າໄປຕ່າງປະເທດ 14.144 ລ້ານກິໂລວັດໂມງ, ເທົ່າກັບ 34,97% ຂອງແຜນການ ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 19.033 ລ້ານກິໂລວັດໂມງ, ເທົ່າກັບ 47,06% ຂອງແຜນການ (ມະຕິສະພາ: 40.446 ລ້ານກິໂລວັດໂມງ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 3,33%; ຄິດເປັນມູນຄ່າ ໃນ 5 ເດືອນຕົ້ນປີ ເທົ່າກັບ 923 ລ້ານໂດລາສະຫະລັດ, ເທົ່າກັບ 37,63% ຂອງແຜນການ ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 1.192 ລ້ານໂດລາສະຫະລັດ, ເທົ່າກັບ 48,59% ຂອງແຜນການ (ມະຕິສະພາ: 2.453 ລ້ານໂດລາສະຫະລັດ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 8,16% ແລະ ການຈຳໜ່າຍກະແສໄຟຟ້າພາຍໃນປະເທດ ປະຕິບັດໄດ້ 4.571 ລ້ານກິໂລວັດໂມງ, ເທົ່າກັບ 44,60% ຂອງແຜນການແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 5.073 ລ້ານກິໂລວັດໂມງ, ເທົ່າກັບ 49,50% ຂອງແຜນການ (ມະຕິສະພາ: 10.248 ລ້ານກິໂລວັດໂມງ) ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 12,65%; ຄິດເປັນມູນຄ່າ ໃນ 5 ເດືອນຕົ້ນປີ ແມ່ນ 264 ລ້ານໂດລາສະຫະລັດ, ເທົ່າກັບ 37,39% ຂອງແຜນການ ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 324 ລ້ານໂດລາສະຫະລັດ, ເທົ່າກັບ 45,89% ຂອງແຜນການ (ມະຕິສະພາ: 706 ລ້ານໂດລາສະຫະລັດ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 16,12%.

5) ການຜະລິດແຮ່ທາດ: ປະຕິບັດໄດ້ 9.004 ຕື້ກີບ, ເທົ່າກັບ 45,49% ຂອງແຜນການ ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະສາມາດຜະລິດໄດ້ 10.805 ຕື້ກີບ, ເທົ່າກັບ 54,58% ຂອງແຜນການ (ມະຕິສະພາ: 19.795 ຕື້ກີບ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 10,80% ສາເຫດຍ້ອນບັນດາກິດຈະການບໍ່ແຮ່ຮູບແບບປົກກະຕິ ສາມາດດຳເນີນການຜະລິດໄດ້ຕາມແຜນ ລວມທັງກິດຈະການບໍ່ແຮ່ຮູບແບບທົດລອງ; ໃນນີ້: ຈຳໜ່າຍໄປຕ່າງປະເທດ ປະຕິບັດໄດ້ 671 ລ້ານໂດລາສະຫະລັດ, ເທົ່າກັບ 44% ຂອງແຜນການ ແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 805 ລ້ານໂດລາສະຫະລັດ, ເທົ່າກັບ 52,79% ຂອງແຜນການ (ມະຕິສະພາ: 1.525 ລ້ານໂດລາສະຫະລັດ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ຫຼຸດລົງ 11,92% ຍ້ອນລາຄາບັນດາແຮ່ທາດໃນຕະຫຼາດໂລກຫຼຸດລົງບວກກັບໄພເງິນເຟີ້ ສິ່ງຜົນເຮັດໃຫ້ຕົ້ນທຶນການຜະລິດເພີ່ມສູງຂຶ້ນ ຈຶ່ງເຮັດໃຫ້ຜູ້ປະກອບການລໍຖ້າຈັງຫວະໃນການສົ່ງອອກ ເປັນສາເຫດເຮັດໃຫ້ມູນຄ່າການສົ່ງອອກແຮ່ທາດໃນປີນີ້ຫຼຸດລົງທຽບໃສ່ປີຜ່ານມາ ແລະ ຈຳໜ່າຍພາຍໃນປະເທດ ປະຕິບັດໄດ້ 130 ລ້ານໂດລາສະຫະລັດ, ເທົ່າກັບ 41,53% ຂອງແຜນການແລະ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 156 ລ້ານໂດລາສະຫະລັດ, ເທົ່າກັບ 49,84% ຂອງແຜນການ (ມະຕິສະພາ: 313 ລ້ານໂດລາສະຫະລັດ), ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 7,58% ເປັນຕົ້ນ ຫີນກາວ, ແຮ່ເກືອໂປຣຕາສ (ເກືອກາລີ), ຫີນປູນທີ່ສະໜອງເປັນວັດຖຸດິບເຂົ້າໃນໂຮງງານອຸດສາຫະກຳປຸງແຕ່ງພາຍໃນ.

6) ການບໍລິການຂົນສົ່ງສິນຄ້າ: ປະຕິບັດໄດ້ 5,67 ລ້ານໂຕນ, ເທົ່າກັບ 44,47% ຂອງແຜນການ, ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 5,77 ລ້ານໂຕນ ເທົ່າກັບ 45,25% ຂອງແຜນການ (ມະຕິສະພາ: 12,75 ລ້ານໂຕນ) ແລະ ການບໍລິການຂົນສົ່ງໂດຍສານ ປະຕິບັດໄດ້ 44,76 ລ້ານເທື່ອຄົນ ເທົ່າກັບ 46,69% ຂອງແຜນການ, ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 44,89 ລ້ານເທື່ອຄົນ ເທົ່າກັບ 46,83% ຂອງແຜນການ (ມະຕິສະພາ: 95,86 ລ້ານເທື່ອຄົນ). ນອກຈາກນັ້ນ, ໄດ້ສືບຕໍ່ສຸມໃສ່ການກໍ່ສ້າງ ແລະ ປັບປຸງພື້ນຖານບັນດາໂຄງລ່າງຄົມມະນາຄົມ ຕາມແລວທາງເສດຖະກິດຕ່າງໆ.

**3. ດ້ານການພັດທະນາວັດທະນະທຳ-ສັງຄົມ.**

**3.1 ຂະແໜງສຶກສາທິການ ແລະ ກິລາ:**

- ມີ 10 ຕົວຊີ້ບອກທີ່ສາມາດບັນລຸໄດ້ຕາມແຜນ ຄື:

1)ອັດຕາເຂົ້າຮຽນຂອງເດັກ 5 ປີ ໃນຊັ້ນການສຶກສາກ່ອນໄວຮຽນສະເລ່ຍທົ່ວປະເທດ ບັນລຸໄດ້ 81,9% ໃນສົກຮຽນ 2022-2023 (ມະຕິສະພາ: ໃຫ້ບັນລຸ 78%).

2) ອັດຕານັກຮຽນເຂົ້າໃໝ່ ປ.1 ທຽບໃສ່ເດັກ 6 ປີ (ອັດຕາເຂົ້າຮຽນໃໝ່ສຸດທິ) ບັນລຸໄດ້ 98,3% ໃນສົກຮຽນ 2022-2023 (ມະຕິສະພາ: ໃຫ້ບັນລຸ 95%).

3) ອັດຕາເຂົ້າຮຽນໃໝ່ລວມ ປ.5 ບັນລຸໄດ້ 96,2% ໃນສົກຮຽນ 2022-2023 (ມະຕິສະພາ: ໃຫ້ບັນລຸ 95%).

4) ອັດຕາປະລະການຮຽນຂອງນັກຮຽນ ປ.1 ບັນລຸໄດ້ 4,8% ໃນສົກຮຽນ 2022-2023 (ມະຕິສະພາ: ບໍ່ໃຫ້ເກີນ 8%).

5) ອັດຕາປະລະການຮຽນຂອງນັກຮຽນຊັ້ນປະຖົມ ບັນລຸໄດ້ 4,4% ໃນສົກຮຽນ 2022-2023 (ມະຕິສະພາ: ບໍ່ໃຫ້ເກີນ 6%).

6) ອັດຕາຈົບຊັ້ນປະຖົມສຶກສາ ບັນລຸໄດ້ 93,1% ໃນສົກຮຽນ 2022-2023 (ມະຕິສະພາ: ໃຫ້ບັນລຸໄດ້ 91%).

7) ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ທຽບໃສ່ນັກຮຽນຕົ້ນປີ ບັນລຸໄດ້ 84,5% ໃນສົກຮຽນ 2022-2023 (ມະຕິສະພາ: ໃຫ້ບັນລຸໄດ້ 80%).

8) ດັດຊະນີຄວາມສະເໝີພາບຍິງ-ຊາຍ ອັດຕາເລື່ອນຊັ້ນ ປ.5 ຂຶ້ນ ມ.1 ບັນລຸໄດ້ 0,99 ໃນສົກຮຽນ 2022-2023 (ມະຕິສະພາ: ໃຫ້ບັນລຸໄດ້ລະຫວ່າງ 0,97-1,03).

9) ອັດຕາປະລະການຮຽນຂອງນັກຮຽນ ຊັ້ນມັດທະຍົມຕອນຕົ້ນ ບັນລຸໄດ້ 11,2% ໃນສົກຮຽນ 2022-2023 (ມະຕິສະພາ: ບໍ່ໃຫ້ເກີນ 14%).

10 ສົ່ງເສີມໃຫ້ນັກສຶກສາທີ່ສະໝັກເຂົ້າຮຽນຢູ່ມະຫາວິທະຍາໄລ ໄດ້ເຂົ້າຮຽນໃນສາຂາວິທະຍາ ສາດທຳມະຊາດ, ເຕັກໂນໂລຊີ, ວິສະວະກຳ ແລະ ຄະນິດສາດ ປະຕິບັດໄດ້ 3.243 ຄົນ, ລື່ນແຜນ 29,72% ຂອງແຜນການ (ມະຕິສະພາ: ໃຫ້ໄດ້ຫຼາຍກວ່າ 2.500 ຄົນ).

- ມີ 2 ຕົວຊີ້ບອກທີ່ບໍ່ສາມາດບັນລຸໄດ້ຕາມແຜນ ຄື:

1) ອັດຕາເຂົ້າຮຽນໃໝ່ລວມ ຊັ້ນ ມ.4 ປະຕິບັດໄດ້ 65,3%ໃນສົກຮຽນ 2022-2023 (ມະຕິສະພາ: ໃຫ້ບັນລຸ 68%).

2) ນັກຮຽນທີ່ຈົບຊັ້ນມັດທະຍົມຕອນຕົ້ນ ໄດ້ເຂົ້າຮຽນຕໍ່ໃນສາຍ ອາຊີວະສຶກສາ ແລະ ອົບຮົມວິຊາຊີບ ປະຕິບັດໄດ້ 1,4% ໃນສົກຮຽນ 2022-2023 (ມະຕິສະພາ: ໃຫ້ບັນລຸ 2%).

ອ່ານຕໍ່ໜ້າ 6...

## ຕໍລາຄາ...

(ຕໍ່ຈາກໜ້າ 5)

- ມີ 4 ຕົວຊີ້ບອກກຳລັງຈັດຕັ້ງປະຕິບັດ ຄາດວ່າທ້າຍປີຈະສາມາດລາຍງານໄດ້ ຄື:

1) ປະຊາກອນໜຸ່ມ ແລະ ຜູ້ປະລະການຮຽນ ໃຫ້ໄດ້ບຳລຸງຜ່ານການສຶກສານອກໂຮງຮຽນ ແລະ ຝຶກອົບຮົມວິຊາຊີບ ປະຕິບັດໄດ້ 11.420 ຄົນ ເທົ່າກັບ 45,68% ຂອງແຜນການ (ມະຕິສະພາ: ບັນລຸໄດ້ຫຼາຍກວ່າ 25.000 ຄົນ).

2) ຄູຊັ້ນປະຖົມ ແລະ ມັດທະຍົມສຶກສາໃຫ້ໄດ້ຮັບການຝຶກອົບຮົມ ປະຕິບັດໄດ້ 1,9% (ມະຕິສະພາ: ບໍ່ໃຫ້ຫຼຸດ 10% ຂອງຈຳນວນຄູທັງໝົດ).

3) ສົ່ງເສີມມວນຊົນທຸກເພດທຸກໄວ ເຂົ້າຮ່ວມການຫັດກາຍຍະບໍລິຫານ, ການອອກກຳລັງກາຍ ແລະ ການຫຼິ້ນກິລາກາຍຍະກຳ (ມະຕິສະພາ: ໃຫ້ບັນລຸໄດ້ 35% ຂອງພົນລະເມືອງລາວ).

4) ຊຸກຍູ້ ແລະ ສົ່ງເສີມການຄົ້ນຄວ້າວິທະຍາສາດ (ມະຕິສະພາ: ໃຫ້ສຳເລັດບໍ່ໃຫ້ຫຼຸດ 40 ຫົວຂໍ້), ເຊິ່ງປະຈຸບັນແມ່ນຍັງຢູ່ໃນຂັ້ນຕອນເພື່ອຄັດເລືອກ ແລະ ປະເມີນຫົວຂໍ້ຄົ້ນຄວ້າ ເຊິ່ງມີ 57 ຫົວຂໍ້ທີ່ຜ່ານການຄັດເລືອກ ເພື່ອສົ່ງໃຫ້ຄະນະສະພາບໍລິຫານກອງທຶນຮັບຮອງ.

3.2 ຂະແໜງສາທາລະນະສຸກ:

- ມີ 2 ຕົວຊີ້ບອກ ບັນລຸຕາມແຜນການແລ້ວ ຄື:

1) ອັດຕາການຊົມໃຊ້ວິດຖ່າຍຄອບຄົວ ສາມາດປະຕິບັດໄດ້ 83,95% (ມະຕິສະພາ: 83%).

2) ອັດຕາການຮັບຮອງ ແລະ ປະກາດບ້ານສາທາລະນະສຸກແບບຢ່າງ ໄດ້ 87,60% ຂອງຈຳນວນບ້ານທັງໝົດໃນທົ່ວປະເທດ (ມະຕິສະພາ: 83%).

- ມີ 8 ຕົວຊີ້ບອກ ມີທ່າອ່ຽງຈະສາມາດບັນລຸໄດ້ຕາມແຜນການ ຄື:

1) ອັດຕາສ່ວນເດັກນ້ອຍ ລຸ່ມ 5 ປີ ທີ່ມີນ້ຳໜັກຕ່ຳກວ່າມາດຕະຖານ ຄາດຄະເນໝົດປີຈະປະຕິບັດໄດ້ 14,8% (ມະຕິສະພາ: ໃຫ້ຍັງເຫຼືອ 17% ຂອງປະຊາກອນເປົ້າໝາຍ).

2) ອັດຕາສ່ວນເດັກນ້ອຍ ລຸ່ມ 5 ປີ ທີ່ມີລວງສູງຕ່ຳກວ່າມາດຕະຖານ ຄາດຄະເນໝົດປີຈະປະຕິບັດໄດ້ 27,3% (ມະຕິສະພາ: ໃຫ້ຍັງເຫຼືອ 29% ຂອງປະຊາກອນເປົ້າໝາຍ).

3) ອັດຕາການຕາຍຂອງເດັກລຸ່ມ 1 ປີ ແມ່ນ 5/1.000 ເດັກເກີດມີຊີວິດ ແລະ ໃນ 6 ເດືອນຕົ້ນປີ ແມ່ນ 6/1.000 ເດັກເກີດມີຊີວິດ (ມະຕິສະພາ: 24/1.000 ເດັກເກີດມີຊີວິດ).

4) ອັດຕາການຕາຍຂອງເດັກລຸ່ມ 5 ປີ ແມ່ນ 5,7/1.000 ເດັກເກີດມີຊີວິດ ແລະ ໃນ 6 ເດືອນຕົ້ນປີ ແມ່ນ 6,84/1.000 ເດັກເກີດມີຊີວິດ (ມະຕິສະພາ: 34/ 1.000 ເດັກເກີດມີຊີວິດ).

5) ອັດຕາສ່ວນການຕາຍຂອງແມ່ ແມ່ນ 20,80/ 100.000 ເດັກເກີດມີຊີວິດ ແລະ ໃນ 6 ເດືອນຕົ້ນປີ 24,96/ 100.000 ເດັກເກີດມີຊີວິດ (ມະຕິສະພາ: 130/1,000 ເດັກເກີດມີຊີວິດ).

6) ອັດຕາການໃຫ້ວັກຊີນກັນພະຍາດໃນເດັກ ລຸ່ມ 1 ປີ ປະຕິບັດໄດ້ 41,90% ແລະ ໃນ 6 ເດືອນຕົ້ນປີ ຄາດວ່າປະຕິບັດໄດ້ 50,28% (ມະຕິສະພາ: 95%).

7) ອັດຕາຊົມໃຊ້ນ້ຳສະອາດ ປະຕິບັດໄດ້ 92,63% (ມະຕິສະພາ: 93%).

8) ອັດຕາການປົກຄຸມປະກັນສຸຂະພາບ ປະຕິບັດໄດ້ 94,5% ຂອງປະຊາກອນທັງໝົດ (ມະຕິສະພາ: 95%).

- ມີ 1 ຕົວຊີ້ບອກ ທີ່ຍັງທ້າທາຍ ແລະ ມີທ່າອ່ຽງຈະບໍ່ສາມາດບັນລຸຕາມແຜນການ ຄື:

1) ອັດຕາການເກີດລູກມີແພດຊ່ວຍ ປະຕິບັດໄດ້ 33,4% ແລະ ໃນ 6 ເດືອນຕົ້ນປີ ແມ່ນ 40,08% (ມະຕິສະພາ: 83%).

**3.3 ຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກາແດງແຫ່ງຊາດລາວ.**

ມີ 6 ຕົວຊີ້ບອກມີຄວາມຄືບໜ້າດີ ຄື:

1) ສືບຕໍ່ພັດທະນາສີມືແຮງງານໄດ້ທັງໝົດ 4.427 ຄົນ, ເທົ່າກັບ 55,34% ຂອງແຜນການ. ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 5.529 ຄົນ, ເທົ່າກັບ 69,11% ຂອງແຜນການ (ແຜນການ: 8.000 ຄົນ).

2) ຈັດຫາວຽກເຮັດງານທຳຢູ່ຕະຫຼາດແຮງງານພາຍໃນ ແລະ ຕ່າງປະເທດ ໄດ້ 58.465 ຄົນ, ເທົ່າກັບ 74,76% ຂອງແຜນການ. ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 66.087 ຄົນ, ເທົ່າກັບ 84,51% ຂອງແຜນການ (ແຜນການ: 78.200 ຄົນ).

3) ຂະຫຍາຍອັດຕາປົກຄຸມປະກັນສັງຄົມ ໄດ້ 18.302 ຄົນ, ເທົ່າກັບ 58,10% ຂອງແຜນການ. ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 22.877 ຄົນ, ເທົ່າກັບ 72,87% ຂອງແຜນການ (ມະຕິສະພາ: 31.500 ຄົນ).

4) ການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ ຕາມດຳລັດ 272/ລບ ໃນ 5 ເປົ້າໝາຍບູລິມະສິດ ໄດ້ 317 ທ່ານ, ເທົ່າກັບ 56,41% ຂອງແຜນການ (ມະຕິສະພາ: 562 ທ່ານ). ຄິດເປັນເງິນ ໄດ້ 7,99 ຕື້ກີບ, ເທົ່າກັບ 53,26% ຂອງແຜນການ (ມະຕິສະພາ: 15 ຕື້ກີບ).

5) ຄະນະກຳມະການຄຸ້ມຄອງໄພພິບັດຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ໄດ້ສຳເລັດການສ້າງແຜນກຽມຄວາມພ້ອມ ເພື່ອຮັບມືໄພພິບັດທີ່ຈະເກີດຂຶ້ນ ແລະ ໄດ້ສຳເລັດສ້າງກອງທຶນຄຸ້ມຄອງໄພພິບັດຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ 7 ແຫ່ງ, ເທົ່າກັບ 46,67% ຂອງແຜນການ (ແຜນການ: 15 ແຫ່ງ); ໃນນີ້: ສຳເລັດຂັ້ນເມືອງ 7 ແຫ່ງ, ເທົ່າກັບ 63,63% ຂອງແຜນການ (ມະຕິສະພາ: 11 ແຫ່ງ).

6) ປຸກລະດົມ ແລະ ຮັບບໍລິຈາກເລືອດ ໃນໄລຍະ 6 ເດືອນຕົ້ນປີ ປະຕິບັດໄດ້ 36.095 ຖົງ, ເທົ່າກັບ 49,45% ຂອງແຜນການ (ມະຕິສະພາ: 73.000 ຖົງ); ໃນນີ້: ຂັ້ນສູນກາງ ໄດ້ 17.524 ຖົງ, ເທົ່າກັບ 57,42% ຂອງແຜນການ (ມະຕິສະພາ: 30.520 ຖົງ) ແລະ ຂັ້ນທ້ອງຖິ່ນ ໄດ້ 18.571 ຖົງ, ເທົ່າກັບ 43,72% ຂອງແຜນການ (ມະຕິສະພາ: 42.480 ຖົງ).

- ມີ 1 ຕົວຊີ້ບອກ ເຫັນວ່າມີຄວາມທ້າທາຍທີ່ຈະບໍ່ບັນລຸຕາມຄາດໝາຍທີ່ວາງໄວ້ ຄື:

1) ສາມາດກວດກູ້ລະເບີດບໍ່ທັນແຕກອອກຈາກເນື້ອທີ່ທຳການຜະລິດ ແລະ ເຂດຊຸມຊົນ, ເຂດຈຸດສຸມການຜະລິດ ໄດ້ 1.382,54 ເຮັກຕາ, ເທົ່າກັບ 13,83% ຂອງແຜນການ. ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 1.464,33 ເຮັກຕາ, ເທົ່າກັບ 14,64% ຂອງແຜນການ (ມະຕິສະພາ: 10.000 ເຮັກຕາ) ເຫັນວ່າມີຄວາມທ້າທາຍທີ່ຈະບັນລຸຕາມຄາດໝາຍທີ່ວາງໄວ້ (ມະຕິສະພາ: ໃຫ້ຕ່ຳກວ່າ 40 ຄົນ).

**3.4 ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ.**

- ມີ 3 ຕົວຊີ້ບອກມີຄວາມຄືບໜ້າດີ ແລະ ຈະສາມາດບັນລຸຕາມແຜນ ຄື:

1) ການຂະຫຍາຍລະບົບໂທລະໂຄງເຂົ້າບ້ານຈຸດສຸມ ໄດ້ 510 ຊຸດ, ເທົ່າກັບ 51% ຂອງແຜນການ (ມະຕິສະພາ: 1.000 ຊຸດ/ບ້ານ).

2) ສ້າງຄອບຄົວວັດທະນະທຳ ໄດ້ 8.035 ຄອບຄົວ, ເທົ່າກັບ 30,90% ຂອງແຜນການ (ມະຕິສະພາ: 26.000 ຄອບຄົວ) ແລະ ສ້າງບ້ານວັດທະນະທຳໄດ້84ບ້ານ, ເທົ່າກັບ 56% ຂອງແຜນການ (ມະຕິສະພາ: 150 ບ້ານ).

3) ສາມາດດຶງດູດນັກທ່ອງທ່ຽວຕ່າງປະເທດ ໄດ້ຈຳນວນ 1.405.265 ເທື່ອຄົນ, ເທົ່າກັບ 100% ຂອງແຜນການ, ທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນຫຼາຍ; ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ລື່ນຄາດໝາຍທີ່ວາງໄວ້ (ມະຕິສະພາ: 1.400.000 ເທື່ອຄົນ). ສຳລັບນັກທ່ອງທ່ຽວພາຍໃນ ໄລຍະ 4 ເດືອນຕົ້ນປີ ໄດ້ 485.074 ເທື່ອຄົນ, ເທົ່າກັບ 40,42 % ຂອງແຜນການ. ຄາດຄະເນ 6 ເດືອນຕົ້ນປີ ຈະສາມາດປະຕິບັດໄດ້ 600.000 ເທື່ອຄົນ, ເທົ່າກັບ 50% ຂອງແຜນການ (ມະຕິສະພາ: 1.200.000 ເທື່ອຄົນ). ພ້ອມນີ້, ກໍໄດ້ສືບຕໍ່ເອົາໃຈໃສ່ປັບປຸງພື້ນຖານວັດຖຸເຕັກນິກເພື່ອຮອງຮັບແກ່ການທ່ອງທ່ຽວ ໂດຍສັງຄົມມີສ່ວນຮ່ວມຢ່າງຕັ້ງໜ້າ, ຂະບວນການທ່ອງທ່ຽວໂດຍນຳໃຊ້ທາງລົດໄຟລາວ-ຈີນ ນັບມື້ເພີ່ມຂຶ້ນ ແລະ ມີທ່າທີ່ດີ.

- ມີ 4 ຕົວຊີ້ບອກກຳລັງຈັດຕັ້ງປະຕິບັດ ແລະ ເຫັນວ່າມີຄວາມສ່ຽງທີ່ຈະບໍ່ບັນລຸຕາມແຜນ ຄື:

1) ການຂະຫຍາຍສະຖານີວິທະຍຸຂັ້ນເມືອງ, ມາຮອດປັດຈຸບັນຂະແໜງການທີ່ກ່ຽວຂ້ອງໄດ້ສຳເລັດສ້າງແຜນຮ່ວມມືກັບຄູ່ຮ່ວມພັດທະນາ ແລະ ກຳລັງຂົນຂວາຍຊອກຫາແຫຼ່ງທຶນເພື່ອມາຈັດຕັ້ງປະຕິບັດ.

2) ການຂຶ້ນບັນຊີມໍລະດົກ, ວັດທະນະທຳ, ປະຫວັດສາດ ແລະ ທຳມະຊາດ ຈາກຂັ້ນທ້ອງຖິ່ນໃຫ້ເປັນລະດັບຊາດແມ່ນບໍ່ສາມາດຈັດຕັ້ງປະຕິບັດໄດ້ຈັກແຫ່ງ (ມະຕິສະພາ: 4 ແຫ່ງ). ເນື່ອງຈາກການອະນຸມັດງົບປະມານມີຄວາມຊັກຊ້າ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດບໍ່ສາມາດໄປຕາມໜ້າວຽກທີ່ກຳນົດໄວ້.

3) ສຳເລັດການສຳຫຼວດ ແລະ ຂຶ້ນທະບຽນແຫຼ່ງບູຮານວິທະຍາ ໄດ້ 1 ແຫ່ງ, ເທົ່າກັບ 14,29% ຂອງແຜນການ (ມະຕິສະພາ: 7 ແຫ່ງ). ເນື່ອງຈາກການອະນຸມັດງົບປະມານມີຄວາມຊັກຊ້າ ຈຶ່ງເຮັດໃຫ້ການຈັດຕັ້ງປະຕິບັດບໍ່ສາມາດໄປຕາມໜ້າວຽກທີ່ກຳນົດໄວ້.

4) ການສຳຫຼວດ, ຈັດກຳນົດເຂດ, ປັກຫຼັກໝາຍ ແລະ ອອກໃບຢັ້ງຢືນຂອບເຂດແຫຼ່ງທ່ອງທ່ຽວ ຍັງບໍ່ສາມາດຈັດຕັ້ງປະຕິບັດ (ມະຕິສະພາ: 5 ແຫ່ງ) ຍ້ອນເຫັນວ່າບາງວຽກງານ ເຊັ່ນ: ການອອກໃບຢັ້ງຢືນຂອບເຂດແຫຼ່ງທ່ອງທ່ຽວແມ່ນສິດ ແລະ ພາລະບົດບາດຂັ້ນທ້ອງຖິ່ນ ແລະ ຂັ້ນທ້ອງຖິ່ນ ກໍພົບຄວາມຫຍຸ້ງຍາກດ້ານງົບປະມານຮັບໃຊ້ໃນການອອກໃບຢັ້ງຢືນດັ່ງກ່າວ.

**4. ດ້ານການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ.**

- ມີ 4 ຕົວຊີ້ບອກ ມີຄວາມຄືບໜ້າດີຄື:

1) ສ້າງບ້ານພົ້ນທຸກໄດ້ 62 ບ້ານ, ເທົ່າກັບ 31% ຂອງແຜນການ (ມະຕິສະພາ: 200 ບ້ານ);

2) ສ້າງບ້ານພັດທະນາໄດ້ 77 ບ້ານ ເທົ່າກັບ 30,8% ຂອງແຜນການ (ມະຕິສະພາ: 250 ບ້ານ);

3) ສ້າງບ້ານໃຫຍ່ເປັນຕົວເມືອງໃນຊົນນະບົດໄດ້ 2 ບ້ານ ເທົ່າກັບ 50% ຂອງແຜນການ (ມະຕິສະພາ: 4 ບ້ານ);

4) ຈັດສັນພູມລຳເນົາ ແລະ ບ່ອນຢູ່ອາໄສໃຫ້ໝັ້ນຄົງຖາວອນ ໃຫ້ປະຊາຊົນໄດ້ 49 ຄອບຄົວ ເທົ່າກັບ 34,7% ຂອງແຜນການ (ມະຕິສະພາ: 141 ຄອບຄົວ);

- ມີ 2 ຕົວຊີ້ບອກ ມີຄວາມຄືບໜ້າເປັນເຊັ່ນຕ່ຳ ຄື:

1) ສ້າງເມືອງພົ້ນທຸກໄດ້ 4 ເມືອງ ເທົ່າກັບ 26,67% ຂອງແຜນການ (ມະຕິສະພາ: 15 ເມືອງ);

2) ສ້າງເມືອງເຂັ້ມແຂງຮອບດ້ານໄດ້ 1 ເມືອງ ເທົ່າກັບ 25% ຂອງແຜນການ(ມະຕິສະພາ: 4 ເມືອງ);

- ມີ 3 ຕົວຊີ້ບອກ ບໍ່ທັນມີຂໍ້ມູນທີ່ຊັດເຈນ, ຄາດວ່າທ້າຍປີຈະສາມາດລາຍງານໄດ້ ຄື:

1) ສ້າງຄອບຄົວພົ້ນທຸກ (ມະຕິສະພາ: 16.000 ຄອບຄົວ);

2) ສ້າງຄອບຄົວພັດທະນາ (ມະຕິສະພາ: 20.000 ຄອບຄົວ);

3) ຂະຫຍາຍກອງທຶນພັດທະນາບ້ານ ບ້ວງ 500 ລ້ານກີບ ຕໍ່ເມືອງທຸກຍາກຕາມເປົ້າໝາຍທີ່ກຳນົດ 12 ບ້ານ.

**5. ດ້ານຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.**

1) ການຂຶ້ນທະບຽນ ແລະ ອອກໃບຕາດິນ ໃນ 5 ເດືອນຕົ້ນປີ 2023 ໄດ້ 40.394 ຕອນ, ເທົ່າກັບ 10,10% ຂອງແຜນການ, ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 54.471 ຕອນ, ເທົ່າກັບ 13,62% ຂອງແຜນການ (ມະຕິສະພາ: 400.000 ຕອນ);

2) ການສ້າງແຜນຄຸ້ມຄອງອ່າງຮັບນ້ຳຂະໜາດໃຫຍ່ ໄດ້ສຳເລັດ 1 ອ່າງ (ອ່າງນ້ຳຊ້ຳ), ເທົ່າກັບ 20% ຂອງແຜນການ (ມະຕິສະພາ: 5 ອ່າງ), ສ່ວນອີກ 4 ອ່າງ (ອ່າງນ້ຳເຊືອງ, ນ້ຳງຽບ, ນ້ຳເຊໂດນ ແລະ ນ້ຳເຊກອງ) ແມ່ນຢູ່ໃນຂະບວນການປຶກສາຫາລື ແລະ ສະເໜີຮັບຮອງ. ພ້ອມນັ້ນ, ໄດ້ຮ່າງເບື້ອງຕົ້ນແຜນຄຸ້ມຄອງອ່າງຮັບນ້ຳຂະໜາດກາງ ຈຳນວນ 3 ອ່າງຄື: ອ່າງນ້ຳພູນ ແລະ ອ່າງນ້ຳງື່ມ ແຂວງໄຊຍະບູລີ ແລະ ອ່າງນ້ຳຫີນບູນ ແຂວງຄຳມ່ວນ (ມະຕິສະພາ: ໃຫ້ໄດ້ 2 ອ່າງ);

3) ສ້າງແຜນງານແຫ່ງຊາດການປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ (NAP), ມາຮອດປັດຈຸບັນໄດ້ສຳເລັດການສ້າງໂຄງຮ່າງແຜນງານແຫ່ງຊາດດັ່ງກ່າວ, ເຊິ່ງຄາດວ່າຈະໃຫ້ສຳເລັດຮ່າງສະບັບທີ 1 ໃນເດືອນກໍລະກົດ, ຮ່າງສະບັບທີ 2 ໃນເດືອນກັນຍາ ແລະ ຮ່າງສະບັບສຸດທ້າຍໃນເດືອນພະຈິກ 2023 (ມະຕິສະພາ: ໃຫ້ສຳເລັດສະບັບສຸດທ້າຍ).

**6. ຂະແໜງໂຍທາທິການ ແລະ ຂົນສົ່ງ.**

ໂຄງການກໍ່ສ້າງທາງ ແລະ ຍົກລະດັບທາງເລກ 13 ຕອນທາງນະຄອນຫຼວງວຽງຈັນ (ສີເກີດ-ໂພນໂຮງ) ຄວາມຄືບໜ້າສະເລ່ຍສັງລວມຮອດເດືອນພຶດສະພາ 99,98% (ໄດ້ສຳເລັດການກໍ່ສ້າງຊ່ວງທີ 2 ແຕ່ສີ່ເປືອຍ ຫາ ສາມແຍກໂພນໂຮງ); ໂຄງການກໍ່ສ້າງທາງ ແລະ ຍົກລະດັບທາງເລກ 13 ໃຕ້ ແຕ່ ກມ 71-346 ຄວາມຄືບໜ້າສະເລ່ຍສັງລວມຮອດເດືອນພຶດສະພາ 53,95%; ນອກຈາກນີ້, ໄດ້ເອົາໃຈໃສ່ສ້ອມແປງເສັ້ນທາງທີ່ໄດ້ຮັບຜົນກະທົບຈາກໄພພິບັດທຳມະຊາດ ໃຫ້ກັບຄືນມານຳໃຊ້ຢ່າງເປັນປົກກະຕິ. ເອົາໃຈໃສ່ໃນການຕິດຕາມຄຸ້ມຄອງ ແລະ ຄົ້ນຄວ້ານິຕິກຳກ່ຽວຂ້ອງໃນການຄຸ້ມຄອງ 3 ທ່າບົກ (ທ່າບົກສະຫວັນນະເຂດ, ທ່າບົກຈຳປາສັກ

ອ່ານຕໍ່ໜ້າ 7...

## ຕີລາຄາ...

(ຕໍ່ຈາກໜ້າ 6)

ແລະ ທ່າບົກທ່ານາແລ້ງນະຄອນຫຼວງວຽງຈັນ), ສຸມໃສ່ຕິດຕາມການກໍ່ສ້າງທ່າບົກທ່າແຂກແຂວງຄໍາມ່ວນ ປະຈຸບັນມີຄວາມຄືບໜ້າ 17% (ເດືອນພຶດສະພາ), ສໍາລັບທ່າບົກນາເຕີຍ ແຂວງຫຼວງນໍ້າທາ, ຫ້ວຍຊາຍ ແຂວງບໍ່ແກ້ວ, ຫຼວງພະບາງນະຄອນຫຼວງພະບາງແລະເມືອງໄຊ ແຂວງອຸດົມໄຊ, ຫຼັກຊາວ ແຂວງບໍລິຄໍາໄຊ ແມ່ນຢູ່ໃນຂັ້ນຕອນການສຶກສາຄວາມເປັນໄປໄດ້ ແລະ ຄັດເລືອກເອົາບໍລິສັດເຂົ້າມາພັດທະນາ. ອັນພົ້ນເດັ່ນ, ລົດໄຟລາວ-ຈີນ ໄດ້ເປີດຂະບວນໂດຍສານສາກົນລະຫວ່າງສະຖານີຄູນໝິງໃຕ້ ສປຈີນ ແລະ ສະຖານີນະຄອນຫຼວງວຽງຈັນ ສປປ ລາວ ເພື່ອຊຸກຍູ້ການທ່ອງທ່ຽວ. ນອກນັ້ນ, ສໍາເລັດໂຄງການພັດທະນາຕົວເມືອງຕາມແລວທາງອະນຸພາກພື້ນແມ່ນໍ້າຂອງເໜືອໃຕ້ 2 (ເມືອງບໍ່ແກ້ວແລະເມືອງຫຼວງນໍ້າທາ), ສໍາເລັດສະໜາມບິນໜອງຄ້າງ ແຂວງຫົວພັນ, ໂຄງການນໍ້າປະປາ ແລະ ສຸຂາພິບານ ມີຄວາມຄືບໜ້າສະເລ່ຍ 77,10%, ໂຄງການຄຸ້ມຄອງຄວາມສ່ຽງໄພພິບັດນໍ້າຖ້ວມໄລຍະ 1 ແລະ 2 ມີຄວາມຄືບໜ້າສະເລ່ຍ 70,13%.

**7. ຂະແໜງເຕັກໂນໂລຊີ ແລະ ການສື່ສານ.**

ສໍາເລັດການຕິດຕັ້ງ ແລະ ຂະຫຍາຍການນໍາໃຊ້ລະບົບຫ້ອງການທັນສະໄໝ (e-Office) ຈໍານວນ 10 ພາກສ່ວນ; ປັດຈຸບັນໄດ້ສໍາເລັດເຊື່ອມຕໍ່ຂໍ້ມູນລະບົບປະກັນຕົນ, ລະບົບຂໍ້ມູນວິສາຫະກິດແຫ່ງຊາດແລະ ຄັງປັນຍາລາວໃນຮູບແບບເວັບໄຊ ແລະ ສໍາເລັດການມອບ-ຮັບ ແລະ ເປີດນໍາໃຊ້ລະບົບ L-moocs ຢ່າງເປັນທາງການໃນວັນທີ 11 ມັງກອນ 2023; ໄດ້ສໍາເລັດການຕິດຕັ້ງ, ພັດທະນາ ແລະ ເປີດນໍາໃຊ້ ລະບົບຈັດເກັບ ແລະ ນໍາໃຊ້ເອກະສານຮ່ວມກັນຂອງພາກລັດ G-share/D-Drive ຢ່າງເປັນທາງການ ແລະ ຂະຫຍາຍການນໍາໃຊ້ ໃຫ້ບັນດາກະຊວງ ແລະ ອົງການຈັດຕັ້ງທຽບເທົ່າທັງສູນກາງ ແລະ ທ້ອງຖິ່ນ ຈໍານວນ 4.743 ລາຍຊື່, ໃນນີ້: ຂັ້ນສູນກາງ 1.732 ລາຍຊື່ ແລະ ຂັ້ນທ້ອງຖິ່ນ 3.011 ລາຍຊື່ ແລະ ມາຮອດປັດຈຸບັນ ສາມາດຮັບຮອງໄດ້ 16.000 ລາຍຊື່; ສໍາເລັດການຂະຫຍາຍພື້ນທີ່ເກັບກໍາຂໍ້ມູນຂອງລະບົບຄລາວ ຈໍານວນ 45 TB ເຮັດໃຫ້ມີພື້ນທີ່ເກັບກໍາຂໍ້ມູນຂ່າວສານ ເພີ່ມຂຶ້ນ 11%; ສໍາເລັດຂະຫຍາຍລະບົບບໍລິການຮັບຝາກເວັບໄຊ້ ສາມາດຮອງຮັບການບໍລິການເພີ່ມຂຶ້ນ 200 ເວັບໄຊ້.

**8. ວຽກງານປັບປຸງລັດວິສາຫະກິດ:**

ໄດ້ສືບຕໍ່ປະຕິຮູບລັດວິສາຫະກິດ ໃນຈໍານວນ 19 ຫົວໜ່ວຍ; ໃນນີ້: 14 ຫົວໜ່ວຍຈະຮັກສາການຖືຮຸ້ນ 100% ຫຼື ຖືຮຸ້ນໃນອັດຕາສ່ວນໃຫຍ່, 1 ຫົວໜ່ວຍຈະຂາຍຮຸ້ນອອກ ແລະ 4 ຫົວໜ່ວຍຈະຍຸບເລີກ. ສໍາລັບການປະຕິຮູບ 5 ລັດວິສາຫະກິດຍຸດທະສາດ ແມ່ນມີຄວາມຄືບໜ້າດີ

**9. ການປະຕິບັດຜົນການກວດກາຕາມຜົນການກວດສອບການລົງທຶນຂອງລັດ.**

1) ການແກ້ໄຂຜົນການກວດກາຕາມມະຕິສະພາແຫ່ງຊາດ ສະບັບເລກທີ 101/ສພຊ, 21/ສພຊ ແລະ 14/ສພຊ.

- ການຫັກລົບມູນຄ່າໜ້າວຽກທີ່ບໍ່ໄດ້ປະຕິບັດ, ມູນຄ່າຄິດໄລ່ບໍ່ຖືກລະບຽບ, ເຊັ່ນ ສັນຍາຫຼຸດມູນຄ່າ ທີ່ສະພາແຫ່ງຊາດຮັບຮອງ ທັງໝົດ 72 ໂຄງການ ມູນຄ່າ 682,30 ຕື້ກີບ; ຍັງຄ້າງ 54 ໂຄງການ, ມູນຄ່າ 532,73 ຕື້ກີບ. ຜ່ານການຕິດຕາມຜົນການກວດກາຕາມຜົນການກວດກາສອບ ສາມາດຫັກລົບໄດ້ທັງໝົດ 18ໂຄງການ ມູນຄ່າ 139,56 ຕື້ກີບ, ເຊິ່ງຈໍານວນໂຄງການທີ່ຍັງບໍ່ທັນຫັກລົບ ແມ່ນຈະສືບຕໍ່ປະຕິບັດໃນປີຕໍ່ໄປ.
- ການຕໍ່ລອງໂຄງການທີ່ມີມູນຄ່າສູງເກີນ 20% ຈໍານວນ 61 ໂຄງການ ມູນຄ່າ 2.170 ຕື້ກີບ. ຜ່ານການຕິດຕາມເຫັນວ່າ ຂະແໜງການ ແລະ ທ້ອງຖິ່ນ ເຫັນວ່າການຈັດຕັ້ງປະຕິບັດການຕໍ່ລອງຕົວຈິງພົບຄວາມຫຍຸ້ງຍາກ
- ພິຈາລະນາໂຄງການນອກແຜນ ທີ່ສະເໜີເຂົ້າແຜນຊໍາລະ ຕາມມະຕິ 101/ສພຊ, 21/ສພຊ ມີທັງໝົດຈໍານວນ 94 ໂຄງການ, ມູນຄ່າ 742,46 ຕື້ກີບ, ມາຮອດປີ 2022 ກົມແຜນການ ແລະ ອົງການກວດກາແຫ່ງລັດ ແມ່ນມີບັນຊີຮ່ວມກັນ ຈໍານວນ 65 ໂຄງການ, ມູນຄ່າ 635,44 ຕື້ກີບ; ຜ່ານການຕິດຕາມ, ຊຸກຍູ້ ເຫັນວ່າ ບັນດາກະຊວງ ແລະ ແຂວງ ສາມາດແກ້ໄຂໄດ້ ຈໍານວນ 36 ໂຄງການ, ມູນຄ່າ 528,42 ຕື້ກີບ, ຍັງຄ້າງ 29 ໂຄງການ, ມູນຄ່າ 107,02 ຕື້ກີບ.

2) ການແກ້ໄຂຜົນການກວດກາໂຄງການລົງທຶນຂອງລັດ ຕາມແຈ້ງການ ສະບັບເລກທີ 130/ຫສນຍ, ລົງວັນທີ 22 ມັງກອນ 2019.

- ການຫັກລົບມູນຄ່າອອກຈາກສາລະບານງົບປະມານ ທັງໝົດຈໍານວນ 263 ໂຄງການ, ມູນຄ່າ 1.347,72 ຕື້ກີບ ແລະ 104.891,81 ໂດລາ: ສາມາດແກ້ໄຂໄດ້ຈໍານວນ 134 ໂຄງການ, ມູນຄ່າ 880,11 ຕື້ກີບ, ຍັງບໍ່ທັນສາມາດຫັກລົບໄດ້ ຈໍານວນ 129 ໂຄງການ, ມູນຄ່າ 467,61 ຕື້ກີບ ແລະ 104.891,81 ໂດລາ.
- ຜົນການຈັດຕັ້ງປະຕິບັດໂຄງການນອກແຜນ 38 ໂຄງການ ມູນຄ່າ 531,94 ຕື້ກີບ: ຜ່ານການປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນ ເຫັນວ່າໄດ້ຮັບການແກ້ໄຂແລ້ວ 13 ໂຄງການ, ມູນຄ່າ 128,44 ຕື້ກີບ (ໃນນີ້: ຈໍານວນ 11 ໂຄງການ ໄດ້ຖືກບັນຈຸເຂົ້າແຜນການລົງທຶນຂອງລັດແລ້ວ ມູນຄ່າ 108,90 ຕື້ກີບ ແລະ ຈໍານວນ 2 ໂຄງການ, ມູນຄ່າ 19,54 ຕື້ກີບໄດ້ໂຈະການຈັດຕັ້ງປະຕິບັດໂຄງການ). ມາຮອດປັດຈຸບັນຍັງຄ້າງ 25 ໂຄງການ, ມູນຄ່າ 404,33 ຕື້ກີບ, ທີ່ຈະຕ້ອງໄດ້ສືບຕໍ່ແກ້ໄຂ ເຊິ່ງໃນນັ້ນ ມີທັງໂຄງການນອກແຜນ ແລະ ໂຄງການທີ່ນອນຢູ່ໃນແຜນແຕ່ມູນຄ່າສັນຍາເກີນສະພາຮັບຮອງ.
- ການຕໍ່ລອງມູນຄ່າສູງເກີນ 20% ຈໍານວນ 107 ໂຄງການ ມູນຄ່າ 2.857,29 ຕື້ກີບ:

**10. ດ້ານການປົກຄອງ ແລະ ຍຸຕິທໍາ.**

- ໄດ້ອະນຸມັດຈໍານວນຕົວເລກລັດຖະກອນໃໝ່ ໃຫ້ບັນດາກະຊວງ, ອົງການຈັດຕັ້ງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນປີ 2023 ຈໍານວນ 800 ໂກຕ້າ; ໃນນີ້: ໄດ້ເອົາໃຈໃສ່ພິເສດຈັດສັນໃຫ້ຂະແໜງສຶກສາ ແລະ ກິລາ ຈໍານວນ 290 ໂກຕ້າ ກວມເອົາ 36,25% ແລະ ຈັດສັນໃຫ້ຂະແໜງສາທາລະນະສຸກ ຈໍານວນ 230 ໂກຕ້າ ກວມເອົາ 28,75% ຂອງຈໍານວນໂກຕ້າລັດຖະກອນທັງໝົດ.
- ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ ຈໍານວນ 10 ສະບັບ ທີ່ຈະນໍາເຂົ້າພິຈາລະນາຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ແລະ ນິຕິກໍາລຸ່ມກົດໝາຍ (ດໍາລັດ) 11 ສະບັບ;
- ຄໍາຕັດສິນຂອງສານຢູ່ອົງການປະຕິບັດຄໍາຕັດສິນຂອງສານທົ່ວປະເທດ ມີທັງໝົດ 52.323 ເລື່ອງ (ຄະດີແພ່ງ 10.739 ເລື່ອງ, ຄະດີອາຍາ 41.584 ເລື່ອງ) ໃນນັ້ນ ປະຕິບັດສໍາເລັດ 1.518 ເລື່ອງ (ຄະດີແພ່ງ 628 ເລື່ອງ, ຄະດີອາຍາ 890 ເລື່ອງ), ພວມປະຕິບັດ 46.330 ເລື່ອງ (ຄະດີແພ່ງ 9.499 ເລື່ອງ, ຄະດີອາຍາ 36.831 ເລື່ອງ), ໄດ້ອອກຄໍາສັ່ງໂຈະການປະຕິບັດຄໍາຕັດສິນຂອງສານທີ່ບໍ່ມີເງື່ອນໄຂປະຕິບັດ 794 ເລື່ອງ (ຄະດີແພ່ງ 85 ເລື່ອງ, ຄະດີອາຍາ 709 ເລື່ອງ) ຄໍາຕັດສິນບໍ່ສາມາດປະຕິບັດໄດ້ ຍ້ອນບໍ່ຮູ້ທີ່ຢູ່ຂອງຜູ້ຖືກປະຕິບັດຄໍາຕັດສິນ, ພວມຄົ້ນຄ້ວາເກັບກໍາຂໍ້ມູນ ເພື່ອອອກຄໍາສັ່ງໂຈະ 3.581 ເລື່ອງ (ຄະດີແພ່ງ 492 ເລື່ອງ, ຄະດີອາຍາ 3.089 ເລື່ອງ), ອົງການໄອຍະການປະຊາຊົນສູງສຸດທວງສໍານວນເພື່ອໄປກວດກາ 100 ເລື່ອງ (ຄະດີແພ່ງ 35 ເລື່ອງ, ຄະດີອາຍາ 65 ເລື່ອງ).

**11. ວຽກງານແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ.**

- ສຶກສາອົບຮົມການເມືອງແນວຄິດໃຫ້ພະນັກງານ, ນັກຮົບ ລວມທັງພໍ່ແມ່ປະຊາຊົນເຂົ້າໃຈແນວທາງນະໂຍບາຍຂອງພັກ-ລັດ, ຊຸກຍູ້ການຈັດຕັ້ງປະຕິບັດແຫຼ່ງທຶນຕ່າງໆຂອງສັງຄົມ.
- ພົ້ນເດັ່ນແມ່ນກຸ່ມຫັດຖະກໍາຕໍ່າຫູກສະຫະພັນແມ່ຍິງບ້ານດອນບຸງ, ເມືອງຄຸ້ມລານ, ແຂວງສາລະວັນ ໄດ້ກາຍເປັນ “ໜຶ່ງເມືອງ ໜຶ່ງຜະລິດຕະພັນແຫ່ງຊາດ”. ໄດ້ເອົາໃຈໃສ່ວຽກງານປົກປ້ອງແມ່ຍິງ ແລະ ເດັກນ້ອຍ ໂດຍສຸມໃສ່ຂະຫຍາຍສູນໃຫ້ຄໍາປຶກສາແມ່ຍິງ ແລະ ເດັກນ້ອຍຢູ່ທ້ອງຖິ່ນ.
- ສ້າງໂອກາດໃຫ້ໄວໜຸ່ມໄດ້ເຂົ້າເຖິງການຝຶກວິຊາຊີບ, ການສ້າງວຽກເຮັດງານທໍາ. ນອກຈາກນັ້ນ, ກໍໄດ້ສຸມໃສ່ພັດທະນາໃຫ້ເຂົາເຈົ້າກ້າສະແດງອອກ ດ້ວຍກິດຈະກໍາຕ່າງໆ.

**12. ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ.**

ຕິດພັນກັບ 4 ໜ້າທີ່ໃຫຍ່ 26 ແຜນງານ ຂອງວຽກງານປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ແລະ ກໍາລັງ ປກສ, ປກຊ ທຸກຂັ້ນ ສາມາດປະຕິບັດໜ້າທີ່ການເມືອງຂອງຕົນໃນທຸກສະຖານະການ. ອັນພິເສດແມ່ນໄດ້ສຸມໃສ່ຊີ້ນໍາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕິດພັນກັບການແກ້ໄຂບັນຫາປະກົດການຫຍໍ້ທໍ້ໃນສັງຄົມ. ຕົ້ນຕໍແມ່ນສາມາດສະກັດກັ້ນ ແລະ ແກ້ໄຂໄດ້ບັນດາໜໍ່ແໜງທີ່ຈະກໍ່ຄວາມບໍ່ສະຫງົບຢ່າງທັນການ, ເຮັດໃຫ້ປະເທດຊາດສືບຕໍ່ມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍໂດຍພື້ນຖານ.

## ບົດລາຍງານ...

(ຕໍ່ຈາກໜ້າ 1)

ສັງຄົມແຫ່ງຊາດ ແລະ ແຜນງົບປະມານແຫ່ງລັດ ປີ 2023 ແລະ ຄໍາແນະນໍາຂອງກະຊວງການເງິນ ສະບັບເລກທີ 3736/ກງ, ລົງວັນທີ 25 ພະຈິກ 2022 ວ່າດ້ວຍການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ ປີ 2023, ດັ່ງນີ້:

- ແຜນລາຍຮັບທັງໝົດ: 38.448 ຕື້ກີບ, ເທົ່າກັບ 16,42% ຂອງ GDP ໃນນັ້ນ: ລາຍຮັບພາຍໃນ 34.898 ເທົ່າກັບ 14,90% ຂອງ GDP ຕື້ກີບ ແລະ ລາຍຮັບການຊ່ວຍເຫຼືອລ້າ 3.550 ຕື້ກີບ.
- ແຜນລາຍຈ່າຍທັງໝົດ: 43.498 ຕື້ກີບ ເທົ່າກັບ 18,58% ຂອງ GDP;
- ແຜນຂາດດຸນ: 5.050 ຕື້ກີບ, ເທົ່າກັບ 2,16% ຂອງ GDP (ມູນຄ່າ GDP ເທົ່າກັບ 234.160 ຕື້ກີບ).

ຜ່ານການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ດັ່ງນີ້:

1. ດ້ານລາຍຮັບ

ໃນ 5 ເດືອນຕົ້ນປີ ສາມາດປະຕິບັດໄດ້ 15.155 ຕື້ກີບ ເທົ່າກັບ 39% ຂອງແຜນການປີ (ເທົ່າກັບ 6,47% ຂອງ GDP) ຫຼື ເທົ່າກັບ 71% ຂອງແຜນ 6 ເດືອນຕົ້ນປີ (ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 42% ເປັນເງິນ 4.495 ຕື້ກີບ) ໃນນີ້:

- ລາຍຮັບພາຍໃນ 14.848 ຕື້ກີບ ເທົ່າກັບ 43% ຂອງແຜນການປີ ຫຼື ເທົ່າກັບ 6,34% ຂອງ GDP (ສູນກາງປະຕິບັດໄດ້ 10.303 ຕື້ກີບ ເທົ່າກັບ 39% ຂອງແຜນການປີ ແລະ ລາຍຮັບທ້ອງຖິ່ນ ປະຕິບັດໄດ້ 4.545 ຕື້ກີບ ເທົ່າກັບ 52% ຂອງແຜນການປີ) ແລະ ລາຍຮັບຈາກການຊ່ວຍເຫຼືອລ້າ ປະຕິບັດໄດ້ 307 ຕື້ກີບ, ເທົ່າກັບ 9% ຂອງແຜນການປີ.
- ຄາດຄະເນປະຕິບັດ 6 ເດືອນຕົ້ນປີ ລາຍຮັບທັງໝົດຄາດວ່າຈະສາມາດປະຕິບັດໄດ້ ປະມານ 18.424 ຕື້ກີບ ຫຼື ເທົ່າກັບ 48% ຂອງແຜນການປີ ສະເພາະລາຍຮັບພາຍໃນຄາດວ່າຈະໄດ້ 17.963 ຕື້ກີບ ເທົ່າກັບ 50% ຂອງແຜນການປີ.

ການຈັດຕັ້ງປະຕິບັດລາຍຮັບທຽບໄລຍະດຽວກັນ ເຫັນວ່າ ເພີ່ມຂຶ້ນ 42% ເນື່ອງມາຈາກການຫັນຄຸ້ມຄອງເກັບລາຍຮັບຜ່ານລະບົບທັນສະໄໝ ຕິດພັນກັບການອັດຊ່ອງວ່າງການຮົ່ວໄຫຼ ຂອງລາຍຮັບງົບປະມານຕາມຄໍາສັ່ງສະບັບເລກທີ 18/ນຍ ສໍາລັບຂັ້ນທ້ອງຖິ່ນກໍເຫັນວ່າມີທ່າອຽງເພີ່ມຂຶ້ນເຊັ່ນດຽວກັນທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເຊິ່ງມີ 7 ແຂວງ 1 ສາມາດເກັບລາຍຮັບໄດ້ ເກີນ 50% ແຕ່ຍັງມີບາງແຂວງຈໍານວນໜຶ່ງເກັບລາຍຮັບຍັງໄດ້ຕໍ່າບໍ່ເກີນ 30% ຂອງແຜນການປີ.

ສໍາລັບຜົນກະທົບຂອງອັດຕາແລກປ່ຽນຕໍ່ກັບການເກັບລາຍຮັບ, ເຖິງແມ່ນວ່າການເກັບລາຍຮັບເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນກໍຕາມ ປະມານ 130% ເມື່ອທຽບໃສ່ປີຜ່ານມາ ເປັນເງິນປະມານ 100 ລ້ານໂດລາ, ແຕ່ກວມເອົາສັດສ່ວນພຽງເລັກໜ້ອຍ ຂອງລາຍຮັບທີ່ສາມາດເກັບໄດ້ຕົວຈິງ ປະມານ 214 ຕື້ກີບ ຫຼື ກວມເອົາ 0,6% ຂອງລາຍຮັບພາຍໃນ.

2. ດ້ານລາຍຈ່າຍ:

ປະຕິບັດໄດ້ 10.905 ຕື້ກີບ, ເທົ່າກັບ 25% ຂອງແຜນການປີ, ໃນນີ້: ຂັ້ນສູນກາງປະຕິບັດໄດ້7.721 ຕື້ກີບ, ເທົ່າກັບ 23% ຂອງແຜນການປີ ແລະ ຂັ້ນທ້ອງຖິ່ນປະຕິບັດໄດ້ 3.184 ຕື້ກີບ, ເທົ່າກັບ 39% ຂອງແຜນການປີ ໂດຍໄດ້ສຸມໃສ່ການເບີກຈ່າຍເງິນເດືອນ ແລະ ເງິນນະໂຍບາຍເປັນບູລິມະສິດ ເຊິ່ງສໍາເລັດການເບີກຈ່າຍເດືອນມິຖຸນາ ຢູ່ຂັ້ນສູນກາງ ສ່ວນຂັ້ນທ້ອງຖິ່ນແມ່ນສໍາເລັດເປັນສ່ວນໃຫຍ່ ແລະ ພວມສືບຕໍ່ເບີກຈ່າຍໃຫ້ສໍາເລັດ, ພ້ອມນັ້ນກໍໄດ້ສຸມໃສ່ຊໍາລະໜີ້ສິນພາຍໃນ ແລະ ຕ່າງປະເທດ ຕາມຂໍ້ຜູກພັນສັນຍາ ແລະ ຮັບປະກັນລາຍຈ່າຍບໍລິຫານຂອງພັກ-ລັດ ທີ່ຈໍາເປັນ.

ສໍາລັບລາຍຈ່າຍເງິນໂຄງການລົງທຶນຂອງລັດ ເພື່ອບໍ່ໃຫ້ເປັນການຊັກຊ້າຄືປີຜ່ານມາ, ສະນັ້ນ, ກະຊວງການເງິນ ກໍໄດ້ມີກົນໄກ ໃຫ້ບັນດາກະຊວງ,

ອ່ານຕໍ່ໜ້າ 8...

## ບົດລາຍງານ...

(ຕໍ່ຈາກໜ້າ 7)

ອົງການ ແລະ ທ້ອງຖິ່ນ ທີ່ໄດ້ຮັບແຜນລົງທຶນແລ້ວ ສາມາດເບີກຈ່າຍໄດ 45% ຂອງແຜນການປີ, ພ້ອມນັ້ນ ກໍໄດ້ມີກົນໄກການຈັດຕັ້ງປະຕິບັດເງິນເກີນແຜນ ປີ 2022 ໃຫ້ແຂວງສາມາດນຳໃຊ້ 80% ເພື່ອກະຕຸ້ນເສດຖະກິດ ແຕ່ຫົວທີ ເຊິ່ງໄດ້ເລີ່ມຈັດຕັ້ງປະຕິບັດແຕ່ເດືອນພຶດສະພາ 2023 ເປັນຕົ້ນມາ.

3. ດ້ານດຸນດ່ຽງ:

ໃນ 5 ເດືອນ ສາມາດລະດົມແຫຼ່ງທຶນ ເພື່ອມາດຸນດ່ຽງງົບປະມານພາຍໃນ ແລະ ຕ່າງປະເທດ ໄດ້ 6.170 ຕື້ກີບ, ເທົ່າກັບ 15% ຂອງແຜນການປີ, ໃນນີ້: ອອກພັນທະບັດພາຍໃນ 840 ຕື້ກີບ, ເທົ່າກັບ 8% ຂອງແຜນການປີ ແລະ ກູ້ຢືມເປັນໂຄງການຈາກຕ່າງປະເທດ 5.330 ຕື້ກີບ, ເທົ່າກັບ 18% ຂອງແຜນການປີ. ປະຈຸບັນສາມາດປະຕິບັດໄດ້ 9.042 ຕື້ກີບ ຫຼື ເທົ່າກັບ 22% ຂອງແຜນການປີ.

ສຳລັບທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023: ເພື່ອໃຫ້ສາມາດປະຕິບັດລາຍຮັບໃຫ້ໄດ້ຕາມແຜນ ແລະ ລື່ນແຜນ ກະຊວງການເງິນ ຈະສູ້ຊົນການຈັດຕັ້ງປະຕິບັດບັນດາມາດຕະການ ແລະ ຄາດໝາຍທີ່ໄດ້ກຳນົດ ຕາມມະຕິຂອງສະພາແຫ່ງຊາດ ໂດຍຈະໄດ້ສຸມໃສ່ບາງມາດຕະການ ແລະ ວຽກຈຸດສຸມຕົ້ນຕໍ ດັ່ງນີ້:

1. ດ້ານລາຍຮັບ:

(1) ສືບຕໍ່ຊຸກຍູ້, ຕິດຕາມ ຢ່າງໃກ້ຊິດ ກັບບັນດາແຂວງທີ່ເຮັດທົດລອງມອບຫົວໜ່ວຍທຸລະກິດ ໃຫ້ແຂວງຄຸ້ມຄອງເພື່ອເກັບລາຍຮັບໃຫ້ໄດ້ຕາມຄາດໝາຍ ແລະ ລື່ນຄາດໝາຍ ພ້ອມທັງສາມາດດຸນດ່ຽງງົບປະມານສ່ວນທີ່ເກີນດຸນໃຫ້ສູນກາງ. ພ້ອມກັນນັ້ນ, ຈະປະເມີນຄືນການເຮັດທົດລອງດັ່ງກ່າວ ເພື່ອຕີລາຄາດ້ານດີ ແລະ ຂໍ້ຄົງຄ້າງ ເປັນພື້ນຖານໃນການກຳນົດທິດທາງໃນຕໍ່ໜ້າ;

(2) ສຸມໃສ່ເກັບລາຍຮັບອາກອນມູນຄ່າເພີ່ມຕາມອັດຕາ 7% ໄປຄຽງຄູ່ກັບການປະເມີນຄືນ ເພື່ອສະເໜີສະພາແຫ່ງຊາດພິຈາລະນາຮັບຮອງເອົາອັດຕາໃໝ່ ເປັນ 10% ໃຫ້ສາມາດເລີ່ມຈັດຕັ້ງປະຕິບັດໃນປີ 2024;

(3) ສືບຕໍ່ເກັບລາຍຮັບຈາກຫົວຫນ່ວຍທຸລະກິດຂະໜາດໃຫຍ່ ເປັນຕົ້ນ: ບໍລິສັດໄຟຟ້າຫົງສາ, ນ້ຳເທີນ 2, ລາວຖາຍປອນ ບໍ່ແຮ່, ຊີໂນ-ອາກຣີໂປຕັດ ໃຫ້ເປັນປົກກະຕິ ແລະ ຕິດຕາມການມອບພັນທະຕ່າງໆ ຕາມສັນຍາ ຈຳນວນ 870 ຕື້ກີບ ແລະ 15 ລ້ານໂດລາ;

(4) ເລັ່ງທວງໜີ້ຕ້ອງຮັບຈາກຫົວໜ່ວຍທຸລະກິດຂຸດຄົ້ນເງິນຄຣິບໂຕ ແລະ ສູນຊື້-ຂາຍ ຄຣິບໂຕ ທີ່ຍັງຄ້າງຊຳລະປີ 2022 ຈຳນວນ 7 ຫົວໜ່ວຍ ຈຳນວນ 19,5 ລ້ານໂດລາ, ບໍ່ແຮ່ 94 ລ້ານໂດລາ ຈະເຈລະຈາໃຫ້ບໍລິສັດມອບ ເນື່ອງຈາກບໍ່ສອດຄ່ອງກັບລະບຽບການ; ຫັນຊັບສິນເປັນທຶນ 159 ຕື້ກີບ ແລະ ປະມານ 7 ລ້ານໂດລາ ໃນກໍລະນີຫາກບໍ່ມອບ ສະເໜີພິຈາລະນາລຶບລ້າງໃບຕາດິນ;

(5) ລົງຊຸກຍູ້ ແລະ ຕິດຕາມກວດກາ ການປະຕິບັດວຽກງານວິຊາສະເພາະ ຢູ່ບັນດາດ່ານພາສີຊາຍແດນ ທີ່ມີຖານລາຍຮັບຫຼາຍ ເປັນຕົ້ນ ດ່ານບໍ່ເຕັນ (ຫຼວງນ້ຳທາ), ດ່ານຂົວມິດຕະພາບ 4 (ບໍ່ແກ້ວ), ດ່ານທ່າບົກ-ທ່ານາແລ້ງ ແລະ ຂົວມິດຕະພາບ 1 (ນະຄອນຫຼວງ);

(6) ສຸມໃສ່ກວດກາການກຳນົດມູນຄ່າແຈ້ງພາສີ ແລະ ແຫຼ່ງກຳເນີດສິນຄ້າ ຂອງບັນດາໝວດສິນຄ້າທີ່ມີຄວາມສ່ຽງ ເປັນຕົ້ນ ສິນຄ້າຟຸມເຟືອຍ (ເຄື່ອງດື່ມປະເພດທາດເຫຼົ້າ), ພາຫະນະປະເພດລົດຫູຫຼາ ແລະ ເຄື່ອງເອເລັກໂຕຣນິກ;

(7) ສຸມໃສ່ວຽກງານກວດກາ, ຕ້ານ ແລະ ສະກັດກັ້ນການລັກລອບໜີພາສີ ຢູ່ນອກດ່ານພາສີຊາຍແດນ ແລະ ເຂດທີ່ມີຄວາມສ່ຽງຕາມຊາຍແດນ;

(8) ທ້ອນໂຮມຊັບສິນທີ່ໄດ້ຈາກການຍຶດ, ອາຍັດ, ການຕັດສິນຂອງສານເປັນຂອງລັດຈາກພາກສ່ວນທີ່ກ່ຽວຂ້ອງ ໂດຍສະເພາະກະຊວງປ້ອງກັນຄວາມສະຫງົບ ເພື່ອມອບ-ຮັບຊັບສິນ ດັ່ງກ່າວໃຫ້ເປັນຂອງລັດ;

(9) ລົງເກັບກຳຂໍ້ມູນເພີ່ມເຕີມ ຂອງບັນດາເຂື່ອນໄຟຟ້າ, ໂຄງການສຳຫຼວດ ແລະ ຂຸດຄົ້ນແຮ່ທາດ ແລະ ໂຄງການສຳປະທານຕ່າງໆ ເພື່ອເປັນພື້ນຖານສ້າງຂໍ້ມູນຖານລາຍຮັບ ໃຫ້ລະອຽດຄົບຖ້ວນກັບສະພາບຕົວຈິງ;

(10) ສືບຕໍ່ພັກດັນບັນດານິຕິກຳທີ່ສຳເລັດແລ້ວໃຫ້ສາມາດປະກາດ ແລະ ນຳໃຊ້ໂດຍໄວ ເປັນຕົ້ນ ລັດຖະບັນຍັດວ່າດ້ວຍອັດຕາຄ່າຊັບພະຍາກອນທຳມະຊາດ, ພາສີຊັບພະຍາກອນ, ຄ່າເຊົ່າ-ຄ່າສຳປະທານ; ລັດຫັນຊັບສິນເປັນທຶນ.

2. ດ້ານລາຍຈ່າຍ

(1) ສືບຕໍ່ຈັດຕັ້ງປະຕິບັດມາດຕະການປະຢັດ ແລະ ຕ້ານການຟຸມເຟືອຍ ຕາມດຳລັດສະບັບເລກທີ 205/ນຍ ແລະ ກຳນົດໝາຍໃຊ້ຈ່າຍຂອງລັດ ສະບັບເລກທີ 0200/ກງ ໃຫ້ເປັນຮູບປະທຳ ຮັບປະກັນລາຍຈ່າຍທີ່ເປັນບູລິມະສິດ ແລະ ຈຳເປັນ ຂອງພັກ-ລັດ ສາມາດເຄື່ອນໄຫວໄດ້ເປັນປົກກະຕິ, ພ້ອມທັງເຂັ້ມງວດການກວດກາເອກະສານກ່ອນຈ່າຍ ເພື່ອໃຫ້ບັນດາຫົວໜ່ວຍງົບປະມານນຳໃຊ້ຖືກເປົ້າໝາຍ;

(2) ສືບຕໍ່ປັບປຸງກົນໄກການຄຸ້ມຄອງລາຍຈ່າຍງົບປະມານແຫ່ງລັດ ຫັນໄປສູ່ການເບີກຈ່າຍຜ່ານລະບົບທັນສະໄໝ ໂດຍມອບຄວາມຮັບຜິດຊອບໃຫ້ຫົວໜ່ວຍງົບປະມານເປັນເຈົ້າການຫຼາຍຂຶ້ນ ສ່ວນກະຊວງການເງິນ ຈະຫັນໄປຄຸ້ມຄອງມະຫາພາກ ແລະ ລົງເລິກການກວດກາຫຼັງການຈ່າຍ;

(3) ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ ແລະ ຄຳແນະນຳ ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ສະບັບເລກທີ 0477/ກງ;

(4) ປະເມີນການຈັດຕັ້ງປະຕິບັດ ການເຮັດທົດລອງບັນດາຫັນຫົວໜ່ວຍກຸ້ມຕົນເອງທາງດ້ານງົບປະມານ, ພ້ອມທັງສືບຕໍ່ສົມທົບກັບ ກະຊວງພາຍໃນ ເພື່ອປັບປຸງຮ່າງດຳລັດວ່າດ້ວຍການຫັນຫົວໜ່ວຍວິຊາການເປັນເຈົ້າຕົນເອງ ແລະ ດຳລັດວ່າດ້ວຍພະລາກອນ ໃຫ້ສຳເລັດຕາມແຜນກຳນົດໄວ້;

(5) ສືບຕໍ່ລົງເກັບກຳຂໍ້ມູນຢູ່ບາງດ່ານສາກົນ ໃນການຄົ້ນຄວ້າໂຄງປະກອບດ້ານງົບປະມານບໍລິຫານດ່ານ ແນໃສ່ຮັບປະກັນມີງົບປະມານພຽງພໍໃນການປັບປຸງສະພາບແວດລ້ອມ ແລະ ສິ່ງອຳນວຍຄວາມສະດວກໃນການບໍລິຫານຄຸ້ມຄອງດ່ານມີຄວາມຄ່ອງຕົວ;

(6) ສືບຕໍ່ຄົ້ນຄວ້າກົນໄກການເບີກຈ່າຍເງິນເດືອນໃຫ້ສາມາດຈ່າຍໄດ້ ລະຫວ່າງວັນທີ 25 ຫາ 30 ຂອງແຕ່ລະເດືອນ ຂອງບາງຂະແໜງການສູນກາງ ແລະ ທ້ອງຖິ່ນ ທີ່ປະກອບເອກະສານຊັກຊ້າ ໂດຍສົມທົບກັບບັນດາທະນາຄານທຸລະກິດທີ່ມີເງື່ອນໄຂ ເບີກຈ່າຍລ່ວງໜ້າກ່ອນ.

3. ວຽກຫັນເປັນທັນສະໄໝ

ສືບຕໍ່ຈັດຕັ້ງປະຕິບັດວຽກງານການຫັນເປັນທັນສະໄໝ ໃຫ້ເປັນຮູບປະທຳ ແນໃສ່ຮັບປະກັນໃຫ້ການເກັບລາຍຮັບໄດ້ຕາມຄາດໝາຍ ເປັນຕົ້ນ:

(1) ຈັດຕັ້ງປະຕິບັດວຽກງານການຫັນເປັນທັນສະໄໝ ໃຫ້ເປັນຮູບປະທຳ ເຊິ່ງຕ້ອງໄດ້ສືບຕໍ່ປັບປຸງ, ຍົກລະດັບລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຄວາມປອດໄພ, ຍົກລະດັບຖານຂໍ້ມູນຂອງກະຊວງການເງິນ ເພື່ອເຊື່ອມຕໍ່ກັບລະບົບຖານຂໍ້ມູນຂອງບັນດາຂະແໜງການທີ່ກ່ຽວຂ້ອງ;

(2) ຜັນຂະຫຍາຍ ໃນຂອບເຂດທົ່ວປະເທດ ກ່ຽວກັບລະບົບຄຸ້ມຄອງຈັດເກັບພາສີທີ່ດິນ (LTMS) ເຊື່ອມຕໍ່ຫາຖານຂໍ້ມູນທີ່ດິນແຫ່ງຊາດໃໝ່ ແບບອອນລາຍ (Real Time) ແລະ ຊຸກຍູ້ການເກັບລາຍຮັບຄ່າທຳນຽມທາງຜ່ານລະບົບ RTMS ເຊື່ອມຕໍ່ຫາຖານຂໍ້ມູນຂອງຂະແໜງໂຍທາທິການ ແລະ ຂົນສົ່ງ;

(3) ຜັນຂະຫຍາຍລະບົບແຈ້ງພາສີປະຕູດຽວແຫ່ງຊາດ (NSWA+) ໄປຫາບັນດາດ່ານພາສີສາກົນທີ່ເຫຼືອ (22 ດ່ານ) ໃນຂອບເຂດທົ່ວປະເທດ, ພ້ອມທັງເຊື່ອມຕໍ່ກັບລະບົບຂອງສະມາຄົມຂົນສົ່ງລະຫວ່າງປະເທດ (LITFA);

(4) ຜັນຂະຫຍາຍລະບົບເກັບຄ່າທຳນຽມ, ຄ່າບໍລິການ (Easy Pass) ຫາບັນດາດ່ານສາກົນທີ່ຍັງເຫຼືອ ໃນຂອບເຂດທົ່ວປະເທດ ແລະ ສືບຕໍ່ລວມສູນການເກັບຄ່າທຳນຽມ ແລະ ຄ່າບໍລິການ ຂອງຂະແໜງການທີ່ກ່ຽວຂ້ອງ ຢູ່ດ່ານສາກົນ ແລະ ຢູ່ຈຸດບໍລິການຂອງຫົວໜ່ວຍງົບປະມານ (ຕາມລັດຖະບັນຍັດ ສະບັບເລກທີ 002/ປປທ);

(5) ຂະຫຍາຍລະບົບຈັດເກັບລາຍຮັບພາສີ-ອາກອນ, ຄ່າທຳນຽມ, ຄ່າບໍລິການ ຜ່ານທະນາຄານ (FINLINK) ທີ່ເຊື່ອມຕໍ່ລະບົບຊຳລະສະສາງຂອງທະນາຄານແຫ່ງ ສປປ ລາວ ໃຫ້ສາມາດເຊື່ອມຕໍ່ກັບທະນາຄານທຸລະກິດ ທີ່ຍັງເຫຼືອ;

(6) ຍົກລະດັບຖານຂໍ້ມູນໃຫຍ່ລວມສູນ, ວິເຄາະ-ວິໄຈຂໍ້ມູນ (Lao FIDA) ຂອງກະຊວງການເງິນ ເພື່ອເຊື່ອມຕໍ່ກັບລະບົບຖານຂໍ້ມູນຂອງບັນດາຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນ: ລະບົບຖານຂໍ້ມູນ ທີ່ດິນແຫ່ງຊາດໃໝ່ (V7), ຕະຫຼາດແຮງງານ (LMIS), ຄ່າບິນຜ່ານ, ການຂຸດຄົ້ນບໍ່ແຮ່, ການອອກໃບອະນຸຍາດການລົງທຶນ ແລະ ອື່ນໆ;

(7) ປັບປຸງ, ຍົກລະດັບລະບົບພື້ນຖານໂຄງລ່າງເຄືອຂ່າຍ ແລະ ຄວາມປອດໄພ ໃຫ້ສາມາດຮອງຮັບການຜັນຂະຫຍາຍການຈັດເກັບລາຍຮັບ ແລະ ຄຸ້ມຄອງລາຍຈ່າຍໃນຂອບເຂດທົ່ວປະເທດ.

## ລາຍງານ...

(ຕໍ່ຈາກໜ້າ 1)

ກໍຍັງຢູ່ໃນຈັງຫວະທີ່ຊ້າ ເນື່ອງຈາກຍັງພົບກັບບັນຫາຄວາມຫຍຸ້ງຍາກທາງດ້ານເສດຖະກິດການເງິນ-ເງິນຕາ ເປັນຕົ້ນໂຄງສ້າງເສດຖະກິດມະຫາພາກ ຍັງຂາດຄວາມສົມດູນ, ການຂາດດຸນງົບປະມານ ແລະ ເງິນຕາ, ພັນທະຊຳລະໜີ້ສິນຕ່າງປະເທດສູງ, ຄັງແຮສຳຮອງເງິນຕາຕ່າງປະເທດຕໍ່າ ແລະ ບັນຫາການຜະລິດຍັງບໍ່ທັນແຂງແຮງ ຍັງເປັນສິ່ງທ້າທາຍໃຫຍ່ຫຼວງໃຫ້ແກ່ການຮັກສາຖຽນລະພາບດ້ານເງິນຕາແຫ່ງຊາດ ກໍຄື ສະຖຽນລະພາບຂອງເສດຖະກິດມະຫາພາກ.

ການຈັດຕັ້ງປະຕິບັດນະໂຍບາຍເງິນຕາ ຕໍ່ກັບສະພາບເສດຖະກິດການເງິນ-ເງິນຕາພາຍໃນ, ພາກພື້ນ ແລະ ສາກົນໃນໄລຍະ 6 ເດືອນຕົ້ນປີ ທຫລ ໄດ້ດຳເນີນນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມ ເພື່ອຮັກສາສະຖຽນລະພາບທາງດ້ານເງິນຕາ-ດ້ານລາຄາ ແລະ ປະກອບສ່ວນຊ່ວຍຊຸກຍູ້ການຟື້ນຕົວ ແລະ ການສ້າງຄວາມເຂັ້ມແຂງໃຫ້ພື້ນຖານເສດຖະກິດ ດັ່ງນີ້:

- ໄດ້ປັບເພີ່ມອັດຕາດອກເບ້ຍພື້ນຖານຂອງ ທຫລ ສະກຸນເງິນກີບ ໄລຍະສັ້ນບໍ່ເກີນ 7 ວັນ ຈາກ 6,5% ຕໍ່ປີ ເປັນ 7,5% ຕໍ່ປີ;
- ໄດ້ປັບເພີ່ມອັດຕາສ່ວນເງິນແຮຝາກບັງຄັບ ຈາກ 5% ມາເປັນ 5,5% ສຳລັບສະກຸນເງິນກີບ ແລະ ຈາກ 5% ມາເປັນ 8% ສຳລັບສະກຸນເງິນຕາຕ່າງປະເທດ;
- ໄດ້ອອກຈຳໜ່າຍພັນທະບັດ ທຫລ ໄລຍະສັ້ນ ໃນວົງເງິນລວມທັງໝົດ 5.000 ຕື້ກີບ. ໃນນີ້, ໄດ້ຈຳໜ່າຍພັນທະບັດ ອາຍຸ 6 ເດືອນ ໃນອັດຕາ 15% ແລະ 20% ຕໍ່ປີ ໃຫ້ມວນຊົນ ຈຳນວນ 3 ຄັ້ງ ໃນວົງເງິນທັງໝົດ 4.000 ຕື້ກີບ; ຈຳໜ່າຍພັນທະບັດ ທຫລ ອາຍຸ 3 ເດືອນ ແລະ 6 ເດືອນ ຜ່ານຕະຫຼາດເປີດ (ກົນໄກປະມູນມູນຄ່າ) ໃຫ້ແກ່ທະນາຄານທຸລະກິດ ແລະ ສະຖາບັນການເງິນ ທີ່ບໍ່ແມ່ນທະນາຄານ ຈຳນວນ 1.000 ຕື້ກີບ;
- ໄດ້ສືບຕໍ່ຈັດຕັ້ງປະຕິບັດພັນທະບັດຄັງເງິນ ຢູ່ ທຫລ ເພື່ອຈຳໜ່າຍໃຫ້ທະນາຄານທຸລະກິດ ແລະ ກອງທຶນຕ່າງໆ ໃນໄລຍະ 6 ເດືອນຕົ້ນປີ 2023 ປະມູນໄດ້ທັງໝົດ 624,4 ຕື້ກີບ;
- ໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ໂດຍໄດ້ປັບກອບອັດຕາແລກປ່ຽນທຽບກັບອັດຕາອ້າງອີງປະຈຳວັນຂອງ ທຫລ 2 ຄັ້ງ (ຈາກ +1,5% ມາເປັນ 4,5% ໃນເດືອນກຸມພາ ແລະ ມາເປັນ +7,5% ໃນວັນທີ 19 ມິຖຸນາ 2023) ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ກຳນົດອັດຕາແລກປ່ຽນຂອງຕົນ ແນໃສ່ເຮັດໃຫ້ອັດຕາແລກປ່ຽນເໜັງຕີງສອດຄ່ອງກັບດຸນຍະພາບທາງດ້ານເສດຖະກິດ-ເງິນຕາ;
- ໄດ້ດຳເນີນມາດຕະການໃນການເກັບຊື້ເງິນຕາຕ່າງປະເທດ ເພື່ອເພີ່ມຄັງສຳຮອງເງິນຕາຕ່າງປະເທດໃຫ້ບັນລຸໄດ້ຕາມຄາດໝາຍ 5 ປີ ທີ່ໄດ້ກຳນົດໄວ້ໃນມະຕິສະພາແຫ່ງຊາດ ພ້ອມທັງໄດ້ປັບປຸງໂຄງປະກອບຄັງສຳຮອງເງິນຕາຕ່າງປະເທດ ໃຫ້ສອດຄ່ອງກັບສະພາບການຄ້າຕ່າງປະເທດຂອງ ສປປ ລາວ;
- ໄດ້ສືບຕໍ່ປະກອບສ່ວນແກ້ໄຂບັນຫາແຫຼ່ງທຶນ ຕິດພັນກັບການປັບປຸງໂຄງສ້າງທະນາຄານທຸລະກິດ ທັງໝົດຈຳນວນ 1.816,2 ຕື້ກີບ;
- ລະບົບທະນາຄານ ໄດ້ຄົ້ນຄວ້າຈັດສັນແຫຼ່ງທຶນເພື່ອດັດສົມເງິນຕາຕ່າງປະເທດ ໃຫ້ແກ່ການນຳເຂົ້ານ້ຳມັນເຊື້ອໄຟ ໃນໄລຍະ 6 ເດືອນຕົ້ນປີ 2023 ທັງໝົດຈຳນວນ 264,08 ລ້ານໂດລາທຽບເທົ່າ ເພື່ອຮັບປະກັນການສະໜອງເງິນຕາຕ່າງປະເທດ ສຳລັບການນຳເຂົ້ານ້ຳມັນເຊື້ອໄຟ.

ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງເງິນຕາຕ່າງປະເທດ:

- ໄດ້ຜັນຂະຫຍາຍກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022 ອອກເປັນນິຕິກຳໃຕ້ກົດໝາຍ ໂດຍສຳເລັດການຮັບຮອງແລ້ວ 10 ສະບັບ ຈາກທັງໝົດ 23 ສະບັບ;
- ໄດ້ສຳເລັດການສ້າງຕັ້ງກົມຄຸ້ມຄອງເງິນຕາຕ່າງປະເທດ ເພື່ອຈັດຕັ້ງປະຕິບັດບັນດານິຕິກຳໃຕ້ກົດໝາຍຄຸ້ມຄອງເງິນຕາຕ່າງປະເທດ(ສະບັບປັບປຸງ) ແລະ ກະກຽມສ້າງຕັ້ງຫ້ອງການຜູ້ຕາງໜ້າ ທຫລ ຢູ່ເຂດເສດຖະກິດພິເສດ ດອກງີ້ວຄຳ ແລະ ເຂດພິເສດບໍ່ເຕັ່ນແດນງາມ;
- ໄດ້ສຳເລັດການອອກ

ອ່ານຕໍ່ໜ້າ 9...

## ລາຍງານ...

(ຕໍ່ຈາກໜ້າ 8)

ແຈ້ງການຢຸດຕິ ການອະນຸຍາດດຳເນີນທຸລະກິດແລກປ່ຽນເງິນຕາຂອງຮ້ານແລກປ່ຽນເງິນຕາຕົວແທນຂອງທະນາຄານທຸລະກິດແລ້ວທັງໝົດແລ້ວ ແລະ ໄດ້ປະສານສົມທົບກັບກະຊວງອຸດສະຫະກຳ ແລະ ການຄ້າ ແລະ ກະຊວງການເງິນ ລົບລ້າງໃບທະບຽນວິສາຫະກິດ ແລະ ໃບທະບຽນອາກອນຕາມລະບຽບກົດໝາຍ, ພ້ອມທັງສົມທົບກັບກະຊວງປ້ອງກັນຄວາມສະຫງົບ ໂດຍສຳເລັດພື້ນຖານການລົງຕິດຕາມ-ກວດກາຄືນການປິດປ້າຍຂອງບັນດາຮ້ານແລກປ່ຽນເງິນຕາຕົວແທນທີ່ໄດ້ປິດໄປແລ້ວສົມທົບກັບຂະແໜງສື່ມວນຊົນ ເພື່ອຊ່ວຍເປັນກະບອກສຽງໃນການໂຄສະນາປະຊາສຳພັນຂອງການເຄື່ອນໄຫວແລກປ່ຽນເງິນຕາຕ່າງປະເທດ ແບບຜິດກົດໝາຍ;

- ໄດ້ຊຸກຍູ້ໃຫ້ທະນາຄານທຸລະກິດຂະຫຍາຍການບໍລິການແລກປ່ຽນເງິນຕາຂອງຕົນ ເພື່ອມາທົດແທນບັນດາຮ້ານແລກປ່ຽນຕົວແທນທີ່ໄດ້ຖືກຢຸດຕິເຊິ່ງມາຮອດປະຈຸບັນມີທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ຂະຫຍາຍຕາໜ່າງການແລກປ່ຽນເງິນຕາ 11 ແຫ່ງ ແລະ ຂະຫຍາຍໂມງບໍລິການຢູ່ບາງຫ້ອງແລກປ່ຽນເພື່ອໃຫ້ສອດຄ່ອງກັບຈຸດພິເສດຂອງທີ່ຕັ້ງ ເປັນຕົ້ນ ສະໜາມບິນສາກົນ, ດ່ານຊາຍແດນ, ເຂດຕະຫຼາດ, ເຂດຊຸມຊົນ, ໃນຂະນະທີ່ທະນາຄານທຸລະກິດ ຈຳນວນໜຶ່ງກຳລັງກະກຽມລະບຽບການພາຍໃນ, ລະບົບໄອທີ ແລະ ເງື່ອນໄຂຕ່າງໆ ເພື່ອຂະຫຍາຍໜ່ວຍແລກປ່ຽນເງິນຕາ. ນອກນັ້ນ, ຍັງມີທະນາຄານທຸລະກິດ 2 ແຫ່ງ ພວມຢູ່ໃນຂັ້ນຕອນພັດທະນາລະບົບບໍລິການຊື້-ຂາຍເງິນຕາລູກຄ້າດ້ວຍກັນຜ່ານລະບົບລະຫວ່າງ Internet ແລະ ໂທລະສັບມືຖື (Foriegn Exchange Trading Platform) ເຊິ່ງຄາດວ່າຈະພ້ອມເປີດໃຫ້ການບໍລິການໃນໄວໆນີ້;

- ໃນໄລຍະ 6 ເດືອນຕົ້ນປີ 2003 ນີ້, ທຫລ ໄດ້ລົງເລີກເຮັດວຽກກັບບັນດາບໍລິສັດສົ່ງອອກສິນຄ້າ ປະມານ 70 ບໍລິສັດ ຈາກຂະແໜງການໄຟຟ້າ, ບໍ່ແຮ່, ກະສິກຳ-ລ້ຽງສັດ, ເຄື່ອງບໍລິໂພກ, ອຸປະກອນກົນຈັກ, ອຸປະກອນໄຟຟ້າ, ເຍື່ອໄມ້, ເຈ້ຍ, ພາລາສະຕິກ, ແກ້ວ, ຕັດຫຍິບ ແລະ ເກີບ ເພື່ອສຶກສາສະພາບການຜະລິດ, ການຊອກຫາ ແລະ ນຳໃຊ້ແຫຼ່ງທຶນ, ແລະ ການສົ່ງອອກ ເພື່ອຊຸກຍູ້ບັນດາບໍລິສັດດັ່ງກ່າວ ນຳແຫຼ່ງລາຍຮັບເງິນຕາຕ່າງປະເທດຈາກການສົ່ງອອກເຂົ້າມາ ສປປ ລາວ. ພ້ອມທັງໄລ່ລຽງຕົວເລກກະແສເງິນຕາ ໂດຍອີງໃສ່ຈຸດພິເສດຂອງການສົ່ງອອກຂອງແຕ່ລະຂະແໜງການ ເປັນຕົ້ນການທັກຕາມສັນຍາສຳປະທານ (CA), ພັນທະກູ້ຢືມ, ພັນທະກັບບໍລິສັດແມ່ ແລະ ອື່ນໆ ຂອງແຕ່ລະຂະແໜງການ ເຫັນວ່າ: ໃນປີ 2022 ມູນຄ່າການສົ່ງອອກທັງໝົດ ມີ 8.198 ລ້ານໂດລາ ໃນນີ້, ເງິນຕາ ທີ່ຄວນໄດ້ຮັບທີ່ບັນທຶກຜ່ານລະບົບພາສີ ແມ່ນ 5.942 ລ້ານໂດລາ ກວມເອົາ 72% ຂອງມູນຄ່າສົ່ງອອກທັງໝົດ, ແຕ່ຈຳນວນເງິນຕາທີ່ໂອນເຂົ້າມາ ສປປ ລາວ ຕົວຈິງຜ່ານລະບົບທະນາຄານ ພັດມີພຽງແຕ່ 2.780 ລ້ານໂດລາ ກວມເອົາ 46% ຂອງເງິນຕາຕົວຈິງທີ່ຄວນໄດ້ຮັບ.

ຜົນໄດ້ຮັບຈາກການຈັດຕັ້ງປະຕິບັດບັນດາຄາດໝາຍດ້ານເງິນຕາ: ຜ່ານການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການດ້ານເງິນຕາຕ່າງໆ ໃນໄລຍະ 6 ເດືອນຕົ້ນປີ 2023 ຂອງ ທຫລ ສາມາດສັງລວມຜົນໄດ້ຮັບ ດັ່ງນີ້:

- ອັດຕາເງິນເຟີ້ ສະເລ່ຍ 6 ເດືອນຕົ້ນປີ ຢູ່ໃນລະດັບ 38,06%. ມາຮອດປັດຈຸບັນ ເຫັນວ່າສະພາບເງິນເຟີ້ ມີແນວໂນ້ມຫຼຸດລົງ ຈາກລະດັບສູງສຸດ 41,26% ໃນເດືອນກຸມພາ 2023 ມາເປັນ 28,64% ໃນເດືອນມິຖຸນາ;

- ປະລິມານເງິນ M2 ຮອດທ້າຍເດືອນ 5/2023 ການຂະຫຍາຍຕົວຂອງ M2 ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ແມ່ນຢູ່ໃນລະດັບ 26% ແຕ່ຖ້າທຽບໃສ່ທ້າຍປີ 2022 ແມ່ນຂະຫຍາຍຕົວໃນລະດັບ 7,87%. ຄາດວ່າຮອດທ້າຍເດືອນ 6 ຈະຂະຫຍາຍຕົວໃນລະດັບປະມານ 27% ຫຼື ເພີ່ມຂຶ້ນ 1% ຈາກເດືອນ 5 (ມະຕິສະພາ: ຂະຫຍາຍຕົວບໍ່ເກີນ 26% ທຽບໃສ່ປີຜ່ານມາ);

- ອັດຕາແລກປ່ຽນ ສະເລ່ຍໃນເດືອນ 6/2023 ທຽບໃສ່ທ້າຍປີ 2022 ເຫັນວ່າເງິນກີບມີທ່າອ່ຽງອ່ອນຄ່າ ດັ່ງນີ້:

+ ເງິນກີບ ທຽບເງິນໂດລາ ຂອງລະບົບທະນາຄານອ່ອນຄ່າ 5,8% (ຈາກ 17.312 ກີບ ມາເປັນ 18.390 ກີບ/ໂດລາ);

+ ເງິນກີບ ທຽບ ເງິນບາດ ຂອງລະບົບທະນາຄານອ່ອນຄ່າ 8,3% (ຈາກ 502 ກີບ ມາເປັນ 548 ກີບ/ບາດ);

+ ສ່ວນຕ່າງອັດຕາແລກປ່ຽນ ລະຫວ່າງ ທະນາຄານທຸລະກິດ ແລະ ຕະຫຼາດ ໃນໄລຍະຕົ້ນປີ ຫາເດືອນ 4/2023 ໂດຍລວມແມ່ນບໍ່ແຕກຕ່າງກັນຫຼາຍ ສະເລ່ຍຕ່ຳກວ່າ 2%, ນັບແຕ່ເດືອນ 5/2013 ເປັນຕົ້ນມາ ເຫັນວ່າສ່ວນຕ່າງອັດຕາແລກປ່ຽນເພີ່ມຂຶ້ນສູງເກີນ 2%;

- ລາຍຮັບຈາກການສົ່ງອອກ ໃນໄລຍະ 5 ເດືອນຕົ້ນປີກະແສລາຍຮັບເງິນຕາທີ່ໂອນເຂົ້າມາຜ່ານລະບົບທະນາຄານປະຕິບັດໄດ້ 1,228 ລ້ານໂດລາ ກວມເອົາ 35% ຂອງມູນຄ່າການສົ່ງອອກທັງໝົດຜ່ານລະບົບພາສີ (3,447 ລ້ານໂດລາ) ຄາດວ່າໃນ 6 ເດືອນຕົ້ນປີຈະປະຕິບັດໄດ້ 36% ຂອງມູນຄ່າການສົ່ງອອກທັງໝົດ;

- ຄັງສຳຮອງເງິນຕາຕ່າງປະເທດ ຮອດທ້າຍເດືອນ 5/2023 ຢູ່ໃນລະດັບ 1.439 ລ້ານໂດລາ, ກຸ້ມການນຳເຂົ້າໄດ້ 4,03 ເດືອນ ແລະ ຄາດວ່າຮອດທ້າຍເດືອນ 6 ຈະສາມາດກຸ້ມການນຳເຂົ້າໄດ້ບໍ່ຫຼຸດ 4 ເດືອນ;

- ຍອດເຫຼືອເງິນຝາກຂອງ ທທກ ຮອດທ້າຍເດືອນ 5/2023 ກວມເອົາ 84% ຂອງ GDP ແລະ ຄາດວ່າຮອດທ້າຍເດືອນ 6 ຈະຢູ່ໃນລະດັບປະມານ 85% ຂອງ GDP;

- ຍອດເຫຼືອສິນເຊື່ອຂອງຂະແໜງການທະນາຄານຮອດທ້າຍເດືອນ 5/2023 ກວມເອົາ 57% ຂອງ GDP ແລະ ຄາດວ່າຮອດທ້າຍເດືອນ 6 ຈະຢູ່ໃນລະດັບປະມານ 58% ຂອງ GDP;

- ອັດຕາສ່ວນໜີ້ NPLs ຮອດທ້າຍເດືອນ 5/2023 ຢູ່ໃນລະດັບ 2,12%, ຄາດວ່າຮອດທ້າຍເດືອນ 6 ຈະຢູ່ໃນລະດັບດຽວກັນກັບເດືອນ 5.

ສຳລັບທິດທາງ ແລະ ມາດຕະການແຜນເງິນຕາ 6 ເດືອນທ້າຍປີ 2023: ທຫລ ຈະສູ້ຊົນ ແລະ ດຳເນີນມາດຕະການດ້ານເງິນຕາຕ່າງໆ ດັ່ງລຸ່ມນີ້:

1. ການດຳເນີນນະໂຍບາຍເງິນຕາ

- ສືບຕໍ່ດຳເນີນນະໂຍບາຍເງິນຕາໃນທິດທາງທີ່ຮັດກຸມຫຼາຍຂຶ້ນ ແນ່ໃສ່ຫຼຸດຜ່ອນຄວາມຕ້ອງການເງິນຕາຕ່າງປະເທດໃນສັງຄົມລົງ ເພື່ອຊ່ວຍປະຄັບປະຄອງບໍ່ສ້າງແຮງກົດດັນເຮັດໃຫ້ເງິນກີບອ່ອນຄ່າ, ໃນນີ້ ທຫລ ຈະສືບຕໍ່ຮັກສາອັດຕາດອກເບ້ຍພື້ນຖານ ແລະ ອັດຕາສ່ວນເງິນແຮຝາກບັງຄັບໄວ້ໃນລະດັບເທົ່າເດີມ ແລະ ພິຈາລະນາປັບ ຖ້າເຫັນວ່າຈຳເປັນ;

- ພິຈາລະນາ ອອກພັນທະບັດ ທຫລ ເພື່ອຮັກສາຍອດພັນທະບັດ ທຫລ ໃຫ້ຢູ່ໃນລະດັບ 10,000 ຕື້ກີບ ເພື່ອຄວບຄຸມປະລິມານເງິນ ໃຫ້ຂະຫຍາຍຕົວຕາມທີ່ສະພາຮັບຮອງ ແລະ ບໍ່ສ້າງແຮງກົດດັນຕໍ່ອັດຕາເງິນເຟີ້;

- ສ້າງເງື່ອນໄຂສະພາບແວດລ້ອມໃຫ້ມີເງິນຕາຕ່າງປະເທດສະໜອງເຂົ້າລະບົບເສດຖະກິດໃຫ້ຫຼາຍຂຶ້ນ;

- ທົບທວນຄືນນະໂຍບາຍອັດຕາດອກເບ້ຍເງິນຝາກສຳລັບສະກຸນເງິນກີບ ແລະ ເງິນຕາຕ່າງປະເທດຂອງລະບົບທະນາຄານ ເພື່ອຫຼຸດຜ່ອນແຮງກະຕຸ້ນຄວາມຕ້ອງການເງິນຕາຕ່າງປະເທດທີ່ບໍ່ຈຳເປັນ;

- ສ້າງຄວາມເຂັ້ມແຂງໃຫ້ແກ່ຄັງສຳຮອງເງິນຕາຕ່າງປະເທດ ໂດຍການດຳເນີນມາດຕະການຢ່າງມີຈຸດສຸມຫຼາຍຂຶ້ນດ້ວຍການປັບປຸງລະບົບການຄຸ້ມຄອງຜູ້ນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ, ນັກລົງທຶນ. ພ້ອມທັງປັບປຸງໂຄງສ້າງຄັງສຳຮອງເງິນຕາຕ່າງປະເທດ ໃຫ້ແທດເໝາະກັບສະພາບການຄ້າ-ການລົງທຶນຂອງ ສປປ ລາວ.

- ສືບຕໍ່ດຳເນີນນະໂຍບາຍອັດຕາແລກປ່ຽນຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ແລະ ຈະຄົ້ນຄວ້າດັດປັບອັດຕາແລກປ່ຽນ ສຳລັບທະນາຄານທຸລະກິດໃຫ້ມີການເຄື່ອນໄຫວຄ່ອງຕົວຂຶ້ນ, ພ້ອມທັງດັດສົມເງິນຕາຕ່າງປະເທດໃຫ້ແກ່ການນຳເຂົ້າສິນຄ້າບູລິມະສິດທີ່ຈຳເປັນ;

2. ການຄຸ້ມຄອງເງິນຕາຕ່າງປະເທດ

- ສືບຕໍ່ໃຫ້ສຳເລັດບັນດານິຕິກຳລຸ່ມກົດໝາຍ ຄຸ້ມຄອງເງິນຕາຕ່າງປະເທດ ໂດຍເລັ່ງການຈັດຕັ້ງຜັນຂະຫຍາຍຄຳສັ່ງຂອງນາຍົກລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ໃຫ້ເຂົ້າສູ່ການຈັດຕັ້ງປະຕິບັດໂດຍໄວ ພ້ອມທັງຈະເລັ່ງດຳເນີນການອອກຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ກ່ຽວກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ການບໍລິການ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ຕິດພັນກັບການລົງທຶນໂດຍກົງລະຫວ່າງປະເທດ, ຂໍ້ຕົກລົງວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດຢູ່ເຂດເສດຖະກິດພິເສດດອກງິ້ວຄຳ ແລະ ບໍ່ເຕັນແດນງາມ;

- ສືບຕໍ່ລົງເລີກເຮັດວຽກ ແລະ ເຈລະຈາກັບບັນດາບໍລິສັດສົ່ງອອກໃນແຕ່ລະຂະແໜງການຈຸດສຸມ ແນໃສ່ບໍລິສັດທີ່ມີມູນຄ່າສົ່ງອອກສູງ ແຕ່ນຳລາຍຮັບເງິນຕາເຂົ້າມາ ສປປ ລາວ ຍັງຕ່ຳ, ພ້ອມທັງສົມທົບກັບກະຊວງການເງິນ ໄລ່ລຽງມູນຄ່າການນຳລາຍຮັບຕົວຈິງຈາກການສົ່ງອອກສິນຄ້າເຂົ້າມາ ແລະ ຊຸກຍູ້ໃຫ້ບໍລິສັດ ຫັນມາໃຊ້ບັນຊີວິສາຫະກິດ ເພື່ອຮອງຮັບການຊຳລະຄ່າສິນຄ້າສົ່ງອອກ, ຫຼີກລ່ຽງການນຳໃຊ້ບັນຊີບຸກຄົນ; ສົມທົບກັບກະຊວງອຸດສາຫະກຳ ແລະ ການຄ້າ ຈັດຕັ້ງປະຕິບັດການຂຶ້ນທະບຽນຜູ້ນຳເຂົ້າ-ສົ່ງອອກສິນຄ້າ ໂດຍສະເພາະການກຳນົດລະຫັດຜູ້ນຳເຂົ້າ-ສົ່ງອອກ. ສ່ວນການຂຶ້ນທະບຽນຫົວໜ່ວຍສົ່ງອອກ-ນຳເຂົ້າການບໍລິການ ນຳ ທຫລ ແລະ ການສ້າງຖານຂໍ້ມູນການລົງທະບຽນໃຫ້ເຊື່ອມຈອດລະຫວ່າງກັນ;

- ສ້າງຖານເກັບກຳຂໍ້ມູນຜູ້ນຳເຂົ້າ-ສົ່ງອອກລາຍໃຫຍ່ທີ່ມີມູນຄ່າທຸລະກິດ 10 ລ້ານໂດລາ/ປີ ຂຶ້ນໄປ ທີ່ຈະປະກອບມີຂໍ້ມູນລາຍລະອຽດການດຳເນີນທຸລະກິດ, ການຊຳລະ ແລະ ຮັບຊຳລະກັບຕ່າງປະເທດໃຫ້ໄດ້ຢ່າງໜ້ອຍ 100 ບໍລິສັດຂະໜາດໃຫຍ່ ທີ່ກວມເອົາມູນຄ່າການສົ່ງອອກຫຼາຍກວ່າ 70% ຂອງການສົ່ງອອກທັງໝົດ;

- ສືບຕໍ່ສົມທົບກັບບັນດາຂະແໜງການກ່ຽວຂ້ອງ (ຂະແໜງການເງິນ, ອຸດສາຫະກຳ ແລະ ການຄ້າ) ເພື່ອຄົ້ນຄວ້າເຊື່ອມຖານຂໍ້ມູນການນຳເຂົ້າ-ສົ່ງອອກ ທີ່ແຕ່ລະຂະແໜງການຄຸ້ມຄອງນັບຕັ້ງແຕ່ຂັ້ນຕອນການຂຶ້ນທະບຽນຜູ້ນຳເຂົ້າ-ສົ່ງອອກ, ການອະນຸຍາດສົ່ງອອກ-ນຳເຂົ້າຂອງແຕ່ລະຂະແໜງການຕໍ່ກັບສິນຄ້າຄວບຄຸມ, ການແຈ້ງພາສີສົ່ງອອກ-ນຳເຂົ້າຂອງແຕ່ລະຂະແໜງການຕໍ່ກັບສິນຄ້າຄວບຄຸມ, ການແຈ້ງພາສີສົ່ງອອກ-ນຳເຂົ້າດ້ວຍລະບົບຄຸ້ມຄອງພາສີ (ASYCUDA & Lao Natioanal Single Window) ເຊິ່ງລະບົບດັ່ງກ່າວຈະເຊື່ອມກັບຖານຂໍ້ມູນຂອງບັນດາທະນາຄານທຸລະກິດຜ່ານຖານຂໍ້ມູນຂອງ ທຫລ;

- ຊຸກຍູ້ ທທກ ຂະຫຍາຍໜ່ວຍບໍລິການແລກປ່ຽນເງິນຕາຂອງຕົນໃຫ້ຫຼາຍຂຶ້ນ ຢູ່ຕາມສະຖານທີ່ໂຮງແຮມ, ສະໜາມບິນສາກົນ, ດ່ານຊາຍແດນ, ທ່າບົກ ແລະ ສະຖານທີ່ອື່ນໆຕາມການກຳນົດຂອງ ທຫລ, ຕິດຕາມກວດກາການໃຫ້ບໍລິການແລກປ່ຽນເງິນຕາຕ່າງປະເທດຜ່ານເຄື່ອງມືອີເລັກໂຕຣນິກໂດຍທະນາຄານທຸລະກິດ;

- ສືບຕໍ່ປະສານສົມທົບເຈົ້າໜ້າທີ່ຕຳຫຼວດເສດຖະກິດ (ປກສ) ລົງກວດກາເປົ້າໝາຍບຸກຄົນ, ນິຕິບຸກຄົນ ທີ່ສ້າງຄວາມປັ່ນປ່ວນອັດຕາແລກປ່ຽນໃຫ້ເງິນກີບອ່ອນຄ່າເພື່ອເກງກຳໄລ, ການໃຫ້ບໍລິການໂອນຊຳລະຂ້າມແດນທີ່ບໍ່ໄດ້ຮັບອະນຸຍາດ ແລະ ດຳເນີນມາດຕະການຢ່າງເຂັ້ມງວດ ຕໍ່ຜູ້ທີ່ເຄື່ອນໄຫວແລກປ່ຽນເງິນຕາຜິດກົດໝາຍ, ພ້ອມທັງສົມທົບກັບບັນດາຂະແໜງການ ອອກແຈ້ງການປະກາດຕິດລາຄາສິນຄ້າ ແລະ ບໍລິການເປັນເງິນກີບ.

## ຕາງໜ້າຄະນະ...

(ຕໍ່ຈາກໜ້າ 1)

I. ຕໍ່ກັບພາກສະຫຼຸບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2023.

ຜ່ານການຮັບຟັງການລາຍງານຂອງລັດຖະບານ, ຄະນະປະຈໍາສະພາແຫ່ງຊາດ ເຫັນໄດ້ເຖິງຄວາມພະຍາຍາມໃນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ໃນສະພາບເສດຖະກິດຂອງພາກພື້ນ ແລະ ສາກົນ ທີ່ຍັງສືບຕໍ່ມີຄວາມຜັນແປຢ່າງສັບສົນ ໂດຍສະເພາະແມ່ນບັນຫາເງິນເຟີ້, ບັນຫາລາຄານໍ້າມັນ, ບັນຫາອັດຕາແລກປ່ຽນ ແລະ ຂໍ້ຂັດແຍ້ງທາງດ້ານເສດຖະກິດ-ການເມືອງ ອັນນໍາໄປສູ່ໄພເງິນເຟີ້, ລາຄາສິນຄ້າແພງ, ອັດຕາແລກປ່ຽນເໜັງຕີງແຮງ ບວກກັບຂໍ້ຫຍຸ້ງຍາກຈາກປັດໄຈພາຍໃນ ເຊັ່ນ: ຂໍ້ຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ປາກົດການຫຍໍ້ທໍ້ຂອງສັງຄົມ, ແຕ່ລັດຖະບານສາມາດຍາດໄດ້ຜົນສໍາເລັດ ທີ່ພົ້ນເດັ່ນ ເຊັ່ນ:

1. ລວມຍອດຜະລິດຕະພັນພາຍໃນ (GDP) ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 4,8% (ມະຕິສະພາ 4,5% ຂຶ້ນໄປ), ຂະແໜງກະສິກໍາຂະຫຍາຍຕົວ 3,8% (ມະຕິສະພາ 2,5%) ແລະ ຂະແໜງບໍລິການ ຂະຫຍາຍຕົວ 5,6% (ມະຕິສະພາ 4,7%); ການລົງທຶນເພື່ອການພັດທະນາປະຕິບັດໄດ້ 55,8% ຂອງແຜນການ (ມະຕິສະພາ 52.098 ຕື້ກີບ), ການລົງທຶນຈາກເອກະຊົນພາຍໃນ ແລະ ຕ່າງປະເທດບັນລຸໄດ້ 76% ຂອງແຜນການ (ມະຕິສະພາ 30.890 ຕື້ກີບ);

2. ການປະຕິບັດແຜນງົບປະມານ

(1) ດ້ານລາຍຮັບ:

- ໄດ້ຈັດຕັ້ງປະຕິບັດການທົດລອງມອບຫົວໜ່ວຍວິສາຫະກິດໃຫ້ 9 ແຂວງ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ທ້ອງຖິ່ນຕາມທິດສາມສ້າງ ໃນນີ້ 5 ແຂວງ ເກີນດຸນ 63 ຫົວໜ່ວຍ, ໄດ້ຄົ້ນຄວ້າຍົກລັດຖະບັນຍັດວ່າດ້ວຍພາສີທີ່ດິນ ມາເປັນກົດໝາຍວ່າດ້ວຍອາກອນທີ່ດິນ;

- ການຫັນເປັນທັນສະໄໝ ໃນການຈັດເກັບລາຍຮັບ ເປັນຕົ້ນ ການຈັດເກັບຄ່າທໍານຽມທາງ, ພາສີທີ່ດິນ, ຂະຫຍາຍຖານອາກອນມູນຄ່າເພີ່ມ ແລະ ອື່ນໆ;

- ປະຕິບັດແຜນລາຍຮັບງົບປະມານ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 18.424 ຕື້ກີບ ເທົ່າກັບ 48% ຂອງແຜນການປີ ສົມທຽບໃສ່ GDP ໄດ້ 15,55% (ມະຕິສະພາແຫ່ງຊາດ 16,42%). ໃນນັ້ນ ລາຍຮັບພາຍໃນ ປະຕິບັດໄດ້ 14.848 ຕື້ກີບ ເທົ່າກັບ 43% ຂອງແຜນການປີ ຫຼື ເທົ່າກັບ 6,43% ຂອງ GDP; ແຕ່ຍ້ອນການຜັນຜວນຂອງອັດຕາແລກປ່ຽນ, ເງິນເຟີ້ເພີ່ມສູງແລະເງິນກີບອ່ອນຄ່າ ໄດ້ສົ່ງຜົນກະທົບທາງລົບ ຕໍ່ການພັດທະນາເສດຖະກິດ-ສັງຄົມ ກໍຄືຊີວິດການເປັນຢູ່ ຂອງພະນັກງານ-ລັດຖະກອນ, ທະຫານຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ.

(2) ດ້ານລາຍຈ່າຍ: ລັດຖະບານ ໄດ້ມີຄວາມພະຍາຍາມໃນການປະຕິບັດແຜນລາຍຈ່າຍການລົງທຶນຂອງລັດ ໂດຍການໃຫ້ບຸລິມະສິດ ການແກ້ໄຂໜີ້ສິນການລົງທຶນຂອງລັດທີ່ຄ້າງຊໍາລະ, ໂດຍປະຕິບັດຕາມກົດໝາຍວ່າດ້ວຍສະພາແຫ່ງຊາດ ສະບັບປັບປຸງ ປີ 2015 ແລະ ການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ສະບັບປີ 2020, ໃນເວລາທີ່ສະພາແຫ່ງຊາດບໍ່ໄດ້ເປີດປະຊຸມຄະນະປະຈໍາສະພາແຫ່ງຊາດ ໄດ້ຄົ້ນຄວ້າພິຈາລະນາ ແລະ ຮັບຮອງ ເອົາແຜນການລົງທຶນຂອງລັດ ປີ 2023 ແລະ ແຜນການແກ້ໄຂໜີ້ສິນ ດ້ວຍການອອກພັນທະບັດອ່ອຍໜີ້ 3 ແຈ ຈໍານວນ 8.000 ຕື້ກີບ (ຕາມມະຕິຄະນະປະຈໍາສະພາແຫ່ງຊາດ ເລກທີ 29/ຄປຈ, ລົງວັນທີ 15 ກຸມພາ 2023) ເຊິ່ງເມື່ອລວມທຶນ ຈໍານວນ 8.000 ຕື້ກີບ ເຂົ້າໃນເພດານລົງທຶນຂອງລັດປົກກະຕິ ປີ 2023 ຈໍານວນ 2.500 ຕື້ກີບ ແລ້ວເທົ່າກັບ 10.500 ຕື້ກີບ ເຮັດໃຫ້ໂຄງປະກອບການລົງທຶນຂອງລັດປົກກະຕິ ໃນປີ 2023 ທີ່ໄດ້ຮັບຮອງ ໃນກອງປະຊຸມສະໄໝສາມັນເທື່ອທີ 4 ມີການປ່ຽນແປງດ້ານອັດຕາສ່ວນ ດັ່ງນີ້:

- ໂຄງການຊໍາລະໜີ້ສິນ ກວມ 84,80%;

- ໂຄງການສືບຕໍ່ ກວມ 12,21%;

- ໂຄງການສະເໜີໃໝ່ ກວມ 3% ຂອງທຶນທັງໝົດ.

ດັ່ງນັ້ນ, ຈຶ່ງລາຍງານໃຫ້ບັນດາທ່ານ ສະມາຊິກສະພາແຫ່ງຊາດ ໄດ້ຮັບຊາບ ກ່ຽວກັບໂຄງປະກອບການລົງທຶນຂອງລັດ ໃນປີ 2023.

3. ການປະຕິບັດແຜນເງິນຕາ.

ດ້ານນິຕິກໍາ ໄດ້ຄົ້ນຄວ້າ, ດໍາເນີນນະໂຍບາຍ ແລະ ມາດຕະການດ້ານເງິນຕາ, ປັບປຸງກົດໝາຍ ແລະ ນິຕິກໍາ ເພື່ອສ້າງເງື່ອນໄຂ ໃນການສົ່ງເສີມການນໍາໃຊ້ເງິນກີບ ໃຫ້ຫຼາຍຂຶ້ນ;

ຄຸ້ມຄອງເງິນຕາຕ່າງປະເທດ, ແກ້ໄຂຮ້ານແລກປ່ຽນນອກລະບົບ, ປັບປຸງຖານຂໍ້ມູນສະຖິຕິທະນາຄານ, ຄັງສໍາຮອງເງິນຕາຕ່າງປະເທດເພີ່ມຂຶ້ນກຸ້ມການນໍາເຂົ້າໄດ້ 4 ເດືອນ (ມະຕິສະພາ ບໍ່ໃຫ້ຫຼຸດ 3 ເດືອນ);

ການປະຕິບັດຄາດໝາຍໃນຂົງເຂດວັດທະນະທໍາ-ສັງຄົມ ມີຄວາມຄືບໜ້າຫຼາຍຄາດໝາຍເປັນຕົ້ນ ອັດຕາການຕາຍຂອງແມ່ ແລະ ເດັກ, ວຽກງານໂພຊະນາການ; ການດຶງດູດນັກທ່ອງທ່ຽວຕ່າງປະເທດເຂົ້າມາທ່ອງທ່ຽວໃນ ສປປ ລາວ ມີຈໍານວນເພີ່ມຂຶ້ນ;

ຄຽງຄູ່ກັບຜົນສໍາເລັດດັ່ງກ່າວ, ອີງຕາມການລາຍງານຂອງລັດຖະບານ ແລະ ການຕິດຕາມກວດກາຂອງສະພາແຫ່ງຊາດ ເຫັນວ່າ ມີຫຼາຍຄາດໝາຍມີຄວາມສ່ຽງ ທີ່ຈະບໍ່ສາມາດປະຕິບັດບັນລຸໄດ້ຕາມແຜນການ ເປັນຕົ້ນ:

(1) ລາຍໄດ້ສະເລ່ຍຕໍ່ຫົວຄົນ ທີ່ຄິດໄລ່ເປັນເງິນໂດລາ ມີທ່າອ່ຽງຈະບໍ່ສາມາດບັນລຸໄດ້ ຕາມມະຕິສະພາແຫ່ງຊາດ, ເນື່ອງຈາກເງິນກີບອ່ອນຄ່າ (ມະຕິສະພາແຫ່ງຊາດ GDP/ຄົນ 1.625 USD, GNI/ຄົນ 1.534 USD);

(2) ເຖິງວ່າສາມາດເກັບລາຍຮັບງົບປະມານໄດ້ຫຼາຍຂຶ້ນ ແຕ່ໃນຕົວຈິງ ແມ່ນຍ້ອນສະພາບເງິນເຟີ້, ການຜັນຜວນຂອງອັດຕາແລກປ່ຽນ, ເງິນກີບອ່ອນຄ່າ, ລາຍຮັບທີ່ເປັນເງິນຕາຕ່າງປະເທດ ບໍ່ພຽງພໍຕໍ່ການຊໍາລະທີ່ເປັນເງິນຕາຕ່າງປະເທດ ແລະ ບໍ່ສາມາດຕອບສະໜອງລາຍຈ່າຍ ໃຫ້ໄປຕາມແຜນການກໍານົດໄວ້;

(3) ການຈັດສັນງົບປະມານການລົງທຶນຂອງລັດ ບໍ່ສາມາດປະຕິບັດໄດ້ຕາມມະຕິສະພາແຫ່ງຊາດ ທີ່ກໍານົດໃຫ້ຈັດສັນແກ່ໂຄງການຊໍາລະໜີ້ສິນ, ໂຄງການສືບຕໍ່ ແລະ ໂຄງການສະເໜີໃໝ່ ຕາມໂຄງປະກອບ 60:30:10;

ອັດຕາເງິນເຟີ້ 5 ເດືອນຕົ້ນປີ 40,26% ສູງເກີນມະຕິສະພາແຫ່ງຊາດກໍານົດ (ມະຕິສະພາແຫ່ງຊາດ ສະເລ່ຍໝົດປີບໍ່ເກີນ 9%);

(4) ກະແສລາຍຮັບເງິນຕາ ຈາກການສົ່ງອອກ ຜ່ານລະບົບທະນາຄານຍັງບໍ່ສາມາດປະຕິບັດໄດ້ (ມະຕິສະພາແຫ່ງຊາດບໍ່ຫຼຸດ 50%);

(5) ປະລິມານເງິນ M2 ເພີ່ມຂຶ້ນ ໃນຈັງຫວະທີ່ຊ້າລົງທຽບໃສ່ປີຜ່ານມາ, ເຖິງວ່າໄດ້ມີຄວາມພະຍາຍາມ ຫັນເປັນທັນສະໄໝ ໃນການຊໍາລະສະສາງ ຂອງທະນາຄານ ແລະ ປັບປຸງລະບົບອັດຕາແລກປ່ຽນເງິນຕາ ໃຫ້ໄປຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ;

(6) ຄາດໝາຍໃນຂົງເຂດວັດທະນະທໍາ-ສັງຄົມ, ການພັດທະນາຊົນນະບົດແລະແກ້ໄຂຄວາມທຸກຍາກ, ຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ ຍັງມີຫຼາຍຄາດໝາຍທີ່ມີຄວາມສ່ຽງຈະບໍ່ສາມາດບັນລຸໄດ້.

ນອກຈາກບັນຫາທີ່ໄດ້ກ່າວມາຂ້າງເທິງແລ້ວ, ຄະນະປະຈໍາສະພາແຫ່ງຊາດ ເຫັນວ່າໃນ 6 ເດືອນຕົ້ນປີ 2023 ໄດ້ມີບາງບັນຫາທີ່ເປັນອຸປະສັກ ແລະ ສິ່ງທ້າທາຍຕໍ່ການພັດທະນາເສດຖະກິດ-ສັງຄົມ ທີ່ລັດຖະບານ ຈະຕ້ອງໄດ້ສືບຕໍ່ແກ້ໄຂ ເປັນຕົ້ນ:

- ອັດຕາເງິນເຟີ້ ແລະ ລາຄາສິນຄ້າເຄື່ອງອຸປະໂພກ ແລະ ບໍລິໂພກ ເພີ່ມຂຶ້ນສູງ, ຄວາມສາມາດໃນການຊື້ຕໍ່າເຊິ່ງໄດ້ສົ່ງຜົນກະທົບໂດຍກົງຕໍ່ຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ທະຫານຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າ ມີຄວາມຝືດເຄືອງ;

- ການທໍາລາຍປ່າໄມ້, ການຈູດປ່າ, ການລະເມີດກົດໝາຍວ່າດ້ວຍປ່າໄມ້ເພີ່ມຂຶ້ນ;

- ສະພາບການຂາດເຂີນແຮງງານ ແລະ ສະພາບຫວ່າງງານ ເພີ່ມຂຶ້ນ;

- ປະກົດການຫຍໍ້ທໍ້ຂອງສັງຄົມ ເກີດຂຶ້ນຫຼາຍ;

- ຜົນກະທົບ ຂອງໂຄງການພັດທະນາ ເປັນຕົ້ນ ຂຸດຄົ້ນບໍ່ແຮ່ຢູ່ຫຼາຍພື້ນທີ່ ຍັງສົ່ງຜົນກະທົບຕໍ່ປະຊາຊົນເປັນຈໍານວນບໍ່ໜ້ອຍ.

II. ຕໍ່ກັບພາກທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023.

ຄະນະປະຈໍາສະພາແຫ່ງຊາດ ເຫັນດີໂດຍພື້ນຖານ ຕໍ່ທິດທາງ ແລະ ແຜນວຽກງານຈຸດສຸມ 6 ເດືອນທ້າຍປີ ຂອງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ, ເພື່ອຮັບປະກັນ ໃຫ້ບັນລຸຕາມທິດທາງ ແລະ ແຜນວຽກຈຸດສຸມດັ່ງກ່າວ, ຄະນະປະຈໍາສະພາແຫ່ງຊາດ ສະເໜີໃຫ້ເອົາໃຈໃສ່ບາງມາດຕະການເພີ່ມເຕີມດັ່ງນີ້:

1. ສຸມໃສ່ປະຕິບັດຄາດໝາຍ ຂອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ແຜນເງິນຕາ ແລະ ວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ໄດ້ກໍານົດໃນມະຕິກອງປະຊຸມສະພາແຫ່ງຊາດ ສໍາລັບປີ 2023 ໃຫ້ບັນລຸຕາມແຜນການ ດ້ວຍການຈັດຕັ້ງປະຕິບັດບັນດາມາດຕະການ ທີ່ໄດ້ກໍານົດໃຫ້ເຂັ້ມງວດ;

2. ສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນ ດ້ານເສດຖະກິດ-ສັງຄົມ ໃນປະຈຸບັນ ເປັນຕົ້ນ:

1) ແກ້ໄຂບັນຫາເງິນເຟີ້ ແລະ ລາຄາສິນຄ້າ ທີ່ກະທົບຕໍ່ຊີວິດການເປັນຢູ່ ຂອງປະຊາຊົນ ໂດຍໃຫ້ມີການຄົ້ນຄວ້າ ແລະ ການກໍານົດມາດຕະການທີ່ຄົບຊຸດ ຕິດພັນ ແລະ ການມີສ່ວນຮ່ວມຂອງທຸກຂະແໜງການ ຄື: ມາດຕະການທາງດ້ານເງິນຕາ ລວມທັງບັນດາມາດຕະການກ່ຽວກັບອັດຕາແລກປ່ຽນ; ມາດຕະການດ້ານການເງິນ-ງົບປະມານ; ມາດຕະການດ້ານການຜະລິດ; ມາດຕະການດ້ານການຄ້າ; ມາດຕະການດ້ານຈິດຕະສາດສັງຄົມ;

2) ແກ້ໄຂບັນຫາເຄັ່ງຮ້ອນທາງດ້ານສັງຄົມ ເປັນຕົ້ນ ບັນຫາຢາເສບຕິດ-ປຸ້ນຈີ້-ອຸປະຕິເຫດຕາມທ້ອງຖະໜົນ; ການສ້າງວຽກເຮັດງານທໍາ, ການສະໜອງ ແລະ ຄວາມຕ້ອງການແຮງງານໃຫ້ມີຄວາມສົມດູນ ແລະ ຕອບສະໜອງຄວາມຕ້ອງການ ຂອງການພັດທະນາ; ບັນຫາ ຖູ-ແພດ ອາສາສະໝັກ; ບັນຫາຄວາມທຸກຍາກ ແລະ ຄ່າຄອງຊີບຂອງປະຊາຊົນ ທີ່ສູງຂຶ້ນຢ່າງຕໍ່ເນື່ອງ; ການບໍລິການອອກປຶ້ມ-ໜັງສືຜ່ານແດນ, ການອອກໃບຕາດິນ ໃຫ້ປະຊາຊົນ ຍັງຊັກຊ້າ ແລະ ມີຊ່ອງຫວ່າງ;

3) ແກ້ໄຂບັນຫາເຄັ່ງຮ້ອນ ທາງດ້ານສິ່ງແວດລ້ອມ ເປັນຕົ້ນ ບັນຫາການຂຸດຄົ້ນແຮ່ທາດທີ່ບໍ່ໄປຕາມກົດໝາຍ, ການບຸກລຸກທີ່ດິນລັດ-ປະຊາຊົນ, ການທໍາລາຍປ່າໄມ້ ແລະ ແຫຼ່ງນໍ້າ, ຄຸນນະພາບອາກາດ (ມົນລະພິດຈາກຄວັນ-ຝຸ່ນ PM2.5), ມາດຕະການຕ້ານແລ້ງ-ຕ້ານຖ້ວມ ແລະ ໄພທໍາມະຊາດອື່ນ ທີ່ມີຄວາມສ່ຽງຈະເກີດຂຶ້ນໃນຕໍ່ໜ້າ, ຂຶ້ນທະບຽນອອກໃບຕາດິນຂອງສູນກາງ-ທ້ອງຖິ່ນ ໃຫ້ເປັນລະບົບຄົບຊຸດ ແລະ ສໍາເລັດຕາມຄາດໝາຍແຜນການ ເພື່ອເພີ່ມລາຍຮັບໃຫ້ແກ່ປະເທດ;

3. ເອົາໃຈໃສ່ແກ້ໄຂຜົນການກວດສອບ-ກວດກາ ຕາມທີ່ໄດ້ກໍານົດ ໃນມະຕິກອງປະຊຸມສະພາແຫ່ງຊາດ;

4. ສຸມໃສ່ກະກຽມສ້າງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ ປີ 2024 ຕິດພັນກັບບັນຊີລົງທຶນຂອງລັດ ໂດຍມີການປະສານສົມທົບກັບສະພາແຫ່ງຊາດ ກ່ອນນໍາສະເໜີຕໍ່ກອງປະຊຸມ ສະໄໝສາມັນ ເທື່ອທີ 6 ຕາມທີ່ໄດ້ກໍານົດໃນກົດໝາຍ.

5. ສໍາລັບທິດທາງແຜນການລົງທຶນຂອງລັດ ປີ 2024 ມີດັ່ງນີ້:

- ໃນການສ້າງແຜນ, ການຈັດສັນ, ໂຄງປະກອບ, ເພດານການລົງທຶນລັດ ແລະ ການພິຈາລະນາຮັບຮອງແຜນການລົງທຶນ ໃຫ້ປະຕິບັດຕາມຂັ້ນຕອນ ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ ມາດຕາ 56 ແລະ ກົດໝາຍວ່າດ້ວຍການລົງທຶນຂອງລັດ ມາດຕາ 38, 39 ແລະ ມາດຕາອື່ນທີ່ກ່ຽວຂ້ອງ ຢ່າງເຂັ້ມງວດ ໂດຍມີການເຂົ້າຮ່ວມແຕ່ຫົວທີຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

- ຄົ້ນຄວ້າພິຈາລະນາເພີ່ມງົບປະມານ ໃສ່ການລົງທຶນຂອງລັດ ໃຫ້ອັດຕາສ່ວນເພີ່ມຂຶ້ນ ບົນພື້ນຖານແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຮັບປະກັນ ໃຫ້ບັນລຸຄາດໝາຍຂອງແຕ່ລະຂະແໜງການ;

-ນໍາໃຊ້ຜົນກອງປະຊຸມສໍາມະນາວິທະຍາສາດວ່າດ້ວຍເພີ່ມທະວີ ການຄຸ້ມຄອງການລົງທຶນລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ໃນການກໍານົດຫຼັກການລົງທຶນ, ກົນໄກການປະສານງານ ແລະ ເຕັກນິກການຈັດສັນທຶນ ໃຫ້ເປັນຮູບປະທໍາ ເປັນຕົ້ນ ນໍາໃຊ້ຫຼັກການຈັດສັນທຶນ ແບບມີຈຸດສຸມ, ຍຸຕິທໍາ ແລະ ສະເໝີພາບ;

- ຄົ້ນຄວ້າຈັດປະເພດໂຄງການລົງທຶນລັດ ໃຫ້ມີແຕ່ 2 ປະເພດ ຄື ໂຄງການລົງທຶນຂອງລັດລະດັບຊາດ ແລະ ໂຄງການລົງທຶນຂອງລັດປົກກະຕິ ຕາມກົດໝາຍວ່າດ້ວຍການລົງທຶນລັດ ມາດຕາ 16, ສໍາລັບ

ອ່ານຕໍ່ໜ້າ 11...

## ຕາງໜ້າຄະນະ...

(ຕໍ່ຈາກໜ້າ 10)

ໂຄງການລົງທຶນຂອງລັດລະດັບຊາດ ໃຫ້ສະພາແຫ່ງຊາດຄົ້ນຄວ້າ ແລະ ພິຈາລະນາຮັບຮອງ;

- ໃຫ້ສຸມການລົງທຶນໃສ່ການຊໍາລະໜີ້ສິນ ໃຫ້ແກ່ໂຄງການກໍ່ສ້າງສໍາເລັດ 100% ທີ່ຄ້າງຊໍາລະມາດົນ ໃຫ້ໄດ້ກວມອັດຕາສ່ວນຫຼາຍ;
- ຈັດສັນທຶນໃຫ້ແກ່ໂຄງການສືບຕໍ່ໃຫ້ສໍາເລັດແລະໄດ້ນໍາໃຊ້ໂດຍໄວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ;
- ຈໍາກັດໂຄງການລົງທຶນສະເໜີໃໝ່ ຍົກເວັ້ນໂຄງການທີ່ມີຄວາມຈໍາເປັນ ແລະ ສໍາຄັນ ເປັນຕົ້ນ ໂຄງການຮັບໃຊ້ວຽກງານປ້ອງກັນຊາດ, ການກໍ່ສ້າງຕ້ານຕາຝັ່ງເຈື່ອນຕາມຊາຍແດນ, ແກ້ໄຂໄພພິບັດ, ການພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກຢູ່ເຂດກັນດານ, ໃນນັ້ນ ການຈັດສັນທຶນໃຫ້ແກ່ໂຄງການສະເໜີໃໝ່ ຕ້ອງຮັບປະກັນການຊໍາລະຕາມກົດໝາຍວ່າດ້ວຍການລົງທຶນລັດ ມາດຕາ 19 ແລະ ບົນພື້ນຖານຄວາມອາດສາມາດຊໍາລະຂອງງົບປະມານ;
- ໃຫ້ລັດຖະບານລາຍງານຄໍາສັ່ງແນະນໍາການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ບົດແນະນໍາການສ້າງແຜນການລົງທຶນລັດ, ໂຄງປະກອບ ແລະ ເພດານການລົງທຶນລັດ ປີ 2024 ໃຫ້ ສະພາແຫ່ງຊາດ ພິຈາລະນາຮັບຮອງ;
- ແຈ້ງໂຄງປະກອບ ແລະ ເພດານການລົງທຶນລັດທຸກບ້ວງທຶນ ໃຫ້ແກ່ຂະແໜງການສູນກາງ ແລະ ທ້ອງຖິ່ນ ເພື່ອນໍາໄປສ້າງແຜນ ແລະ ຈັດສັນທຶນໃຫ້ສໍາເລັດໂດຍໄວ ແລະ ນໍາສະເໜີຕໍ່ສະພາແຫ່ງຊາດພິຈາລະນາຮັບຮອງ;
- ໂຄງການລົງທຶນປະເພດ V ມູນຄ່າຕໍ່າກວ່າ 20 ຕື້ກີບ ມອບໃຫ້ອົງການປົກຄອງທ້ອງຖິ່ນ ຄົ້ນຄວ້າຈັດສັນ ແລະ ສະເໜີສະພາປະຊາຊົນແຂວງພິຈາລະນາຮັບຮອງ ແລ້ວຈັດຕັ້ງປະຕິບັດບົນພື້ນຖານໂຄງປະກອບ ແລະ ເພດານທີ່ສະພາແຫ່ງຊາດຮັບຮອງ;
- ພາຍຫຼັງສໍາເລັດການຈັດສັນທຶນແລ້ວ ໃຫ້ສົ່ງແຜນການລົງທຶນ ແລະ ບັນຊີໂຄງການລະອຽດໃຫ້ສະພາແຫ່ງຊາດ 20 ວັນ ກ່ອນກອງປະຊຸມສະໄໝສາມັນເທື່ອທີ 6 ສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງ ໃຫ້ທັນນໍາໄປຈັດຕັ້ງປະຕິບັດໃນໄຕມາດທີ 1 ຂອງສົກປີງົບປະມານ 2024.

# ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ



ທ່ານ ຄໍາເຈນ ວົງໂພສີ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ໄດ້ສະຫຼຸບຕີລາຄາການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໄລຍະປີ 2021-2023 ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ໃນວັນທີ 29 ມິຖຸນາ 2023 ເຊິ່ງທ່ານໄດ້ກ່າວວ່າ: ຜ່ານການຈັດຕັ້ງປະຕິບັດຕົວຈິງໃນໄລຍະເກືອບ 2 ປີຜ່ານມາ, ສາມາດສະຫຼຸບຕີລາຄາໄດ້ເຖິງຜົນໄດ້ຮັບ ແລະ ດ້ານອ່ອນ-ຂໍ້ຄົງຄ້າງຂອງການຈັດຕັ້ງປະຕິບັດບັນດາຄາດໝາຍ, ວຽກຈຸດສຸມຂອງວາລະແຫ່ງຊາດ ແລະ ບັນດາມາດຕະການທີ່ໄດ້ກໍານົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິຂອງລັດຖະບານ ດັ່ງນີ້:

1. ວຽກງານຈຸດສຸມການສົ່ງເສີມການຜະລິດ-ການບໍລິການ ເພື່ອທົດແທນການນໍາເຂົ້າ ແລະ ເປັນສິນຄ້າ ສົ່ງອອກ.

1.1 ດ້ານກະສິກໍາ-ປ່າໄມ້:

- ຜົນສໍາເລັດທີ່ພົ້ນເດັ່ນແມ່ນການສຸມໃສ່ຜະລິດສະບຽງອາຫານເພື່ອຮັບໃຊ້ພາຍໃນ ເຊິ່ງສາມາດຜະລິດເຂົ້າເພື່ອຄໍ້າປະກັນສະບຽງອາຫານ ໂດຍຜະລິດເຂົ້າເປືອກລວມໃນປີ 2022ໄດ້ 957.629 ເຮັກຕາ, ຜົນຜະລິດ 3,78 ລ້ານໂຕນ ທຽບໃສ່ກ່ອນມີວາລະແຫ່ງຊາດແມ່ນເພີ່ມຂຶ້ນ 0,3% (ເນື້ອທີ່ 936.662 ເຮັກຕາ, ຜົນຜະລິດ 3,66 ລ້ານໂຕນ), ມາຮອດເດືອນພຶດສະພາ 2023 ສາມາດເກັບກ່ຽວຜົນຜະລິດເຂົ້ານາແຊງໄດ້ 441.850 ໂຕນ ແລະ ປູກພືດສະບຽງອາຫານໄດ້ປະມານ 1,07 ລ້ານໂຕນ ໃນເນື້ອທີ່ 125.870 ເຮັກຕາ ເຊິ່ງຈຸດພິເສດໃນການເກັບກ່ຽວເຂົ້ານາແຊງໃນປີນີ້ປະຕິບັດໄດ້ຕາມແຜນ ຍ້ອນປະຊາຊົນຫັນມານໍາໃຊ້ກົນຈັກທົດແທນການນໍາໃຊ້ແຮງງານຄົນຫຼາຍຂຶ້ນ, ປູກພືດສະບຽງອາຫານເພື່ອບໍລິໂພກພາຍໃນ ແລະ ປ້ອນໂຮງງານອຸດສະຫະກໍາປຸງແຕ່ງໃນປີ 2022 ໄດ້ຜົນຜະລິດ 2.3.69.580 ໂຕນທຽບໃສ່ກ່ອນປະຕິບັດວາລະແຫ່ງຊາດເພີ່ມຂຶ້ນ 14,4% (ເນື້ອທີ່ການຜະລິດ 192.851 ເຮັກຕາ, ຜົນຜະລິດ 2.070.927 ໂຕນ), ມາຮອດເດືອນພຶດສະພາ 2023 ປູກພືດສິນຄ້າລະດູແລ້ງໄດ້ 45.359 ເຮັກຕາ ເທົ່າກັບ 136% ຂອງແຜນການ (ສາເຫດຍ້ອນຊາວກະສິກອນຫັນມາປູກມັນຕົ້ນ, ອ້ອຍຫຼາຍຂຶ້ນໃນລະດູແລ້ງນີ້). ປີ 2022 ສາມາດຜະລິດຊີ້ນ, ໄຂ່ ແລະ ປາ ໄດ້ທັງໝົດ 507.644 ໂຕນ ທຽບ ໃສ່ກ່ອນປະຕິບັດວາລະແຫ່ງຊາດເພີ່ມຂຶ້ນ 4,5% (ຈາກ 485.480 ໂຕນ), ມາຮອດປັດຈຸ ບັນຜະລິດໄດ້ 263.095 ໂຕນ, ປະຕິບັດໄດ້ 49,5% ຂອງແຜນການປີ;

- ສໍາເລັດການຄົ້ນຄວ້າດັດສົມການຜະລິດແນວພັນພືດ-ສັດ ລວມທັງປັດໄຈການຜະລິດຕ່າງໆ ດ້ວຍການດຸ່ນດ່ຽງຄວາມສາມາດການຜະລິດພາຍໃນ ແລະ ການນໍາເຂົ້າຈາກຕ່າງປະເທດ ເປັນຕົ້ນແນວພັນທີ່ພາຍໃນສາມາດຜະລິດໄດ້ກຸ້ມຕົນເອງ 100% ເຊິ່ງມີແນວພັນເຂົ້າ; ມາຮອດປັດຈຸບັນໄດ້ມອບຮັບໃບຢັ້ງຢືນແນວພັນເຂົ້າໃໝ່ແລ້ວ 5 ແນວພັນ ແລະ ໄດ້ກໍານົດບັນຊີລາຍການສິນຄ້າສົ່ງເສີມການຜະລິດພາຍໃນເພື່ອຫຼຸດຜ່ອນການນໍາເຂົ້າປະເພດພືດ 9 ຊະນິດ ແລະ ປະເພດສັດ ມີ 3 ບັນຊີ; ກໍານົດບັນຊີທີ່ອະນຸຍາດໃຫ້ນໍາເຂົ້າ (ແນວພັນ), ບັນຊີທີ່ອະນຸຍາດໃຫ້ນໍາເຂົ້າແຕ່ມີເງື່ອນໄຂ ແລະ ບັນຊີທີ່ບໍ່ອະນຸຍາດ ຫຼື ຫ້າມນໍາເຂົ້າໂດຍເດັດຂາດ; ສໍາລັບແນວພັນທີ່ພາຍໃນຕ້ອງໄດ້ນໍາເຂົ້າສ່ວນໜຶ່ງມີຄື: ສາມາດຜະລິດເອງໄດ້ 60-75% ມີແນວພັນຢາງພາລາ, ແນວພັນມັນຕົ້ນ, ແນວພັນທີ່ຍັງຕ້ອງນໍາເຂົ້າຫຼາຍກວ່າ 80% ມີແນວພັນສາລີ, ອາຫານສັດ, ແນວພັນພືດຜັກ, ແນວພັນໄມ້ໃຫ້ໝາກ;

- ຊຸກຍູ້ສົ່ງເສີມຊາວກະສິກອນ ແລະ ປະກອບການຜະລິດຝຸ່ນຊີວະພາບເພື່ອຕອບສະໜອງຕາມຄວາມຕ້ອງການພາຍໃນ, ໃນປີ 2022 ມີຈໍານວນ 95 ໂຮງງານທີ່ດໍາເນີນການຜະລິດ ໄດ້ 100.077 ໂຕນ ເພີ່ມຂຶ້ນ 60.077 ໂຕນ ຈາກປີ 2021, ມາຮອດເດືອນພຶດສະພາ 2023 ມີໂຮງງານຜະລິດອາຫານສັດ ຈໍານວນ 7 ແຫ່ງ (ເພີ່ມຈາກປີ 2022 ຈໍານວນ 1 ແຫ່ງ), ສາມາດຜະລິດໄດ້ 30.923,61 ໂຕນ ກວມປະມານ 60% ຂອງຄວາມຕ້ອງການພາຍໃນ (592.670 ໂຕນ);

- ຜ່ານການຊຸກຍູ້ສົ່ງເສີມ ແລະ ຈັດຕັ້ງປະຕິບັດບັນດາມາດຕະການຕ່າງໆໃນການຫຼຸດຜ່ອນການນໍາເຂົ້າສິ່ງຜົນໃຫ້ຕົວເລກການນໍາເຂົ້າພືດ ແລະ ຜະລິດຕະພັນສັດ ມີມູນຄ່າຫຼຸດລົງ 11,54 ລ້ານໂດລາ (ນໍາເຂົ້າ ປີ 2021 ມີມູນຄ່າ 98,75 ລ້ານໂດລາ ແລະ ປີ 2022 ມູນຄ່າ 87,21 ລ້ານໂດລາ). ສໍາລັບການນໍາເຂົ້າທີ່ຜ່ານດ່ານກັກກັນພືດສາກົນໃນໄລຍະ 5 ເດືອນຕົ້ນປີ 2023 ມີມູນຄ່າທັງໝົດ 47,01 ລ້ານໂດລາ ທຽບໃສ່ໄລຍະ 5 ເດືອນ ປີ 2022 ເພີ່ມຂຶ້ນ 14,26 ລ້ານໂດລາ ຫລືເທົ່າກັບ 43,54%,

- ການຜະລິດພືດທີ່ໄດ້ຮັບການເຈລະຈາເປີດຕະຫຼາດແລ້ວ ເຊິ່ງໃນປີ 2022 ສາມາດປະຕິບັດໄດ້ 563.456 ເຮັກຕາ, ຜົນຜະລິດ 8,17 ລ້ານກວ່າໂຕນ ບັນລຸລື່ນແຜນການ 29,46% (ແຜນ 6,31 ລ້ານໂຕນ) ແລະ ທຽບໃສ່ການຈັດຕັ້ງປະຕິບັດໃນປີ 2021 (ກ່ອນປະຕິບັດວາລະແຫ່ງຊາດ) ແມ່ນເພີ່ມຂຶ້ນ 41,35% (5,78 ລ້ານໂຕນ), ສໍາລັບໄລຍະ 5 ເດືອນປີ 2023 ສາມາດປະຕິບັດໄດ້ 154.545 ເຮັກຕາ ເທົ່າກັບ 24,31% ຂອງແຜນການ;

1.2 ດ້ານພະລັງງານ-ບໍ່ແຮ່:

+ ດ້ານພະລັງງານ: ໃນໄລຍະ 6 ເດືອນຕົ້ນປີ 2023 ສືບຕໍ່ສຸມໃສ່ການຜະລິດພະລັງງານປະຕິບັດໄດ້24.316ລ້ານກິໂລວັດໂມງ ມູນຄ່າ 21.965 ຕື້ກີບ ທຽບໃສ່ 6 ເດືອນຕົ້ນປີ 2022 (23.911 ລ້ານກິໂລວັດໂມງ) ເພີ່ມຂຶ້ນ 1,69%, ມີມູນຄ່າ (18.100 ຕື້ກີບ) ເພີ່ມຂຶ້ນ 21,35% ແລະ ຖ້າທຽບໃສ່ແຜນການປີ (51.134 ລ້ານກິໂລວັດໂມງ) ປະຕິບັດໄດ້ 47,55%, ມູນຄ່າ (41.321 ຕື້ກີບ)ປະຕິບັດໄດ້53,15%; ໃນນີ້ການຜະລິດໄຟຟ້າໄດ້ແບ່ງອອກ ເປັນ 3 ກຸ່ມ: EDL: 28 ລ້ານກິໂລວັດໂມງ (ທຽບໃສ່ 6 ເດືອນຕົ້ນປີ 2022 ເພີ່ມຂຶ້ນ 16,6%), ມູນຄ່າ2,57ຕື້ກີບ; EDL-GEN: 1.721 ລ້ານກິໂລວັດໂມງ (ທຽບໃສ່ 6 ເດືອນຕົ້ນປີ 2022 ເພີ່ມຂຶ້ນ 8,8%), ມູນຄ່າ 820,56 ຕື້ກີບ; PP: 22.162 ລ້ານກິໂລວັດໂມງ (ທຽບໃສ່ 6 ເດືອນຕົ້ນປີ 2022 ຫຼຸດລົງ 2,45%), ມູນຄ່າ 17.277,44 ຕື້ກີບ;

ມາຮອດທ້າຍເດືອນພຶດສະພາ 2023 ແຫຼ່ງຜະລິດພະລັງງານໄຟຟ້າມີທັງໝົດ 94 ແຫ່ງ (ກໍາລັງຕິດຕັ້ງ 1 ເມກາວັດຂຶ້ນໄປ) ລວມກໍາລັງຕິດຕັ້ງ 11.661,14 ເມກາວັດ, ສາມາດຜະລິດພະລັງງານໄຟຟ້າໄດ້ 58.813,42 GWh/ປີ, ໃນນີ້ພະລັງງານນໍ້າ 81 ແຫ່ງ ກວມ 83%, ພະລັງງານທົດແທນ 12 ແຫ່ງ (ແສງຕາເວັນ 8 ແຫ່ງ ແລະ ຊີວະມວນ 4 ແຫ່ງ) ກວມ 1%, ຄວາມຮ້ອນຖ່ານຫີນ 1 ແຫ່ງ ກວມ 16% ເຊິ່ງເຫັນວ່າຍັງບໍ່ທັນສາມາດປະຕິບັດ ໄດ້ຕາມມະຕິສະພາແຫ່ງຊາດກໍານົດ ເປັນຕົ້ນແມ່ນພະລັງງານທົດແທນ (ສະພາກໍານົດ 11%); ໄດ້ສໍາເລັດການເຊັນສັນຍາສໍາປະທານ CA ຫຼາຍໂຄງການ ເຊັ່ນ: ໂຄງການເຂື່ອນໄຟຟ້ານໍ້າຂອງປາກລາຍ, ໂຄງການເຂື່ອນໄຟຟ້າເຊກອງ 4A, 4B, ໂຄງການເຂື່ອນໄຟຟ້ານໍ້າພາກປະສົມປະສານກັບພະລັງງານໄຟຟ້າແສງຕາເວັນ, ໂຄງການກໍ່ສ້າງໄຟຟ້າພະລັງງານລົມ ແລະ ອື່ນໆ;

+ ດ້ານບໍ່ແຮ່: ໃນໄລຍະ 6 ເດືອນຕົ້ນປີ 2023 ສາມາດຄາດຄະເນມູນຄ່າໄດ້ 10.805 ຕື້ກີບ ທຽບໃສ່ 6 ເດືອນຕົ້ນປີ 2022 ເພີ່ມຂຶ້ນ 10,8% (ການເພີ່ມຂຶ້ນແມ່ນມາຈາກກິດຈະການບໍ່ແຮ່ປົກກະຕິທີ່ສາມາດຜະລິດໄດ້ຕາມແຜນ ແລະ ຈາກກິດຈະການແບບທົດລອງທີ່ກວມປະມານ 8%) ແລະ ຖ້າທຽບໃສ່ແຜນການປີປະຕິບັດໄດ້ 54,58%; ຂຸດຄົ້ນເພື່ອຈໍາໜ່າຍພາຍໃນໄດ້ 156 ລ້ານໂດລາ ທຽບໃສ່ໄລຍະດຽວກັນກັບປີຜ່ານມາ ເພີ່ມຂຶ້ນ 7,58% ເປັນຕົ້ນຫີນກາວ, ແຮ່ເກືອໂປຣຕາສ (ເກືອກາລີ), ຫີນປູນ ທີ່ສະໜອງເຂົ້າໃນໂຮງງານອຸດສະຫະກໍາພາຍໃນ;

- ຕັ້ງແຕ່ມື້ປະຕິບັດວາລະແຫ່ງຊາດມາຮອດເດືອນພຶດສະພາ 2023, ໄດ້ເຊັນສັນຍາສໍາປະທານບໍ່ແຮ່ໃນຮູບແບບທົດລອງທັງໝົດ 89 ບໍລິສັດ (ແຮ່ເຫຼັກ 38, ແຮ່ຄໍາເຄົ້າ 8, ຫີນມາໂບ 2 ແລະ ແຮ່ຄໍາຕົກຂ້ອນ 31 ແລະ ແຮ່ຫາຍາກ 10 ບໍລິສັດ) ໃນເນື້ອທີ່ 36.450,11 ເຮັກຕາ ຫຼືເທົ່າກັບ 0,13% ຂອງເນື້ອທີ່ທົ່ວປະເທດ ແຕ່ໃນປະຕິບັດພັນທະດ້ານການເງິນຂອງໂຄງການທົດລອງໃຫ້ລັດຖະບານ ທີ່ໄດ້ມອບເໝົາລ່ວງໜ້າ ແລະ ພັນທະຄ່າຊື້ລິຂະສິດແມ່ນທັງໝົດ 109 ບໍລິສັດ (89 ບໍລິສັດທີ່ໄດ້ເຊັນສັນຍາສໍາປະທານ, 08 ບໍລິສັດທີ່ຍັງບໍ່ທັນໄດ້ເຊັນສັນຍາສໍາປະທານ ແລະ 12 ບໍລິສັດໃນໂຄງການສໍາຫຼວດແຮ່ຫາຍາກ) ລວມມູນຄ່າທັງໝົດ ປະມານ 864,7 ຕື້ກີບ ແລະ 85 ລ້ານໂດລາ;

1.3 ດ້ານການສົ່ງເສີມວິສາຫະກິດ ຂະໜາດນ້ອຍ ແລະ ກາງ ແລະ ການຄຸ້ມຄອງລາຄາສິນຄ້າ: ວຽກພົ້ນເດັ່ນແມ່ນສຸມໃສ່ຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກ ແລະ ໄດ້ສໍາເລັດການປັບປຸງດໍາລັດວ່າດ້ວຍການກໍານົດຂະໜາດຈຸລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ສະບັບເລກທີ 04/ລບ ແລະ ດໍາລັດວ່າດ້ວຍ ກອງທຶນສົ່ງເສີມ MSME; ພ້ອມທັງເປີດສູນບໍລິການ SME ເພີ່ມອີກ 1 ແຂວງ (ບໍລິຄໍາໄຊ) ລວມເປັນທັງໝົດ 6 ແຫ່ງ ແລະ ສໍາເລັດການຈັດຝຶກອົບຮົມກ່ຽວກັບການດໍາເນີນທຸລະກິດໃນຫຼາຍແຂວງເປົ້າໝາຍ ເພື່ອເປັນແຮງຜັກດັນໜຶ່ງໃນການສ້າງຜູ້ປະກອບການໃໝ່ ແລະ ສ້າງຄວາມອາດສາມາດ ຫຼື ການຂະຫຍາຍຕົວຂອງທຸລະກິດໂດຍປ່ອຍກູ້ໃນອັດຕາດອກເບ້ຍຕໍ່າ;

- ໃນໄລຍະວາລະແຫ່ງຊາດໄດ້ພະຍາຍາມດັດສົມບໍລິສັດນໍາເຂົ້າ-ສົ່ງອອກນໍ້າມັນເຊື້ອໄຟ ໄດ້ 14 ບໍລິສັດ ທີ່ໄດ້ຮັບອະນຸຍາດດໍາເນີນທຸລະກິດນໍາເຂົ້າ-ສົ່ງອອກນໍ້າມັນເຊື້ອໄຟ ຈາກ 26 ບໍລິສັດ; ນອກນັ້ນ, ຍັງມີ 27 ບໍລິສັດ ທີ່ຈໍາໜ່າຍພາຍໃນປະເທດ ໄດ້ມີຫຼາຍມາດຕະການໃນການແກ້ໄຂບັນຫາການເໜັງຕີງຂອງລາຄາສິນຄ້າ, ລາຄານໍ້າມັນເຊື້ອໄຟ ແລະ ການຄຸ້ມຄອງເງິນຕາຕ່າງປະເທດ;

- ສໍາລັບການສ້າງຄວາມເຂັ້ມແຂງໃຫ້ແກ່ຜູ້ປະກອບການຢູ່ລາວ ແມ່ນສາມາດອະນຸຍາດນໍາໃຊ້ກາໝາຍສິນຄ້າໂອດ໊ອບ 68 ຫົວໜ່ວຍ, 285 ຜະລິດຕະພັນ ແລະ ການຍົກສູງປະສິດທິພາບ ແລະ ອໍານວຍຄວາມສະດວກ ໃນການແຂ່ງຂັນ ເພື່ອສົ່ງອອກສິນຄ້າ ໂດຍສໍາເລັດການເຈລະຈາເປີດຕະຫຼາດສົ່ງ

ອ່ານຕໍ່ໜ້າ 12...

## ບົດລາຍງານ...

(ຕໍ່ຈາກໜ້າ 11)

ອອກ (ສປ ຈີນ ຈຳນວນ 16 ລາຍການ ລວມ 1 ສັດໃຫຍ່, ຫວຽດນາມ ມີ 16 ລາຍການ ແລະ ໄທ 15 ລາຍການ);

1.4 ດ້ານການທ່ອງທ່ຽວ: ໄດ້ປະຕິບັດມາດຕະການເປີດປະເທດ ແລະ ສະໜັບສະໜູນພາກທຸລະກິດທ່ອງທ່ຽວປັບປຸງຄວາມພ້ອມແຕ່ລະດ້ານ, ສິ່ງອຳນວຍຄວາມສະດວກ ແລະ ເພີ່ມການໂຄສະນາການທ່ອງທ່ຽວໃນຫຼາຍຊ່ອງທາງ ເຊິ່ງເຮັດໃຫ້ໝົດປີ 2022 ມີນັກທ່ອງທ່ຽວທັງໝົດຈຳນວນ 2.979.724 ເທື່ອຄົນ ທຽບໃສ່ແຜນປີ 2022 ປະຕິບັດໄດ້ລື່ນປະມານ 52 % ແລະ ສ້າງລາຍຮັບທັງໝົດປະມານ 537.539.389 ໂດລາ; ໃນນີ້ນັກທ່ອງທ່ຽວສາກົນມີຈຳນວນ 1.294.365 ເທື່ອຄົນ ທຽບໃສ່ແຜນປີ 2022 ປະຕິບັດໄດ້ລື່ນແຜນ 43 % ແລະໃນໄລຍະ 5 ເດືອນຕົ້ນປີ 2023 ມີນັກທ່ອງທ່ຽວຕ່າງປະເທດເຂົ້າມາທັງໝົດ 1.405.265 ເທື່ອຄົນ, ໃນນີ້ ກວມສັດສ່ວນຫຼາຍກວ່າໝູ່ແມ່ນນັກທ່ອງທ່ຽວຈາກບັນດາປະເທດອາຊຽນ ກວມປະມານ 65%;

1.5 ດ້ານໂຍທາທິການ ແລະ ຂົນສົ່ງ: ສະພາບການຂົນສົ່ງສິນຄ້າແມ່ນມີທ່າອ່ຽງທີ່ດີຂຶ້ນ ໂດຍໃນໄລຍະ 6 ເດືອນຕົ້ນປີນີ້ ຄາດຄະເນປະຕິບັດໄດ້ 48,8% ຂອງແຜນການ (ຄາດຄະເນປະຕິບັດໄດ້ 6,23 ລ້ານໂຕນ) ແລະ ການຂົນສົ່ງໂດຍສານຄາດຄະເນປະຕິບັດໄດ້ 44,7% ຂອງແຜນການ (ຄາດຄະເນປະຕິບັດໄດ້ 44,7 ລ້ານຄົນ); ໄດ້ຊຸກຍູ້ໃນການແກ້ໄຂຂໍ້ຫຍຸ້ງຍາກຕ່າງໆ ໃນການບໍລິການຂົນສົ່ງສິນຄ້າ ແລະ ຜູ້ໂດຍສານຜ່ານລົດໄຟລາວ-ຈີນ ເຊິ່ງໄດ້ເຮັດໃຫ້ມູນຄ່າການບໍລິການຂົນສົ່ງຂະຫຍາຍຕົວຢ່າງໄວ ເປັນຕົ້ນ ເພີ່ມຖ້ຽວລົດໄຟຂົນສົ່ງໂດຍສານເພື່ອຮອງຮັບປະລິມານຜູ້ໂດຍສານທີ່ເພີ່ມຂຶ້ນ ປັບປຸງລະບົບການຊື້ປີ້ລົດໄຟໃຫ້ສາມາດຊື້ໄດ້ແບບອອນລາຍ ແລະ ເພີ່ມຈຸດຂາຍປີ້ລົດໄຟຢູ່ສະຖານີຄຳສະຫວາດ, ເປີດຂະບວນໂດຍສານສາກົນລະຫວ່າງສະຖານີຄຸນມິງໃຕ້ ສປ ຈີນ ແລະ ສະຖານີນະຄອນຫຼວງວຽງຈັນ ສປປ ລາວ, ເປີດນຳໃຊ້ສະຖານີຂົນສົ່ງສິນຄ້າ ຄົບທັງໝົດ 11 ສະຖານີ;

2. ວຽກຈຸດສຸມການສ້າງຄວາມເຂັ້ມແຂງດ້ານການເກັບລາຍຮັບງົບປະມານ: ລາຍຮັບທັງໝົດ ນັບແຕ່ປີ 2021 ຫາ 5 ເດືອນຕົ້ນປີ 2023 ປະຕິບັດໄດ້ 77.593,69 ຕື້ກີບ ເທົ່າກັບ 43,2% ຂອງແຜນການ 5 ປີ (ລາຍຮັບທັງໝົດແຜນການ 5 ປີ 179.500 ຕື້ກີບ), ໃນນັ້ນ ລາຍຮັບພາຍໃນປະຕິບັດໄດ້ 71.074,80 ຕື້ກີບ, ເທົ່າກັບ 42,6% ຂອງແຜນການ 5 ປີ (ລາຍຮັບພາຍໃນໃນແຜນ 5 ປີ 166.753 ຕື້ກີບ);

3. ວຽກຈຸດສຸມການສົ່ງເສີມການປະຢັດ, ຕ້ານການຟຸມເຟືອຍ, ຍົກສູງປະສິດທິຜົນການລົງທຶນ-ລາຍຈ່າຍ ງົບປະມານ ແລະ ການແກ້ໄຂໜີ້ສິນພາຍໃນ ແລະ ຕ່າງປະເທດ: ໄດ້ເອົາໃຈໃສ່ປະຕິບັດດຳລັດ ເລກທີ 205/ລບ ໂດຍໄດ້ຈັດລຽງບຸລິມະສິດແຕ່ລະປະເພດລາຍຈ່າຍ ເພື່ອຮັບປະກັນການເບີກຈ່າຍສຳເລັດທັນຕາມກຳນົດເວລາ, ພ້ອມກັນນັ້ນ ໄດ້ມີການຄຸ້ມຄອງການປະຕິບັດລາຍ ຈ່າຍຢ່າງເຂັ້ມງວດ ແລະ ປະຢັດ ໂດຍສະເພາະຈຳກັດລາຍຈ່າຍບໍລິຫານ, ຫຼຸດຜ່ອນຈຳນວນໂຄຕ້າລັດຖະກອນໃໝ່ (ຈາກ 2800 ຄົນໃນປີ 2021ແລະ 2022 ມາເປັນ800ຄົນໃນປີ2023); ແນໃສ່ບົນພື້ນຖານຄວາມສົມສ່ວນລະຫວ່າງຄວາມອາດສາມາດຈັດເກັບລາຍຮັບຕົວຈິງ ແລະ ການປະຕິ ບັດລາຍຈ່າຍ ໂດຍເຮັດໃຫ້ລາຍຮັບພາຍ ໃນກຸ້ມລາຍຈ່າຍພາຍໃນ ແລະ ມີສ່ວນສະສົມໄວ້ຊຳລະໜີ້ສິນ ແລະ ຮັກສາການຂາດດຸນໃຫ້ຢູ່ໃນລະດັບທີ່ຄວບຄຸມໄດ້;

- ເພື່ອຍົກສູງປະສິດທິຜົນລາຍຈ່າຍງົບປະມານ ໄດ້ປັບປຸງກົນໄກການປະຕິບັດລາຍຈ່າຍດ້ວຍການເຮັດ ທົດລອງມອບຄວາມຮັບຜິດຊອບໃຫ້ຜູ້ສັ່ງການຫລາຍຂຶ້ນ ເຊິ່ງກະຊວງການເງິນຈະຫັນໄປຄຸ້ມຄອງວຽກງານມະ ຫາພາກ ເພື່ອຫຼຸດຜ່ອນຂັ້ນຕອນອະນຸມັດ ແລະ ລົບເລີກກວດກາຫຼັງຈ່າຍ, ພ້ອມນັ້ນໄດ້ຫຼຸດການອະນຸມັດລາຍຈ່າຍ ເງິນເດືອນ, ເງິນນະໂຍບາຍພະນັກງານ-ລັດຖະກອນຈາກຈາຍເປັນງວດມາເປັນອະນຸມັດໝົດປີ ແລະ ຈັດຕັ້ງປະຕິບັດໄດ້ແລ້ວ 39 ກະຊວງ ອົງການຂັ້ນສູນກາງ;

- ໄດ້ຈັດຕັ້ງປະຕິບັດດຳລັດວ່າດ້ວຍ ລົດຂອງລັດສະບັບເລກທີ 599/ລບ ໂດຍກວດກາຄືນບັນຊີສະຖິຕິລົດຂອງລັດຢູ່ 40 ພາກສ່ວນໃນຂັ້ນສູນກາງ ເຊິ່ງມີລົດທັງໝົດ 39.754 ຄັນ, ໄດ້ປ້ອນຂໍ້ມູນເຂົ້າໃນລະບົບຄຸ້ມຄອງຂໍ້ມູນຊັບສິນແຫ່ງລັດ (AMIS) ແລະ ຕິດແຜ່ນກາໝາຍ ແລະ QR code, ຂັ້ນທ້ອງຖິ່ນສຳເລັດການກວດກາຢູ່ 14 ແຂວງ; ສຳເລັດການຖອນລົດເກົ່າທີ່ໃຊ້ການບໍ່ໄດ້ຈາກ ກະຊວງຕ່າງໆຈຳນວນ 63 ຄັນ, ໃນນີ້: ລົດໃຫຍ່ 52 ຄັນ ເພື່ອສະສາງດ້ວຍການປະມູນຂາຍອອກແບບເປີດກວ້າງ;

- ສຸມໃສ່ປະຕິຮູບ, ປັບປຸງລັດວິສາຫະກິດຍຸດທະສາດ ແຜນການສືບຕໍ່ດຳເນີນການປະຕິຮູບລັດວິສາຫະກິດ ປະຈຳປີ 2023ຕົວຈິງມີ19ຫົວໜ່ວຍ, ໃນນັ້ນ: 14 ຫົວໜ່ວຍ ຈະຮັກສາການຖືຮຸ້ນ 100% ຫຼື ຖືຮຸ້ນໃນອັດ ຕາສ່ວນໃຫຍ່; 1 ຫົວໜ່ວຍ ຈະຂາຍຮຸ້ນອອກ ແລະ 4 ຫົວໜ່ວຍ ຈະຍຸບເລີກ ຕາມແຜນທີ່ໄດ້ກຳນົດໄວ້ ແລະ ສາມາດສັງລວມຄວາມຄືບໜ້າຂອງການປັບປຸງ 6 ລັດວິສາຫະກິດຍຸດທະສາດ;

- ການແກ້ໄຂໜີ້ສິນສາທາລະນະ ໄດ້ນຳໃຊ້ຫລາຍຮູບແບບໃນການຊຳລະໜີ້ສິນ ເຊັ່ນ: ໄດ້ອອກພັນທະບັດ ດຸນດ່ຽງງົບປະມານຂອງລັດຖະບານຜ່ານຕະຫລາດຫລັກຊັບລາວ, ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍການຄຸ້ມຄອງ ໜີ້ສິນສາທາລະນະ ເພື່ອຜ່ານສະພາແຫ່ງຊາດຮັບຮອງໃນທ້າຍປີ 2023; ພ້ອມນັ້ນ, ຄົ້ນຄວ້າຈັດຕັ້ງປະຕິບັດໂຄງ ການສາຍສົ່ງແຫ່ງຊາດ EDL-T ເພື່ອແກ້ສະພາບຄ່ອງ ແລະ ບັນຫາໜີ້ສິນ ຂອງລັດຖະບານ; ການດັດແກ້ອັດຕາດອກເບ້ຍຂອງສັນຍາເງິນກູ້ຢືມ ແລະ ພັນທະບັດຕ່າງປະເທດ ຈາກອັດຕາດອກເບ້ຍລອຍໂຕ Lbor ເປັນ Fixed rate ຫຼື ອັດຕາດອກເບ້ຍຄົງທີ່;

- ການຄຸ້ມຄອງ ແລະ ແກ້ໄຂໜີ້ສິນໂຄງການລົງທຶນລັດ (ໜີ້ສິນພາຍໃນ): ແມ່ນສຸມໃສ່ການແກ້ໄຂໜີ້ໂດຍຈັດສັນໃນຮ່ອງປົກກະຕິໃນແຕ່ລະປີ ແລະ ດ້ວຍການຊຳລະໜີ້ສິນຮູບແບບອ່ວຍໜີ້ສາມແຈ, ດ້ວຍການອອກພັນທະບັດລັດຖະບານໃນແຕ່ລະໄລຍະ, ປະສານສົມທົບກັບຂະແໜງການ ແລະ ທ້ອງຖິ່ນໃນການຫັກລົບມູນຄ່າອອກຈາກສາລະບານງົບປະມານ ຈຳນວນ 263 ໂຄງການ, ລວມມູນຄ່າ 1.358,62 ຕື້ກີບ ແລະ 104.891,81 ໂດລາ ແຕ່ສາມາດຫັກລົບມູນຄ່າອອກຈາກສາລະບານງົບປະມານ ໄດ້ຈຳນວນ 139 ໂຄງການ, ມູນຄ່າ 947,97 ຕື້ກີບ. ໄດ້ປະສານສົມທົບ ແລະ ຊຸກຍູ້ບັນດາຂະແໜງການ ແລະ ທ້ອງຖິ່ນ ເພື່ອປະຕິບັດຕາມຂໍ້ຕົກລົງ ສະບັບເລກທີ 2415/ກຜທ, ລົງວັນທີ 23 ທັນວາ 2021 ວ່າດ້ວຍການກຳນົດຫຼັກການ ແລະ ວິທີການເຈລະຈາຕໍ່ລອງມູນຄ່າໂຄງການລົງທຶນຂອງລັດ ທີ່ມູນຄ່າສູງເກີນ 20%. ໃນປີ 2021 ໄດ້ແກ້ໄຂໜີ້ສິນລົງທຶນຂອງລັດດ້ວຍງົບປະມານປົກກະຕິຈຳນວນ 148,65ຕື້ກີບ.

4. ວຽກຈຸດສຸມການສ້າງສະຖຽນລະພາບດ້ານເງິນຕາ: ສຸມໃສ່ຄົ້ນຄວ້າຜັນຂະຫຍາຍນະໂຍບາຍສິນເຊື່ອເພື່ອກະຕຸ້ນເສດຖະກິດ ໂດຍທະນາຄານຈະອອກນະໂຍບາຍສິນເຊື່ອຖົ່ມຊຸມດອກເບ້ຍ ເພື່ອສ້າງເງື່ອນໄຂໃຫ້ຫົວໜ່ວຍ ວສກ ເຂົ້າເຖິງແຫຼ່ງທຶນໄດ້ໃນອັດຕາທີ່ເໝາະສົມ ແລະ ລັດຖະບານຈະພິຈາລະນາອຸດໜູນອັດຕາດອກເບ້ຍ ແລະ ນະໂຍບາຍສິນເຊື່ອກະຈາຍແຫຼ່ງທຶນສູ່ທ້ອງຖິ່ນ ເພື່ອໃຫ້ ວສກ ເຂົ້າຫາແຫຼ່ງທຶນຂອງ ທຫລ ໂດຍຜ່ານ ທະນາຄານທຸລະກິດ; ໃນໄລຍະ 2020 ຫາ ເດືອນ ມີນາ 2023 ທະນາຄານແຫ່ງ ສປປ ລາວ ໄດ້ສະໜອງທຶນໃຫ້ກອງທຶນສົ່ງເສີມ SME ຈຳນວນ 500 ຕື້ກີບ (ປີ 2023 ອະນຸມັດ 100 ຕື້ກີບ ຢູ່ໃນຂັ້ນຕອນເຊັນສັນຍາ), ໃນນັ້ນ ສະໜອງໃຫ້ທະນາຄານທຸລະກິດ 474 ຕື້ກີບ ແລະ ທະນາຄານທຸລະກິດໄດ້ປ່ອຍກູ້ໃຫ້ລູກຄ້າໄປແລ້ວ 391,65 ຕື້ກີບ ເທົ່າກັບ 82,63% ຂອງທຶນທັງໝົດທີ່ໄດ້ຮັບ. ນອກນັ້ນ, ຍັງມີກອງທຶນສົ່ງເສີມການເຂົ້າເຖິງ ແຫຼ່ງທຶນໃນ ສປປລາວ (LAFF): ເພື່ອຊ່ວຍເຫຼືອ ວສກ ໃນຊົນນະບົດ ເຊິ່ງໃນເດືອນພຶດສະພາ ປີ 2023 ມີການປ່ອຍກູ້ທັງໝົດຈຳນວນ 30,5 ຕື້ກີບ ໂດຍປ່ອຍຜ່ານຫຼາຍທະນາຄານທຸລະກິດ ແລະ ມາຮອດວັນທີ 25 ພຶດສະພາ 2023 ມີຍອດເຫຼືອຕົ້ນທຶນ ທັງໝົດຈຳນວນ 119,25 ຕື້ກີບ;

-ແກ້ໄຂສະພາບຄ່າເງິນກີບ, ຖັງສຳຮອງເງິນຕາຕ່າງປະເທດ ແລະ ຄວບຄຸມອັດຕາເງິນເຟີ້ ໂດຍໄດ້ປັບເພີ່ມ ອັດຕາດອກເບ້ຍພື້ນຖານຂອງ ທຫລ ແລະ ເງິນແຮຝາກບັງຄັບ;

- ປະຕິບັດນະໂຍບາຍອັດຕາແລກປ່ຽນຕາມທິດທາງຍືດຍຸ່ນຫຼາຍຂຶ້ນ, ປັບປຸງການຄຸ້ມຄອງຮ້ານແລກປ່ຽນ ໃຫ້ຮັດກຸມຂຶ້ນ, ສະໜອງເງິນຕາຕ່າງປະເທດສຳລັບການນຳເຂົ້ານ້ຳມັນເຊື້ອໄຟຢ່າງເປັນປົກກະຕິ ແລະ ອື່ນໆ.

6. ວຽກຈຸດສຸມການຍົກສູງປະສິດທິພາບການຄຸ້ມຄອງລັດດ້ວຍກົດໝາຍ: ມາຮອດປັດຈຸບັນ ໄດ້ຮັບຮອງ ກົດໝາຍທີ່ຕິດພັນກັບ 2 ວາລະແຫ່ງຊາດ ມີທັງໝົດ 15 ສະບັບ, ໃນນັ້ນ 11 ສະບັບ ຕິດພັນກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ໂດຍສະເພາະນິຕິກຳ ແລະ ນິຕິກຳກຸ່ມກົດໝາຍ ໃນຂະແໜງການເງິນ; ໃນໄລຍະ 5 ເດືອນຕົ້ນປີ, ລັດຖະບານໄດ້ອອກດຳລັດ ຈຳນວນ 3 ສະບັບ ແລະ ຂໍ້ຕົກລົງ 12 ສະບັບ ທີ່ຕິດພັນກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

ເຖິງຢ່າງໃດກໍຕາມ, ຍັງມີກົດໝາຍໃນຂະແໜງເສດຖະກິດຈຳນວນໜຶ່ງ ຍັງສືບຕໍ່ປັບປຸງຕື່ມ ເຊັ່ນ: ກົດໝາຍ ສົ່ງເສີມການລົງທຶນ, ກົດໝາຍອາກອນທີ່ດິນ, ກົດໝາຍອາກອນສິ່ງແວດລ້ອມ ແລະ ອື່ນໆ ໃນແຕ່ລະຂົງເຂດການ ຜະລິດ. ສຳລັບວຽກງານການຄຸ້ມຄອງເງິນຕາຕ່າງປະເທດ ໄດ້ຜັນຂະຫຍາຍອອກເປັນຫຼາຍນິຕິກຳລຸ່ມກົດໝາຍ ເຊັ່ນ: ຄົ້ນຄວ້າອອກນິຕິກຳຂັ້ນ ທຫລ ໃນການຄຸ້ມຄອງເງິນຕາຕ່າງປະເທດ ຕິດພັນກັບການນຳເຂົ້າ-ສົ່ງອອກສິນຄ້າ ແລະ ບໍລິການ; ສ້າງບັນດາຄູ່ມື, ແບບຟອມ ແລະ ການຝຶກອົບຮົມໃຫ້ແກ່ ທທກ ທີ່ໃຫ້ບໍລິການທຸລະກິດຊຳລະ ແລະ ຮັບຊຳລະຂອງຜູ້ນຳເຂົ້າ-ສົ່ງອອກ ເພື່ອປະຕິບັດບັນດາຂໍ້ກຳນົດຕ່າງໆໃນນິຕິກຳ;

ນອກຈາກນີ້, ລັດຖະບານ ໄດ້ປັບປຸງກົນໄກການຄຸ້ມຄອງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ໃຫ້ສອດຄ່ອງກວ່າເກົ່າ ໂດຍໄດ້ລົບລ້າງຄະນະຄຸ້ມຄອງການລົງທຶນຂອງພາຍໃນ ແລະ ຕ່າງປະເທດ ຂັ້ນສູນກາງ ແລະ ທ້ອງຖິ່ນ ທັງປັບປຸງດຳລັດ 02, 03 ທີ່ພົວພັນເຖິງການສ້າງເງື່ອນໄຂໃຫ້ແກ່ການລົງທຶນຂອງພາກສ່ວນຕ່າງໆ ໃຫ້ສະດວກວ່ອງໄວຂຶ້ນກວ່າເກົ່າ.



# ບົດປະກອບຄຳເຫັນຄະນະປະຈຳສະພາແຫ່ງຊາດ ຕໍ່ການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ

ໃນວັນທີ 29 ມິຖຸນາ 2023 ທ່ານ ປອ. ລີເບີ ລີບົວປາວ ປະທານກຳມາທິການແຜນການ, ການເງິນ ແລະ ການກວດສອບ, ຕາງໜ້າຄະນະປະຈຳສະພາແຫ່ງຊາດໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບບັນຫາພົ້ນເດັ່ນໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:



**I. ຄວາມເປັນມາ ແລະ ຄວາມສຳຄັນຂອງວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ**

1. ມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຖືກຮັບຮອງໃນກອງປະຊຸມສະໄໝວິສາມັນເທື່ອທີ 1 ຂອງສະພາແຫ່ງຊາດ ຊຸດທີ IX, ເຊິ່ງເປັນຄັ້ງທຳອິດໃນປະຫວັດສາດທີ່ສະພາແຫ່ງຊາດ ໄດ້ຮັບຮອງມະຕິວ່າດ້ວຍວາລະແຫ່ງຊາດຈຸດປະສົງແນໃສ່ເພື່ອແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ທີ່ເຄັ່ງຮ້ອນ ແລະ ສະສົມຫຼາຍປີ ເປັນຕົ້ນບັນຫາໜີ້ສິນສາທາລະນະ, ບັນຫາການຂາດສະພາບຄ່ອງໃນລະບົບການເງິນ-ເງິນຕາ, ຂາດແຫຼ່ງທຶນເພື່ອຊຳລະໜີ້ສິນພາຍໃນ ແລະ ຕ່າງປະເທດ, ສະພາບເງິນຝືດ ແລະ ເງິນເຟີ້ໃນລະບົບເສດຖະກິດ, ການເງິນ-ເງິນຕາ ກໍຄື ການແກ້ໄຂຄ່າຄອງຊີບຂອງພະນັກງານ-ລັດຖະກອນ,ທະຫານ-ຕຳຫຼວດ ແລະ ປະຊາຊົນ ໃຫ້ດີຂຶ້ນ;

2. ມະຕິກອງປະຊຸມສະພາແຫ່ງຊາດ ໄດ້ກຳນົດເນື້ອໃນຕົ້ນຕໍ ຄື:

1) ກຳນົດໄລຍະເວລາການປະຕິບັດວາລະແຫ່ງຊາດ 2021-2023 ເປັນເວລາ 3 ປີ, ແຕ່ການປະຕິບັດຕົວຈິງແມ່ນເລີ່ມແຕ່ໄລຍະທີ່ອອກມະຕິກອງປະຊຸມສະພາແຫ່ງຊາດ ຄື ແຕ່ເດືອນ 8 ປີ 2021 ຫາ ທ້າຍປີ 2023, ມາຮອດປະຈຸບັນເປັນເວລາ 1 ປີ ແລະ 11 ເດືອນ;

2) ກຳນົດ 2 ຄາດໝາຍຕົ້ນຕໍ ຄື: ແກ້ໄຂໜີ້ສິນສາທາລະນະຮອດປີ 2023 ໃຫ້ຍັງເຫຼືອບໍ່ເກີນ 64,5% ຂອງ GDP ແລະ ສ້າງຄວາມເຂັ້ມແຂງສະຖຽນລະພາບດ້ານເງິນຕາ;

3) ກຳນົດ 5 ແຜນວຽກຈຸດສຸມ ແລະ 14 ມາດຕະການຈັດຕັ້ງປະຕິບັດ.

**II. ຕີລາຄາຄວາມຄືບໜ້າການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ໄລຍະ 1 ປີ 11 ເດືອນ (ເດືອນ 8 ປີ 2021 ຫາ 6 ເດືອນຕົ້ນປີ 2023)**

1. ຜົນສຳເລັດທີ່ພົ້ນເດັ່ນ:

ຜ່ານການຮັບຟັງການລາຍງານຂອງລັດຖະບານແລະການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເຫັນວ່າການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ມີຜົນສຳເລັດທີ່ພົ້ນເດັ່ນຕົ້ນຕໍ ດັ່ງນີ້:

1) ດ້ານນິຕິກຳ:

(1) ສະພາແຫ່ງຊາດ:

- ພິຈາລະນາຮັບຮອງກົດໝາຍ ຈຳນວນ 11 ສະບັບທີ່ຕິດພັນກັບວາລະແຫ່ງຊາດ ເປັນຕົ້ນ ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍວ່າດ້ວຍຊັບສິນຂອງລັດ, ກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍກ່ຽວກັບສ່ວຍສາອາກອນ (ອາກອນມູນຄ່າເພີ່ມ, ອາກອນລາຍໄດ້, ອາກອນຊົມໃຊ້), ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ.

- ມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການອະນຸມັດໃຫ້ລັດຖະບານເກັບພັນທະແບບມອບເໝົາສຳລັບໂຄງການຂຸດຄົ້ນ, ປຸງແຕ່ງ ແລະ ສົ່ງອອກແຮ່ເຫຼັກແບບທົດລອງ ສະບັບເລກທີ 196/ຄປຈ ລົງວັນທີ 30/7/2021;

- ມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາມາດຕະການຮັກສາສະຖຽນລະພາບຂອງລາຄານ້ຳມັນເຊື້ອໄຟ ໃນສະພາບລາຄານ້ຳມັນເຊື້ອໄຟເໜັງຕີງສູງ ສະບັບເລກທີ 103/ຄປຈ, ລົງວັນທີ 6/5/2022 ແລະ ສະບັບເລກທີ 168/ຄປຈ, ລົງວັນທີ 6/6/22 ໂດຍການປັບອັດຕາອາກອນຊົມໃຊ້ຂອງນ້ຳມັນເຊື້ອໄຟ;

- ມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການອະນຸມັດໃຫ້ລັດຖະບານ ມອບສິດໃຫ້ແກ່ທະນາຄານ ແຫ່ງ ສປປ ລາວ ໃນການສະໜັບສະໜູນການນຳເຂົ້ານ້ຳມັນເຊື້ອໄຟຈາກຕ່າງປະເທດ ສະບັບເລກທີ 195/ຄປຈ, ລົງວັນທີ 1/8/2022;

- ມະຕິຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການອະນຸມັດໃຫ້ລັດຖະບານ ຈັດຕັ້ງປະຕິບັດບ້ວງເງິນເກີນແຜນຂອງທ້ອງຖິ່ນ ປີ 2021 ແລະ ບ້ວງເງິນບຳເນັດຈາກການແກ້ໄຂລົດນຳເຂົ້າບໍ່ຖືກຕ້ອງ ສະບັບເລກທີ 245/ຄປຈ, ລົງວັນທີ 14/10/2022;

- ມະຕິຄະນະປະຈຳສະພາແຫ່ງຊາດວ່າດ້ວຍການຮັບຮອງແຜນແກ້ໄຂໜີ້ສິນໂຄງການລົງທຶນຂອງລັດ ດ້ວຍການອອກພັນທະບັດອ່ວຍໜີ້ 3 ແຈ ຈຳນວນ 8.000 ຕື້ກີບ ສະບັບເລກທີ 29/ຄປຈ ລົງວັນທີ 15/2/2023;

- ພິຈາລະນາຮັບຮອງເອົາການປັບປຸງລັດຖະບັນຍັດວ່າດ້ວຍລາຍການສິນຄ້າ ແລະ ອັດຕາພາສີຂາອອກ;

- ພິຈາລະນາຮັບຮອງເອົາການປັບປຸງລັດຖະບັນຍັດວ່າດ້ວຍອັດຕາຄ່າຊັບພະຍາກອນທຳມະຊາດ;

- ອອກຄຳແນະນຳ ສະບັບເລກທີ 04/ຄປຈ, ລົງວັນທີ 18/7/2022 ກ່ຽວກັບການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

(2) ລັດຖະບານ ໄດ້ອອກມະຕິ ສະບັບເລກທີ 07/ລບ, ລົງວັນທີ 04/10/2021 ວ່າດ້ວຍການແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ;

2) ຄວາມຄືບໜ້າການຈັດຕັ້ງປະຕິບັດ 5 ແຜນວຽກຈຸດສຸມ:

ອີງຕາມການລາຍງານຂອງລັດຖະບານ, ໄດ້ມີຄວາມພະຍາຍາມປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຕາມ 5 ແຜນວຽກຈຸດສຸມ ທີ່ໄດ້ກຳນົດໃນມະຕິສະພາແຫ່ງຊາດ ເຊິ່ງໄດ້ຍົກໃຫ້ເຫັນຕົວຊີ້ບອກຜົນສຳເລັດໃນຫຼາຍດ້ານ, ດັ່ງລາຍລະອຽດຕາມການລາຍງານຂອງລັດຖະບານ.

2. ບາງຂໍ້ສັງເກດ ແລະ ບັນຫາທີ່ຕັ້ງຂຶ້ນ

ຜ່ານການຮັບຟັງການລາຍງານຂອງລັດຖະບານ, ການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ ແລະ ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ, ຄະນະປະຈຳສະພາແຫ່ງຊາດ ມີບາງຄຳເຫັນ ດັ່ງນີ້:

2.1 ການປະຕິບັດຄາດໝາຍວາລະແຫ່ງຊາດ

ຜ່ານການຈັດຕັ້ງປະຕິບັດມາຮອດປະຈຸບັນ, ເຫັນວ່າຍັງບໍ່ທັນມີການປະເມີນຄວາມຄືບໜ້າການປະຕິບັດຄາດໝາຍວາລະແຫ່ງຊາດຢ່າງເປັນລະບົບຄົບຊຸດ ໂດຍສະເພາະການການປະຕິບັດຄາດໝາຍໜີ້ສິນສາທາລະນະ, ໜີ້ສິນຕ່າງປະເທດ, ໜີ້ສິນພາຍໃນ ແລະ ຄາດໝາຍສະຖຽນລະພາບດ້ານເງິນຕາ ຕາມທີ່ໄດ້ກຳນົດໃນມະຕິສະພາແຫ່ງຊາດ, ການປະຕິບັດຄາດໝາຍດັ່ງກ່າວເຖິງວ່າມາຮອດປັດຈຸບັນຍັງສາມາດປະຄັບປະຄອງບໍ່ໃຫ້ກ້າວສູ່ວິກິດ, ແຕ່ສັງເກດເຫັນວ່າມີຄວາມສ່ຽງທີ່ຈະບໍ່ບັນລຸໄດ້ຕາມແຜນ ເນື່ອງຈາກວ່າບັນຫາສະພາບໜີ້ສິນສາທາລະນະ, ພາວະເງິນຝືດ ແລະ ຂາດສະພາບຄ່ອງ ໃນລະບົບການເງິນງົບປະມານ ແລະ ພາວະເງິນເຟີ້ໃນລະບົບການເງິນ-ເງິນຕາ ຍັງມີທ່າອ່ຽງສືບຕໍ່ເປັນບັນຫາທ້າທາຍຫຼາຍຂຶ້ນ.

**ກ. ການຈັດຕັ້ງປະຕິບັດ 5 ແຜນວຽກຈຸດສຸມ ສັງເກດເຫັນວ່າ:**

ຕໍ່ກັບແຜນວຽກຈຸດສຸມທີ 1 ກ່ຽວກັບການສົ່ງເສີມການຜະລິດເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ

1) ຜະລິດທົດແທນການນຳເຂົ້າ;

(1)ສະເໜີໃຫ້ຄົ້ນຄວ້າໂຄງປະກອບສິນຄ້ານຳເຂົ້າ.

ອີງຕາມການລາຍງານເບື້ອງຕົ້ນຂອງສູນສະຖິຕິແຫ່ງຊາດ ເຫັນວ່າ:

- ໝວດຜະລິດພັນແຮ່ທາດ ແລະ ໄຟຟ້າ ມີມູນຄ່າ 1.409,7 ລ້ານໂດລາ, ກວມ 21% ຂອງການນຳເຂົ້າທັງໝົດ, ໃນນີ້:

+ ນ້ຳມັນກາຊວນ ມີມູນຄ່າ 1.025 ລ້ານໂດລາ, ກວມ 73% ຂອງການນຳເຂົ້າໃນໝວດຜະລິດຕະພັນແຮ່ທາດ ແລະ ໄຟຟ້າ ແລະ ກວມ 15% ຂອງການນຳເຂົ້າທັງໝົດ;

+ ນ້ຳມັນແອັດຊັງ ມີມູນຄ່າ 239 ລ້ານໂດລາ ກວມ 17% ຂອງການນຳເຂົ້າໃນໝວດຜະລິດຕະພັນແຮ່ ແລະ ໄຟຟ້າ ແລະ ກວມ 4% ຂອງການນຳເຂົ້າທັງໝົດ;

+ ໄຟຟ້າ ມີມູນຄ່າ 40 ລ້ານໂດລາ ກວມ 3% ຂອງການນຳເຂົ້າໃນໝວດຜະລິດຕະພັນແຮ່ ແລະ ໄຟຟ້າ ແລະ ກວມ 0,6% ຂອງການນຳເຂົ້າທັງໝົດ.

- ໝວດເຄື່ອງຈັກ ແລະ ອຸປະກອນໄຟຟ້າ ມີມູນຄ່າ 1.187 ລ້ານໂດລາ ກວມ 17% ຂອງການນຳເຂົ້າທັງໝົດ;

- ໝວດອາຫານ ແລະ ເຄື່ອງດື່ມ ມີມູນຄ່າ 728 ລ້ານໂດລາ ກວມ 11% ຂອງການນຳເຂົ້າທັງໝົດ;

- ໝວດຍານພາຫະນະ ມີມູນຄ່າ 609 ລ້ານໂດລາ ກວມ 9% ຂອງການນຳເຂົ້າທັງໝົດ;

- ໝວດຜະລິດຕະພັນອຸດສາຫະກຳເຄມີ ມີມູນຄ່າ 499 ລ້ານໂດລາ ກວມ 7% ຂອງການນຳເຂົ້າທັງໝົດ.

ດັ່ງນັ້ນ, ໃຫ້ມີການຄົ້ນຄວ້າຈະສາມາດຜະລິດມົດແທນການນຳເຂົ້າສິນຄ້າຊະນິດໃດ ແລະ ຫຼາຍປານໃດ?

(2) ສ້າງແຜນການຊຸກຍູ້ສົ່ງເສີມການຜະລິດຂອງຂະແໜງການຜະລິດທີ່ມີທ່າແຮງໄດ້ປຽບແທ້ຈິງ ເປັນຕົ້ນ ສະບຽງອາຫານ ແລະ ໄຟຟ້າ ໃຫ້ເປັນກິດຈະກຳທີ່ເປັນຮູບປະທຳ;

(3) ສະເໜີໃຫ້ມີການຄິດໄລ່ຄາດຄະເນຄວາມສາມາດຫຼຸດຜ່ອນຄວາມຕ້ອງການເງິນຕາທີ່ສາມາດທົດແທນການນຳເຂົ້າໄດ້ມີຈຳນວນຫຼາຍປານໃດ;

2) ການສົ່ງເສີມການສົ່ງອອກ ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ມີການຄົ້ນຄວ້າ ແລະ ສົ່ງເສີມການສົ່ງອອກຕາມ 3 ປະເພດ ດັ່ງນີ້:

(1) ການຜະລິດເພື່ອສົ່ງເສີມການສົ່ງອອກ:

- ໃຫ້ເອົາໃຈໃສ່ຄົ້ນຄວ້າ ແລະ ຄຸ້ມຄອງລາຍຮັບຈາກການສົ່ງອອກໃຫ້ສອດຄ່ອງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ມາດຕາ 12 ທີ່ໄດ້ກຳນົດວ່າ ຜູ້ສົ່ງອອກສິນຄ້າ ແລະ ການບໍລິການ ຕ້ອງໂອນລາຍຮັບທັງໝົດຈາກການສົ່ງອອກ ເຂົ້າມາ ສປປ ລາວ ຜ່ານບັນຊີເງິນຝາກສະເພາະ ຢູ່ ສປປ ລາວ. ຜ່ານການຈັດຕັ້ງປະຕິບັດລາຍຮັບເປັນເງິນຕາຕ່າງປະເທດຈາກການສົ່ງອອກ ໄລຍະ 5 ເດືອນຕົ້ນປີ 2023 ປະຕິບັດໄດ້ພຽງ 36%, ມະຕິສະພາແຫ່ງຊາດບໍ່ໃຫ້ຫຼຸດ 50% ຂອງມູນຄ່າສົ່ງອອກ; ໃຫ້ສຸມໃສ່ຜະລິດສິນຄ້າສົ່ງອອກທີ່ມີການປຸງແຕ່ງ, ມີຄວາມຍືນຍົງ ແລະ ມີມູນຄ່າເພີ່ມສູງ.

ອີງຕາມບົດລາຍງານຂອງສູນສະຖິຕິແຫ່ງຊາດ ໄດ້ຍົກໃຫ້ເຫັນວ່າ:

+ ການສົ່ງອອກປີ 2018-2022, ໝວດແຮ່ທາດ ແລະ ໄຟຟ້າກວມປະມານ 40% ຂອງການສົ່ງອອກທັງໝົດ, ສະເພາະປີ 2022 ການສົ່ງອອກ ແຮ່ທາດກວມປະມານ 16,5%, ຜະລິດຕະພັນຝືດກວມ 11% ຂອງການສົ່ງອອກທັງໝົດ, ໃນນັ້ນ ໝາກກ້ວຍກວມ 21,2%, ມັນຕົ້ນກວມ 34% ຂອງການສົ່ງອອກກະສິກຳ.

ເຫັນວ່າການສົ່ງອອກແຮ່ທາດ, ໝາກກ້ວຍ ແລະ ມັນຕົ້ນຍັງມີຄວາມສ່ຽງກ່ຽວກັບຄວາມຍືນຍົງໃນອະນາຄົດ.

(1) ການສົ່ງອອກຜ່ານ (Re export)

ອີງຕາມການຄົ້ນຄວ້າ ແລະ ການລາຍງານເບື້ອງຕົ້ນຂອງສູນສະຖິຕິແຫ່ງຊາດ ເຫັນວ່າ:

- ມູນຄ່າສົ່ງອອກທັງໝົດໃນປີ 2022 ປະມານ 8 ພັນກວ່າລ້ານໂດລາສະຫາລັດ, ໃນນັ້ນ ການສົ່ງອອກຈາກການສົ່ງອອກຜ່ານປະເທດເຮົາ (Re export) ປະມານ 2 ພັນກວ່າລ້ານໂດລາສະຫາລັດ ກວມ 27% ຂອງການສົ່ງອອກທັງໝົດ;

- ການສົ່ງອອກສິນຄ້າຜ່ານປະເທດພວກເຮົາມີທ່າອ່ຽງເພີ່ມຢ່າງຕໍ່ເນື່ອງຈາກ 12% ຂອງການສົ່ງອອກທັງໝົດໃນປີ 2018 ມາເປັນ 14% ໃນປີ 2019 ແລະ ເປັນ 30% ໃນປີ 2021 ແລະ ເປັນ 27% ໃນປີ 2022;

-ສິນຄ້າທີ່ສົ່ງອອກຜ່ານປະເທດພວກເຮົາສ່ວນຫຼາຍ

ອ່ານຕໍ່ໜ້າ 14...

## ບົດລາຍງານ...

(ຕໍ່ຈາກໜ້າ 13)

ແມ່ນຜະລິດຕະພັນເຊັ່ນ: ເຄື່ອງດື່ມທີ່ບໍ່ທາດເຫຼົ້າ (ກະທິງແດງ, ປະເພດນົມ ແລະ ນໍ້າໝາກໄມ້), ນໍ້າຕານ, ສັດ, ເຄື່ອງໄຫລະສັບ ແລະ ສິນຄ້າບໍລິໂພກ, ອຸປະໂພກ ອື່ນໆ;

- ການສົ່ງອອກສິນຄ້າທີ່ສົ່ງອອກຜ່ານປະເທດພວກເຮົາ ສ່ວນຫຼາຍແມ່ນສົ່ງໄປ ສປ ຈີນ ກວມເອົາ 30.4%, ຮອງລົງມາແມ່ນ ສສ.ຫວຽດນາມ 26.7% ແລະ ໄທ ກວມເອົາ 12.6%.

(1) ການສົ່ງອອກກັບທີ່ໝາຍເຖິງການສ້າງລາຍຮັບຢູ່ພາຍໃນປະເທດເປັນເງິນຕາຕ່າງປະເທດ ເປັນຕົ້ນ:

- ການທ່ອງທ່ຽວ: ສ້າງລາຍຮັບໄດ້ ໃນປີ 2022 ມູນຄ່າ 537,54 ລ້ານໂດລາສະຫະລັດ;

- ການຄ້າຊາຍແດນ;

- ກິດຈະກຳທີ່ມີລາຍຮັບເປັນເງິນຕາຕ່າງປະເທດ ໂດຍສະເພາະເຂດເສດຖະກິດພິເສດ, ການບິນຜ່ານ ແລະ ອື່ນໆ.

ດັ່ງນັ້ນ, ສະເໜີໃຫ້ມີການຄົ້ນຄວ້າ ແລະ ຊຸກຍູ້ສົ່ງເສີມລາຍຮັບຈາກການສົ່ງອອກປະເພດດັ່ງກ່າວ.

**ຂ. ຕໍ່ກັບແຜນວຽກຈຸດສຸມທີ 2 ກ່ຽວກັບການສ້າງຄວາມເຂັ້ມແຂງທາງດ້ານການເກັບລາຍຮັບເຂົ້າງົບປະມານ**

ສ້າງຄວາມເຂັ້ມແຂງດ້ານລາຍຮັບ ຈຸດປະສົງແມ່ນສຸມໃສ່ການສ້າງລາຍຮັບໃຫ້ໄດ້ຫຼາຍຂຶ້ນ. ຄະນະປະຈຳສະພາແຫ່ງຊາດ ສະເໜີໃຫ້ເອົາໃຈໃສ່ຕື່ມດັ່ງນີ້:

- ຊຸກຍູ້ໃຫ້ເສດຖະກິດເຕີບໂຕຕາມແຜນການເພື່ອຂະຫຍາຍຖານລາຍຮັບໃຫ້ກວ້າງອອກ;

- ຫັນເປັນທັນສະໄໝການເກັບລາຍຮັບເພື່ອສາມາດເກັບລາຍຮັບໃຫ້ໄດ້ຄົບຖ້ວນ ທຽບ GDP ສາມາດປະຕິບັດໄດ້ຕາມມະຕິສະພາ ຄື 16,42%, ອີງຕາມການລາຍງານຂອງກະຊວງການເງິນ ລາຍຮັບພາຍໃນ 5 ເດືອນຕົ້ນປີ ປະຕິບັດໄດ້ພຽງ 6,47% ຂອງ GDP;

- ສຸມໃສ່ເກັບລາຍຮັບຈາກໂຄງການທົດລອງແຮ່ເຫຼັກ ແລະ ເງິນຄຣິບໂຕ ໃຫ້ໄດ້ຕາມແຜນ 2000 ຕື້ກີບ;

- ສຸມໃສ່ເກັບລາຍຮັບຈາກການແກ້ໄຂຜົນການກວດສອບ ແລະ ກວດກາໃຫ້ໄດ້ຕາມແຜນ;

- ຄຸ້ມຄອງ ແລະ ຂະຫຍາຍຖານລາຍຮັບໃນລະບົບເສດຖະກິດທີ່ບໍ່ເປັນທາງການ (Informal Sector) ໃຫ້ເຂົ້າສູ່ລະບົບຖານລາຍຮັບທາງການໃຫ້ໄດ້ຫຼາຍຂຶ້ນ;

**ຄ. ຕໍ່ກັບແຜນວຽກຈຸດສຸມທີ 3 ກ່ຽວກັບການສົ່ງເສີມການປະຢັດ, ຕ້ານການຟຸມເຟືອຍ, ຍົກສູງປະສິດທິຜົນການຄຸ້ມຄອງລາຍຈ່າຍງົບປະມານໃນການແກ້ໄຂໜີ້ສິນ ແລະ ຕ່າງປະເທດ**

ທາງດ້ານລາຍຈ່າຍ, ຈຸດປະສົງແມ່ນເພື່ອໃຫ້ການປະຕິບັດແຜນລາຍຈ່າຍງົບປະມານໃຫ້ມີປະສິດທິພາບ ແລະ ປະສິດທິຜົນ. ສະເໜີໃຫ້ເອົາໃຈໃສ່ຕື່ມ ດັ່ງນີ້:

- ສ້າງແຜນແກ້ໄຂໜີ້ສິນສາທາລະນະສຳລັບໄລຍະການປະຕິບັດວາລະແຫ່ງຊາດໃຫ້ຊັດເຈນ ໂດຍສະເພາະກຳນົດຄາດໝາຍ ແລະ ມາດຕະການຈັດຕັ້ງປະຕິບັດໃຫ້ເປັນຮູບປະທຳ, ໃນນີ້ ສະເໜີໃຫ້ເອົາໃຈໃສ່ແກ້ໄຂບັນຫາໜີ້ສິນທີ່ເນື່ອງມາຈາກການລະເມີດ ຫຼື ບໍ່ສາມາດປະຕິບັດບາງມາດຕາຂອງກົດໝາຍວ່າດ້ວຍງົບປະມານ, ກົດໝາຍວ່າດ້ວຍໜີ້ສິນສາທາລະນະ ແລະ ກົດໝາຍວ່າດ້ວຍການລົງທຶນຂອງລັດໃຫ້ເຂັ້ມງວດ ແລະ ມີຜົນສັກສິດ;

- ໃຫ້ມີການຄົ້ນຄວ້າປະເມີນປະສິດທິພາບ, ປະສິດທິຜົນ ການໃຊ້ຈ່າຍງົບປະມານຂອງລັດທັງບ້ວງບໍລິຫານ, ການລົງທຶນພາຍໃນ, ການຊ່ວຍເຫຼືອ ແລະ ການກູ້ຢືມຈາກຕ່າງປະເທດ ແລະ ຖອດຖອນບົດຮຽນທີ່ດີສຳລັບແຜນການລົງທຶນຂອງລັດໃນຕໍ່ໜ້າ;

- ການສ້າງແຜນລາຍຈ່າຍງົບປະມານລົງທຶນໃຫ້ຮັບປະກັນການຕອບສະໜອງບູລິມະສິດທີ່ແທ້ຈິງຂອງແຜນພັດທະນາເສດຖະກິດ-ສັງຄົມ;

**ງ. ຕໍ່ກັບແຜນວຽກຈຸດສຸມທີ 4 ກ່ຽວກັບການຮັກສາສະຖຽນລະພາບດ້ານເງິນຕາ**

ສະເໜີໃຫ້ເອົາໃຈໃສ່ແກ້ໄຂບັນຫາເງິນເຟີ້ທີ່ເປັນບັນຫາເຄັ່ງຮ້ອນ ໃນປັດຈຸບັນດ້ວຍການຄົ້ນຄວ້າ ແລະ ປະຕິບັດລະບົບມາດຕະການທີ່ຄົບຊຸດ ດັ່ງນີ້:

1) ມາດຕະການທາງດ້ານເງິນຕາ:

- ຄົ້ນຄວ້ານະໂຍບາຍນຳໃຊ້ປະລິມານເງິນ M2 ທີ່ເພີ່ມຂຶ້ນ ເພື່ອຊຸກຍູ້ສົ່ງເສີມການຜະລິດທຸລະກິດໃຫ້ຂະຫຍາຍຕົວ ກໍຄື ຊຸກຍູ້ການເຕີບໂຕຂອງເສດຖະກິດ;

- ຄຸ້ມຄອງອັດຕາແລກປ່ຽນເຮັດໃຫ້ເງິນກີບແຂງຄ່າຂຶ້ນ ດ້ວຍການປະຕິບັດກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດໃຫ້ເຂັ້ມງວດ ແລະ ມີຜົນສັກສິດ.

2) ມາດຕະການດ້ານການເງິນ-ງົບປະມານ ດ້ວຍການຄົ້ນຄວ້າ ແລະ ປະຕິບັດນະໂຍບາຍຜ່ອນຜັນພາສີອາກອນຕາມກໍລະນີ ແລະ ຕາມຄວາມເໝາະສົມ, ນະໂຍບາຍງົບປະມານລົງທຶນ ເພື່ອຊຸກຍູ້ສົ່ງເສີມການຜະລິດ ແລະ ຊຸກຍູ້ການເຕີບໂຕເສດຖະກິດ;

3) ມາດຕະການສົ່ງເສີມການຜະລິດເພື່ອຕອບສະໜອງຄວາມຕ້ອງການຕະຫຼາດພາຍໃນໃຫ້ພຽງພໍໂດຍສະເພາະສະບຽງອາຫານ, ໄຟຟ້າ, ນໍ້າປະປາ, ພາຫະນະຂົນສົ່ງ ແລະ ເຄື່ອງໃຊ້ສອຍຮັບໃຊ້ຊີວິດປະຈຳວັນຂອງປະຊາຊົນ;

4) ມາດຕະການດ້ານການຄ້າ ດ້ວຍການຄົ້ນຄວ້າ ແລະ ປະຕິບັດມາດຕະການດັດສົມສິນຄ້ານຳເຂົ້າ-ສົ່ງອອກ,ລາຄາສິນຄ້າຍຸດທະສາດ ແລະ ສິນຄ້າທີ່ຈຳເປັນຕໍ່ຄ່າຄອງຊີບ ແລະ ຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນກວ່າເກົ່າ;

5) ມາດຕະການດ້ານຈິດຕະສາດສັງຄົມ ໂດຍສະເພາະວຽກການໂຄສະນາ, ຊຸກຍູ້ສົ່ງເສີມໃຫ້ປະຊາຊົນນຳໃຊ້ຜະລິດຕະພັນພາຍໃນ ແລະ ເງິນກີບ.

**ຈ. ຕໍ່ກັບແຜນວຽກຈຸດສຸມທີ 5 ກ່ຽວກັບການຍົກສູງປະສິດທິພາບການຄຸ້ມຄອງລັດ, ຄຸ້ມຄອງສັງຄົມດ້ວຍກົດໝາຍ**

ສະເໜີໃຫ້ເອົາໃຈໃສ່ປະຕິບັດກົດໝາຍທີ່ພົວພັນກັບວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ, ໃນນັ້ນ ສະເໜີໃຫ້ເອົາໃຈໃສ່ປະຕິບັດບັນດາມາດຕາທີ່ໄດ້ກຳນົດກ່ຽວກັບຂໍ້ຫ້າມ ແລະ ຜົນສັກສິດໃນການຈັດຕັ້ງປະຕິບັດກົດໝາຍເປັນຕົ້ນ: ກົດໝາຍວ່າດ້ວຍໜີ້ສິນສາທາລະນະ, ກົດໝາຍວ່າດ້ວຍການລົງທຶນຂອງລັດ, ກົດໝາຍວ່າດ້ວຍງົບປະມານແຫ່ງລັດ, ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ.

1.1 ຕໍ່ກັບມາດຕະການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ

ສະເໜີໃຫ້ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍ 14 ມາດຕະການທີ່ໄດ້ກຳນົດໃນມະຕິດັ່ງກ່າວໃຫ້ມີຄວາມຄືບໜ້າຫຼາຍຂຶ້ນ ເປັນຕົ້ນມາດຕະການປະຕິຮູບລັດວິສາຫະກິດ ແລະ ໂຄງການທົດລອງແຮ່ທາດສຳລັບໄລຍະການທົດລອງປະຕິບັດວາລະແຫ່ງຊາດໃຫ້ສາມາດສະຫຼຸບໄດ້ໃນທ້າຍປີ 2023.

1.2 ຕໍ່ກັບການປະຕິບັດ 3 ຫຼັກການຂອງວາລະແຫ່ງຊາດ ໂປ່ງໃສ, ເດັດຂາດ ແລະ ເປັນມືອາຊີບ.

ສະເໜີໃຫ້ສືບຕໍ່ປະຕິບັດໃຫ້ເປັນຮູບປະທຳຫຼາຍຂຶ້ນ, ໂດຍສະເພາະການປະຕິບັດຫຼັກການເປັນມືອາຊີບທີ່ມີລັກສະນະວິທະຍາສາດ ເພື່ອຮັບປະກັນປະສິດທິພາບ, ຄຸນນະພາບ ແລະ ປະສິດທິຜົນໃນການຈັດຕັ້ງປະຕິບັດວາລະແຫ່ງຊາດໃຫ້ບັນລຸໄດ້ຕາມແຜນ.

**III. ພາກທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023**

ຄະນະປະຈຳສະພາແຫ່ງຊາດ ເຫັນດີເປັນເອກະພາບຕໍ່ການສະເໜີຂອງລັດຖະບານ, ເຖິງຢ່າງໃດກໍຕາມ ສະເໜີໃຫ້ລັດຖະບານເອົາໃຈໃສ່ບາງຈຸດດັ່ງນີ້:

- ສຸມໃສ່ສືບຕໍ່ປະຕິບັດບັນດາຄາດໝາຍ, ແຜນວຽກຈຸດສຸມ ແລະ ມາດຕະການທີ່ໄດ້ກຳນົດໃນມະຕິກອງປະຊຸມສະພາແຫ່ງຊາດວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນໃຫ້ບັນລຸຕາມແຜນ;

- ຈັດກອງປະຊຸມສຳມະນາວິທະຍາສາດ ເພື່ອສະຫຼຸບຖອດຖອນບົດຮຽນ, ສະເໜີວິທີທີ່ດີຄວນສືບຕໍ່ຊຸກຍູ້ສົ່ງເສີມ ແລະ ບົດຮຽນທີ່ຄວນມີການປ່ຽນແປງທີ່ດີຂຶ້ນໃນການຈັດຕັ້ງປະຕິບັດວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ;

- ກະກຽມສະຫຼຸບຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ແລະ ທິດທາງແຜນການໃນຕໍ່ໜ້າ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX.

# ຖະແຫຼງຜົນສຳເລັດ ການພິຈາລະນາວຽກງານ ຂອງລັດຖະບານ

ໃນວັນທີ 11 ກໍລະກົດ 2023 ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ໄດ້ຖະແຫລງຂ່າວຕໍ່ສື່ມວນຊົນວ່າ: ຂ້າພະເຈົ້າຂໍຖືເປັນກຽດຕາງໜ້າໃຫ້ ຄະນະປະຈຳສະພາແຫ່ງຊາດ ຖະແຫຼງຂ່າວກ່ຽວກັບ ຜົນການພິຈາລະນາວຽກງານຂອງລັດຖະບານ ໃນການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023 ແລະ ຄວາມຄືບໜ້າ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກດ້ານເສດຖະກິດ-ການເງິນ ຕໍ່ບັນດາທ່ານ ພະນັກງານ-ລັດຖະກອນ, ທະຫານ-ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ແລະ ພໍ່ແມ່ພີ່ນ້ອງຊາວລາວທີ່ ຢູ່ຕ່າງປະເທດ ໄດ້ຮັບຊາບຢ່າງທົ່ວເຖິງ.



ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ໄຂຂຶ້ນຢ່າງເປັນທາງການ ແຕ່ວັນທີ 26 ມິຖຸນາ 2023 ແລະ ຈະສືບຕໍ່ດຳເນີນໄປຈົນຮອດ ວັນທີ 18 ກໍລະກົດ 2023, ເຊິ່ງໃນວາລະທຳອິດ ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີ ໄດ້ລາຍງານ ໂດຍສັງເຂບກ່ຽວກັບສະພາບພົ້ນເດັ່ນ ໃນການຈັດຕັ້ງປະຕິບັດ ແຜນພັດທະນາ ເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ ແລະ ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023, ພ້ອມກັນນັ້ນ ກອງປະຊຸມ ຍັງໄດ້ຮັບຟັງ:

-ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023; ທິດທາງການລົງທຶນຂອງລັດ ປະຈຳປີ 2024 ຂອງທ່ານ ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ;

- ບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນງົບປະມານແຫ່ງລັດ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງທ່ານລັດຖະມົນຕີກະຊວງການເງິນ;

-ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດ ແຜນການເງິນຕາ 6 ເດືອນຕົ້ນປີ ແລະ ແຜນການ 6 ເດືອນທ້າຍປີ 2023 ຂອງທ່ານ ຜູ້ວ່າການທະນາຄານແຫ່ງ ສປປ ລາວ.

ພາຍຫຼັງທີ່ກອງປະຊຸມໄດ້ຮັບຟັງ ການລາຍງານຈາກລັດຖະບານແລ້ວ ຂ້າພະເຈົ້າໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນ ແລະ ບັນດາທ່ານ ສະມາຊິກສະພາແຫ່ງຊາດ ຊຸດທີ IX, ນຳເອົາບັນຫາທີ່ສຳຄັນເຄັ່ງຮ້ອນຕ່າງໆ ຢູ່ເຂດເລືອກຕັ້ງຂອງຕົນ ມາສະເໜີຕໍ່ລັດຖະບານ ໂດຍຕັ້ງເປັນຄຳຊັກຖາມ ເພື່ອຊອກຫາວິທີການ, ມາດຕະການແກ້ໄຂ. ຕໍ່ຄຳເຫັນ ແລະ ຄຳຊັກຖາມ ຂອງສະມາຊິກສະພາແຫ່ງຊາດ ມທັງໝົດ 58 ເທື່ອຄົນ, ໃນນັ້ນ ມີຍິງ 12 ເທື່ອຄົນ; ບັນດາທ່ານສະມາຊິກລັດຖະບານ ກໍໄດ້ເອົາໃຈໃສ່ລາຍງານ, ຊີ້ແຈງດ້ວຍການໃຫ້ຄຳໝັ້ນສັນຍາ ໃນການແກ້ໄຂບັນຫາຕ່າງໆ. ທ່ານນາຍົກລັດຖະມົນຕີ ໃນນາມຫົວໜ້າລັດຖະບານ ກໍໄດ້ມີຄວາມເຫັນອະທິບາຍ, ຊີ້ແຈງບັນຫາຕ່າງໆ ເພື່ອສ້າງຄວາມເຂົ້າໃຈ, ຄວາມເຊື່ອໝັ້ນ ໃຫ້ພະນັກງານ, ທະຫານ, ຕຳຫຼວດ ກໍຄືປະຊາຊົນບັນດາເຜົ່າ ຕໍ່ການບໍລິຫານລັດຂອງລັດຖະບານ ແລະ ການແກ້ໄຂບັນຫາຕ່າງໆ ໃນຕໍ່ໜ້າ. ຫຼັງຈາກນັ້ນ ທ່ານປະທານສະພາແຫ່ງຊາດ ກໍໄດ້ມີຄວາມເຫັນສະຫຼຸບ. ສະນັ້ນ, ຂ້າພະເຈົ້າ ຂໍສັງລວມບາງເນື້ອໃນທີ່ພົ້ນເດັ່ນ ດັ່ງນີ້:

**I. ຕໍ່ກັບການຈັດຕັ້ງປະຕິບັດ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ 6 ເດືອນຕົ້ນປີ 2023 ແລະ ທິດທາງແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023.**

1. ໃນການປະຕິບັດແຜນ 6 ເດືອນຕົ້ນປີ 2023

1) ຮັກສາໄດ້ສະຖຽນລະພາບທາງດ້ານການເມືອງໝັກແໜ້ນ, ເສດຖະກິດສືບຕໍ່

ອ່ານຕໍ່ໜ້າ 15...

## ຜົນສຳເລັດ...

(ຕໍ່ຈາກໜ້າ 14)

ເຕີບໂຕຕໍ່ເນື່ອງ, ສັງຄົມມີຄວາມສະຫງົບ ແລະ ມີຄວາມເປັນລະບຽບຮຽບຮ້ອຍ;

2) ລວມຍອດຜະລິດຕະພັນພາຍໃນ (GDP) ຂະຫຍາຍຕົວ ໃນລະດັບ 4,8% (ມະຕິສະພາ 4,5% ຂຶ້ນໄປ), ຂະແໜງກະສິກຳ ຂະຫຍາຍຕົວ 3,8% (ມະຕິສະພາ 2,5%) ແລະ ຂະແໜງບໍລິການ ຂະຫຍາຍຕົວ 5,6% (ມະຕິສະພາ 4,7%);

3) ການປະຕິບັດແຜນລາຍຮັບງົບປະມານ ຄາດຄະເນ 6 ເດືອນຕົ້ນປີ ຈະປະຕິບັດໄດ້ 18.424 ຕື້ກີບ ເທົ່າກັບ 48% ຂອງແຜນການປີ ທຽບໃສ່ GDP ໄດ້ 15,55% (ມະຕິສະພາແຫ່ງຊາດ 16,42%). ໃນນັ້ນ ລາຍຮັບພາຍໃນ ປະຕິບັດໄດ້ 14.848 ຕື້ກີບ ເທົ່າກັບ 43% ຂອງແຜນການປີ ຫຼື ເທົ່າກັບ 6,43% ຂອງ GDP; ແຕ່ຍ້ອນການຜັນຜວນ ຂອງອັດຕາແລກປ່ຽນ, ເງິນເຟີ້ເພີ່ມສູງ, ເງິນກີບອ່ອນຄ່າ ແລະ ສາເຫດອື່ນ ເຮັດໃຫ້ຄວາມສາມາດການຊື້ຂອງເງິນກີບຫຼຸດລົງ ເຊິ່ງໄດ້ສົ່ງຜົນກະທົບຕໍ່ການພັດທະນາເສດຖະກິດ-ສັງຄົມ ກໍຄືຊີວິດການເປັນຢູ່ ຂອງປະຊາຊົນບັນດາເຜົ່າ, ພະນັກງານ-ລັດຖະກອນ,ທະຫານ ແລະ ຕຳຫຼວດ;

4) ໄດ້ຄຸ້ມຄອງເງິນຕາຕ່າງປະເທດ ດ້ວຍການແກ້ໄຂຮ້ານແລກປ່ຽນນອກລະບົບ, ປັບປຸງຖານຂໍ້ມູນສະຖິຕິທະນາຄານ, ໃນ 6 ເດືອນຕົ້ນປີ 2023 ຄັງສຳຮອງເງິນຕາຕ່າງປະເທດເພີ່ມຂຶ້ນ ກຸ້ມການນຳເຂົ້າໄດ້ 4 ເດືອນ (ມະຕິສະພາ ບໍ່ໃຫ້ຫຼຸດ 3 ເດືອນ);

5) ດຸນການຄ້າເກີນດຸນ 998,26 ລ້ານໂດລາສະຫະລັດ ເທົ່າກັບ 88,73% ຂອງແຜນການ (ມະຕິສະພາ 1.125 ລ້ານໂດລາສະຫະລັດ), ໃນນັ້ນ ອັນພົ້ນເດັ່ນກວ່າໝູ່ ແມ່ນການສົ່ງອອກຜະລິດກະສິກຳ-ປ່າໄມ້ ປະຕິບັດໄດ້ 1.089 ລ້ານໂດລາສະຫະລັດ ເທົ່າກັບ 90,75% ຂອງແຜນການ(ມະຕິສະພາ 1.200 ລ້ານໂດລາສະຫະລັດ);

6) ການປະຕິບັດຄາດໝາຍໃນຂົງເຂດ ວັດທະນະທຳ-ສັງຄົມ ມີຄວາມຄືບໜ້າໃນຫຼາຍຄາດໝາຍ ເປັນຕົ້ນ ອັດຕາເຂົ້າຮຽນຂອງເດັກອາຍຸ 5 ປີ ເຂົ້າໃໝ່ ປ. 1 ເພີ່ມຂຶ້ນ, ອັດຕາການຕາຍຂອງແມ່ ແລະ ເດັກ, ວຽກງານໂພຊະນາການ, ການດຶງດູດນັກທ່ອງທ່ຽວຕ່າງປະເທດ ເຂົ້າມາທ່ອງທ່ຽວ ໃນ ສປປ ລາວ ມີຈຳນວນເພີ່ມຂຶ້ນ;

ຄຽງຄູ່ກັນນັ້ນ, ກອງປະຊຸມເຫັນວ່າ ຍັງມີຫຼາຍບັນຫາ ທີ່ເປັນອຸປະສັກ ແລະ ສິ່ງທ້າທາຍ ທີ່ລັດຖະບານຈະຕ້ອງໄດ້ສືບຕໍ່ແກ້ໄຂ ເປັນຕົ້ນ: ບັນຫາອັດຕາເງິນເຟີ້, ການຜັນຜວນຂອງອັດຕາແລກປ່ຽນ ແລະ ລາຄາສິນຄ້າເຄື່ອງອຸປະໂພກ ແລະ ບໍລິໂພກ ທີ່ເພີ່ມຂຶ້ນສູງ, ການທຳລາຍປ່າໄມ້-ຈູດປ່າ, ສະພາບການຂາດເຂີນແຮງງານ, ການຫວ່າງງານ ແລະ ຜົນກະທົບ ຕໍ່ປະຊາຊົນ ຈາກໂຄງການພັດທະນາຕ່າງໆ.

### 2. ຕໍ່ທິດທາງ ແຜນວຽກຈຸດສຸມ 6 ເດືອນທ້າຍປີ 2023

1) ສະພາແຫ່ງຊາດ ມອບໃຫ້ລັດຖະບານ ສຸມໃສ່ປະຕິບັດ ຄາດໝາຍ ຂອງແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ, ແຜນເງິນຕາ ແລະ ວາລະແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ທີ່ໄດ້ກຳນົດໃນມະຕິກອງປະຊຸມສະພາແຫ່ງຊາດ ສຳລັບປີ 2023 ໃຫ້ບັນລຸຕາມແຜນດ້ວຍການຈັດຕັ້ງປະຕິບັດບັນດາມາດຕະການທີ່ໄດ້ກຳນົດໃຫ້ເຂັ້ມງວດ. ໂດຍສະເພາະ ສຸມໃສ່ແກ້ໄຂບັນຫາທີ່ເຄັ່ງຮ້ອນດ້ານເສດຖະກິດ-ສັງຄົມ ໃນປະຈຸບັນ ເປັນຕົ້ນ: ແກ້ໄຂບັນຫາເງິນເຟີ້ ແລະ ລາຄາສິນຄ້າ ທີ່ກະທົບຕໍ່ຊີວິດການເປັນຢູ່ຂອງພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ປະຊາຊົນບັນດາເຜົ່າ;

2) ສົ່ງເສີມການລົງທຶນພາຍໃນ ແລະ ຕ່າງປະເທດ ຢ່າງຈິງຈັງ ເພື່ອດຶງດູດການລົງທຶນທີ່ມີຄຸນນະພາບ, ສ້າງວຽກເຮັດງານທຳ, ຄຸ້ມຄອງການນຳເຂົ້າທຶນຕົວຈິງ ຂອງການລົງທຶນໃຫ້ຜ່ານລະບົບທະນາຄານພາຍໃນປະເທດ ປະກອບສ່ວນເກັບລາຍຮັບ ເຂົ້າງົບປະມານແຫ່ງລັດ ໃຫ້ເພີ່ມຂຶ້ນ; ແກ້ໄຂບັນຫາການອະນຸມັດພື້ນທີ່ທັບຊ້ອນຂອງໂຄງການຂຸດຄົ້ນແຮ່ທາດ, ການຄ້າງຊຳລະຄ່າເຊົ່າ-ສຳປະທານ, ໂຄງການລົງທຶນທີ່ບໍ່ມີຕົວຕົນ; ປະເມີນຜົນກະທົບດ້ານເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ພື້ນທີ່ທຳການຜະລິດຂອງປະຊາຊົນ ທີ່ຕິດພັນກັບການເຊົ່າສຳປະທານທີ່ດິນ;

3) ເອົາໃຈໃສ່ຈັດເກັບລາຍຮັບ ຈາກຖານລາຍຮັບ ທີ່ມີຢູ່ໃນປະຈຸບັນ ແລະ ຖານລາຍຮັບໃໝ່ ໃຫ້ຄົບຖ້ວນ, ຂຸດຄົ້ນຖານລາຍຮັບໃໝ່ ແລະ ການນຳໃຊ້ເຄື່ອງມືທັນສະໄໝທັນເປັນດີຈິຕອນ ໃນການຄຸ້ມຄອງເກັບລາຍຮັບ ໃຫ້ລວມສູນ ແລະ ຄົບຖ້ວນ; ເອົາໃຈໃສ່ປະຕິບັດລາຍຈ່າຍ ໃຫ້ໄປຕາມແຜນ, ຕ້ານການຮົ່ວໄຫຼ ແລະ ປະຢັດມັດທະຍັດ;

4) ເອົາໃຈໃສ່ຊຸກຍູ້ສົ່ງເສີມ ການຜະລິດກະສິກຳ ແລະ ອຸດສາຫະກຳປຸງແຕ່ງຜະລິດຕະພັນກະສິກຳ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກໃຫ້ແຂງແຮງ, ຮີບຮ້ອນກວດກາ ປະເມີນຄືນຄວາມຕ້ອງການຂອງການຊົມໃຊ້ ແລະ ສິນຄ້າທີ່ສາມາດຜະລິດໄດ້ຢູ່ພາຍໃນ ໂດຍມີມາດຕະການຄຸ້ມຄອງ ຈຳກັດການນຳເຂົ້າສິນຄ້າ ທີ່ມີທ່າແຮງ ແລະ ສາມາດຜະລິດໄດ້ພາຍໃນ ຢ່າງເຂັ້ມງວດ, ເອົາໃຈໃສ່ຄົ້ນຄວ້າກຳນົດນະໂຍບາຍທາງດ້ານສິນເຊື່ອທະນາຄານ ແລະ ອາກອນ ເພື່ອສົ່ງເສີມການຜະລິດ ເປັນຕົ້ນ ແນວພັນພືດ, ແນວພັນສັດ, ຝຸ່ນ, ປຸ໋ຍ, ອາຫານສັດ, ເຄື່ອງມື ແລະ ພາຫະນະກົນຈັກການກະເສດ ໃຫ້ຊາວກະສິກອນ ກຸ້ມຕົນເອງໃນການຜະລິດ ແລະ ມີການຈັດຕັ້ງກຸ່ມສະຫະກອນການຜະລິດ ຕາມຮູບແບບເສດຖະກິດລວມໝູ່;

5) ຕິດຕາມກວດກາໂຄງການລົງທຶນຂອງລັດ ໂດຍສະເພາະ ໂຄງການກໍ່ສ້າງເສັ້ນທາງ ໃຫ້ມີຄຸນນະພາບສູງ, ຕິດຕາມ ກວດກາ ຄຸ້ມຄອງນ້ຳໜັກລົດບັນທຸກ ໃຫ້ປະຕິບັດຕາມກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ, ຮີບຮ້ອນຈ່າຍຄ່າຊົດເຊີຍໃຫ້ປະຊາຊົນຜູ້ທີ່ຖືກຜົນກະທົບຈາກໂຄງການລົງທຶນ ແລະ ໂຄງການກໍ່ສ້າງໃຫ້ສຳເລັດໂດຍໄວ, ສ້ອມແປງເສັ້ນທາງຮ່ອມ, ທາງເວັ້ນ, ທາງລອດຂົວ ແລະ ອຸມົງ ເຂົ້າຫາບ້ານ, ທີ່ດິນທຳການຜະລິດຂອງປະຊາຊົນ ທີ່ໄດ້ຮັບຜົນເສຍຫາຍຈາກການກໍ່ສ້າງໂຄງການດັ່ງກ່າວໃຫ້ສຳເລັດ ແລະ ນຳໃຊ້ໄດ້ທັງສອງລະດູ;

6) ຮີບຮ້ອນຄົ້ນຄວ້າພິຈາລະນາຄືນ ການປັບປຸງໂຄງສ້າງລາຄາໄຟຟ້າ ຢູ່ໃນພາກອຸດສາຫະກຳ ແລະ ພາກຄົວເຮືອນ ໂດຍສະເພາະ ຫົວໜ່ວຍທຸລະກິດຂະໜາດນ້ອຍ-ກາງ ເພື່ອສົ່ງເສີມ ແລະ ດຶງດູດການລົງທຶນ, ຮີບຮ້ອນປະເມີນຜົນຈາກໂຄງການຊອກຄົ້ນ, ສຳຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ແລະ ມີມາດຕະການທີ່ເຂັ້ມງວດ ໃນການຄຸ້ມຄອງ, ການເກັບລາຍຮັບເຂົ້າງົບປະມານ, ການອະນຸຍາດກິດຈະການແຮ່ທາດ ໃຫ້ໄປຕາມກົດໝາຍທີ່ກຳນົດໄວ້, ຄົ້ນຄວ້າໃຫ້ໂຈະ ແລະ ຢຸດເຊົາ ໂຄງການບໍ່ມີປະສິດທິພາບປະສິດທິຜົນ;

7) ແກ້ໄຂບັນຫາເຄັ່ງຮ້ອນທາງດ້ານສັງຄົມ ເປັນຕົ້ນ (1) ບັນຫາຢາເສບຕິດ-ປຸ້ນຈີ້-ອຸປະຕິເຫດຕາມທ້ອງຖະໜົນ; (2) ການສ້າງວຽກເຮັດງານທຳ, ການສະໜອງ ແລະ ຄວາມຕ້ອງການແຮງງານໃຫ້ມີຄວາມສົມດູນ ແລະ ຕອບສະໜອງຄວາມຕ້ອງການຂອງການພັດທະນາ; (3) ບັນຫາ ຄູ-ແພດ ອາສາສະໝັກ; (4) ບັນຫາຄວາມທຸກຍາກ ແລະ ຄ່າຄອງຊີບຂອງປະຊາຊົນ ທີ່ສູງຂຶ້ນຢ່າງຕໍ່ເນື່ອງ; (5) ການບໍລິການອອກປຶ້ມ-ໜັງສືຜ່ານແດນ;

8) ແກ້ໄຂບັນຫາເຄັ່ງຮ້ອນທາງດ້ານສິ່ງແວດລ້ອມ ເປັນຕົ້ນ ບັນຫາການຂຸດຄົ້ນແຮ່ທາດ ທີ່ບໍ່ໄປຕາມກົດໝາຍ, ການບຸກລຸກທີ່ດິນຂອງລັດ ແລະ ປະຊາຊົນ, ການທຳລາຍປ່າໄມ້ ແລະ ແຫຼ່ງນ້ຳ, ຄຸນນະພາບອາກາດ (PM2.5), ມາດຕະການຕ້ານແລ້ງ-ຕ້ານຖ້ວມ ແລະ ໄພທຳມະຊາດອື່ນ ທີ່ມີຄວາມສ່ຽງຈະເກີດຂຶ້ນໃນຕໍ່ໜ້າ, ຂຶ້ນທະບຽນ ອອກໃບຕາດິນ ຂອງສູນກາງ ແລະ ທ້ອງຖິ່ນ ໃຫ້ເປັນລະບົບຄົບຊຸດ ແລະ ສຳເລັດຕາມຄາດໝາຍແຜນການ ເພື່ອເພີ່ມລາຍຮັບ;

9) ເອົາໃຈໃສ່ແກ້ໄຂຜົນການກວດສອບ ແລະ ກວດກາ ຕາມທີ່ໄດ້ກຳນົດໃນມະຕິກອງປະຊຸມສະພາແຫ່ງຊາດ ຖືເອົາການແກ້ໄຂບັນຫາດັ່ງກ່າວເປັນມາດຖານ ປະເມີນ ຕໍ່ຜູ້ທີ່ໄດ້ຮັບການເລືອກຕັ້ງ ຈາກສະພາແຫ່ງຊາດ;

10) ເອົາໃຈໃສ່ຄຸ້ມຄອງລັດ ຄຸ້ມຄອງສັງຄົມ ດ້ວຍກົດໝາຍ ໃຫ້ມີຜົນສັກສິດ, ປະຕິບັດມາດຕະການຕໍ່ຜູ້ລະເມີດກົດໝາຍຢ່າງເຂັ້ມງວດ, ແກ້ໄຂບັນຫາ ໃນພາກລັດຖະບານ ໃຫ້ມີລັກສະນະເດັດຂາດ, ຫຼຸດຜ່ອນຂອດຂັ້ນການບໍລິການຂອງລັດ, ປັບປຸງກົນໄກການປະສານງານ, ເຊື່ອມໂຍງ ແລະ ສະໜອງຂໍ້ມູນຂ່າວສານໃຫ້ສະດວກວ່ອງໄວ ເປັນເອກະພາບ ແລະ ທັນເປັນທັນສະໄໝ.

### II. ຕໍ່ຄວາມຄືບໜ້າການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຂໍ້ຫຍຸ້ງຍາກ ທາງດ້ານເສດຖະກິດ-ການເງິນ

ໃນວັນທີ 29 ມິຖຸນາ 2023 ທີ່ຜ່ານມາ ທ່ານລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ໄດ້ຕາງໜ້າໃຫ້ລັດຖະບານ ລາຍງານ ກ່ຽວກັບຄວາມຄືບໜ້າ ການຈັດຕັ້ງປະຕິບັດ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ທ່ານປະທານ ກຳມາທິການແຜນການ, ການເງິນ ແລະ ການກວດສອບ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄວາມເຫັນຕໍ່ການລາຍງານຂອງລັດຖະບານ ແລະ ບັນດາທ່ານ ສະມາຊິກສະພາແຫ່ງຊາດ ກໍໄດ້ເອົາໃຈໃສ່ປະກອບຄວາມເຫັນ ດ້ວຍບັນຍາກາດທີ່ຟົດຟື້ນ. ສະນັ້ນ, ຂ້າພະເຈົ້າຂໍສັງລວມບາງເນື້ອໃນ ທີ່ພົ້ນເດັ່ນດັ່ງນີ້:

1. ໃນໄລຍະ 2 ປີ ຜ່ານມາ ດ້ວຍຄວາມເອົາໃຈໃສ່ຂອງບັນດາອົງການຈັດຕັ້ງພັກ-ລັດ ທັງສູນກາງ ແລະ ທ້ອງຖິ່ນ ກໍຄືປະຊາຊົນບັນດາເຜົ່າ ເຮັດໃຫ້ວຽກງານຕ່າງໆ ໄດ້ຮັບການປັບປຸງນັບມື້ດີຂຶ້ນ. ແຕ່ເຖິງແນວໃດກໍຕາມ ເມື່ອອີງໃສ່ຄວາມຮຽກຮ້ອງຕ້ອງການ ຂອງການພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ ໃນໄລຍະໃໝ່ນັ້ນ ຍັງມີຫຼາຍດ້ານທີ່ລັດຖະບານ ຈະຕ້ອງໄດ້ ເພີ່ມທະວີການຊີ້ນຳ ແລະ ຄຸ້ມຄອງໃຫ້ມີໝາກຜົນສູງຂຶ້ນຕື່ມ ເປັນຕົ້ນ ການປະຕິບັດ 3 ຫຼັກການ (ເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບ) ຂອງວາລະແຫ່ງຊາດ ໃຫ້ເປັນຮູບປະທຳ; ເກັບລາຍຮັບໃຫ້ໄດ້ຄົບຖ້ວນ ຕາມທ່າແຮງບົ່ມຊ້ອນທີ່ເຮົາມີ; ຊຸກຍູ້ການຜະລິດເປັນສິນຄ້າ ເພື່ອທົດແທນການນຳເຂົ້າ ແລະ ເພື່ອສົ່ງອອກ; ການຕ້ານການຮົ່ວໄຫຼ ແລະ ວຽກງານອື່ນໆ.

2. ການຈັດຕັ້ງປະຕິບັດນະໂຍບາຍປະຢັດມັດທະຍັດ, ຕ້ານການຟຸມເຟືອຍ ກໍເປັນວຽກງານທີ່ມີຄວາມສຳຄັນ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ຂອງປະເທດເຮົາ ສະພາແຫ່ງຊາດ ຈຶ່ງໄດ້ສະເໜີລັດຖະບານ ເພີ່ມທະວີການໂຄສະນາເຜີຍແຜ່ ນະໂຍບາຍປະຢັດ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ປະຊາຊົນບັນດາເຜົ່າ ໄດ້ຮັບຮູ້ເຂົ້າໃຈຄວາມສຳຄັນ ແລະ ຄວາມຈຳເປັນ ໃນການປະຢັດມັດທະຍັດ ໃນໄລຍະທີ່ປະເທດຍັງມີພາລະຊຳລະໜີ້ສິນອັນໜັກໜ່ວງ; ປຸກລະດົມທົ່ວສັງຄົມ ໃຫ້ມີນ້ຳໃຈປະຢັດການໃຊ້ຈ່າຍ ໃນການດຳລົງຊີວິດ, ການຈັດງານປະເພນີຕ່າງໆ ບົນພື້ນຖານການປະຢັດມັດທະຍັດ.

3. ການສ້າງສະຖຽນລະພາບດ້ານເງິນຕາ ເປັນວຽກງານຈຸດສຸມໜຶ່ງ ຂອງວາລະແຫ່ງຊາດ ແຕ່ປະສິດທິຜົນໃນການຈັດຕັ້ງປະຕິບັດ ຍັງບໍ່ທັນໄດ້ຮັບຜົນດີເທົ່າທີ່ຄວນ, ພໍ່ແມ່ປະຊາຊົນສ່ວນຫຼາຍ ຍັງມີຄວາມເປັນຫ່ວງເປັນໃຍຫຼາຍ ເພາະຕິດພັນກັບລາຄາສິນຄ້າ, ຄ່າຄອງຊີບ ແລະ ຊີວິດການເປັນຢູ່ຂອງປະຊາຊົນ. ສະພາແຫ່ງຊາດ ຈຶ່ງໄດ້ສະເໜີໃຫ້ລັດຖະບານ ມີນະໂຍບາຍໄລຍະສັ້ນ-ກາງ-ຍາວ, ນຳໃຊ້ທຸກມາດຕະການ ແຕ່ເບົາຫາໜັກ, ມາດຕະການທາງດ້ານກົດໝາຍທີ່ເດັດຂາດ, ເຂັ້ມງວດ ໃນການແກ້ໄຂບັນຫາດັ່ງກ່າວ ໃຫ້ໄດ້ຮັບຜົນສຳເລັດ, ຫັນຈາກສັງຄົມຜູ້ບໍລິໂພກ ໄປສູ່ສັງຄົມຜູ້ຜະລິດ, ຫຼຸດຜ່ອນການນຳເຂົ້າ, ເຮັດໃຫ້ເງິນກີບແຂງຄ່າ, ອັດຕາແລກປ່ຽນມີຄວາມໝັ້ນທ່ຽງ. ການເຮັດທົດລອງຂຸດຄົ້ນແຮ່ທາດ ເຖິງວ່າເປັນທ່າແຮງດ້ານເສດຖະກິດ ແຕ່ເຮົາຄວນ ມີການຮັກສາແຮ່ທາດ ທີ່ມີຄຸນຄ່າ, ແຮ່ຫາຍາກ ແລະ ມີລາຄາສູງ ຄວນມີການສະຫງວນເກັບຮັກສາໄວ້ ໃຫ້ລູກຫຼານຄົນລຸ້ນຕໍ່ໄປໄດ້ນຳໃຊ້.

4. ສືບຕໍ່ເອົາໃຈໃສ່ຄຸ້ມຄອງລັດ ຄຸ້ມຄອງສັງຄົມ ດ້ວຍກົດໝາຍ ໃຫ້ມີຄວາມເຂັ້ມງວດ, ສຸມໃສ່ການແກ້ໄຂບັນຫາຄວາມຫຍຸ້ງຍາກ ທາງດ້ານເສດຖະກິດ ຕິດພັນກັບການແກ້ໄຂບັນຫາສັງຄົມ ແລະ ການບໍລິຫານລັດ ເປັນຕົ້ນ ການກຳນົດໂກຕ້າພະນັກງານ ຮັບປະກັນການກໍ່ສ້າງພະນັກງານສືບທອດ ຂອງລັດໃນອະນາຄົດ.

ທີ່ກ່າວມານັ້ນແມ່ນຈິດໃຈຄວາມເປັນຫ່ວງເປັນໄຍ ຂອງສະພາແຫ່ງຊາດທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດ ຂອງປະຊາຊົນບັນດາເຜົ່າ, ທີ່ໄດ້ມອບໃຫ້ລັດຖະບານ ນຳເອົາຄຳຄິດຄຳເຫັນດັ່ງກ່າວ ເປັນຂໍ້ມູນໃນການຄົ້ນຄວ້າ, ປັບປຸງແກ້ໄຂ ແລະ ເປັນບ່ອນອີງໃນການຈັດຕັ້ງປະຕິບັດ, ເຮັດໃຫ້ເກີດໝາກຜົນສູງສຸດ ແກ່ປະເທດຊາດ ກໍຄືປະຊາຊົນບັນດາເຜົ່າ.

ຂ້າພະເຈົ້າຂໍຕາງໜ້າຄະນະປະຈຳສະພາແຫ່ງຊາດຮຽກຮ້ອງມາຍັງ ບັນດາທ່ານ ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າທຸກຊັ້ນຄົນ ໃນທົ່ວປະເທດ ເອົາໃຈໃສ່ເປັນເຈົ້າຕົນເອງ ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ພ້ອມພຽງຮ່ວມແຮງຮ່ວມໃຈກັນ ຜ່ານຜ່າອຸປະສັກ ຄວາມຫຍຸ້ງຍາກ ຂອງເສດຖະກິດ ໃນປັດຈຸບັນໃຫ້ໄດ້. ອີກເທື່ອໜຶ່ງ ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍຢ່າງຈິງໃຈ ມາຍັງສື່ມວນຊົນທຸກພາກສ່ວນ ທີ່ໄດ້ຕິດຕາມຢ່າງໃກ້ຊິດ ເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການ ກ່ຽວກັບການດຳເນີນກອງປະຊຸມໃນຄັ້ງນີ້ ໃຫ້ແກ່ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ.

# ບົດລາຍງານການເຄື່ອນໄຫວຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ

ທ່ານ ພົອ. ວິໄລ ຫຼ້າຄຳຟອງ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ໄດ້ບົດລາຍງານຜົນການເຄື່ອນໄຫວຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະແຕ່ເດືອນກໍລະກົດ 2021 ຫາ ເດືອນມິຖຸນາ 2023 ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 5, ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 29 ມິຖຸນາ 2023 ເຊິ່ງມີເນື້ອໃນສຳຄັນຄື:



**I. ການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະແຕ່ເດືອນກໍລະກົດ ປີ 2021 ຫາ ເດືອນມິຖຸນາ 2023.**

1) ດ້ານວຽກງານສ້າງຄວາມຮັບຮູ້ໃນທົ່ວສັງຄົມດ້ວຍການສຶກສາອົບຮົມ ແລະ ຜົນຮ້າຍຂອງຢາເສບຕິດ: ບັນດາກະຊວງ ແລະ ອົງການທຽບເທົ່າກະຊວງ ໄດ້ຈັດຕັ້ງເຊື່ອມຊຶມບັນດາເອກະສານກ່ຽວກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ບັນດາກົມກອງອ້ອມຂ້າງກະຊວງ, ບັນດາສະຖາບັນການສຶກສາຂັ້ນຕ່າງໆ, ໂຮງຈັກ-ໂຮງງານ, ລວມທັງຂະແໜງການສາຍຕັ້ງຂອງຕົນ; ອົງການປົກຄອງນະຄອນຫຼວງວຽງຈັນ, ບັນດາແຂວງໃນທົ່ວປະເທດ ໄດ້ລົງເຜີຍແຜ່ບັນດາເອກະສານກ່ຽວກັບວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຢູ່ຂັ້ນເມືອງ, ຂັ້ນກຸ່ມບ້ານ, ຂັ້ນບ້ານ.

2) ດ້ານວຽກງານສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບບັນຫາຢາເສບຕິດ: ໄດ້ເຜີຍແຜ່ກົດໝາຍວ່າດ້ວຍຢາເສບຕິດ ສະບັບປັບປຸງໃຫ້ແກ່ບັນດາກະຊວງ, ອົງການຈັດຕັ້ງ ແລະ ພາກສ່ວນກ່ຽວຂ້ອງ ໄດ້ຈຳນວນໜຶ່ງ; ປັບປຸງຄຳສັ່ງ ເລກທີ 07/ນຍ ເປັນດຳລັດວ່າດ້ວຍຊັບສິນທີ່ຖືກຍຶດ, ອາຍັດ ແລະ ຮິບເປັນຂອງລັດ ສະບັບເລກທີ 280/ລບ, ລົງວັນທີ 09 ສິງຫາ 2022; ໄດ້ຄົ້ນຄວ້າປັບປຸງນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບຢາເສບຕິດ ເຊັ່ນ: ດຳລັດວ່າດ້ວຍວຽກງານຄຸມຂັງ-ດັດສ້າງ, ຄຳແນະນຳຮ່ວມຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ກະຊວງປ້ອງກັນຄວາມສະຫງົບ ກ່ຽວກັບວິທີການຈັດຕັ້ງປະຕິບັດໂທດສູງສຸດ; ປັບປຸງຄະນະກອງເລຂາ ແລະ ສະພາບໍລິຫານກອງທຶນຄວບຄຸມ, ສະກັດກັ້ນ ແລະ ຕ້ານຢາເສບຕິດ.

3) ດ້ານວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ຍົກລະດັບຄວາມສາມາດໃນການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງອົງການສືບສວນ-ສອບສວນ, ອົງການໄອຍະການປະຊາຊົນ, ອົງການສານປະຊາຊົນ, ອົງການປະຕິບັດຄຳຕັດສິນຂອງສານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕໍ່ການແກ້ໄຂບັນຫາຢາເສບຕິດ: ໄດ້ປັບປຸງກົງຈັກການຈັດຕັ້ງໃນກຳລັງປ້ອງກັນຄວາມສະຫງົບ ເປັນຕົ້ນແມ່ນຢູ່ຂົງເຂດການສືບສວນ-ສອບສວນ, ສືບຂ່າວຂັ້ນກະຊວງ ແລະ ກອງບັນຊາການປ້ອງກັນຄວາມສະຫງົບແຂວງ-ນະຄອນຫຼວງ; ເພື່ອເຮັດໃຫ້ການດຳເນີນຄະດີໄປຕາມຂະບວນການຍຸຕິທຳ ກະຊວງປ້ອງກັນຄວາມສະຫງົບ, ອົງການໄອຍະການປະຊາຊົນສູງສຸດ, ອົງການສານປະຊາຊົນສູງສຸດ ແລະ ກະຊວງຍຸຕິທຳ ໄດ້ຈັດກອງປະຊຸມແລກປ່ຽນຄວາມຄິດເຫັນການດຳເນີນຄະດີຕາມຂະບວນຍຸຕິທຳ ລະດັບລັດຖະມົນຕີ-ຫົວໜ້າອົງການ.

4) ດ້ານວຽກງານຍົກສູງປະສິດທິພາບ ດ້ານການຄຸ້ມຄອງ, ຊີ້ນຳໃນການຈັດຕັ້ງປະຕິບັດຮອບດ້ານ ໃນວຽກງານແກ້ໄຂບັນຫາຢາເສບຕິດ: ໃນໄລຍະເດືອນກໍລະກົດ 2021 ຫາ ເດືອນມິຖຸນາ 2023 ໃນຂອບເຂດທົ່ວປະເທດ ສາມາດແກ້ໄຂມ້າງລາຍຄະດີຢາເສບຕິດ ໄດ້ທັງໝົດ 9.516 ເລື່ອງ, ຈັບຜູ້ຖືກຫາໄດ້ 13.941 ຄົນ ຍິງ 1.588 ຄົນ, ຄົນຕ່າງປະເທດ 283 ຄົນ; ຍຶດຢາບ້າໄດ້ 297.085.327 ເມັດ, ຢາບ້າເປັນຝຸ່ນ 59,52 ກິໂລກຼາມ ນໍ້າໜັກ 29.856,35 ກິໂລກຼາມ, ຢາໄອສ໌7.193,38ກິໂລກຼາມ, ເຮໂຣອິນ 507,12 ກິໂລກຼາມ, ກັນຊາ 20.214,41 ກິໂລກຼາມ, ຢາຝິ່ນ 380,32 ກິໂລກຼາມ, ຢາອີ 5.689 ເມັດ ກັບ 20 ກິໂລກຼາມ (ຢາອີເປັນຝຸ່ນ 0,08 ກິໂລກຼາມ) ແປ້ງຝຸ່ນປະສົມຢາເສບຕິດ 51.153,62 ກິໂລກຼາມ, ເຄຕາມີນ 2.558,79 ກິໂລກຼາມ, ໂຄເຄນ 3 ກິໂລກຼາມ, ຄາເຟອິນ 168 ກຼາມ, ນໍ້າຢາສານເຄມີ 10,84 ກຼາມ ແລະ ນໍ້າກົດ 9.400 ລິດ, ຍຶດລົດໃຫຍ່ໄດ້ 321 ຄັນ, ລົດຈັກ 1.574 ຄັນ, ເຮືອ 05 ລຳ; ໄດ້ລົງສຳຫຼວດເນື້ອທີ່ລັກລອບປູກຝິ່ນຢູ່ 9 ແຂວງພາກເໜືອ ກວດພົບເຫັນສວນຝິ່ນ 4.393 ກວ່າຕອນ ແລະ ໄດ້ລົງທຳລາຍຖິ້ມຈຳນວນ 1.437 ເຮັກຕາ; ໄດ້ນຳເອົາເປົ້າໝາຍຜູ້ຕິດຢາເສບຕິດເຂົ້າປິ່ນປົວຢູ່ສູນບຳບັດປິ່ນປົວ ແລະ ຟື້ນຟູສຸຂະພາບຜູ້ຕິດຢາເສບຕິດ 13 ແຫ່ງ, ມີທັງໝົດ 10.900 ຄົນ, ໃນນັ້ນມີຜູ້ທີ່ປິ່ນປົວດີແລ້ວກັບຄືນບ້ານມີທັງໝົດ 5.734 ຄົນ, ສືບຕໍ່ປິ່ນປົວ 2.994 ຄົນ; ໄດ້ມອບຢາປິ່ນປົວພະຍາດໃຫ້ແກ່ໜ່ວຍງານປິ່ນປົວ ແລະ ໃຫ້ຄຳປຶກສາຜູ້ຕິດຢາເສບຕິດຂັ້ນຊຸມຊົນ ມີທັງໝົດ 28 ແຫ່ງ ຢູ່ 6 ແຂວງ ຄື: ໄຊຍະບູລີ, ວຽງຈັນ, ບໍລິຄຳໄຊ, ຄຳມ່ວນ, ສະຫວັນນະເຂດ ແລະ ນະຄອນຫຼວງວຽງຈັນ ມີຜູ້ເຂົ້າມາປິ່ນປົວ 424 ຄົນ, ຮັບຄຳປຶກສາ ແລະ ຕໍ່ຢາ 1,360 ຄັ້ງ; ໄດ້ທົດລອງທຳລາຍສານເຄມີຕົ້ນ ໂປຣປຣີໂອນິວ ຄຣໍຣາຍ (Propionyl Chloride) 308 ຖັງສານເຄມີເອທີວ ອາເຊຕັດ (Ethyl Acetate) 167 ຖັງ ທີ່ເຈົ້າໜ້າທີ່ໄດ້ຍຶດຢູ່ແຂວງບໍ່ແກ້ວ ໂດຍໄດ້ທົດລອງຂຸດຂຸມຈູດທຳລາຍປະເພດລະ 1 ຖັງ ແລະ ໄດ້ກະກຽມສືບຕໍ່ທຳລາຍຈຳນວນທີ່ຍັງເຫຼືອຈົນກ່ວາຈະສຳເລັດ; ປະສານສົມທົບກັບກະຊວງ-ອົງການທີ່ກ່ຽວຂ້ອງຕິດຕາມກວດກາການນຳເຂົ້າສານເຄມີຕົ້ນ 7 ລາຍການ ຄື: ປະເພດອາຊິດຊູນຟູຣິກ 4,269,936 ກິໂລກຣາມ, ໄຮໂດຣຄໍຣິກອາຊິດ 34,510 ກິໂລກຼາມ, ໂສດຽມຄາໂບເນັດ 500,000 ກິໂລກຼາມ ແລະ ໂສດຽມໄຊຍາໄນ 36,000 ກິໂລກຼາມ; ລົງເຮັດການສຳຫຼວດປັດໄຈນຳໄປສູ່ການຊົມໃຊ້ສິ່ງເສບຕິດຢູ່ 6 ແຂວງຄື: ຫົວພັນ, ອຸດົມໄຊ, ນະຄອນຫຼວງວຽງຈັນ, ຄຳມ່ວນ, ເຊກອງ ແລະ ສະຫວັນນະເຂດ; ອອກໃບຢັ້ງຢືນຮັບຮອງບໍລິສັດເຂົ້າຮ່ວມໂຄງການປູກພືດທົດແທນການປູກຝິ່ນ ຢູ່ 7 ແຂວງ ມີທັງໝົດ 54 ບໍລິສັດ. ບໍລິສັດເຫຼົ່ານັ້ນ, ໄດ້ສຸມໃສ່ຊຸກຍູ້ສິ່ງເສີມດ້ານສີມືແຮງງານ ແລະ ຈັດສັນອາຊີບໃຫ້ປະຊາຊົນໄດ້ 1.135 ບ້ານ, ປະຊາຊົນໄດ້ຮັບຜົນປະໂຫຍດຫຼາຍກວ່າ 47.466 ຄອບຄົວ; ໄດ້ນຳໃຊ້ຢາກາດອກບົວ ທີ່ໄດ້ຮັບການຊ່ວຍເຫຼືອລ້າຈາກ ສສ. ຫວຽດນາມ 1.000 ຊຸດ ເຂົ້າປິ່ນປົວຜູ້ຕິດຢາເສບຕິດຢູ່ສູນປິ່ນປົວ ແລະ ຟື້ນຟູສຸຂະພາບ ລວມ 13 ແຫ່ງທົ່ວປະເທດ ໂດຍການຮ່ວມມືກັບກົມປິ່ນປົວ-ກະຊວງສາທາລະນະສຸກ; ຢ້ຽມຢາມການນຳໃຊ້ຢາເມຕາໂດນ ຢູ່ ສສ.ຫວຽນາມ ເພື່ອວາງແຜນນຳເຂົ້າທົດລອງຢາດັ່ງກ່າວໃນການປິ່ນປົວຜູ້ຕິດຝິ່ນ ແລະ ເຮໂລອິນ ໂດຍມີແຜນການທົດລອງຢູ່ເມືອງວຽງໄຊ ແລະ ເມືອງຫົວເມືອງ ແຂວງຫົວພັນ; ແຈກຢາຍເຄື່ອງມືອຸປະກອນ ແລະ ພາຫະນະທີ່ໄດ້ຮັບການຊ່ວຍເຫຼືອຈາກໄທ, ສ.ເກົາຫຼີ, ສປ ຈີນ ແລະ ອົງການ UNODC ໃຫ້ບັນດາກົມກອງ-ທ້ອງຖິ່ນ ລວມມີ ເຄື່ອງກວດນໍ້າປັດສະວະຫາສານເສບຕິດ 30.000 ຊຸດ; ລົດໂຮງໝໍ 2 ຄັນ; ລົດໃຫຍ່ 11 ຄັນ, ລົດຈັກ 4 ຄັນ ແລະ ອຸປະກອນຮັບໃຊ້ຫ້ອງການ, ອຸປະກອນການສຳຫຼວດ, ອຸປະກອນຊີ້ບອກທິດທາງ ຈີພີເອັດ ຈຳນວນໜຶ່ງ ມູນຄ່າ 1,309,460 ຢວນ.

5) ດ້ານວຽກງານປັບປຸງຂີດຄວາມສາມາດການເຄື່ອນໄຫວເຮັດໜ້າທີ່ຂອງລະບົບການເມືອງແຕ່ລະຂັ້ນເພື່ອຊີ້ນຳ-ນຳພາແກ້ໄຂບັນຫາຢາເສບຕິດທີ່ເກີດຂຶ້ນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ: ຄະນະພັກ-ການນຳຂັ້ນກະຊວງ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໄດ້ສ້າງແຜນການເຄື່ອນໄຫວຂອງຕົນ ເພື່ອຈັດຕັ້ງປະຕິບັດວາລະແຫ່ງຊາດໃຫ້ສຳເລັດຕາມຈຸດປະສົງຄາດໝາຍ ແລະ ກຳນົດເວລາທີ່ວາງໄວ້; ຄະນະພັກ-ອົງການປົກຄອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງໃນທົ່ວປະເທດ ໄດ້ຊີ້ນຳ ແລະ ຈັດຕັ້ງຂະບວນການແຂ່ງຂັນສ້າງໂຮງຮຽນປອດຢາເສບຕິດ, ບ້ານປ້ອງກັນຄວາມສະຫງົບດີ, ບ້ານປອດຢາເສບຕິດ, ບ້ານປອດຄະດີ; ໄດ້ເປີດນຳໃຊ້ອາຄານຈຸດກວດກາຢາເສບຕິດເພີ່ມຕື່ມ ທີ່ບ້ານສາມັກຄີໄຊ ເມືອງທ່າພະບາດ ແຂວງບໍລິຄຳໄຊ. ປັດຈຸບັນໄດ້ມີຫ້ອງການ ຫຼື ຈຸດກວດກາອັດປ່ອງຂ້າມລອຍຢາເສບຕິດທັງໝົດ 5 ຈຸດ ແຕ່ລະຈຸດໄດ້ນຳໃຊ້ໝາວິຊາສະເພາະ ແລະ ເຄື່ອງເຕັກນິກຈຳນວນໜຶ່ງເຂົ້າໃນການກວດກາ.

6) ດ້ານວຽກງານເພີ່ມທະວີການຮ່ວມມືສາກົນ: ໃນໄລຍະຜ່ານມາໄດ້ເປັນເຈົ້າການພົວພັນຮ່ວມມືກັບອົງການສະກັດກັ້ນ ແລະ ຕ້ານຢາເສບຕິດຂອງປະເທດເພື່ອນມິດຍຸດທະສາດ ແລະ ບັນດາປະເທດໃນຂົງເຂດ, ພາກພື້ນ ແລະ ອົງການຈັດຕັ້ງສາກົນ ພ້ອມເຂົ້າຮ່ວມກອງປະຊຸມກ່ຽວກັບບັນຫາຢາເສບຕິດໃນຫຼາຍຄັ້ງ.

**II. ບາງຂໍ້ຄົງຄ້າງ.**

(1) ຄະນະພັກ-ຄະນະນຳກະຊວງ-ອົງການຂັ້ນສູນກາງ, ອົງການປົກຄອງທ້ອງຖິ່ນຈຳນວນໜຶ່ງ ຍັງບໍ່ທັນໄດ້ຍົກສູງຄວາມເອົາໃຈໃສ່ໃນການນຳພາ-ຊີ້ນຳການຈັດຕັ້ງປະຕິບັດວາລະແຫ່ງຊາດ ໂດຍສະເພາະແມ່ນການເອົາເນື້ອໃນຈິດໃຈຂອງວາລະແຫ່ງຊາດ ໄປເຜີຍແຜ່ຢູ່ໃນຂະແໜງການ ແລະ ທ້ອງຖິ່ນຂອງຕົນຢ່າງທົ່ວເຖິງ ໂດຍສະເພາະຢູ່ເຂດຫ່າງໄກສອກຫຼີກ, ເຂດຊົນເຜົ່າ-ທຸລະກັນດານ; ສ່ວນຫຼາຍຍັງເຂົ້າໃຈວ່າແມ່ນເປັນພາລະຂອງກຳລັງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; (2) ກົດໝາຍວ່າດ້ວຍຢາເສບຕິດ ສະບັບປັບປຸງ, ນິຕິກຳໃຕ້ກົດໝາຍທີ່ມີກໍຍັງບໍ່ທັນເຜີຍແຜ່ໄດ້ຢ່າງກວ້າງຂວາງ ເຮັດໃຫ້ການປະຕິບັດມາດຕະການດ້ານກົດໝາຍຕໍ່ຜູ້ກະທຳຜິດຍັງຈຳກັດ, ບັນດານິຕິກຳຮັບໃຊ້ວຽກງານໂຄສະນາສຶກສາອົບຮົມ ເຊິ່ງເປັນວຽກບູລິມະສິດໃນວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຍັງບໍ່ທັນລະອຽດ, ຄົບຖ້ວນເທົ່າທີ່ຄວນ; (3) ຄວາມຮູ້, ຄວາມສາມາດຂອງເຈົ້າໜ້າທີ່ທີ່ກ່ຽວຂ້ອງໃນການຈັດຕັ້ງປະຕິບັດວາລະແຫ່ງຊາດຍັງຈຳກັດ, ຈຳນວນໜຶ່ງແມ່ນຍັງຖືເບົາ ຍັງຂາດຄວາມເອົາໃຈໃສ່ເທົ່າທີ່ຄວນ, ຂາດການຝຶກອົບຮົມຢ່າງເປັນປົກກະຕິ-ຕໍ່ເນື່ອງ, ການແກ້ໄຂເປົ້າໝາຍສ່ວນໃຫຍ່ໄດ້ແຕ່ເປົ້າໝາຍຂົນສົ່ງ, ຊື້-ຂາຍລາຍຍ່ອຍ, ລາຍກາງ, ບໍ່ທັນແກ້ໄດ້ຫົວໂປ່ໂຕການ, ເຈົ້າໜ້າທີ່ຈຳນວນໜຶ່ງກໍສວຍໃຊ້ໜ້າທີ່ເຄື່ອນໄຫວຫາຜົນປະໂຫຍດສ່ວນຕົວ ແລະ ຍັງລະເມີດກົດໝາຍຂອງການດຳເນີນຄະດີ; (4) ຂອດການປະສານງານຂັ້ນຕ່າງໆ ເຫັນວ່າບໍ່ທັນກົມກຽວ, ຍັງຂາດຄວາມຄ່ອງຕົວຍ້ອນແຕ່ລະພາກສ່ວນຍັງບໍ່ທັນແຕ່ງຕັ້ງຜູ້ປະສານງານທີ່ຈະແຈ້ງເທື່ອ; (5) ການຕອບສະໜອງດ້ານບຸກຄະລາກອນ, ງົບປະມານ, ວັດຖຸອຸປະກອນເຕັກນິກວິຊາສະເພາະ, ພາຫະນະທີ່ຈຳເປັນ ເພື່ອມາຮັບໃຊ້ໃຫ້ແກ່ວາລະແຫ່ງຊາດ ຍັງຊັກຊ້າ, ຈຳນວນທີ່ມີກໍສຸມໃສ່ຢູ່ຂັ້ນສູນກາງ ສົ່ງຜົນໃຫ້ແຜນການເຄື່ອນໄຫວວາລະແຫ່ງຊາດ ບໍ່ສາມາດດຳເນີນໄປຕາມບາດກ້າວທີ່ກຳນົດໄວ້; (6) ການລົງຊຸກຍູ້, ຕິດຕາມ, ກວດກາບັນດາໜ້າວຽກທີ່ປະຕິບັດຢູ່ແຕ່ລະທ້ອງຖິ່ນ ມີຄວາມສ່ຽງສູງ, ການລົງສຳຫຼວດຝິ່ນໃນແຕ່ລະຄັ້ງຕ້ອງໃຊ້ເວລາ ແລະ ຈຳນວນພົນຫຼາຍ, ກິດຈະກຳຕ່າງໆຂອງໂຄງການປູກພືດທົດແທນການປູກຝິ່ນ ຍັງຂາດຫຼາຍປັດໄຈ ແລະ ການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ຍັງບໍ່ທັນໄດ້ດີເທົ່າທີ່ຄວນ; ອຳນາດການປົກຄອງຂັ້ນແຂວງ ແລະ ທ້ອງຖິ່ນ ຍັງບໍ່ທັນເອົາໃຈໃສ່ເທົ່າທີ່ຄວນໃນການຊຸກຍູ້ໂຄງການປູກພືດທົດແທນການປູກຝິ່ນ ທີ່ລັດຖະບານສອງປະເທດ ລາວ-ຈີນ ໄດ້ຕົກລົງຮ່ວມກັນ; (7) ສະຖານທີ່ກັກຂັງ, ສູນບຳບັດຍັງຢູ່ໃນສະພາບແອອັດ, ລະບົບຫ້ອງຂອງສູນບຳບັດ ບໍ່ທັນຖືກຕາມລະບົບຂອງວຽກງານບຳບັດ, ຫຼາຍແຫ່ງບໍ່ທັນມີຫ້ອງກວດ ແລະ ຕິດຕາມສຸຂະພາບຂອງຜູ້ທີ່ເຂົ້າບຳບັດຂາດບຸກຄະລາກອນແພດ ແລະ ຕູ້ຢາປິ່ນປົວປະຈຳສູນ, ຜູ້ປົກຄອງບໍ່ສາມາດປະກອບສ່ວນດ້ານເບັ້ຍລ້ຽງອັດຕາກິນ ແລະ ຄ່າຢາປິ່ນປົວ. ຈາກບັນຫາດັ່ງກ່າວເຮັດໃຫ້ບໍ່ສາມາດຮັບປະກັນການເປັນຢູ່, ການປິ່ນປົວບຳບັດ, ການຟື້ນຟູສະພາບຂອງຜູ້ເຂົ້າບຳບັດ ແລະ ນັກໂທດ ຍັງມີຄວາມຫຍຸ້ງຍາກ.

**III. ທິດທາງແຜນການໃນການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດໃນຕໍ່ໜ້າ.**

ສືບຕໍ່ຈັດຕັ້ງປະຕິບັດໄປຕາມ 6 ວຽກຈຸດສຸມ ທີ່ໄດ້ກຳນົດໄວ້ ມີດັ່ງນີ້:

1) ວຽກງານສ້າງຄວາມຮັບຮູ້ໃນທົ່ວສັງຄົມດ້ວຍການສຶກສາອົບຮົມໂຄສະນາເຜີຍແຜ່ລະບຽບກົດໝາຍ ແລະ ຜົນຮ້າຍຂອງຢາເສບຕິດ: ສືບຕໍ່ເຄື່ອນໄຫວວຽກງານດັ່ງກ່າວໃຫ້ເຂັ້ມແຂງດ້ວຍຫຼາຍຮູບຫຼາຍສີສັນເປັນຕົ້ນແມ່ນ: ຈັດພິມປຶ້ມກົດໝາຍ, ປຶ້ມວາລະແຫ່ງ

ອ່ານຕໍ່ໜ້າ 17...

## ບົດລາຍງານ...

(ຕໍ່ຈາກໜ້າ 16)

ຊາດ, ປຶ້ມຄູ່ມືໂຄສະນາ, ປ້າຍຄຳຂວັນ, ຮູບພາບປ້າຍໂຄສະນາ ແລະ ປຶ້ມສັງລວມບັນດານິຕິກຳຕ່າງໆທີ່ກ່ຽວຂ້ອງກັບວາລະແຫ່ງຊາດ ເພື່ອນຳລົງແຈກຢາຍໃຫ້ແກ່ສຳນັກງານອົງການ, ຂະແໜງການຕ່າງໆ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນຮັບໃຊ້ໃຫ້ແກ່ການໂຄສະນາສຶກສາອົບຮົມ; ສືບຕໍ່ຊຸກຍູ້ຕິດຕາມການເຜີຍແຜ່ວາລະແຫ່ງຊາດ ຢູ່ຂະແໜງການສາຍຕັ້ງຂອງບັນດາກະຊວງ-ອົງການ ແລະ ທ້ອງຖິ່ນຮາກຖານ ໂດຍເລັ່ງໃສ່ເປົ້າໝາຍກຸ່ມສ່ຽງ ເປັນຕົ້ນ: ກຸ່ມໃຊ້ແຮງງານ, ຜູ້ອອກແຮງງານ, ນັກຮຽນ-ນັກສຶກສາ, ຖັນແຖວໄວໜຸ່ມ ຕະຫຼອດຮອດປະຊາຊົນບັນດາເຜົ່າຢູ່ພື້ນທີ່ຫຼ່ແຫຼມ, ເຂດຫ່າງໄກ ແລະ ການດຳລົງຊີວິດຍັງພົບຄວາມຫຍຸ້ງຍາກ; ສ້າງຂະບວນການສະເຫຼີມສະຫຼອງວັນແຫ່ງຊາດ ແລະ ວັນສາກົນຕ້ານຢາເສບຕິດ ດ້ວຍຫຼາຍຮູບການເຊັ່ນ: ຈັດພິທີຈູດທຳລາຍຢາເສບຕິດ, ຈັດງານໂຮມຊຸມນຸມມິດຕິງ, ກິດຈະກຳແຂ່ງຂັນສິລະປະວັນນະຄະດີ, ກິລາກາຍຍະກຳຕ້ານຢາເສບຕິດ ແລະ ປຸກລະດົມຂົນຂວາຍລະດົມທຶນຈາກທົ່ວສັງຄົມ.

2) ວຽກງານສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ: ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ເພື່ອໂຄສະນາເຜີຍແຜ່ກົດໝາຍສະບັບປັບປຸງ ບາງມາດຕາຂອງກົດໝາຍວ່າດ້ວຍຢາເສບຕິດ ທີ່ສະພາແຫ່ງຊາດໄດ້ຮັບຮອງ ແລະ ການປະກາດໃຊ້ຢ່າງເປັນທາງການ; ສ້າງ, ປັບປຸງບັນດາກົດໝາຍ ແລະ ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງກັບບັນຫາຢາເສບຕິດ ເພື່ອໃຫ້ໄດ້ຈັດຕັ້ງປະຕິບັດເປັນຕົ້ນແມ່ນ ດຳລັດວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຢາເສບຕິດ, ດຳລັດວ່າດ້ວຍວຽກງານຄຸ້ມຂັງ-ດັດສ້າງ, ກອງທຶນວ່າດ້ວຍວຽກງານກວດກາ-ຄວບຄຸມຢາເສບຕິດ; ຄຳສັ່ງ, ຄຳແນະນຳຂອງອົງການທີ່ກ່ຽວຂ້ອງ ໃນການດຳເນີນຄະດີຕໍ່ການປູກ, ຜະລິດ, ປຸງແຕ່ງ, ຄ້າຂາຍ, ຈຳໜ່າຍ, ຂົນສົ່ງ, ມີໄວ້ຄອບຄອງ, ນຳເຂົ້າ, ສົ່ງອອກ, ເສບພືດທີ່ໃຫ້ສານເສບຕິດເຊັ່ນ: ໃບກະທ່ອມ, ນ້ຳກະທ່ອມ, ສານລະເຫີຍທີ່ມີສານເສບຕິດອື່ນເຊັ່ນ: ປູມເປົ້າອັດແກັດສານໄນຕັດອ໋ອກຊາຍ, ຢາສູບໄຟຟ້າ ຊີຊ່າ; ແຕ່ງຕັ້ງຄະນະກຳມະການລະດັບຊາດ, ລະດັບທ້ອງຖິ່ນ ເພື່ອຊີ້ນຳແກ້ໄຂບັນຫາຢາເສບຕິດ ເປັນການຍົກລະດັບການຊີ້ນຳ, ກໍຄືການມີສ່ວນຮ່ວມຢ່າງແຂງແຮງຂອງທຸກພາກສ່ວນທີ່ກ່ຽວຂ້ອງໃນສັງຄົມ; ສ້າງແຜນການເຄື່ອນໄຫວໃຫ້ການນຳຂອງລັດຖະບານ, ການນຳຂອງທ້ອງຖິ່ນລົງຊຸກຍູ້, ຕິດຕາມ, ກວດກາ, ຊີ້ນຳການຈັດຕັ້ງປະຕິບັດວາລະແຫ່ງຊາດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ພາກສ່ວນກ່ຽວຂ້ອງໄດ້ເພີ່ມທະວີຄວາມເອົາໃຈໃສ່ ໃນການຈັດຕັ້ງປະຕິບັດວາລະແຫ່ງຊາດ ໃຫ້ສຳເລັດຕາມຄາດໝາຍທີ່ວາງໄວ້; ປັບປຸງການຈັດຕັ້ງສະພາບໍລິຫານກອງເລຂາກອງທຶນວຽກງານກວດກາ-ຄວບຄຸມຢາເສບຕິດໃຫ້ສຳເລັດ ແລະ ມີການເຄື່ອນໄຫວສາມາດເປັນເສນາທິການໃຫ້ແກ່ລັດຖະບານຢ່າງແຂງແຮງ.

3) ວຽກງານປັບປຸງກົງຈັກການຈັດຕັ້ງ ແລະ ຍົກລະດັບຄວາມສາມາດໃນການເຄື່ອນໄຫວເຮັດໜ້າທີ່ການເມືອງຂອງອົງການສືບສວນ-ສອບສວນ, ໄອຍະການປະຊາຊົນ, ສານປະຊາຊົນ, ອົງການປະຕິບັດຄຳຕັດສິນຂອງສານ ແລະ ພາກສ່ວນທີ່ກ່ຽວຂ້ອງ ຕໍ່ການແກ້ໄຂບັນຫາຢາເສບຕິດ: ປັບປຸງພາລະບົດບາດ, ສິດ, ໜ້າທີ່, ນິຕິກຳທີ່ກ່ຽວຂ້ອງຂອງບັນດາອົງການທີ່ພົວພັນກັບການແກ້ໄຂບັນຫາຢາເສບຕິດ; ປັບປຸງລະບົບກົງຈັກການຈັດຕັ້ງຂອງອົງການສືບສວນ-ສອບສວນເຈົ້າໜ້າທີ່ຕຳຫຼວດແຕ່ລະຂັ້ນ ເພື່ອເຮັດໜ້າທີ່ໃນການແກ້ໄຂບັນຫາຢາເສບຕິດ ແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນ ໂດຍເລັ່ງໃສ່ປັບປຸງ ປກສ ເມືອງ, ປກສ ກຸ່ມບ້ານ ແລະ ປກສ ບ້ານ ໃຫ້ມີຄວາມເຂັ້ມແຂງ, ໜັກແໜ້ນ ທາງດ້ານຈຳນວນ ແລະ ຄຸນນະພາບ.

4) ວຽກງານຍົກສູງປະສິດທິພາບດ້ານການຄຸ້ມຄອງ, ຊີ້ນຳໃນການຈັດຕັ້ງປະຕິບັດຮອບດ້ານໃນວຽກງານແກ້ໄຂບັນຫາຢາເສບຕິດ: ເປັນເຈົ້າການກວດກາພື້ນທີ່ ແລະ ຈຸດອັດປ່ອງຂ້າມລອຍ, ເສັ້ນທາງຂົນສົ່ງຢາເສບຕິດ ໃນຂອບເຂດທົ່ວປະເທດໂດຍສະເພາະບໍລິເວນຊາຍແດນລະຫວ່າງປະເທດ, ແຂວງຕໍ່ແຂວງ, ຈັດຕັ້ງໜ່ວຍສະເພາະກິດໃນການກວດກາ-ສະກັດກັ້ນຕາມພື້ນທີ່ຫຼ່ແຫຼມ ໂດຍນຳໃຊ້ກຳລັງຂອງກະຊວງ, ແຂວງ ແລະ ກຳລັງທະຫານຊາຍແດນ ດ້ວຍການຈັດຕັ້ງຈຸດດ່ານກວດກາຖາວອນ ແລະ ເຄື່ອນທີ່ໃນກໍລະນີມີຂໍ້ມູນ, ກຳນົດພື້ນທີ່ເສັ້ນທາງການເຝົ້າລະວັງການລັກລອບລຳລຽງ-ຂົນສົ່ງຢາເສບຕິດ; ຈັດຕັ້ງປະຕິບັດແຜນການສະກັດກັ້ນ, ຄວບຄຸມການລັກລອບນຳເຂົ້າ, ການຄຸ້ມຄອງການນຳໃຊ້ສານເຄມີຕົ້ນທີ່ ເປັນວັດຖຸດິບ ຫຼື ສ່ວນປະສົມໃນການຜະລິດຢາເສບຕິດຈາກຕ່າງປະເທດເຂົ້າມາລາວ ແລະ ຜ່ານລາວໄປຍັງພື້ນທີ່ຜະລິດຢາເສບຕິດຢູ່ປະເທດໃກ້ຄຽງ; ອອກຄຳສັ່ງກ່ຽວກັບການສະກັດກັ້ນ, ການຂົນສົ່ງ, ການສົ່ງອອກ, ສົ່ງຜ່ານ, ນ້ຳຢາ ຫຼື ສານເຄມີຢູ່ພື້ນທີ່ສ່ຽງໃກ້ກັບເຂດສາມລ່ຽມຄຳ; ຈັດຝຶກອົບຮົມວຽກງານກວດກາຄວບຄຸມຢາເສບຕິດ, ວຽກງານສະກັດກັ້ນຕ້ານຢາເສບຕິດ, ວຽກງານສືບສວນຂັ້ນພື້ນຖານ, ວຽກງານສັນນະສູດ, ສືບຄົ້ນຫາເປົ້າໝາຍ, ວຽກງານວິເຄາະວິໄຈຢາເສບຕິດ ແລະ ວຽກງານອື່ນໆ; ລົງສຳຫຼວດ, ກວດກາ, ກຳນົດຈຸດພື້ນທີ່ເປົ້າໝາຍລັກລອບປູກຝິ່ນ-ປູກກັນຊາ ແລະ ພືດທີ່ໃຫ້ສານເສບຕິດ ພ້ອມທັງທຳລາຍ ໃນປີ 2023 ນີ້ຈະໄດ້ຮັບການຊ່ວຍເຫຼືອຈາກອົງການ ສປຊ ເພື່ອລົງສຳຫຼວດຝິ່ນຢູ່ບັນດາແຂວງພາກເໜືອ ແລະ ພາກກາງ ຂອງ ສປປ ລາວ; ຕິດຕາມການຊ່ວຍເຫຼືອຈາກຫວຽດນາມທີ່ຈະຊ່ວຍສ້າງສູນຕົວແບບ ສູນບຳບັດປິ່ນປົວ ແລະ ຝຶກວິຊາຊີບຜູ້ຕິດຢາເສບຕິດ ຢູ່ແຂວງວຽງຈັນ ແລະ ສືບຕໍ່ຕິດຕາມການປັບປຸງກໍ່ສ້າງສູນບຳບັດປິ່ນປົວຜູ້ຕິດຢາເສບຕິດ ຢູ່ແຂວງເຊກອງ, ຊຽງຂວາງ, ໄຊຍະບູລີ, ສະຫວັນນະເຂດ, ຜົ້ງສາລີ ແລະ ຫຼວງພະບາງ ຕາມການຕົກລົງເຫັນດີຂອງຂັ້ນເທິງ;

5) ວຽກງານປັບປຸງຂີດຄວາມສາມາດການເຄື່ອນໄຫວເຮັດໜ້າທີ່ຂອງລະບົບການເມືອງແຕ່ລະຂັ້ນເພື່ອຊີ້ນຳ-ນຳພາການແກ້ໄຂບັນຫາຢາເສບຕິດທີ່ເກີດຂຶ້ນຢູ່ໃນຂອບເຂດຄວາມຮັບຜິດຊອບ: ຊຸກຍູ້ຄະນະພັກ-ການນຳຂັ້ນກະຊວງ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ແຕ່ລະຂັ້ນຈັດຕັ້ງປະຕິບັດວາລະແຫ່ງຊາດ ໃຫ້ສຳເລັດຕາມຈຸດປະສົງ, ຄາດໝາຍ ແລະ ກຳນົດເວລາ ທັງເພີ່ມທະວີຄວາມເປັນເຈົ້າການໃນການສຶກສາອົບຮົມ, ປຸກລະດົມຂົນຂວາຍ, ການໂຄສະນາເຜີຍແຜ່ຜົນຮ້າຍຂອງຢາເສບຕິດ ໃຫ້ມີປະສິດທິພາບສູງຂຶ້ນກ່າວເກົ່າ; ຊີ້ນຳບັນດາ ປກສ ແຂວງ ໃນທົ່ວປະເທດ ເຄື່ອນໄຫວວຽກງານວິຊາສະເພາະໃຫ້ແຂງແຮງ ແລະ ຕໍ່ເນື່ອງ ຖືກຕາມຫຼັກວິຊາສະເພາະ ໂດຍສະເພາະແມ່ນແຂວງທີ່ຫຼ່ແຫຼມ ພື້ນທີ່ສ່ຽງທີ່ຈະເປັນແຫຼ່ງຜະລິດ, ຂົນສົ່ງຢາເສບຕິດ, ເຂດຊາຍແດນລະຫວ່າງປະເທດ, ລະຫວ່າງແຂວງຕໍ່ແຂວງ, ລະຫວ່າງເມືອງຕໍ່ເມືອງ;

6) ວຽກງານເພີ່ມທະວີການຮ່ວມມືສາກົນ: ສືບຕໍ່ພົວພັນຮ່ວມມືກັບອົງການສະກັດກັ້ນຕ້ານຢາເສບຕິດປະເທດເພື່ອນມິດຍຸດທະສາດ, ບັນດາປະເທດໃນຂົງເຂດພາກພື້ນ ແລະ ອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງ; ກະກຽມເປັນເຈົ້າພາບຈັດກອງປະຊຸມລະດັບລັດຖະມົນຕີອາຊຽນ ວ່າດ້ວຍບັນຫາຢາເສບຕິດ ຄັ້ງທີ 8 ແລະ ກອງປະຊຸມອື່ນໆອີກຈຳນວນໜຶ່ງ.

**IV. ການກະກຽມສະຫຼຸບ, ປະເມີນຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ.**

ໄລຍະທີ III ແຕ່ເດືອນ 09/2023-12/2023 ແມ່ນໄລຍະສະຫຼຸບ, ປະເມີນຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດ. ໃນໄລຍະນີ້, ແມ່ນໄດ້ມອບໃຫ້ຄະນະພັກ-ການນຳຂັ້ນກະຊວງ, ຂະແໜງການທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ຈັດຕັ້ງການສະຫຼຸບ, ປະເມີນຜົນ, ຕີລາຄາຄືນການຈັດຕັ້ງປະຕິບັດ, ຖອນຖອນບົດຮຽນຂອງວາລະແຫ່ງຊາດ ແລະ ຈັດຕັ້ງການຍ້ອງຍໍ. ສຳລັບກົມກອງລວມໝູ່ ແລະ ບຸກຄົນຜູ້ທີ່ມີຜົນງານດີເດັ່ນ ໃຫ້ສຳເລັດ ຄື ດັ່ງນີ້:

- ຂັ້ນເມືອງ/ນະຄອນ (ໃຫ້ສຳເລັດພາຍໃນເດືອນ 09/2023);
- ຂັ້ນແຂວງ/ນະຄອນຫຼວງ (ໃຫ້ສຳເລັດພາຍໃນເດືອນ 10/2023);
- ຂັ້ນກະຊວງ, ອົງການທຽບເທົ່າ, ຂະແໜງການ (ໃຫ້ສຳເລັດພາຍໃນເດືອນ 11/2023);
- ຂັ້ນລັດຖະບານ (ໃຫ້ສຳເລັດພາຍໃນເດືອນ 12/2023).

## ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ



ໃນວາລະການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ວັນທີ 29 ມິຖຸນາ 2023 ທ່ານ ພົທ ສຸວອນ ເລືອງບຸນມີ ຮອງປະທານສະພາແຫ່ງຊາດ ໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄຳເຫັນ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະເກືອບ 2 ປີຜ່ານມາ (ແຕ່ເດືອນກໍລະກົດ 2021-ເດືອນມິຖຸນາ 2023) ມີດັ່ງນີ້:

**I. ຕໍ່ກັບພາກສະຫຼຸບ:**

ຜ່ານການຮັບຟັງບົດລາຍງານ ຂອງລັດຖະບານ, ຄະນະປະຈຳສະພາແຫ່ງຊາດ ສະແດງຄວາມຊົມເຊີຍຕໍ່ລັດຖະບານທີ່ໄດ້ມີຄວາມພະຍາຍາມ ໃນການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ກ່ຽວກັບວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ (2021-2023) ໃນເງື່ອນໄຂສະພາບການຂອງໂລກ ແລະ ພາກພື້ນ ມີຄວາມຜັນແປຢ່າງສັບສົນ ບວກກັບຄວາມຫຍຸ້ງຍາກຈາກປັດໄຈພາຍໃນ ເປັນຕົ້ນແມ່ນ ຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ສະພາບການລະບາດຂອງພະຍາດໂຄວິດ-19 ແລະ ປາກົດການຫຍໍ້ທໍ້ຂອງສັງຄົມຫຼາຍດ້ານແຕ່ລັດຖະບານ ກໍໄດ້ເອົາໃຈໃສ່ຈັດຕັ້ງປະຕິບັດ ໃນຕະຫຼອດໄລຍະເກືອບ 2 ປີ ຜ່ານມາ ຊຶ່ງສາມາດຍາດໄດ້ຜົນສຳເລັດທີ່ສຳຄັນ ດັ່ງນີ້:

1. ລັດຖະບານ ໄດ້ມີແຜນວຽກຈຸດສຸມ, ມີການແບ່ງຄວາມຮັບຜິດຊອບໃຫ້ແຕ່ພາກສ່ວນ, ມີການວາງລະບອບຊີ້ນຳ-ບັນຊາ ແລະ ກຳນົດເວລາຈັດຕັ້ງປະຕິບັດຢ່າງລະອຽດ, ຈະແຈ້ງ ສະດວກໃນການຕິດຕາມກວດກາ, ຊຸກຍູ້ ແລະ ປະເມີນຜົນໃນແຕ່ລະໄລຍະ;

2. ຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໄດ້ຕັ້ງໜ້ານຳພາ-ຊີ້ນຳ ສ້າງຄວາມເປັນເອກະພາບທາງດ້ານທັດສະນະ, ຄວາມຮັບຮູ້ເຂົ້າໃຈ ແລະ ການກະທຳຕົວຈິງ ໃນທົ່ວລະບົບການເມືອງ ແລະ ໃນທົ່ວສັງຄົມ ຊຶ່ງໄດ້ກາຍເປັນກຳລັງແຮງສັງລວມ ໃຫ້ແກ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ;

3. ການຈັດຕັ້ງປະຕິບັດຕົວຈິງ, ລັດຖະບານໄດ້ຖືເອົາການຕ້ານ, ສະກັດກັ້ນ ແລະ ປ້ອງກັນ ໄປພ້ອມກັບການປາບປາມ, ໃນນັ້ນ ໄດ້ຖືເອົາການໂຄສະນາ, ປຸກລະດົມ, ສຶກສາອົບຮົມ ເປັນຕົ້ນຕໍ ໄປພ້ອມກັບການນຳໃຊ້ມາດຕະການທາງດ້ານກົດໝາຍ ລົງໂທດຕໍ່ຜູ້ກະທຳຜິດ ກ່ຽວກັບບັນຫາຢາເສບຕິດ ເປັນອັນສຳຄັນຢ່າງເດັດຂາດ ແລະ ເຂັ້ມງວດ;

4. ໄດ້ເອົາໃຈໃສ່ ສ້າງບັນດາເຄື່ອງມື ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດ ເປັນຕົ້ນແມ່ນ ໄດ້ສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍທີ່ກ່ຽວຂ້ອງເຖິງບັນຫາຢາເສບຕິດ ສົມທົບກັບການປັບປຸງກົງຈັກການຈັດຕັ້ງ ແລະ ຍົກລະດັບຄວາມສາມາດໃນການເຄື່ອນໄຫວເຮັດໜ້າທີ່ຂອງອົງການວິຊາສະເພາະທີ່ກ່ຽວຂ້ອງ ໃຫ້ມີຄວາມຮັບປະກັນທາງດ້ານປະລິມານ ແລະ ຄຸນນະພາບ, ປັບປຸງກໍ່ສ້າງພື້ນຖານໂຄງລ່າງ ເປັນຕົ້ນແມ່ນ ສະຖານທີ່ຄຸມຂັງ-ດັດສ້າງ, ສູນບຳບັດ-ປິ່ນປົວ-ຝຶກວິຊາຊີບ, ການປະກອບບຸກຄະລະກອນ, ວັດຖຸອຸປະກອນ, ພາຫະນະຮັບໃຊ້ທີ່ຈຳເປັນ ໃຫ້ແກ່ການເຄື່ອນໄຫວໃນການແກ້ໄຂບັນຢາເສບຕິດ.

ສັງລວມແລ້ວ, ຜ່ານການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຂອງລັດຖະບານໃນໄລຍະເກືອບ 2 ປີຜ່ານມາ, ເຫັນວ່າໄດ້ດຳເນີນໄປຢ່າງຖືກທິດ, ຕາມຄຳສັ່ງຂອງກົມການເມືອງສູນກາງພັກ ແລະ ມະຕິຂອງກອງປະຊຸມສະພາແຫ່ງຊາດ, ອັນພົ້ນເດັ່ນແມ່ນ ໄດ້ຮັບການສະໜັບສະໜູນ-ຊ່ວຍເຫຼືອຈາກບັນດາປະເທດເພື່ອນມິດ, ສາກົນ; ປະຊາຊົນບັນດາເຜົ່າໄດ້ເພີ່ມທະວີຍົກສູງການມີສະຕິໃນການເຄົາລົບກົດໝາຍ, ຮັບຮູ້ເຖິງຜົນຮ້າຍຂອງຢາເສບຕິດ, ເຂົ້າຮ່ວມໃນການແກ້ໄຂບັນຫາຢາເສບຕິດຫຼາຍຂຶ້ນເປັນຕົ້ນແມ່ນ ການແຈ້ງຂໍ້ມູນຫຼັກຖານ ແລະ ແຫຼ່ງຂ່າວໃຫ້ເຈົ້າໜ້າທີ່; ຄະນະພັກ ແລະ ອຳ

ອ່ານຕໍ່ໜ້າ 18...

## ບົດປະກອບ...

(ຕໍ່ຈາກໜ້າ 17)

ນາດການປົກຄອງທ້ອງຖິ່ນແຕ່ລະຂັ້ນ, ພາກສ່ວນເຈົ້າໜ້າທີ່ທີ່ກ່ຽວຂ້ອງໄດ້ເພີ່ມຄວາມຮັບຜິດຊອບຂອງຕົນສູງຂຶ້ນ, ໄດ້ຮັບການຝຶກຝົນຫຼໍ່ຫຼອມໃນຂະບວນການຕົວຈິງ ເພື່ອແກ້ໄຂບັນຫາຢາເສບຕິດໃຫ້ເປັນມືອາຊີບຫຼາຍຂຶ້ນ; ກຸ່ມເສບ, ຂົນສົ່ງ-ຄ້າຂາຍ ແລະ ຜະລິດຢາເສບຕິດມີຄວາມຢ້ານກົວ, ຈຳນວນໜຶ່ງກໍຢຸດເຊົາ; ຜູ້ເສບຢາເສບຕິດ ຫຼື ຜູ້ຖືກເຄາະຮ້າຍຈຳນວນບໍ່ໜ້ອຍ ໄດ້ຮັບການນຳໄປບຳບັດ, ປິ່ນປົວ ກັບຄືນເປັນພົນລະເມືອງດີ, ເຈົ້າໜ້າທີ່ວິຊາເພາະພວກເຮົາ, ສາມາດແກ້ໄຂໄດ້ຫຼາຍຄະດີ, ທຳລາຍແຫຼ່ງຜະລິດ, ແຫຼ່ງຊຸກເຊື່ອງຢາເສບຕິດໄດ້ຫຼາຍສົມຄວນ, ສາມາດແກ້ໄຂສະພາບຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ ແລະ ປະກອບສ່ວນໃນການສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍ ໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາ ໄດ້ໂດຍພື້ນຖານ.

ຄຽງຄູ່ກັບຜົນງານ-ດ້ານດີ ທີ່ກ່າວມານັ້ນ, ຜ່ານການຕິດຕາມກວດກາຂອງຄະນະປະຈຳສະພາແຫ່ງຊາດ ເຫັນວ່າ ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາ ຍັງມີດ້ານອ່ອນ-ຂໍ້ຄົງຄ້າງຈຳນວນໜຶ່ງ ດັ່ງນີ້:

(1) ການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດຍັງຊັກຊ້າ, ການໂຄສະນາສ້າງຄວາມຮັບຮູ້ໃນທົ່ວສັງຄົມ ຍັງບໍ່ທັນເລິກເຊິ່ງ,ທົ່ວເຖິງທຸກເປົ້າໝາຍ ໂດຍສະເພາະແມ່ນເຂດທຸລະກັນດານ, ຫ່າງໄກສອກຫຼີກ, ຜູ້ໃຊ້ແຮງງານ, ສະຖາບັນການສຶກສາ ແລະ ອື່ນໆ ຄວາມເປັນເຈົ້າການຂອງຄະນະນຳບາງຂະແໜງການ, ບາງທ້ອງຖິ່ນຍັງບໍ່ສູງ,ຍັງຖືເປັນວຽກປົກກະຕິທຳມະດາ, ຂະບວນການລວມຍັງບໍ່ທັນແຂງແຮງ, ການສະໜອງບຸກຄະລາກອນ, ງົບປະມານ, ວັດຖຸ, ອຸປະກອນ, ພາຫະນະທີ່ຈຳເປັນ ເພື່ອຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ຍັງພົບຄວາມຫຍຸ້ງຍາກຫຼາຍ, ຊັກຊ້າ ແລະ ຈຳກັດ ເຮັດໃຫ້ການຈັດຕັ້ງປະຕິບັດ ບໍ່ສາມາດດຳເນີນໄປຕາມແຜນການທີ່ກຳນົດໄວ້ແຕ່ຫົວທີ ແລະ ບໍ່ໄດ້ຮັບໝາກຜົນເທົ່າທີ່ຄວນ; (2) ບັນດານິຕິກຳ ຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຈຳນວນໜຶ່ງ ຍັງບໍ່ທັນລະອຽດ, ຄົບຖ້ວນ ເປັນຕົ້ນແມ່ນ: ບັນດານິຕິກຳ ເພື່ອຈັດຕັ້ງປະຕິບັດໂທດປະຫານຊີວິດ, ນິຕິກຳຮັບໃຊ້ໃຫ້ແກ່ການແກ້ໄຂບັນຫາຢາເສບຕິດ ທີ່ເກີດຂຶ້ນໃໝ່ ເຊັ່ນ: ນ້ຳໃບກະທ້ອມ, ກາເຟເຕັ້ນ, ກອກຢາສູບໄຟຟ້າ, ປຸ່ມເປົ້າອາຍແກັດກະຕຸ້ນປະສາດ ຍັງບໍ່ທັນມີ; (3) ການປັບປຸງກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກຂອງພາກສ່ວນເຈົ້າໜ້າທີ່ທີ່ກ່ຽວຂ້ອງ, ລວມທັງການປະກອບວັດຖຸ, ອຸປະກອນ, ພາຫະນະເຕັກນິກຕ່າງໆ ເພື່ອຮັບໃຊ້ວາລະແຫ່ງຊາດ ສ່ວນຫຼາຍ ຍັງສຸມໃສ່ແຕ່ຂັ້ນສູນກາງ, ຂັ້ນອົງການເປັນສ່ວນຫຼາຍ, ສ່ວນຂັ້ນທ້ອງຖິ່ນ ເປັນຕົ້ນແມ່ນ ຂັ້ນເມືອງ, ຂັ້ນບ້ານ ຍັງບໍ່ທັນໄດ້ຮັບການເອົາໃຈໃສ່ສຸມກຳລັງແຮງເທົ່າທີ່ຄວນ ເຮັດໃຫ້ການປະຕິບັດໜ້າທີ່ຢູ່ຂັ້ນຮາກຖານ ຍັງບໍ່ທັນມີປະສິດທິຜົນ; ຄວາມຮັບຮູ້, ຄວາມເຂົ້າໃຈ, ຄວາມສາມາດຂອງພະນັກງານວິຊາການຈຳນວນໜຶ່ງ ຕໍ່ວາລະແຫ່ງຊາດຍັງຈຳກັດ, ຖືເບົາ, ບໍ່ທັນເປັນມືອາຊີບ, ຂາດການຝຶກອົບ ຮົມຢ່າງຕໍ່ເນື່ອງ; ຂອດປະສານງານ ລະຫວ່າງ ກະຊວງ ກັບກະຊວງ, ກະຊວງກັບຂະແໜງການກ່ຽວຂ້ອງ ນັບທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຍັງບໍ່ທັນກົມກຽວ, ບໍ່ທັນຄ່ອງຕົວ, ບາງອົງການ, ຂະແໜງການ ບໍ່ທັນມີຜູ້ປະສານງານ ແລະ ບໍ່ທັນມີກອງປະຊຸມສ່ອງແສງລາຍງານວຽກງານຮ່ວມກັນ ຢ່າງເປັນປົກກະຕິ; (4) ການແກ້ໄຂບັນຫາຢາເສບຕິດຕົວຈິງສ່ວນຫຼາຍແກ້ໄຂໄດ້ແຕ່ເປົ້າໝາຍລາຍຍ່ອຍ ແລະ ເປົ້າໝາຍຮັບຈ້າງຂົນສົ່ງ, ສ່ວນຫົວໂປ່ໂຕການໃຫຍ່ ຍັງບໍ່ສາມາດແກ້ໄຂໄດ້ ບວກໃສ່ກົນອຸບາຍຂອງກຸ່ມຄ້າ-ຂາຍຢາເສບຕິດ ມີລັກສະນະເລິກແລບ-ແນບນຽນຂຶ້ນກວ່າເກົ່າ, ການເກັບກຳຂໍ້ມູນ, ແຫຼ່ງຂ່າວ, ການມີສະຕິລະວັງຕົວຂອງເຈົ້າໜ້າທີ່ຍັງບໍ່ທັນດີ ຈຶ່ງຖືກເປົ້າໝາຍຢາເສບຕິດທຳລາຍເຖິງແກ່ຊີວິດ; ວຽກງານຄຸ້ມຄອງ, ຕິດຕາມການເຄື່ອນໄຫວຂອງເປົ້າໝາຍພົວພັນກັບຢາເສບຕິດ (ທັງຜູ້ຄ້າ-ຂາຍ ແລະ ຜູ້ເສບ) ບໍ່ທັນແໜ້ນ, ບໍ່ທັນເປັນລະບົບຈະແຈ້ງ ແລະ ຮັດກຸມ ເຮັດໃຫ້ການວາງແຜນໃນການແກ້ໄຂບໍ່ທັນມີປະສິດທິພາບເທົ່າທີ່ຄວນ; (5) ສະຖານທີ່ຄຸມຂັງຊົ່ວຄາວ ຂັ້ນເມືອງ, ຂັ້ນແຂວງ ຍັງຄັບແຄບ, ແອອັດ ແລະ ຍັງບໍ່ທັນຮັບປະກັນຄວາມປອດໄພ; ການຮັບປະກັນຊີວິດການເປັນຢູ່, ການປິ່ນປົວເວລາເຈັບເປັນຂອງຜູ້ຖືກຫາ, ນັກໂທດຍັງພົບຄວາມຫຍຸ້ງຍາກ; ແຕ່ລະແຂວງເປົ້າໝາຍຜູ້ເສບຢາ ຍັງມີຈຳນວນຫຼວງຫຼາຍ ແຕ່ສູນບຳບັດ, ປິ່ນປົວ ພັດບໍ່ທັນພຽງພໍ, ບາງແຂວງຍັງບໍ່ມີສູນບຳບັດ, ການບຳບັດຢູ່ຕາມຄົວເຮືອນ, ຕາມໂຮງໝໍ, ຕາມຊຸມຊົນ ຍັງເຮັດໄດ້ໜ້ອຍ; ການສ້າງອາຊີບ, ຝຶກສີມືແຮງງານຍັງເຮັດບໍ່ທັນໄດ້ດີ ແລະ ບໍ່ທັນມີຄຸນນະພາບ ຍ້ອນຂາດຫຼາຍປັດໃຈ, ພື້ນຖານແມ່ນຂາດການມີສ່ວນຮ່ວມຂອງສັງຄົມ ເຮັດໃຫ້ຜູ້ທີ່ຮັບການບຳບັດ, ປິ່ນປົວດີແລ້ວ ຫຼື ພົ້ນໂທດອອກມາ ກັບຄືນສູ່ຄອບຄົວມີເປີເຊັນສູງ ທີ່ຈະກັບຄືນໄປພົວພັນກັບຢາເສບຕິດຕື່ມອີກ; (6) ການດຳເນີນຄະດີຍັງຊັກຊ້າ, ບາງແຂວງຍັງມີຫຼາຍຄະດີຄ້າງຢູ່ໃນໄລຍະການສືບສວນສອບສວນ ຂອງເຈົ້າໜ້າທີ່ ເຮັດໃຫ້ການກັກຂັງພາງເກີນກຳນົດຕາມກົດໝາຍກຳນົດໄວ້, ສາເຫດແມ່ນມີຫຼາຍປັດໃຈ, ເປັນຕົ້ນແມ່ນ ການກວດວິໄຈສານເສບຕິດຊັກຊ້າ, ກົນໄກການປະສານສົມທົບລະຫວ່າງເຈົ້າໜ້າທີ່ກ່ຽວຂ້ອງບໍ່ທັນຮັດກຸມ, ບໍ່ທັນຈອດກັນ ໂດຍສະເພາະແມ່ນຄະດີທີ່ເກີດຂຶ້ນຢູ່ເຂດຫ່າງໄກສອກຫຼີກ ແລະ ການສວຍໃຊ້ໜ້າທີ່ຕຳແໜ່ງຂອງເຈົ້າໜ້າທີ່ຈຳນວນໜຶ່ງ ທີ່ເປັນການລະເມີດກົດໝາຍ;

**II. ຕໍ່ທິດທາງແຜນການໃນຕໍ່ໜ້າ:**

ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ແມ່ນກ້າວເຂົ້າສູ່ໄລຍະທ້າຍຂອງວາລະແຫ່ງຊາດ, ພວກເຮົາຍັງມີເວລາອີກ 6 ເດືອນ ສຳລັບການຈັດຕັ້ງປະຕິບັດ. ແຕ່ເຖິງຢ່າງໃດກໍຕາມການແກ້ໄຂບັນຫາຢາເສບຕິດ ຍັງແມ່ນວຽກງານທີ່ພວກເຮົາຍັງຈະຕ້ອງໄດ້ສືບຕໍ່ປະຕິບັດເປັນປົກກະຕິຕໍ່ເນື່ອງໄປອີກຍາວນານ. ສະນັ້ນ, ສຳລັບທິດທາງແຜນການໃນໄລຍະ 6 ເດືອນທ້າຍປີນີ້ ແລະ ໃນຕໍ່ໜ້າຂອງລັດຖະບານ, ຄະນະປະຈຳສະພາແຫ່ງຊາດ ມີຄວາມເປັນເອກະພາບ, ແຕ່ເພື່ອຮັບປະກັນໃຫ້ບັນລຸຕາມຄາດໝາຍທີ່ວາງໄວ້, ຄະນະປະຈຳສະພາແຫ່ງຊາດ ມີບາງທັດສະນະຕໍ່ລັດຖະບານ ດັ່ງນີ້:

(1) ສືບຕໍ່ເພີ່ມທະວີຍົກສູງບົດບາດ ແລະ ຄວາມສາມາດໃນການນຳພາ-ຊີ້ນຳຂອງຄະນະພັກ ແລະ ອົງການລັດແຕ່ລະຂັ້ນ ໃນການຈັດຕັ້ງປະຕິບັດການແກ້ໄຂບັນຫາຢາເສບຕິດໃຫ້ແຂງແຮງຂຶ້ນກວ່າເກົ່າ ໂດຍເຮັດໃຫ້ວຽກງານດັ່ງກ່າວ ກາຍເປັນໜ້າທີ່, ພັນທະ ແລະ ຄວາມຮັບຜິດຊອບຂອງທຸກພາກສ່ວນໃນສັງຄົມ; ຖືເອົາບັນຫາແກ້ໄຂຢາເສບຕິດເປັນມາດຕະຖານເງື່ອນໄຂໜຶ່ງໃນຂະບວນການຮັກຊາດ ແລະ ພັດທະນາ, ສ້າງໜ່ວຍພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງ ເພື່ອເປັນການປຸກລະດົມ, ຊຸກຍູ້ທຸກຄົນເຂົ້າຮ່ວມຢ່າງແຂງແຮງ ແລະ ເປັນຂະບວນການຟົດຟື້ນ; (2) ສືບຕໍ່ສ້າງຄວາມຮັບຮູ້ ໃຫ້ ສັງຄົມດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ, ຜົນຮ້າຍ ແລະ ຄວາມອັນຕະລາຍຂອງຢາເສບຕິດ ດ້ວຍຫຼາຍຮູບແບບ, ຫຼາຍວິທີຕື່ມອີກ ໂດຍຕິດພັນກັບການໂຄສະນາຕົວແບບດີເດັ່ນໃນການຕ້ານຢາເສບຕິດ, ຂະບວນການສ້າງຄອບຄົວ, ບ້ານ, ສຳນັກງານ-ອົງການ, ໂຮງຮຽນ, ໂຮງແຮມ, ຮ້ານບັນເທີງ ແລະ ຮ້ານອາຫານປອດຢາເສບຕິດໃຫ້ຫຼາຍຂຶ້ນ; (3) ສືບຕໍ່ປັບປຸງບັນດານິຕິກຳທີ່ຈຳເປັນ ຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃຫ້ຄົບຖ້ວນ, ລະອຽດ, ຈະແຈ້ງ, ເປັນຕົ້ນ ນິຕິກຳເພື່ອຈັດຕັ້ງປະຕິບັດໂທດປະຫານຊີວິດ, ນິຕິກຳຮັບໃຊ້ໃຫ້ແກ່ການແກ້ໄຂບັນຫາຢາເສບຕິດປະເພດທີ່ເກີດຂຶ້ນໃໝ່ ເຊັ່ນ: ນ້ຳໃບກະທ້ອມ, ກາເຟເຕັ້ນ, ກອກຢາສູບໄຟຟ້າ, ປຸ່ມເປົ້າອາຍແກັດກະຕຸ້ນປະສາດ ແລະ ອື່ນໆ; (4) ສືບຕໍ່ການປັບປຸງກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກຂອງພາກສ່ວນເຈົ້າໜ້າທີ່ທີ່ກ່ຽວຂ້ອງ, ລວມທັງ ການປະກອບວັດຖຸ, ອຸປະກອນ, ພາຫະນະເຕັກນິກຕ່າງໆ ເພື່ອຮັບໃຊ້ວາລະແຫ່ງຊາດ ໂດຍສະເພາະສຸມໃສ່ຂັ້ນເມືອງ, ຂັ້ນບ້ານໃຫ້ຫຼາຍຂຶ້ນ ເພື່ອມີກຳລັງແຮງພຽງພໍ ໃນການປະຕິບັດການແກ້ໄຂບັນຫາຢາເສບຕິດ ຢູ່ຂັ້ນຮາກຖານ ໃຫ້ມີຄຸນນະພາບ ແລະ ມີປະສິດທິຜົນດີຂຶ້ນ; (5) ເອົາໃຈໃສ່ສ້າງຄວາມເຂັ້ມແຂງດ້ານວິຊາສະເພາະໃຫ້ເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຕໍ່ການແກ້ໄຂຄະດີຢາເສບຕິດ ໃຫ້ມີຄວາມເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບຫຼາຍຂຶ້ນ ໂດຍສະເພາະແມ່ນການປາບປາມຫົວໂປ່ໂຕການ ໃຫ້ມີການລົງໂທດຢ່າງເຂັ້ມງວດ, ເດັດຂາດຕາມກົດໝາຍ. ຄຽງຄູ່ກັນນັ້ນ, ຕ້ອງເດັດຂາດໃນການແກ້ໄຂບັນຫາຢາເສບຕິດ ທີ່ຕິດພັນກັບການກໍ່ໃຫ້ເກີດປາກົດການຫຍໍ້ທໍ້ໃນສັງຄົມ ເຊັ່ນ: ຂີ້ລັກ, ງັດແງະ, ປຸ້ນຈີ້, ຄາດຕະກຳ, ຄ້າປະເວນີ, ຄ້າມະນຸດ, ການຟອກເງິນ, ການພະນັນທີ່ຜິດກົດໝາຍທຸກຮູບແບບ ແລະ ອື່ນໆ ເພື່ອເຮັດໃຫ້ສັງຄົມມີຄວາມສະຫງົບ; (6) ໃຫ້ສົມທົບແໜ້ນ ລະຫວ່າງ 3 ຂະແໜງການ (ປ້ອງກັນຄວາມສະຫງົບ, ສາທາລະນະສຸກ, ແຮງງານ-ສະຫວັດດີການສັງຄົມ) ເພື່ອແບ່ງຄວາມຮັບຜິດຊອບກັນຢ່າງລະອຽດ, ຈະແຈ້ງ ໃນການບຳບັດ-ປິ່ນປົວ ຜູ້ທີ່ຖືກເຄາະຮ້າຍ ກໍຄືຜູ້ເສບຢາ ໃຫ້ມີຄຸນນະພາບ, ນັບທັງການຝຶກສີມືແຮງງານ, ສ້າງອາຊີບໃຫ້ເຂົາເຈົ້າເມື່ອເວລາບຳບັດ-ປິ່ນປົວອອກໄປແລ້ວ ໃຫ້ມີວຽກເຮັດງານທຳ, ບໍ່ກັບໄປຫຍຸ້ງກ່ຽວກັບຢາເສບຕິດອີກ; ນັບທັງການຄົ້ນຄວ້າວາງມາດຕະການແກ້ໄຂໃນໄລຍະຍາວ ກ່ຽວກັບການສ້າງອາຊີບທີ່ໝັ້ນຄົງ, ສ້າງວຽກເຮັດງານທຳໃຫ້ຊາຍໜຸ່ມ ແລະ ຍິງໜຸ່ມ ໃນສັງຄົມໃຫ້ຫຼາຍຂຶ້ນ; (7) ກະຊວງປ້ອງກັນຄວາມສະຫງົບ ແລະ ພາກສ່ວນທີ່ກ່ຽວຂ້ອງ ຊອກຫາທາງອອກ ແລະ ວິທີການແກ້ໄຂບັນຫາຄວາມແອອັດຂອງຜູ້ຕ້ອງຫາຢູ່ສະຖານທີ່ຄຸມຂັງ ຊົ່ວຄາວຢູ່ຂັ້ນເມືອງ, ຂັ້ນແຂວງ ແລະ ສົມທົບກັບຂະແໜງສາທາລະນະສຸກ ໃນການປະຕິບັດນະໂຍບາຍດ້ານມະນຸດສະທຳ ຕໍ່ຜູ້ຕ້ອງຫາ, ນັກໂທດ ໃນຄະດີຢາເສບຕິດ ແລະ ຄະດີອື່ນໆ ໃຫ້ເຂົາເຈົ້າໄດ້ຮັບການປິ່ນປົວສຸຂະພາບ ໃນເວລາເຈັບເປັນ ນັບທັງຄົ້ນຄ້ວາເພີ່ມອັດຕາກິນໃຫ້ມີຄວາມເໝາະສົມ; (8) ສືບຕໍ່ເພີ່ມທະວີໃນການຮ່ວມມືກັບສາກົນ ເພື່ອດູດດຶງເອົາການສະໜັບສະໜູນ, ຊ່ວຍເຫຼືອທາງດ້ານເຕັກນິກ, ວິຊາການ, ແລກປ່ຽນຂໍ້ມູນ-ຂ່າວສານ ແລະ ທຶນຮອນຈາກບັນດາປະເທດເພື່ອນມິດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ.



# ຖະແຫຼງຜົນສຳເລັດການພິຈາລະນາ ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ



ທ່ານ ພິນໂຫ ສຸວອນເລືອງບຸນມີ ຮອງປະທານສະພາແຫ່ງຊາດຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ໃນວັນທີ 3 ກໍລະກົດຜ່ານມາ, ກ່ຽວກັບຜົນສຳເລັດການພິຈາລະນາບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ: ຂ້າພະເຈົ້າມີຄວາມຍິນດີ ແລະ ຖືເປັນກຽດຢ່າງສູງ ແຈ້ງມາຍັງພະນັກງານ-ລັດຖະກອນ, ທະຫານ-ຕຳຫຼວດ ຕະຫຼອດຮອດພໍ່ແມ່ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ກໍຄືພີ່ນ້ອງເຊື້ອຊາດລາວທີ່ອາໃສຢູ່ຕ່າງປະເທດໄດ້ຮັບຊາບຢ່າງທົ່ວເຖິງຕໍ່ຜົນສຳເລັດກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດໃນໄລຍະເກືອບ 2 ປີຜ່ານມາ (ແຕ່ເດືອນກໍລະກົດ 2021 ເຖິງ ເດືອນມິຖຸນາ 2023). ໂດຍມີເນື້ອໃນ ດັ່ງນີ້: ໃນຕອນບ່າຍ ຂອງວັນທີ29 ມິຖຸນາ 2023 ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຮັບຟັງລາຍງານຂອງລັດຖະບານ ກ່ຽວກັບຜົນການຈັດຕັ້ງປະຕິບັດວາລະແຫ່ງຊາດວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະເກືອບ 2 ປີທີ່ຜ່ານມາ ແລະ ຮັບຟັງບົດປະກອບຄວາມເຫັນ ຂອງຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດ ຈຳນວນ 9 ທ່ານ, ຍິງ 1 ທ່ານ ຕໍ່ບົດລາຍງານດັ່ງກ່າວ.

ກອງປະຊຸມ ໄດ້ສະແດງຄວາມຊົມເຊີຍຕໍ່ລັດຖະບານທີ່ໄດ້ມີຄວາມພະຍາຍາມຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 04/ສພຊ, ລົງວັນທີ 10 ສິງຫາ 2021 ໃນເງື່ອນໄຂທີ່ປະເທດເຮົາພວມປະສົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ແລະ ຜົນກະທົບຈາກການແຜ່ລະບາດ ຂອງພະຍາດໂຄວິດ-19, ແຕ່ລັດຖະບານ ກໍຄືຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ໄດ້ມີຄວາມຕັດສິນໃຈ ແລະ ມີຄວາມຮັບຜິດຊອບສູງໃນການຊີ້ນຳເຊິ່ງສາມາດຈັດຕັ້ງປະຕິບັດແຜນການຕາມ 6 ວຽກຈຸດສຸມ ຂອງວາລະແຫ່ງຊາດ ໄດ້ມີຄວາມຄືບໜ້າຢ່າງຕໍ່ເນື່ອງ ແລະ ມີຜົນສຳເລັດຫຼາຍດ້ານ, ອັນພົ້ນເດັ່ນແມ່ນໄດ້ເຮັດໃຫ້ປະຊາຊົນບັນດາເຜົ່າ ແລະ ທຸກຊັ້ນຄົນໃນສັງຄົມ ຮັບຮູ້ ເຂົ້າໃຈ ຕໍ່ຄວາມສຳຄັນໃນການຍົກລະດັບການແກ້ໄຂບັນຫາຢາເສບຕິດ ເປັນວາລະແຫ່ງຊາດ, ຮັບຮູ້ຜົນຮ້າຍ ແລະ ຄວາມອັນຕະລາຍ ຂອງຢາເສບຕິດ ແລະ ມີຄວາມຈຳເປັນຕ້ອງເພີ່ມທະວີການມີສະຕິຕໍ່ການເຄົາລົບກົດໝາຍ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດວາລະແຫ່ງຊາດດັ່ງກ່າວຢ່າງເປັນຂະບວນການກວ້າງຂວາງ; ຕະຫຼອດໄລຍະເກືອບ 2 ປີຜ່ານມາ, ຄະນະພັກ ແລະ ອົງການປົກຄອງທ້ອງຖິ່ນແຕ່ລະຂັ້ນ ກໍຄືເຈົ້າໜ້າທີ່ທຸກພາກສ່ວນໄດ້ເພີ່ມທະວີຄວາມຮັບຜິດຊອບ ແລະ ຄວາມສາມາດຂອງຕົນສູງຂຶ້ນ ຕໍ່ການແກ້ໄຂບັນຫາຢາເສບຕິດ ເຊິ່ງຜ່ານການປະຕິບັດຕົວຈິງ ກໍສາມາດແກ້ໄຂມ້າງລາຍຄະດີຢາເສບຕິດໄດ້ຫຼວງຫຼາຍພໍສົມຄວນ ເຊິ່ງໄດ້ເຮັດໃຫ້ກຸ່ມເສບ, ຂົນສົ່ງ-ຄ້າຂາຍຢາເສບຕິດມີຄວາມຢ້ານກົວ, ຈຳນວນໜຶ່ງໄດ້ຢຸດເຊົາ; ຜູ້ເສບຢາເສບຕິດ ຫຼື ຜູ້ຖືກເຄາະຮ້າຍ ຈຳນວນບໍ່ໜ້ອຍ ໄດ້ຮັບການບຳບັດ, ປິ່ນປົວ ແລ້ວກັບຄືນເປັນພົນລະເມືອງດີ; ບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນໄດ້ໃຫ້ການສະໜັບສະໜູນ, ຊ່ວຍເຫຼືອ ແລະ ຮ່ວມມື ເພື່ອແກ້ໄຂບັນຫາຢາເສບຕິດ, ສາມາດແກ້ໄຂສະພາບຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມໄດ້ໂດຍພື້ນຖານ ແລະ ປະກອບສ່ວນໃນການສ້າງສະພາບແວດລ້ອມ ທີ່ເອື້ອອຳນວຍໃຫ້ແກ່ການປົກປັກຮັກສາປະເທດຊາດ, ການພັດທະນາເສດຖະກິດ-ສັງຄົມ ແລະ ການດຳລົງຊີວິດຂອງປະຊາຊົນບັນດາເຜົ່າ.

ກອງປະຊຸມຍັງຍົກໃຫ້ເຫັນດ້ານອ່ອນ-ຄົງຄ້າງ, ທີ່ລັດຖະບານຕ້ອງໄດ້ສູ້ຊົນແກ້ໄຂໃນຕໍ່ໜ້າໃຫ້ດີຂຶ້ນກວ່າເກົ່າ ເປັນຕົ້ນແມ່ນ: ການຈັດຕັ້ງຜັນຂະຫຍາຍວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະຜ່ານມາ ຍັງຊັກຊ້າ, ການໂຄສະນາສ້າງຄວາມຮັບຮູ້ໃນທົ່ວສັງຄົມ ຍັງບໍ່ທັນເລິກເຊິ່ງ ແລະ ທົ່ວເຖິງ, ຄວາມເປັນເຈົ້າການຂອງຄະນະນຳບາງຂະແໜງການ, ບາງທ້ອງຖິ່ນຍັງບໍ່ສູງ; ຂະບວນການລວມຍັງບໍ່ທັນຟົດຟື້ນແຂງແຮງ, ການສະໜອງບຸກຄະລາກອນ, ງົບປະມານ, ວັດຖຸ, ອຸປະກອນ, ພາຫະນະທີ່ຈຳເປັນ ເພື່ອຮັບໃຊ້ໃນການປະຕິບັດວາລະແຫ່ງຊາດ ຍັງຊັກຊ້າ ແລະ ມີຄວາມຈຳກັດຫຼາຍ;

ບັນດານິຕິກຳ ຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດ ຍັງບໍ່ທັນລະອຽດ, ຄົບຖ້ວນ; ການປັບປຸງກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກຂອງພາກສ່ວນເຈົ້າໜ້າທີ່ທີ່ກ່ຽວຂ້ອງ ຢູ່ຂັ້ນຮາກຖານ ເປັນຕົ້ນ ຂັ້ນເມືອງ, ຂັ້ນບ້ານ ຍັງບໍ່ທັນໄດ້ຮັບການປັບປຸງໃຫ້ໜັກແໜ້ນເທົ່າທີ່ຄວນ; ຂອດປະສານງານຍັງບໍ່ທັນດີ; ການແກ້ໄຂບັນຫາຢາເສບຕິດຕົວຈິງ ສ່ວນຫຼາຍແກ້ໄຂໄດ້ແຕ່ເປົ້າໝາຍລາຍຍ່ອຍ ແລະ ເປົ້າໝາຍຮັບຈ້າງຂົນສົ່ງ, ຍັງບໍ່ທັນສາມາດແກ້ໄຂເປົ້າໝາຍໃຫຍ່ທີ່ເປັນຫົວໂປ່ໂຕການ; ພື້ນຖານໂຄງລ່າງ ເປັນຕົ້ນ ສະຖານທີ່ຄຸມຂັງ, ສູນບຳບັດ-ປິ່ນປົວ ຢູ່ຂັ້ນແຂວງ, ຂັ້ນເມືອງ ຍັງຄັບແຄບແອອັດ, ການສ້າງວິຊາອາຊີບ, ການຝຶກສີມືແຮງງານຢູ່ຄ້າຍຄຸມຂັງ ແລະ ສູນບຳບັດປິ່ນປົວ ຍັງເຮັດບໍ່ທັນໄດ້ດີ ແລະ ບໍ່ທັນມີຄຸນນະພາບ, ສັງຄົມຍັງມີສ່ວນຮ່ວມບໍ່ຫຼາຍ.

ການດຳເນີນຄະດີກ່ຽວກັບຢາເສບຕິດຍັງຊັກຊ້າ, ການກັກຂັງພາງເກີນກຳນົດ, ການກວດວິໄຈສານເສບຕິດຊັກຊ້າ, ກົນໄກການປະສານສົມທົບລະຫວ່າງເຈົ້າໜ້າທີ່ກ່ຽວຂ້ອງບໍ່ທັນຮັດກຸມ, ບໍ່ທັນຈອດກັນ ໂດຍສະເພາະແມ່ນຄະດີທີ່ເກີດຂຶ້ນຢູ່ເຂດຫ່າງໄກສອກຫຼີກ, ຍັງມີການສວຍໃຊ້ໜ້າທີ່ຕຳແໜ່ງຂອງເຈົ້າໜ້າທີ່ຈຳນວນໜຶ່ງ.

ສຳລັບທິດທາງແຜນການໃນໄລຍະ 6 ເດືອນທ້າຍປີ 2023 ກໍຄືໃນຕໍ່ໜ້າ, ກອງປະຊຸມເຫັນດີເປັນເອກະພາບ ໃຫ້ລັດຖະບານ ກໍຄືທຸກພາກສ່ວນໃນສັງຄົມ ສືບຕໍ່ຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ດັ່ງນີ້:

1. ສືບຕໍ່ເພີ່ມທະວີບົດບາດ ແລະ ຄວາມສາມາດໃນການນຳພາ-ຊີ້ນຳ ຂອງຄະນະພັກ ແລະ ອົງການລັດແຕ່ລະຂັ້ນ ໃຫ້ແຂງແຮງຂຶ້ນກວ່າເກົ່າ ໂດຍເຮັດໃຫ້ວຽກງານແກ້ໄຂບັນຫາຢາເສບຕິດກາຍເປັນໜ້າທີ່, ພັນທະ ແລະ ຄວາມຮັບຜິດຊອບ ຂອງທຸກພາກສ່ວນໃນສັງຄົມ; ຖືເອົາບັນຫາແກ້ໄຂຢາເສບຕິດ ເປັນມາດຕະຖານເງື່ອນໄຂໜຶ່ງ ໃນຂະບວນການແຂ່ງຂັນຮັກຊາດ ແລະ ພັດທະນາ ຕິດພັນກັບການສ້າງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ແລະ ຕິດພັນກັບວຽກງານກໍ່ສ້າງຮາກຖານການເມືອງເພື່ອເປັນການປຸກລະດົມ, ຊຸກຍູ້ທຸກຄົນເຂົ້າຮ່ວມຢ່າງແຂງແຮງ ແລະ ເປັນຂະບວນການຟົດຟື້ນ;

2. ສືບຕໍ່ສ້າງຄວາມຮັບຮູ້ໃຫ້ສັງຄົມ ດ້ວຍການສຶກສາອົບຮົມ, ໂຄສະນາເຜີຍແຜ່ລະບຽບກົດໝາຍ, ຜົນຮ້າຍ ແລະ ຄວາມອັນຕະລາຍຂອງຢາເສບຕິດ ດ້ວຍຫຼາຍຮູບແບບ, ຫຼາຍວິທີຕື່ມອີກ ໂດຍຕິດພັນກັບການໂຄສະນາຕົວແບບດີເດັ່ນໃນການຕ້ານຢາເສບຕິດ, ຂະບວນການສ້າງຄອບຄົວ, ບ້ານ, ສຳນັກງານ-ອົງການ, ໂຮງຮຽນ, ໂຮງໝໍ, ສະຖາບັນ, ໂຮງແຮມ, ຮ້ານບັນເທີງ ແລະ ຮ້ານອາຫານປອດຢາເສບຕິດ ໃຫ້ຫຼາຍຂຶ້ນ;

3. ສືບຕໍ່ປັບປຸງບັນດານິຕິກຳທີ່ຈຳເປັນຮັບໃຊ້ໃຫ້ແກ່ການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃຫ້ຄົບຖ້ວນ, ລະອຽດ, ຈະແຈ້ງ, ຮັດກຸມ ເປັນຕົ້ນ ນິຕິກຳ ເພື່ອຈັດຕັ້ງປະຕິບັດໂທດປະຫານຊີວິດ, ນິຕິກຳທີ່ຈະບັນຈຸ ປະເພດຢາເສບຕິດທີ່ເກີດຂຶ້ນໃໝ່ ເຊັ່ນ: ນ້ຳໃບກະທ້ອມ, ກາເຟເຕັ້ນ, ຢາສູບໄຟຟ້າ, ປຸ່ມເປົ້າອາຍແກັດກະຕຸ້ນປະສາດ ແລະ ອື່ນໆ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດແກ້ໄຂບັນຫາດັ່ງກ່າວ;

4. ສືບຕໍ່ປັບປຸງກົງຈັກການຈັດຕັ້ງ, ແບບແຜນວິທີເຮັດວຽກ ຂອງພາກສ່ວນເຈົ້າໜ້າທີ່ທີ່ກ່ຽວຂ້ອງ ໂດຍສະເພາະສຸມໃສ່ຂັ້ນເມືອງ, ຂັ້ນບ້ານ ໃຫ້ຫຼາຍຂຶ້ນ ເພື່ອມີກຳລັງແຮງພຽງພໍ ໃນການປະຕິບັດການແກ້ໄຂບັນຫາຢາເສບຕິດ ຢູ່ຂັ້ນຮາກຖານ ໃຫ້ມີຄຸນນະພາບ ແລະມີປະສິດທິຜົນດີຂຶ້ນ. ພ້ອມນີ້, ເອົາໃຈໃສ່ສ້າງຄວາມເຂັ້ມແຂງດ້ານວິຊາສະເພາະໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ຕໍ່ການແກ້ໄຂຄະດີຢາເສບຕິດ ໃຫ້ມີຄວາມເດັດຂາດ, ໂປ່ງໃສ ແລະ ເປັນມືອາຊີບຫຼາຍຂຶ້ນ;

5. ໃຫ້ສົມທົບ 3 ຂະແໜງການ (ປ້ອງກັນຄວາມສະຫງົບ, ສາທາລະນະສຸກ, ແຮງງານ-ສະຫວັດດີການສັງຄົມ) ມີການແບ່ງຄວາມຮັບຜິດຊອບກັນຢ່າງລະອຽດ, ຈະແຈ້ງ ໃນການບຳບັດ-ປິ່ນປົວ ຜູ້ທີ່ຖືກເຄາະຮ້າຍ ກໍຄືຜູ້ເສບຢາ ໃຫ້ມີຄຸນະພາບ, ນັບທັງການຝຶກສີມືແຮງງານ, ສ້າງອາຊີບໃຫ້ເຂົາເຈົ້າເມື່ອເວລາອອກຈາກການບຳບັດປິ່ນປົວໄປແລ້ວ ໃຫ້ມີວຽກເຮັດງານທຳ, ບໍ່ກັບໄປຫຍຸ້ງກ່ຽວກັບຢາເສບຕິດອີກ; ນັບທັງການຄົ້ນຄວ້າວາງມາດຕະການແກ້ໄຂໃນໄລຍະຍາວ ກ່ຽວກັບການສ້າງອາຊີບທີ່ໝັ້ນຄົງ, ສ້າງວຽກເຮັດງານທຳໃຫ້ຊາຍໜຸ່ມ ແລະ ຍິງໜຸ່ມ ໃນສັງຄົມໃຫ້ຫຼາຍຂຶ້ນ;

6. ກະຊວງປ້ອງກັນຄວາມສະຫງົບແລະພາກສ່ວນທີ່ກ່ຽວຂ້ອງຊອກຫາທາງອອກ ແລະ ວິທີການແກ້ໄຂບັນຫາຄວາມແອອັດ ຂອງຜູ້ຕ້ອງຫາຢູ່ສະຖານທີ່ຄຸມຂັງຊົ່ວຄາວຢູ່ຂັ້ນເມືອງ, ຂັ້ນແຂວງ ແລະ ສົມທົບກັບຂະແໜງສາທາລະນະສຸກ ໃນການປະຕິບັດນະໂຍບາຍດ້ານມະນຸດສະທຳຕໍ່ຜູ້ຖືກຕ້ອງຫາ, ນັກໂທດ ໃນຄະດີຢາເສບຕິດ ແລະ ຄະດີອື່ນໆ ໃຫ້ເຂົາເຈົ້າໄດ້ຮັບການປິ່ນປົວສຸຂະພາບໃນເວລາເຈັບເປັນ; ເພື່ອແກ້ໄຂຄວາມແອອັດໃນສະຖານທີ່ກັກຂັງ ຢູ່ທ້ອງຖິ່ນຕ່າງໆ ແລະ ປັບປຸງເງື່ອນໄຂດຳລົງຊີວິດຂອງຜູ້ຖືກຫານັ້ນ, ລັດຖະບານມີແຜນການສະໜອງງົບປະມານທີ່ຈຳເປັນ ໃຫ້ແກ່ຂະແໜງການກ່ຽວຂ້ອງຕາມຄວາມເໝາະສົມ;

7. ສືບຕໍ່ເພີ່ມທະວີໃນການຮ່ວມມືກັບສາກົນ ເພື່ອດູດດຶງເອົາການສະໜັບສະໜູນ, ຊ່ວຍເຫຼືອທາງດ້ານເຕັກນິກ, ວິຊາການ, ແລກປ່ຽນຂໍ້ມູນ-ຂ່າວສານ ແລະ ທຶນຮອນຈາກບັນດາປະເທດເພື່ອນມິດ ແລະ ອົງການຈັດຕັ້ງສາກົນ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນດີຂຶ້ນກວ່າເກົ່າ;

ທັງໝົດທີ່ກ່າວມານັ້ນ, ແມ່ນຜົນຂອງກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃນການຄົ້ນພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ ໃນໄລຍະເກືອບ 2 ປີຜ່ານມາ.

# ບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງຍຸດທະສາດພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035

ທ່ານ ໂພໄຊ ໄຊຍະສອນ ລັດຖະມົນຕີກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ລາຍງານກ່ຽວກັບຍຸດທະສາດພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ເມື່ອວັນທີ 30 ກໍລະກົດ 2023 ມີດັ່ງນີ້: ຍຸດທະສາດການພັດທະນາແຮ່ທາດ ແມ່ນການວາງແຜນ ທີ່ມີເປົ້າໝາຍ, ຄາດໝາຍ ແລະ ຈຸດສຸມ ທີ່ມີລັກສະນະເປັນລະບົບ ແລະ ຕໍ່ເນື່ອງ ໂດຍໄດ້ຄົ້ນຄວ້າ ແລະ ສ້າງຂຶ້ນໂດຍສອດຄ່ອງຕາມກົດໝາຍ, ນະໂຍບາຍ ແລະ ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ ໃນແຕ່ລະໄລຍະ ລວມທັງທ່າອ່ຽງ ແລະ ສິ່ງທ້າທາຍຕໍ່ການພັດທະນາແຮ່ທາດຢູ່ພາຍໃນປະເທດ, ພາກພື້ນ ແລະ ສາກົນ. ຍຸດທະສາດການພັດທະນາແຮ່ທາດ ຈະຖືກປະຕິບັດໃນໄລຍະ 10 ປີ ແລະ ສອດຄ່ອງກັບວິໄສທັດການພັດທະນາແຮ່ທາດໃນໄລຍະ 15 ປີ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ແລະ ການສ້າງຍຸດທະສາດດັ່ງກ່າວ ແມ່ນອີງໃສ່ຫຼັກການພື້ນຖານ ຕາມທີ່ກຳນົດໄວ້ໃນມາດຕາ 13 ຂອງກົດໝາຍວ່າດ້ວຍແຮ່ທາດ ຄື: ສອດຄ່ອງກັບຍຸດທະສາດການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ຄວາມປອດໄພ; ຮັບປະກັນຄວາມສົມດູນລະຫວ່າງການສະຫງວນ ແລະ ການຂຸດຄົ້ນ, ການນຳໃຊ້ຢ່າງປະຢັດ ແລະ ມີປະສິດທິຜົນ ຕາມທິດສີຂຽວ ແລະ ຍືນຍົງ; ຮັບປະກັນການສະໜອງແຮ່ທາດ ແລະ ຜະລິດຕະພັນແຮ່ທາດ ເພື່ອພັດທະນາເສດຖະກິດ-ສັງຄົມ ແລະ ສົ່ງອອກຕ່າງປະເທດ; ນຳໃຊ້ຜົນການສຳຫຼວດທໍລະນີສາດ ແລະ ທາດຂັ້ນພື້ນຖານ ແລະ ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ. ນອກນັ້ນ, ຍັງໄດ້ຖອດຖອນບົດຮຽນຈາກຍຸດທະສາດພັດທະນາແຮ່ທາດຂອງປະເທດໃກ້ຄຽງ ເຊັ່ນ: ປະເທດໄທ (ການຈັດກຸ່ມແຮ່ທາດ, ການບໍລິຫານຈັດການແຮ່ທາດ ແລະ ການຈັດຕັ້ງປະຕິບັດ), ປະເທດຫວຽດນາມ (ເຕັກນິກການຊອກຄົ້ນສຳຫຼວດ, ການປະເມີນປະລິມານຊັບພະຍາກອນ ແລະ ການປະເມີນປະລິມານສະສົມແຮ່ທາດ). ພ້ອມນີ້ ຍັງຖອດຖອນບົດຮຽນ ຈາກປະເທດອົດສະຕຣາລີ(ດ້ານສິ່ງແວດລ້ອມ,ສຸຂະພາບ ແລະ ຄວາມປອດໄພໃນອຸດສາຫະກຳບໍ່ແຮ່) ແລະ ປະເທດເຢຍລະມັນ (ການຂຸດຄົ້ນເກືອໂປຕາສ, ການຂຸດຄົ້ນຫີນແຮ່ອຸດສາຫະກຳ) ແລະ ການປະເມີນຜົນໂຄງການລົງທຶນດ້ານບໍ່ແຮ່ຕາມ 7 ຫຼັກການປະເມີນຜົນ ທີ່ຜັນຂະຫຍາຍຈາກ 10 ຫຼັກການປະເມີນຜົນບໍ່ແຮ່ທີ່ດີຂອງສາກົນ (ICMM).



ຫຼັງຈາກນັ້ນ, ໄດ້ຈັດກອງປະຊຸມປຶກສາຫາລືຮ່ວມກັບຂະແໜງການທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ທັງໝົດ 23 ຄັ້ງ ພ້ອມນີ້ໄດ້ຜ່ານກອງປະຊຸມລັດຖະບານ 2 ຄັ້ງ, ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5, ສະພາແຫ່ງຊາດ ຄັ້ງວັນທີ 31 ພຶດສະພາ 2023 ຈຳນວນ 1 ຄັ້ງ, ກອງປະຊຸມເປີດກວ້າງທາບທາມຄຳຄິດເຫັນ ຮ່ວມກັບ ສະພາແຫ່ງຊາດ ຈຳນວນ 1 ຄັ້ງ ແລະ ກອງປະຊຸມຄະນະປະຈຳສະພາແຫ່ງຊາດຈຳນວນ 1 ຄັ້ງ ໂດຍລວມແລ້ວ ກະຊວງພະລັງງານ ແລະ ບໍ່ແຮ່ ໄດ້ປັບປຸງຕາມຄຳຄິດເຫັນຂອງກອງປະຊຸມ ແລະ ທຸກພາກສ່ວນແມ່ນເຫັນດີເປັນເອກະພາບຕໍ່ຮ່າງຍຸດທະສາດດັ່ງກ່າວໂດຍພື້ນຖານ.

**ຍຸດທະສາດການພັດທະນາແຮ່ທາດ 2021-2030 ແລະ ວິໄສທັດ ຮອດ 2035 ປະກອບມີທັງໝົດ 4 ພາກ ດັ່ງນີ້:**

**ພາກທີ 1:** ສະພາບການຈັດຕັ້ງປະຕິບັດແຜນພັດທະນາແຮ່ທາດ ໃນໄລຍະ 10 ຜ່ານມາ (2011-2020), ເຊິ່ງເນື້ອໃນປະກອບມີ: ສະພາບລວມ, ທົບທວນຄືນຄາດໝາຍສູ້ຊົນ ແລະ ຜົນສຳເລັດການພັດທະນາແຮ່ທາດ ແລະ ສັງເກດຕີລາຄາ ໃນໄລຍະ 10 ຜ່ານມາ (2011-2020).

**ພາກທີ 2:** ໄດ້ກຳນົດທິດທາງ, ວິໄສທັດ, ເປົ້າໝາຍລວມ, ຫຼັກການພື້ນຖານການສ້າງຍຸດທະສາດການພັດທະນາແຮ່ທາດ ແລະ ສິ່ງທ້າທາຍ ຢ່າງຊັດເຈນ ໂດຍສະເພາະ ເນື້ອໃນວິໄສທັດ ຮອດປີ 2035 ຄື: "ພັດທະນາວຽກງານທໍລະນີສາດ ແລະ ບໍ່ແຮ່ ຕາມທິດທັນເປັນອຸດສາຫະກຳທີ່ທັນສະໄໝ, ໂປ່ງໃສ ແລະ ນຳໃຊ້ທ່າແຮງຊັບພະຍາກອນແຮ່ທາດ ຢ່າງປະຢັດ, ມີປະສິດທິພາບ ແລະ ປະສິດທິຜົນສູງ ຕາມເປົ້າໝາຍການພັດທະນາສີຂຽວແລະຍືນຍົງ".

**ພາກທີ 3:** ຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ເຊິ່ງໄດ້ກຳນົດອອກເປັນ 2 ຍຸດທະສາດຄື: "ຊອກຮູ້ ແລະ ປະເມີນທ່າແຮງຊັບພະກອນແຮ່ທາດທົ່ວປະເທດ ແລະ ນຳໃຊ້ຊັບພະຍາກອນແຮ່ທາດໃຫ້ມີປະສິດທິພາບ, ປະສິດທິຜົນ, ມີຄວາມຍືນຍົງ ແລະ ສີຂຽວ", ປະກອບມີ 6 ເປົ້າໝາຍ ແລະ 49 ວຽກຈຸດສຸມ ດັ່ງນີ້: **ເປົ້າໝາຍທີ 1** ການສຳຫຼວດສ້າງຂໍ້ມູນພື້ນຖານດ້ານທໍລະນີສາດ ແລະ ແຮ່ທາດ ແລະ ປະເມີນຊັບພະຍາກອນແຮ່ທາດທົ່ວປະເທດ, ປະກອບມີ 2 ຄາດໝາຍ ແລະ 9 ວຽກຈຸດສຸມ; **ເປົ້າໝາຍທີ 2** ການກຳນົດນະໂຍບາຍການບໍລິຫານຈັດການຄຸ້ມຄອງ ແລະ ພັດທະນາແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ ຕາມທິດສີຂຽວ, ປະກອບມີ 13 ຄາດໝາຍ ແລະ 13 ວຽກຈຸດສຸມ; **ເປົ້າໝາຍທີ 3** ການພັດທະນາກົນໄກບໍລິຫານຈັດການ, ການຄຸ້ມຄອງ, ຕິດຕາມກວດກາ ແລະ ການບັງຄັບໃຊ້ກົດໝາຍ, ປະກອບມີ 5 ຄາດໝາຍ ແລະ 13 ວຽກຈຸດສຸມ; **ເປົ້າໝາຍທີ 4** ສົ່ງເສີມການມີສ່ວນຮ່ວມ ໃນການຄຸ້ມຄອງ ແລະ ພັດທະນາຊັບພະຍາກອນແຮ່ທາດ, ປະກອບມີ 3 ຄາດໝາຍ ແລະ 4 ວຽກຈຸດສຸມ; **ເປົ້າໝາຍທີ 5** ສ້າງຄວາມເຂັ້ມແຂງໃຫ້ລັດວິສາຫະກິດ ແລະ ພະນັກງານໃນຂະແໜງການບໍ່ແຮ່, ປະກອບມີ 4 ຄາດໝາຍ ແລະ 6 ວຽກຈຸດສຸມ; **ເປົ້າໝາຍທີ 6** ການເຊື່ອມສານເປົ້າໝາຍການພັດທະນາແບບຍືນຍົງ (SDG) ແລະ ການເຕີບໂຕສີຂຽວ (GG) ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາພະລັງງານ ແລະ ບໍ່ແຮ່, ປະກອບມີ 3 ຄາດໝາຍ ແລະ 4 ວຽກຈຸດສຸມ.

**ພາກທີ 4:** ມາດຕະການຈັດຕັ້ງປະຕິບັດ, ການຕິດຕາມກວດກາ ແລະ ປະເມີນຜົນ ແມ່ນໄດ້ກຳນົດກ່ຽວກັບອົງການຈັດຕັ້ງໃນການປະສານງານ, ງົບປະມານ ແລະ ແຫຼ່ງທຶນ ລວມທັງນະໂຍບາຍ ແລະ ນິຕິກຳສະໜັບສະໜູນ, ຕິດຕາມກວດກາ ແລະ ປະເມີນຜົນ.

ໃນເປົ້າໝາຍ, ຄາດໝາຍ ແລະ ວຽກຈຸດສຸມຂ້າງເທິງນັ້ນ ແມ່ນມີເນື້ອໃນຕົ້ນຕໍໂດຍຫຍໍ້ ດັ່ງນີ້:

**ເປົ້າໝາຍທີ 1: ການສຳຫຼວດທໍລະນີສາດ ແລະ ແຮ່ທາດຂັ້ນພື້ນຖານ ເພື່ອສືບຕໍ່ປັບປຸງຂໍ້ມູນທໍລະນີສາດ-ແຮ່**ທາດ, ທໍລະນີໄພພິບັດ-ດິນເຈື່ອນ ແລະ ສຶກສາແລກປ່ຽນຂໍ້ມູນກັບບັນດາປະເທດທີ່ມີຊາຍແດນຕິດຈອດກັບ ສປປ ລາວ, ຮັບປະກັນໃຫ້ມີຖານຂໍ້ມູນກ່ຽວກັບຈຸດແຫຼ່ງທ່ອງທ່ຽວດ້ານທໍລະນີສາດ (Geo Site) 10 ຈຸດ; ສືບຕໍ່ສຳຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:200.000 ໃນເຂດທີ່ບໍ່ໄດ້ປະຕິບັດ ທີ່ມີເນື້ອທີ່ 74.696 ກມ2 (31,5% ຂອງເນື້ອທີ່ທົ່ວປະເທດ) ໃຫ້ສຳເລັດ 100%; ຄາດວ່າຈະໃຊ້ງົບປະມານຈຳນວນ 20.701.200 ໂດລາສະຫະລັດ ແລະ ຄັດເລືອກສ້າງແຜນທີ່ທໍລະນີສາດ-ແຮ່ທາດ ຈາກມາດຕາສ່ວນ 1:200.000 ມາເປັນມາດຕາສ່ວນ 1:50.000 ໃນເຂດທີ່ມີທ່າແຮງດ້ານແຮ່ທາດ; ຄາດວ່າຈະໃຊ້ງົບປະມານຈຳນວນ 4.450.000 ໂດລາສະຫະລັດ ເຊິ່ງສະເໜີໃຫ້ນຳໃຊ້ທຶນຂອງລັດ, ຈາກການເຈລະຈາສັນຍາຊອກຄົ້ນ-ສຳຫຼວດ ແລະ ພັດທະນາບໍ່ແຮ່, ແຫຼ່ງທຶນຈາກອົງການຈັດຕັ້ງສາກົນດ້ວຍຮູບແບບການກູ້ຢືມ ແລະ ຊ່ວຍເຫຼືອລ້າ ຫຼື ຈາກແຫຼ່ງທຶນທີ່ມາຈາກພາກສ່ວນເອກະຊົນທັງພາຍໃນ ແລະ ຕ່າງປະເທດ; ສະເພາະແຮ່ທາດໂລຫະໄດ້ຄັດເລືອກໃນເຂດສະຫງວນແຮ່ທາດຂອງລັດຖະບານ 3 ເຂດ ໃນເນື້ອທີ່ 6.893,2 ກມ$^2$ ແລະ ແຮ່ທາດອະໂລຫະ (ຫີນປູນ) ຢູ່ 3 ແຂວງ ໄດ້ຄັດເລືອກເນື້ອທີ່ສ້າງແຜນທີ່ທໍລະນີສາດ ແລະ ແຮ່ທາດ ມາດຕາສ່ວນ 1:50.000 ແຮ່ທາດອະໂລຫະ 3 ເຂດ ໃນເນື້ອທີ່ 1.458,84 ກມ 2; ຊຸກຍູ້, ສົ່ງເສີມໂຄງການ ຫຼື ກິດຈະການຊອກຄົ້ນ ແລະ ສຳຫຼວດແຮ່ທາດ ໃຫ້ກ້າວເຂົ້າສູ່ຂັ້ນຕອນການຂຸດຄົ້ນ, ປຸງແຕ່ງ-ຜະລິດ, ຈຳໜ່າຍ ຫຼາຍກວ່າ 70% ຂອງກິດຈະການທີ່ມີຢູ່ໃນປັດຈຸບັນ.

**ເປົ້າໝາຍທີ 2:** ໃຫ້ການບໍລິຫານຈັດການ (ຄຸ້ມຄອງ ແລະ ພັດທະນາ) ແຮ່ທາດ ຢູ່ພາຍໃນປະເທດ ໃຫ້ມີຄວາມເໝາະສົມ ແລະ ສອດຄ່ອງກັບຄວາມຈຳເປັນນຳໃຊ້ພາຍໃນປະເທດ ບົນພື້ນຖານທ່າແຮງດ້ານແຮ່ທາດ ແລະ ການອະນຸຮັກຮ່ວມກັບການໃຊ້ປະໂຫຍດຊັບພະຍາກອນທຳມະຊາດອື່ນຢ່າງເໝາະສົມ ແລະ ຍືນຍົງ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມ ແຫ່ງຊາດ; ສະເໜີລັດຖະບານ ໃຫ້ບູລິມະສິດໂກຕ້າບຸກຄະລາກອນໃນຂະແໜງທໍລະນີສາດ ແລະ ແຮ່ທາດ ທັງສູນກາງ ແລະ ທ້ອງຖິ່ນ ເພີ່ມຕື່ມ ຢ່າງໜ້ອຍໃຫ້ໄດ້ 100 ຄົນ ໃນປີ 2025 ແລະ 200 ຄົນໃນປີ 2030 ເພື່ອໃຫ້ພຽງພໍກັບຄວາມຮຽກຮ້ອງຕ້ອງການຂອງວຽກງານການຄຸ້ມຄອງກິດຈະການບໍ່ແຮ່ ໃນແຕ່ລະໄລຍະ ພ້ອມທັງຍົກລະດັບວິຊາສະເພາະບຸກຄະລາກອນໃນຂະແໜງການໃຫ້ສູງຂຶ້ນ; ນັບແຕ່ປີ 2025-2030 ໃຫ້ມີການຈຳກັດ, ເລືອກເຟັ້ນ ແລະ ດັດສົມການລົງທຶນດ້ານແຮ່ທາດ ເນື່ອງຈາກວ່າ ລັດຖະບານໄດ້ອະນຸຍາດໃຫ້ບໍລິສັດລົງທຶນໄປຫຼາຍແລ້ວ ເຫັນຄວນອານຸຮັກເຂດສະຫງວນແຮ່ທາດໄວ້ໃຫ້ອະນຸຊົນຄົນຮຸ່ນຫຼັງໄດ້ຊົມໃຊ້ຊັບພະຍາກອນແຮ່ທາດ, ໂດຍມອບໃຫ້ກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຄັດເລືອກຜູ້ລົງທຶນ, ເຈລະຈາ ແລະ ຕາງໜ້າລັດຖະບານ ໃນການເຊັນສັນຍາສຳປະທານພັດທະນາບໍ່ແຮ່ ກັບຜູ້ລົງທຶນ. ສຳລັບຜົນປະໂຫຍດຂອງລັດຖະບານ ແມ່ນຈະປັບປຸງອັດຕາສ່ວນຈາກ ບໍ່ໃຫ້ຫຼຸດ 48% ມາເປັນບໍ່ໃຫ້ຫຼຸດ50% ຂອງກຳໄລສຸດທິ ທີ່ຜູ້ລົງທຶນໄດ້ຮັບ; ການພັດທະນາແຮ່ທາດ ຕ້ອງຄຽງຄູ່ກັບກັບແຜນພັດທະນາຂອງຂະແໜງການອຸດສາຫະກຳ ແລະ ການຄ້າ, ກະສິກຳ ແລະ ປ່າໄມ້, ໂຍທາທິການ ແລະ ຂົນສົ່ງ, ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍສະເພາະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ການຮັກສາທີ່ດິນ ແລະ ເພີ່ມຄວາມປົກຫຸ້ມປ່າໄມ້ 70% ຂອງເນື້ອທີ່ທົ່ວປະເທດ ຕາມຍຸດທະສາດຂອງປ່າໄມ້ຮອດປີ 2035 ແລະ ວິໄສທັດຮອດປີ 2050; ຊຸກຍູ້, ສົ່ງເສີມ ແລະ ສ້າງເງື່ອນໄຂບັນດາໂຄງການ ທີ່ມີໃນປັດຈຸບັນ ແລະ ພາກອຸດສາຫະກຳບໍ່ແຮ່ ໃຫ້ມີການພັດທະນາອຸດສາຫະກຳຕໍ່ເນື່ອງເລີ່ມແຕ່ອຸດສາຫະກຳ ຂັ້ນຕົ້ນ, ຂັ້ນກາງ ແລະ ຂັ້ນສຸດທ້າຍ (UpStream, MidStream, DownStream) ຢູ່ເຂດທີ່ມີຄວາມເໝາະສົມ ເພື່ອພັດທະນາແຮ່ທາດໃຫ້ເກີດປະໂຫຍດສູງສຸດ; ສືບຕໍ່ພັດທະນາວຽກງານຄົ້ນຄວ້າ, ບໍລິການວິໄຈ ແລະ ທົດລອງ, ວຽກງານທໍລະນີສາດ-ບໍ່ແຮ່ ແລະ ໂລຫະກຳ ໂດຍສົມທົບກັບສະຖາບັນການສຶກສາ, ບໍລິສັດ ແລະ ລັດວິສາຫະກິດ ທັງພາຍໃນ ແລະ ຕ່າງປະເທດ ໃຫ້ໄດ້ຢ່າງໜ້ອຍ 3 ໂຄງການ. ພ້ອມທັງສ້າງຫໍພິພິຕະພັນແຮ່ທາດ 1 ແຫ່ງ; ເປົ້າໝາຍການພັດທະນາແຮ່ທາດແຕ່ລະຊະນິດ ໂດຍແຍກເປັນ 3 ໝວດ (ແຮ່ທາດໂລຫະ, ແຮ່ທາດອະໂລຫະ ແລະ ພະລັງງານເຊື້ອໄຟ) ດັ່ງນີ້:

**+ ໝວດແຮ່ທາດໂລຫະ:**

**- ແຮ ຄຳ-ເງິນ ແລະ ທອງ:** ສືບຕໍ່ຊຸກຍູ້ໃຫ້ມີການຜະລິດ-ຈຳໜ່າຍ ເປັນປົກກະຕິ, ພ້ອມທັງຊຸກຍູ້, ສົ່ງເສີມ ແລະ ຍົກລະດັບໂຮງງານປຸງແຕ່ງແຮ່ທາດ ໃຫ້ສາມາດແຍກໂລຫະປະສົມອອກເປັນທາດດຽວທຸກໂຄງການໃຫ້ສຳເລັດ ບໍໃຫ້ເກີນ ປີ 2030 ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ ທັງນີ້ ເພື່ອເປັນການຈຳກັດການນຳເຂົ້າໂລຫະຄຳ ຈາກຕ່າງປະເທດ;

**- ແຮ່ເຫຼັກ:** ສູ້ຊົນສົ່ງເສີມໃຫ້ສ້າງຕັ້ງໂຮງງານຫຼອມເຫຼັກ ໃຫ້ໄດ້ຢ່າງໜ້ອຍ 1 ແຫ່ງພາຍໃນປີ 2025 ເພື່ອຫຼຸດຜ່ອນການສົ່ງອອກແຮ່ເຫຼັກໄປຈຳໜ່າຍຢູ່ຕ່າງປະເທດ ແລະ ຫຼຸດຜ່ອນ ຫຼື ຍົກເວັ້ນການເກັບອາກອນມູນຄ່າເພີ່ມຂອດຈຳໜ່າຍພາຍໃນ ລວມທັງວັດຖຸດິບຮັບໃຊ້ໂຮງງານຫຼອມເຫຼັກ;

**- ແຮ່ກົ່ວ, ແຮ່ຊືນ ແລະ ແຮ່ສັງກະສີ:** ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານຫຼອມ ເພື່ອສ້າງເປັນຜະລິດຕະພັນໂລຫະກ່ອນສົ່ງອອກຈຳໜ່າຍຕ່າງປະເທດໃຫ້ໄດ້ 2 ແຫ່ງ. ສຳລັບເຂດໂພນຕິ້ວ ອ່າງນໍ້າປ່າແຫ່ນ, ແຂວງຄຳມ່ວນ ຫ້າມບໍ່ໃຫ້ອອກອະນຸຍາດໂຄງການແຮ່ທາດໃໝ່ ສຳລັບໂຄງການຂະໜາດນ້ອຍທີ່ໄດ້ອອກອະນຸຍາດໄປແລ້ວ ພາຍຫຼັງໝົດອາຍຸສັນຍາ ແມ່ນບໍ່ໃຫ້ສືບຕໍ່ໂຄງການ ແລະ ມອບເນື້ອທີ່ດັ່ງກ່າວໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວ ເຮັດການສຳຫຼວດ ແລະ ປະເມີນແຫຼ່ງແຮ່ຄືນໃໝ່ ເພື່ອສ້າງເປັນອຸດສາຫະກຳ ທີ່ທັນສະໄໝ.

**- ແຮ່ບົກຊິດ:** ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານຜະລິດອາລູມີນາ ຢ່າງໜ້ອຍ 1 ແຫ່ງ ແລະ ມີຜະລິດຕະພັນອາລູມີນາ

ອ່ານຕໍ່ໜ້າ 21...

## ບົດລາຍງານ...

(ຕໍ່ຈາກໜ້າ 20ໄ)

ໃນປີ 2026;

**- ແຮ່ທາດຫາຍາກ:** ຊຸກຍູ້ສົ່ງເສີມໃຫ້ມີການສ້າງຕັ້ງໂຮງງານແຍກແຮ່ທາດຫາຍາກ (ແຍກທາດດ່ຽວ) ກ່ອນການສົ່ງອອກ ໃຫ້ໄດ້ຢ່າງໜ້ອຍ 1 ແຫ່ງ ຢູ່ແຂວງຊຽງຂວາງ ກ່ອນປີ 2030 ແລະ ຮອດປີ 2027 ຕ້ອງຄັດຈ້ອນບັນດາໂຄງການລົງທຶນແຮ່ທາດຫາຍາກ ບໍ່ໃຫ້ເກີນ 15 ໂຄງການ ແລະ ບໍ່ອະນຸຍາດໂຄງການລົງທຶນແຮ່ທາດຫາຍາກໃໝ່. ພ້ອມນັ້ນ, ໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວ ຕາງໜ້າລັດຖະບານ ໃນການຊື້ ຂາຍ ແຮ່ທາດຫາຍາກ;

**+ ໝວດແຮ່ທາດອະໂລຫະ:**

- ແຮ່ໂປຕາສ ຊຸກຍູ້ ສົ່ງເສີມບັນດາໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ເກືອໂປຕາສ ທີ່ລັດຖະບານໄດ້ອອກອະນຸຍາດຜ່ານມາ ຈຳນວນ 7 ໂຄງການ ໃຫ້ດຳເນີນໂຄງການປົກກະຕິ ແລະ ບໍ່ຄວນອະນຸຍາດໂຄງການໃໝ່ຕື່ມອີກ ເນື່ອງຈາກວ່າ ຈຳນວນໂຄງການ, ປະລິມານແຮ່ເກືອໂປຕາສ ທີ່ລັດຖະບານອອກອະນຸຍາດຜ່ານມາແມ່ນພຽງພໍ ແລະ ເໝາະສົມຕໍ່ການພັດທະນາແຮ່ທາດດັ່ງກ່າວແລ້ວ. ອີກຢ່າງໜຶ່ງ ແຫຼ່ງແຮ່ເກືອໂປຕາສໃນ ສປປລາວ ສ່ວນໃຫຍ່ແມ່ນນອນໃນເຂດຕົວເມືອງ ໂດຍສະເພາະ ນະຄອນຫຼວງວຽງຈັນ. ພ້ອມນີ້, ຊຸກຍູ້ ສົ່ງເສີມໃຫ້ສ້າງຕັ້ງໂຮງງານຜະລິດປຸ໋ຍ (ອຸດສາຫະກຳຕໍ່ເນື່ອງ) ໃຫ້ສຳເລັດ 3 ແຫ່ງ ຄື: ນະຄອນຫຼວງວຽງຈັນ 1 ແຫ່ງ ແລະ ແຂວງຄຳມ່ວນ 2 ແຫ່ງ;

**- ແຮ່ບາຣິດ:** ຊຸກຍູ້ສົ່ງເສີມໃຫ້ມີການຜະລິດແຮ່ບາຣິດເປັນຝຸ່ນເພີ່ມຕື່ມ ຢ່າງໜ້ອຍ 1 ແຫ່ງ ແລະ ຊຸກຍູ້ສົ່ງເສີມໃຫ້ມີການປຸງແຕ່ງເພື່ອສາມາດຕອບສະໜອງໃຫ້ກັບອຸດສາຫະກຳຕໍ່ເນື່ອງໄດ້;

**- ຫີນກາວ:** ຫຼຸດຜ່ອນການສົ່ງອອກຫີນກາວທີ່ເປັນແຮ່ດິບ (ຫີນກາວກ້ອນ) ໄປຈຳໜ່າຍຢູ່ຕ່າງປະເທດ ຮອດປີ 2030 ໃຫ້ບັນລຸໄດ້ 70% ຂອງແຜນການທັງໝົດ ດ້ວຍການກຳນົດເຂົ້າໃນສັນຍາສຳປະທານພັດທະນາບໍ່ແຮ່ໃຫ້ສ້າງຕັ້ງໂຮງງານປຸງແຕ່ງຫີນກາວ ແລະ ໂຮງງານຜະລິດແຜ່ນຢິບຊຳ (ສຳລັບໂຄງການໃໝ່ ແລະ ໂຄງການທີ່ສະເໜີຂໍຕໍ່ອາຍຸສັນຍາ), ສືບຕໍ່ຊຸກຍູ້, ສົ່ງເສີມ ແລະ ຍົກລະດັບໂຮງງານປຸງແຕ່ງຫີນກາວ ແລະ ໂຮງງານຜະລິດແຜ່ນຢິບຊຳ ຢູ່ແຂວງສະຫວັນນະເຂດ ຈຳນວນ 1 ແຫ່ງ ໃນປີ 2027 ໃຫ້ສາມາດຜະລິດເປັນສິນຄ້າທີ່ມີຄຸນນະພາບ, ແຂ່ງຂັນກັບຕະຫຼາດສາກົນ ເພື່ອຈຳໜ່າຍພາຍໃນ ແລະ ສົ່ງອອກຕ່າງປະເທດ;

- ຫີນປູນ: ສືບຕໍ່ຊຸກຍູ້ສົ່ງເສີມໂຮງງານປຸງແຕ່ງຜະລິດຕະພັນຈາກຫີນປູນ (ປູນຂາວ) ໃຫ້ໄດ້ຄຸນນະພາບ ເພື່ອເປັນສິນຄ້າຈຳໜ່າຍພາຍໃນ ແລະ ຕ່າງປະເທດ ໂດຍຊຸກຍູ້ໃຫ້ມີການສ້າງຕັ້ງໂຮງງານປຸງແຕ່ງຜະລິດຕະພັນຫີນປູນ (ປູນຂາວ) ຢູ່ພາກເໜືອ ແລະ ພາກກາງ ໃຫ້ໄດ້ 2 ແຫ່ງ, ພ້ອມນີ້ ຕ້ອງສະຫງວນໄວ້ເພື່ອເປັນວັດຖຸດິບສະໜອງໃຫ້ໂຮງງານຜະລິດຊີມັງ ແລະ ອຸດສາຫະກຳອື່ນ, ພ້ອມທັງຮັກສາໄວ້ເປັນເຂດທ່ອງທ່ຽວທາງທຳມະຊາດ ສຳລັບຫີນປູນຮັບໃຊ້ການກໍ່ສ້າງ ໃຫ້ຫຼຸດຜ່ອນການສົ່ງອອກໄປຕ່າງປະເທດ;

**- ຫີນປາໂກດິດ:** ຫຼຸດຜ່ອນການສົ່ງອອກວັດຖຸດິບໄປຕ່າງປະເທດ ແລະ ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານປຸງແຕ່ງໃຫ້ໄດ້ 2 ແຫ່ງ ເພື່ອເພີ່ມມູນຄ່າເປັນຕົ້ນ ເຈຍລະໄນເປັນເຄື່ອງປະດັບ, ແກະສະຫຼັກລວດລາຍ ເພື່ອຈຳໜ່າຍຢູ່ພາຍໃນ ແລະ ຕ່າງປະເທດ ;

**- ຫີນມາໂບ ແລະ ຫີນກຣານິດ:** ຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານປຸງແຕ່ງ ເພື່ອເພີ່ມມູນຄ່າໃຫ້ໄດ້ 4 ແຫ່ງ. ພ້ອມນີ້, ຕ້ອງຊຸກຍູ້ ສົ່ງເສີມນຳໃຊ້ຜະລິດຕະພັນພາຍໃນ ໂດຍເລີ່ມຈາກໂຄງການກໍ່ສ້າງຂອງລັດເປັນແບບຢ່າງ ເພື່ອຫຼຸດຜ່ອນການນຳເຂົ້າຫີນມາໂບ ແລະ ຫີນກຣານິດ ຈາກຕ່າງປະເທດ;

- ຫີນກວາສ: ບໍ່ອະນຸຍາດໃຫ້ສົ່ງອອກແຮ່ດິບ (ສຳລັບອຸດສາຫະກຳ), ດ້ວຍການຊຸກຍູ້ສົ່ງເສີມໃຫ້ສ້າງຕັ້ງໂຮງງານປຸງແຕ່ງ (ແຍກແຮ່ຊີລິຄອນອອກຈາກຫີນກວາສ) ເພີ່ມຕື່ມ ຢ່າງໜ້ອຍ 3 ແຫ່ງ ໃຫ້ສຳເລັດໃນປີ 2025;

**+ ໝວດແຮ່ທາດພະລັງງານເຊື້ອໄຟ:**

**- ຖ່ານຫີນ:** ຫຼຸດຜ່ອນການສົ່ງອອກຖ່ານຫີນໄປຈຳໜ່າຍຢູ່ຕ່າງປະເທດ ຮອດປີ 2030 ໃຫ້ໄດ້ 30%ຂອງແຜນການທັງໝົດ ທັງນີ້, ກໍເພື່ອກຳນົດເປັນແຮ່ທາດສະຫງວນສຳລັບການນຳໃຊ້ເຂົ້າໃນອຸດສາຫະກຳພາຍໃນປະເທດ ໃນໄລຍະຍາວ ເຊັ່ນ: ໂຮງງານຜະລິດຖານຄົກ (Coke), ໂຮງງານໄຟຟ້າ, ໂຮງງານຫຼອມໂລຫະ, ໂຮງງານຜະລິດຊີມັງ, ໂຮງງານຜະລິດດິນຈີ່, ໂຮງງານສະກັດທາດໄນໂຕຣເຈັນ (N) ແລະ ອື່ນໆ;

- ນ້ຳມັນ ແລະ ອາຍແກັດ: ສືບຕໍ່ສຶກສາຄົ້ນຄວ້າໃຫ້ຮູ້ແຫຼ່ງຂໍ້ມູນຂອງນ້ຳມັນ ແລະ ອາຍແກັດທຳມະຊາດໃນເຂດທີ່ມີທ່າແຮງ.

ຊຸກຍູ້ໂຄງການຢູ່ໃນໄລຍະສຳຫຼວດໃຫ້ເຂົ້າສູ່ໄລຍະບົດວິພາກເສດຖະກິດ-ເຕັກນິກໃຫ້ໄດ້ 101 ໂຄງການ ສູ້ຊົນຈຳໜ່າຍຜະລິດຕະພັນແຮ່ທາດ ຮອດປີ 2030 ໃຫ້ໄດ້ມູນຄ່າ 23,4 ຕື້ ໂດລາສະຫະລັດ, ຖ້າທຽບໃສ່ປີ 2011-2020 ຄາດວ່າຈະເພີ່ມຂຶ້ນ 46,2%; ສູ້ຊົນສ້າງລາຍຮັບໃຫ້ລັດຖະບານ ຮອດປີ 2030 ໃຫ້ໄດ້ຈຳນວນ 2,8 ຕື້ ໂດລາສະຫະລັດ, ຖ້າທຽບໃສ່ປີ 2011-2020 ຄາດວ່າຈະເພີ່ມຂຶ້ນ 40%; ສົ່ງເສີມໃຫ້ມີການສ້າງຄັງສະສົມໂລຫະຄຳແຫ່ງ ແຫ່ງຊາດ ໂດຍຫັກ 50% ຂອງຄ່າຊັບພະຍາກອນເພື່ອເປັນຫຼັກຊັບຄ້ຳປະກັນໃຫ້ແກ່ລັດຖະບານ.

**ເປົ້າໝາຍທີ 3:** ປັບປຸງກົນໄກການອອກອະນຸຍາດ, ການຄຸ້ມຄອງ, ຕິດຕາມ, ກວດກາ, ການປະເມີນປະສິດທິຜົນໂຄງການ, ການແບ່ງປັນຜົນປະໂຫຍດຈາກການຂຸດຄົ້ນ ແລະ ພັດທະນາແຫຼ່ງແຮ່ໃຫ້ມີປະສິດທິພາບ, ໂປ່ງໃສ, ເປັນທຳ, ກວດສອບໄດ້ ແລະ ສາມາດສ້າງຄວາມເຊື່ອໝັ້ນໃຫ້ແກ່ສັງຄົມ, ຊຸມຊົນທ້ອງຖິ່ນ; ປັບປຸງກົນໄກການຍົກເລີກສິດສຳປະທານບໍ່ແຮ່ ຕາມສັນຍາ ແລະ ກົດໝາຍທີ່ມີຜົນບັງຄັບໃຊ້ ໂດຍຂະແໜງພະລັງງານ ແລະ ບໍ່ແຮ ມີສິດຕົກລົງ, ຕັດສິນບັນຫາຕໍ່ການລະເມີດກົດໝາຍ ແລະ ສັນຍາສຳປະທານພັດທະນາບໍ່ແຮ່ ແລະ ບັນດາໂຄງການທີ່ຕິດພັນກັບທຸລະກິດກ່ຽວກັບແຮ່ທາດ; ອະນຸຍາດໃຫ້ສິດສຳປະທານ ໂດຍຜ່ານການນຳໃຊ້ຫຼັກການປະມູນສິດສຳປະທານບໍ່ແຮ່ ແລະ ສ້າງໂຄງການລົງທຶນຮ່ວມລະຫວ່າງພາກລັດ ແລະ ເອກະຊົນ (Public Private Partnership (PPP)) ຮອດປີ 2030 ຢ່າງໜ້ອຍ 3 ໂຄງການ; ສືບຕໍ່ສ້າງ ແລະ ປັບປຸງນິຕິກຳກຸ່ມກົດໝາຍທີ່ຕິດພັນກັບວຽກງານການຄຸ້ມຄອງການດຳເນີນທຸລະກິດກ່ຽວກັບແຮ່ທາດ ໃຫ້ມີຄວາມເຂັ້ມງວດ ແລະ ຮັດກຸມຂຶ້ນກວ່າເກົ່າ ຈຳນວນ 35 ສະບັບ, ໃນນັ້ນ, ສ້າງສຳເລັດ 9 ສະບັບ, ສ້າງໃໝ່ 17 ສະບັບ ແລະ ປັບປຸງຄືນໃໝ່ 9 ສະບັບ (ມີເອກະສານຊ້ອນທ້າຍຄັດຕິດມາພ້ອມ); ສືບຕໍ່ປັບປຸງສູນລວມການຄຸ້ມຄອງລະບົບການອອກອະນຸຍາດເຂດສຳປະທານ ແລະ ຖານຂໍ້ມູນກ່ຽວກັບບໍ່ແຮ່ຢູ່ຈຸດດຽວໃນທົ່ວປະເທດ (Mineral Cadastral Management System and Minerals Information System) ແລະ ຂະຫຍາຍລະບົບດັ່ງກ່າວ ລົງສູ່ທ້ອງຖິ່ນ; ສືບຕໍ່ລົງກວດກາ, ຕິດຕາມການຈັດຕັ້ງປະຕິບັດວຽກງານ ຂອງໂຄງການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ໃນຂອບເຂດທົ່ວປະເທດໃຫ້ໄດ້ຫຼາຍກວ່າ 700 ຄັ້ງ ເພື່ອເປັນຂໍ້ມູນໃນການປະເມີນຜົນໂດຍສອດຄ່ອງຕາມ 7 ຫຼັກການປະເມີນຜົນທີ່ຜັນຂະຫຍາຍຈາກ 10 ຫຼັກການປະເມີນຜົນບໍ່ແຮ່ທີ່ດີຂອງສາກົນ (ICMM); ສົມທົບກັບຂະແໜງການເງິນ ເພື່ອວາງນະໂຍບາຍພາສີອາກອນໃນໂຄງການບໍ່ແຮ່ ໂດຍເລັ່ງສ້າງຕັ້ງໜ່ວຍງານຈັດເກັບພັນທະທາງດ້ານການເງິນໃຫ້ມີປະສິດທິຜົນຂຶ້ນກວ່າເກົ່າ ແລະ ມີຄວາມໂປ່ງໃສ; ສືບຕໍ່ສົມທົບກັບຂະແໜງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອສຶກສາ ແລະ ດຳເນີນການຟື້ນຟູລະບົບນິເວດເຂດອ່າງນ້ຳປາແທນທີ່ເກີດຂຶ້ນຈາກຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດໃນໄລຍະຜ່ານມາ ໂດຍສະເພາະ ບັນຫານ້ຳຂຸ່ນ ແລະ ບັນຫາສິ່ງຕົກຄ້າງທີ່ເຈືອປົນໃນແຫຼ່ງນ້ຳທຳມະຊາດ ໃຫ້ສຳເລັດໃນປີ2030; ສ້າງຕັ້ງສະມາຄົມບໍ່ແຮ່ ໂດຍແຍກເປັນແຕ່ລະແຮ່ທາດ ເພື່ອແນໃສ່ການຈັດຕັ້ງປະຕິບັດວຽກງານໃຫ້ມີປະສິດທິຜົນສູງຂຶ້ນກວ່າເກົ່າ ແລະ ສະດວກໃນການຄຸ້ມຄອງ.

**ເປົ້າໝາຍທີ 4:** ສົ່ງເສີມໃຫ້ອັດຕາສ່ວນຂອງພາກລັດ, ພາກເອກະຊົນ, ປະຊາຊົນທ້ອງຖິ່ນ, ຊຸມຊົນທີ່ໂຄງການຕັ້ງຢູ່ ໃຫ້ມີສ່ວນຮ່ວມເຂົ້າໃນການຄຸ້ມຄອງ ແລະ ພັດທະນາຊັບພະຍາກອນແຮ່ທາດຕາມທິດພັດທະນາເປັນອຸດສະຫະກຳ ແລະ ທັນສະໄໝ; ຊຸກຍູ້ສົ່ງເສີມໃຫ້ມີການນຳໃຊ້ແຮງງານລາວ ໃນພາກອຸດສະຫະກຳບໍ່ແຮ່ ເພີ່ມຂຶ້ນຕາມລຳດັບ ໃຫ້ບັນລຸເຖິງ 90% ຂອງແຮງງານທັງໝົດ ຢູ່ແຕ່ລະໂຄງການ. ພ້ອມທັງຊຸກຍູ້ຜູ້ລົງທຶນ ໃຫ້ສ້າງແຜນການກໍ່ສ້າງຍົກລະດັບຄວາມຮູ້ຄວາມສາມາດ ໃຫ້ແຮງງານລາວກາຍເປັນແຮງງານສືບທອດປ່ຽນແທນແຮງງານຕ່າງປະເທດໃນແຕ່ລະໄລຍະຂອງອາຍຸໂຄງການ; ພັດທະນາຊ່ອງທາງການປະຊາສຳພັນ ແລະ ສື່ສານຂໍ້ມູນ, ຂໍ້ເທັດຈິງໂດຍຜ່ານສື່ສານມວນຊົນ, ເວັບໄຊ, ແອັບພລິເຄຊັນອອນລາຍທີ່ທັນສະໄໝ ເພື່ອໃຫ້ສັງຄົມມີຄວາມເຂົ້າໃຈທີ່ຖືກຕ້ອງຕໍ່ວຽກງານທໍລະນີສາດ-ບໍ່ແຮ່ ແລະ ເຊື່ອໝັ້ນຕໍ່ການພັດທະນາແຮ່ທາດ; ສືບຕໍ່ຜັນຂະຫຍາຍນະໂຍບາຍວຽກງານ 3 ສ້າງ ຕິດພັນກັບການພັດທະນາຂະແໜງທໍລະນີສາດ ແລະ ບໍ່ແຮ່ ໂດຍມອບສິດໃຫ້ອົງການປົກຄອງທ້ອງຖິ່ນເປັນເຈົ້າການຕິດຕາມກວດກາຄຸ້ມຄອງການຈັດຕັ້ງປະຕິບັດຂອງບັນດາໂຄງການລົງທຶນດ້ານບໍ່ແຮ່; ສົມທົບກັບຂະແໜງຊັບພະກອນທຳມະຊາດ ແລະ ສິ່ງແວດລ້ອມ ເພື່ອຊຸກຍູ້ສົ່ງເສີມໃຫ້ຊຸມຊົນທີ່ຖືກຜົນກະທົບເຂົ້າມາມີສ່ວນຮ່ວມໃນຂະບວນການສຶກສາ ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມສັງຄົມ ແລະ ທຳມະຊາດ (ESIA), ບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສຸຂະພາບ (EHIA) ລວມທັງແຜນການບູລະນະຟື້ນຟູ ສິ່ງແວດລ້ອມ, ການປິດບໍ່ແຮ່ ແລະ ສົ່ງມອບເນື້ອທີ່ສຳປະທານຄືນ.

**ເປົ້າໝາຍທີ 5:** ສ້າງແຫຼ່ງລາຍຮັບທີ່ໝັ້ນທ່ຽງໃຫ້ລັດຖະບານ, ໂດຍໃຫ້ບູລິມະສິດແກ່ ລັດວິສາຫະກິດພັດທະນາແຮ່ທາດລາວໃນການລິເລີ່ມລົງທຶນພັດທະນາໂຄງການບໍ່ແຮ່ດ້ວຍຕົນເອງ ຕາມປະເພດແຮ່ທາດທີ່ເຫັນວ່າມີຄວາມເໝາະສົມ; ມອບໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວ ເປັນຜູ້ຕາງໜ້າລັດຖະບານເຂົ້າຖືຮຸ້ນຕາມກົດໝາຍວ່າດ້ວຍແຮ່ທາດໃນທຸລະກິດກ່ຽວກັບບໍ່ແຮ່ປະເພດແຮ່ທາດມີຄ່າ ແລະ ເປັນຍຸດທະສາດ. ພິເສດສຳລັບບັນດາໂຄງການແຮ່ທາດຫາຍາກຕ້ອງໃຫ້ບູລິມະສິດ ລັດວິສາຫະກິດພັດທະນາແຮ່ທາດລາວຮ່ວມມືໃນການຖືຮຸ້ນບໍ່ໃຫ້ຫຼຸດ 20% ເຊິ່ງໃນນີ້ ອາດກຳນົດຮູບແບບ ການຖືຮຸ້ນລົມ 10% ແລະ ທຶນກູ້ຢືມຈາກຄູ່ຮ່ວມພັດທະນາ 10% ໂດຍນຳໄປຫັກເງິນປັນຜົນເປັນແຕ່ລະໄລຍະ ຫຼື ບົນພື້ນຖານການເຈລະຈາຕໍ່ລອງທີ່ເຫັນວ່າລັດຖະບານມີຜົນປະໂຫຍດສູງສຸດ; ສ້າງໂຄງການສຶກສາຊອກຫາແຫຼ່ງຈຸດປາກົດປະເພດແຮ່ທາດທີ່ມີລັກສະນະຍຸດທະສາດ ແລະ ມີຄວາມສຳຄັນຕໍ່ອຸດສາຫະກຳໃນອະນາຄົດ ແລະ ໃຫ້ບູລິມະສິດໃນການສະຫງວນເຂດເນື້ອທີ່ເພື່ອການພັດທະນາໃນອະນາຄົດ ຢ່າງໜ້ອຍ 14 ເຂດ ຈາກບັນດາເຂດຈຸດສຸມຄື: ເຂດສຳປະທານຂອງບັນດາບໍລິສັດ ທີ່ສິ້ນສຸດສັນຍາກັບລັດຖະບານ; ເຂດເນື້ອທີ່ຈຸດປາກົດແຮ່ທາດທີ່ໄດ້ຮັບຈາກການສຶກສາ ແລະ ບັນດາເຂດພື້ນທີ່ເປົ່າວ່າງຕ່າງໆ.

**ເປົ້າໝາຍທີ 6:** ສ້າງແຜນດຳເນີນງານໃນການຈັດຕັ້ງປະຕິບັດເປົ້າໝາຍພັດທະນາແບບຍືນຍົງ(SDG), ການເຕີບໂຕສີຂຽວ (GG) ດ້ວຍການສົ່ງເສີມການນຳໃຊ້ເທັກໂນໂລຊີ ແລະ ນະວັດຕະກຳໃໝ່, ຊຸກຍູ້ການພັດທະນາອຸດສາຫະກຳຕໍ່ເນື່ອງ ແລະ ຍືນຍົງ ພ້ອມທັງສົ່ງເສີມການຈ້າງງານຢ່າງມີປະສິດທິພາບ ແລະ ການມີວຽກເຮັດງານທຳທີ່ເໝາະສົມກັບຂີດຄວາມສາມາດຂອງແຮງງານ, ສົ່ງເສີມວຽກງານຄວາມປອດໄພ, ສຸຂະພາບ ແລະ ສິ່ງແວດລ້ອມບໍ່ແຮ່ ໃຫ້ມີຄວາມສີຂຽວ ແລະ ຍືນຍົງ.

ສຳລັບແຜນງານ, ກິດຈະກຳ, ມາດຕະການ ແລະ ກຳນົດເວລາ ໃນການຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດຍຸດທະສາດການພັດທະນາແຮ່ທາດ ແມ່ນໄດ້ກຳນົດລະອຽດໃນແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ ຄັ້ງທີ IX (2021 - 2025) ແລະ ຈະສືບຕໍ່ໃນແຜນພັດທະນາພະລັງງານ ແລະ ບໍ່ແຮ່ 5 ປີ ຄັ້ງທີ X (2026 - 2030) ຂອງກະຊວງພະລັງງານ ແລະ ບໍ່ແຮ່.

**ຄາດຄະເນຜົນໄດ້ຮັບຈາກການສ້າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2035 ຄື:**

1. ເປັນທິດທາງໃນການກຳນົດນະໂຍບາຍການບໍລິຫານຈັດການຄຸ້ມຄອງ ແລະ ພັດທະນາແຮ່ທາດໃຫ້ເກີດຜົນປະໂຫຍດສູງສຸດ ຕາມທິດສີຂຽວຂອງລັດຖະບານ;
2. ສາມາດກຳນົດເປົ້າໝາຍ ແລະ ວຽກງານຈຸດສຸມທີ່ຈະພັດທະນາແຮ່ທາດ ໃນໄລຍະ 2021-2030 ຢ່າງຊັດເຈນ;
3. ມີກົນໄກໃນການຄຸ້ມຄອງການປະເມີນຜົນໃນທຸລະກິດກ່ຽວກັບແຮ່ທາດ ແຕ່ລະຂັ້ນ;
4. ຮັບປະກັນການນຳໃຊ້ຊັບພະຍາກອນແຮ່ທາດໃນໄລຍະຍາວ ໃຫ້ມີຄວາມເໝາະສົມ ແລະ ສອດຄ່ອງກັບຄວາມຈຳເປັນນຳໃຊ້ພາຍໃນປະເທດ ບົນພື້ນຖານທ່າແຮງດ້ານແຮ່ທາດ ແລະ ການອານຸຮັກຮ່ວມກັບການໃຊ້ປະໂຫຍດຊັບພະຍາກອນທຳມະຊາດອື່ນຢ່າງເໝາະສົມ ແລະ ຍືນຍົງ ໂດຍສອດຄ່ອງກັບແຜນພັດທະນາ.
5. ຮັບປະກັນການຈັດຕັ້ງປະຕິບັດມາດຕະການຮັກສາສິ່ງແວດລ້ອມ, ເສດຖະກິດ-ສັງຄົມແຫ່ງຊາດ; ສຸຂະພາບ ແລະ ຄວາມປອດໄພ ໂດຍສອດຄ່ອງຕາມລະບຽບການ, ມາດຕະຖານທາງດ້ານເຕັກນິກ ແລະ ຫຼັກການປະຕິບັດທີ່ດີຂອງສາກົນ.

# ບົດປະກອບຄໍາເຫັນຂອງຄະນະປະຈໍາສະພາແຫ່ງຊາດ ຕໍ່ຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035

**(ສພຊ) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ IX ໃນວັນທີ 30 ມິຖຸນາ 2023 ທ່ານ ຣສ. ປອ. ລິນຄໍາ ດວງສະຫວັນ ປະທານກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ຕາງໜ້າຄະນະປະຈໍາສະພາແຫ່ງຊາດ** ມີຄວາມເຫັນຕໍ່ບົດລາຍງານກ່ຽວກັບຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030)ແລະວິໄສທັດຮອດປີ 2035 ວ່າ: ຄະນະປະຈໍາສະພາແຫ່ງຊາດ ຂໍສະແດງຄວາມຊົມເຊີຍລັດຖະບານກໍຄືກະຊວງພະລັງງານ ແລະ ບໍ່ແຮ່ທີ່ໄດ້ເອົາໃຈໃສ່ ແລະ ມີຄວາມພະຍາຍາມສູງ ໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ກົດໝາຍວ່າດ້ວຍແຮ່ທາດ ປີ 2017 (ພາກທີ II ໝວດທີ 1 ມາດຕາ 12 ແລະ ມາດຕາ 13) ເປັນຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ເຊິ່ງຈະເປັນທິດທາງ ແລະ ບ່ອນອີງໜຶ່ງທີ່ສໍາຄັນໃຫ້ແກ່ການພັດທະນາແຮ່ທາດ ເປັນທ່າແຮງໜຶ່ງໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ ໃຫ້ມີຈຸດສຸມ ແລະ ມີປະສິດທິຜົນ. ຮ່າງຍຸດທະສາດການພັດທະນາແຮ່ທາດສະບັບນີ້ ຈະເປັນບ່ອນອີງພື້ນຖານໜຶ່ງໃຫ້ແກ່ລັດຖະບານກໍຄືອົງການປົກຄອງທ້ອງຖິ່ນໃນການຄຸ້ມຄອງ ຕິດຕາມກວດກາ ແລະ ພິຈາລະນາອະນຸມັດໂຄງການລົງທຶນທີ່ຕິດພັນກັບວຽກງານແຮ່ທາດໃນຕໍ່ໜ້າ. ຄະນະຮັບຜິດຊອບ ແລະ ພິຈາລະນາອະນຸມັດໂຄງການລົງທຶນທີ່ຕິດພັນກັບວຽກງານແຮ່ທາດໃນຕໍ່ໜ້າ. ຮ່າງຍຸດທະສາດສະບັບນີ້ ຄະນະຮັບຜິດຊອບໄດ້ຈັດຕັ້ງປະຕິບັດຕາມກົດໝາຍວ່າດ້ວຍແຮ່ທາດ ແລະ ມາດຕະການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ ໃຊ້ເວລາກະກຽມມາແຕ່ຕົ້ນປີ 2022 ໄດ້ມີການປະສານສົມທົບກັບຫຼາຍພາກສ່ວນທັງສູນກາງ ແລະ ທ້ອງຖິ່ນ, ຜ່ານກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX, ກອງປະຊຸມເປີດກວ້າງທາບທາມຄວາມເຫັນສະມາຊິກສະພາແຫ່ງຊາດ ທີ່ເປັນກໍາມະການຂອງກໍາມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ແລະ ກອງປະຊຸມຄະນະປະຈໍາສະພາແຫ່ງຊາດ ກ່ອນນໍາເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX



ໃນຄັ້ງນີ້.

ດັ່ງທີ່ພວກເຮົາຮູ້ນໍາກັນແລ້ວວ່າ ສປປ ລາວ ແມ່ນມີຄວາມອຸດົມຮັ່ງມີທາງດ້ານຊັບພະຍາກອນທໍາມະຊາດ, ມີແມ່ນໍ້າລໍາເຊຫຼາຍສາຍແຕ່ເໜືອຮອດໃຕ້, ມີປ່າໄມ້ອຸດົມສົມບູນ, ມີຊັບໃນດິນ, ສິນໃນນໍ້າ, ມີແຮ່ທາດປະເພດຕ່າງໆ, ບັນດາຊັບພະຍາກອນທໍາມະຊາດເຫຼົ່ານີ້ແມ່ນປັດໄຈ ແລະ ທ່າແຮງບົ່ມຊ້ອນທີ່ສໍາຄັນ ໃນການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ.

ລັດຖະບານ ເຫັນໄດ້ຄວາມສໍາຄັນຕໍ່ວຽກງານຄຸ້ມຄອງແຮ່ທາດ ຈຶ່ງໄດ້ວາງແນວທາງ ໂດຍໄດ້ກໍານົດນະໂຍບາຍ, ສ້າງແລະປັບປຸງກົດໝາຍແລະນິຕິກໍາໃຕ້ກົດໝາຍຕ່າງໆ ເພື່ອຮັບປະກັນການຄຸ້ມຄອງວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ ເປັນຕົ້ນກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍທີ່ດິນ, ກົດໝາຍວ່າດ້ວຍປ່າໄມ້ ແລະ ນິຕິກໍາອື່ນທີ່ກ່ຽວຂ້ອງ, ການຄຸ້ມຄອງວຽກງານແຮ່ທາດໄດ້ຮັບການປັບປຸງດີຂຶ້ນ ໂດຍໄດ້ມີການແບ່ງຂັ້ນຄຸ້ມຄອງ ລະຫວ່າງຂະແໜງການສູນກາງດ້ວຍກັນ, ຂະແໜງການສູນກາງ ແລະ ທ້ອງຖິ່ນ ດ້ວຍການກໍານົດຂອບເຂດສິດ, ໜ້າທີ່ໃນການຄຸ້ມຄອງທີ່ຈະແຈ້ງພໍສົມຄວນ; ອົງການປົກຄອງແຕ່ລະຂັ້ນ ກໍໄດ້ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດແຜນນະໂຍບາຍ, ກົດໝາຍ ແລະ ລະບຽບການຕ່າງໆ ເຂົ້າໃນພຶດຕິກໍາຕົວຈິງຂອງຂະແໜງການ ແລະ ທ້ອງຖິ່ນ.

ຜ່ານການຕິດຕາມກວດກາ ຂອງສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງຢູ່ທ້ອງຖິ່ນທີ່ມີການພັດທະນາໂຄງການ ແລະ ຈາກການປະເມີນຜົນການປະຕິບັດກົດໝາຍວ່າດ້ວຍແຮ່ທາດ ໂດຍອີງໃສ່ກົດໝາຍ, ມະຕິຂອງສະພາແຫ່ງຊາດ ແລະ ລະບຽບການກ່ຽວຂ້ອງ, ມາຮອດປັດຈຸບັນ ເຫັນວ່າການຄຸ້ມຄອງວຽກງານແຮ່ທາດຍັງມີຫຼາຍບັນຫາເກີດຂຶ້ນ ທີ່ມີລັກສະນະສັບສົນ ເຊິ່ງຈະຕ້ອງໄດ້ສືບຕໍ່ຄົ້ນຄວ້າປັບປຸງ ແລະ ແກ້ໄຂ ເຊັ່ນ: ການຜັນຂະຫຍາຍບາງມາດຕາຂອງກົດໝາຍວ່າດ້ວຍແຮ່ທາດ ເປັນນິຕິກໍາໃຕ້ກົດໝາຍ; ກົນໄກການປະສານງານລະຫວ່າງ ຂະແໜງການສູນກາງດ້ວຍກັນ, ຂະແໜງການສູນກາງ ແລະ ທ້ອງຖິ່ນ ໃນການອະນຸຍາດຊອກຄົ້ນ, ສໍາຫຼວດ, ຂຸດຄົ້ນ ແລະ ປຸງແຕ່ງ ແຮ່ທາດ, ການຄຸ້ມຄອງ ຕິດຕາມກວດກາ ແລະ ປະເມີນໂຄງການ ທີ່ໄດ້ຮັບອະນຸຍາດ ເປັນຕົ້ນ ປະສິດທິພາບ ປະສິດທິຜົນ ຂອງໂຄງການ, ຜົນກະທົບຕໍ່ສິ່ງແວດລ້ອມ, ສັງຄົມ ແລະ ທໍາມະຊາດ ຈາກການພັດທະນາໂຄງການບໍ່ແຮ່; ກົນໄກການຈັດເກັບລາຍຮັບ, ຜົນປະໂຫຍດຂອງລັດຖະບານຈາກໂຄງການພັດທະນາບໍ່ແຮ່ ໂດຍສະເພາະການເຮັດທົດລອງຂຸດຄົ້ນແຮ່ທາດແລະການພັດທະນາບຸກຄະລາກອນໃນຂະແໜງທໍລະນີສາດ ແລະ ແຮ່ທາດ. ຜ່ານການຄົ້ນຄວ້າຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ຄະນະປະຈໍາສະພາແຫ່ງຊາດ ເຫັນວ່າ ຍັງມີບາງບັນຫາທີ່ຍັງເປັນສິ່ງທ້າທາຍ ໃນການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ດັ່ງນີ້:

1. ການກໍານົດນະໂຍບາຍຊຸກຍູ້ສົ່ງເສີມການດຶງດູດການລົງທຶນເຂົ້າໃສ່ການຜະລິດຕະພັນແຮ່ທາດ ເພື່ອຊົມໃຊ້ພາຍໃນປະເທດ ແລະ ສົ່ງອອກ ຍັງບໍ່ທັນຊັດເຈນ, ແຮ່ທາດຊະນິດໃດຄວນສະຫງວນໄວ້ ເພື່ອເປັນຜະລິດຕະພັນຊົມໃຊ້ພາຍໃນໄລຍະຍາວ, ແຮ່ທາດປະເພດໃດຄວນຂຸດຄົ້ນ ແລະ ປຸງແຕ່ງເພື່ອສົ່ງອອກຂາຍຕ່າງປະເທດ;

2. ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາແຮ່ທາດ ແມ່ນຕິດພັນກັບຫຼາຍຂະແໜງການ ເປັນຕົ້ນ ຂະແໜງການປ້ອງກັນຊາດ, ຊັບພະຍາກອນທໍາມະຊາດແລະສິ່ງແວດລ້ອມ, ກະສິກໍາ ແລະ ປ່າໄມ້, ອຸດສາຫະກໍາ ແລະ ການຄ້າ, ການເງິນ, ໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ແຕ່ການກໍານົດສິດ, ພາລະບົດບາດ, ການແບ່ງຂັ້ນຄຸ້ມຄອງ ແລະ ກົນໄກການປະສານງານ ຍັງບໍ່ທັນຈະແຈ້ງ, ລະອຽດ ແລະ ຊັດເຈນ;

3. ການສ້າງຄວາມເຂັ້ມແຂງໃຫ້ລັດວິສາຫະກິດພັດທະນາແຮ່ທາດລາວຍັງບໍ່ມີແຜນງານ, ໂຄງການ ແລະ ກິດຈະກໍາລະອຽດ, ບໍ່ມີງົບປະມານທີ່ຊັດເຈນ, ການມີສ່ວນຮ່ວມໃນການຖືຮຸ້ນໂຄງການບໍ່ແຮ່ ຂອງລັດວິສາຫະກິດພັດທະນາແຮ່ທາດລາວ ກໍຍັງບໍ່ຊັດເຈນ ວ່າຈະເຂົ້າຖືຮຸ້ນໃນລັກສະນະ, ຮູບແບບ ແລະ ເງື່ອນໄຂແນວໃດ;

4. ການກໍານົດແຜນການ, ແຜນງານ, ໂຄງການແລະກິດຈະກໍາ ໃນການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ຍັງບໍ່ມີການກໍານົດລະອຽດ;

5. ບຸກຄະລາກອນ ແລະ ງົບປະມານທີ່ຈະນໍາໃຊ້ເຂົ້າໃນການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ຍັງເປັນສິ່ງທ້າທາຍ.

ເພື່ອຮັບປະກັນໃຫ້ ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ທີ່ລັດຖະບານໄດ້ວາງອອກນັ້ນ ໃຫ້ມີປະສິດທິພາບປະສິດທິຜົນ, ຄະນະປະຈໍາສະພາແຫ່ງຊາດ ຈຶ່ງສະເໜີບາງຄໍາເຫັນ ດັ່ງນີ້:

6. ໃຫ້ສືບຕໍ່ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ໃນຂົງເຂດບໍ່ແຮ່ ເພື່ອເປັນເຄື່ອງມືໃຫ້ແກ່ການຈັດຕັ້ງປະຕິບັດຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ໃຫ້ສໍາເລັດຕາມຄາດໝາຍ;

7. ຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2035 ຕ້ອງໃຫ້ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ແຜນຈັດສັນທີ່ດິນ, ຄຸ້ມຄອງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມແບບຮອບດ້ານ ຂອງແຂວງ, ຍຸດທະສາດຂອງຂະແໜງການ ແລະ ກົດໝາຍທີ່ກ່ຽວຂ້ອງ ເພື່ອກໍານົດໄດ້ທິດທາງທີ່ແນ່ນອນໃນການຄຸ້ມຄອງ ແລະ ສະຫງວນເນື້ອທີ່ ໃນການຂຸດຄົ້ນແຮ່ທາດທີ່ມີໃນຂອບເຂດທົ່ວປະເທດໃຫ້ຄົນຮຸ່ນຕໍ່ໄປ;

8. ການສໍາຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດ ມາດຕາສ່ວນ 1:200.000 ແລະ ມາດຕາສ່ວນ 1:50.000 ຕ້ອງໃຫ້ສອດຄ່ອງກັບແຜນທີ່ຂອງຂະແໜງການອື່ນທີ່ກ່ຽວຂ້ອງ ເປັນຕົ້ນ ຂະແໜງການປ້ອງກັນຊາດ, ກະສິກໍາ ແລະ ປ່າໄມ້, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ໂຍທາທິການ ແລະ ຂົນສົ່ງ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ, ຄົ້ນຄວ້າຊອກຫາແຫຼ່ງທຶນ ເພື່ອນໍາໃຊ້ເຂົ້າໃນວຽກງານດັ່ງກ່າວໃຫ້ສໍາເລັດ ພ້ອມທັງສະເໜີໃຫ້ກວດກາຄືນ ຖ້າຫາກວ່າເຂດໃດຢູ່ແຂວງໃດ ໄດ້ຮັບການຈັດຕັ້ງປະຕິບັດແລ້ວ ກໍບໍ່ຄວນກໍານົດເຂົ້າຮ່າງຍຸດທະສາດຕື່ມ ເພື່ອບໍ່ໃຫ້ໄປຊໍ້າຊ້ອນກັນ, ແຕ່ຫາກເຂດໃດໃນແຂວງໃດໜຶ່ງ ບໍ່ທັນຖືກຈັດຕັ້ງປະຕິບັດ ຫຼື ຖືກປະຕິບັດມາແລ້ວ ແຕ່ບໍ່ທັນສໍາເລັດ ກໍໃຫ້ສືບຕໍ່ເຮັດຢູ່ບ່ອນນັ້ນໆ;

9. ໃຫ້ກໍານົດນະໂຍບາຍຊຸກຍູ້ສົ່ງເສີມການດຶງດູດການລົງທຶນເຂົ້າໃສ່ການຜະລິດຕະພັນແຮ່ທາດ ເພື່ອຊົມໃຊ້ພາຍໃນປະເທດ ແລະ ສົ່ງອອກໃຫ້ມີຄວາມຊັດເຈນ, ແຮ່ທາດຊະນິດໃດຄວນສະຫງວນໄວ້ ເພື່ອເປັນຜະລິດຕະພັນຊົມໃຊ້ພາຍໃນ, ແຮ່ທາດປະເພດໃດຄວນຂຸດຄົ້ນ ແລະ ປຸງແຕ່ງເພື່ອສົ່ງອອກຂາຍຕ່າງປະເທດ, ຄົ້ນຄວ້າກໍານົດລາຄາແຮ່ທາດແຕ່ລະປະເພດ ໂດຍມີການວາງແຜນເປັນແຕ່ລະໄລຍະ ເປັນຕົ້ນ ແຮ່ຫາຍາກ, ແຮ່ທາດທີ່ມີຈໍານວນປະລິມານສະສົມຫຼາຍ (ເກືອກາລີ, ຫີນກາວ....), ຖ້າໂຄງການໃດ ລັດຖະບານໄດ້ອະນຸຍາດໃຫ້ລົງທຶນໄປແລ້ວ ກໍໃຫ້ສືບຕໍ່ຊຸກຍູ້ຜູ້ລົງທຶນ ປະຕິບັດຕາມສັນຍາ, ກົດໝາຍ ແລະ ບໍ່ຄວນສືບຕໍ່ໃຫ້ລົງທຶນອີກ;

10. ການຄົ້ນຄວ້າອະນຸຍາດກິດຈະການກ່ຽວກັບແຮ່ທາດໃນຕໍ່ໜ້າ ໃຫ້ປະຕິບັດຕາມຂັ້ນຕອນທີ່ກໍານົດໄວ້ ໃນກົດໝາຍຢ່າງເຂັ້ມງວດ ເປັນຕົ້ນ ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍປ່າໄມ້ ແລະ ນິຕິກໍາອື່ນທີ່ກ່ຽວຂ້ອງ ໂດຍສະເພາະການສ້າງບົດວິພາກເສດຖະກິດ-ເຕັກນິກ, ບົດສຶກສາຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການໄລ່ລຽງຜົນປະໂຫຍດທີ່ລັດຖະບານຈະໄດ້ຮັບ ລວມທັງການຄັດເລືອກເອົາບໍລິສັດທີ່ຈະມາພັດທະນາໃນຂົງເຂດບໍ່ແຮ່ ຕ້ອງເປັນບໍລິສັດຂະໜາດໃຫຍ່, ມີມາດຕະຖານສາກົນ, ມີປະສົບການ, ມີຄວາມເປັນມືອາຊີບ ແລະ ມີຄວາມພ້ອມທາງດ້ານງົບປະມານ;

11. ຄົ້ນຄວ້າ, ວິເຄາະ, ວິໄຈ ຢ່າງຖີ່ຖ້ວນ ກ່ອນອະນຸຍາດ ໃຫ້ຂຸດຄົ້ນແຮ່ທາດ, ເຂດໃດຄວນໃຫ້ຂຸດຄົ້ນ, ເຂດໃດຄວນສະຫງວນໄວ້ ແລະ ໃຫ້ຄໍານຶງເຖິງເຂດຍຸດທະສາດການທະຫານ, ເຂດທີ່ຢູ່ອາໄສ, ເຂດຜະລິດກະສິກໍາ, ເຂດປ່າສະຫງວນ, ປ່າປ້ອງກັນ, ເຂດປ່າຍອດນໍ້າ ແລະ ອື່ນໆ;

12. ຄົ້ນຄວ້າ ຊອກຫາວິທີການຫຼຸດຜ່ອນ ແລະ ກ້າວໄປເຖິງການຢຸດຕິການສົ່ງອອກແຮ່ດິບ, ຫັນໄປສູ່ການປຸງແຕ່ງແຮ່ທາດ ເປັນຜະລິດຕະພັນສໍາເລັດຮູບໃຫ້ຫຼາຍຂຶ້ນ, ຈໍາກັດການສົ່ງອອກແຮ່ທາດດິບອອກຕ່າງປະເທດ ໃນລະດັບທີ່ແນ່ນອນ;

13. ເອົາໃຈໃສ່ສ້າງກົນໄກການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ເປັນລະບົບຄົບຊຸດ ເປັນຕົ້ນ ການສະໜອງຂໍ້ມູນຂ່າວສານ, ເຄື່ອງມືອຸປະກອນ ແລະ ການແບ່ງຄວາມຮັບຜິດຊອບຢ່າງຂາດຕົວ ເພື່ອບໍ່ໃຫ້ມີການຖິ້ມຄວາມຮັບຜິດຊອບໃຫ້ກັນ ລວມທັງກົນໄກການຈັດເກັບລາຍຮັບຈາກພັນທະຕ່າງໆ ຂອງໂຄງການພັດທະນາບໍ່ແຮ່;

14. ຄົ້ນຄວ້າພິຈາລະນາຄວາມອາດສາມາດ (ເຄື່ອງມື, ວິຊາການ, ງົບປະມານ) ແລະ ການມີສ່ວນຮ່ວມໃນການຖືຮຸ້ນໂຄງການບໍ່ແຮ່ຂອງລັດວິສາຫະກິດພັດທະນາແຮ່ທາດລາວວ່າຈະເຂົ້າຖືຮຸ້ນໃນລັກສະນະ, ຮູບແບບ ແລະ ເງື່ອນໄຂແນວໃດ ແລະ ລັດຄວນຖືຮຸ້ນທຸກໆໂຄງການຂຸດຄົ້ນແຮ່ທາດ ໂດຍຖືເອົາບໍລິມາດແຮ່ທາດ ທີ່ສໍາຫຼວດຄົ້ນພົບນັ້ນມາເປັນທຶນໃນການຖືຮຸ້ນຂອງລັດ;

15. ການກໍານົດຊັດສ່ວນຜົນປະໂຫຍດຂອງລັດຖະບານ ຈາກໂຄງການພັດທະນາແຮ່ທາດ ຕ້ອງໃຫ້ສົມເຫດສົມຜົນ ຢ່າງໜ້ອຍຕ້ອງໃຫ້ໄດ້ 50% ຂຶ້ນໄປ;

16. ຮີບຮ້ອນກໍານົດແຜນການ, ແຜນງານ, ໂຄງການ ແລະ ກິດຈະກໍາ ໃນການຈັດຕັ້ງປະຕິບັດຮ່າງຍຸດທະສາດ ສະບັບດັ່ງກ່າວໃຫ້ເປັນອັນລະອຽດ ແລະ ຊັດເຈນ;

17. ສ້າງ ແລະ ພັດທະນາຊັບພະຍາກອນມະນຸດໃຫ້ມີຈຸດສຸມ ແລະ ມີເປົ້າໝາຍທີ່ແນ່ນອນ ໂດຍສະເພາະ ບຸກຄະລາກອນໃນຂົງເຂດທໍລະນີສາດ ແລະ ແຮ່ທາດ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ເປັນມືອາຊີບ ແລະ ມີຄວາມຊໍານານງານ;

18. ກໍານົດກົນໄກການຄຸ້ມຄອງ ແລະ ການນໍາໃຊ້ກອງທຶນພັດທະນາຊຸມຊົນທີ່ໄດ້ຈາກໂຄງການພັດທະນາແຮ່ທາດ ໃຫ້ຖືກຕາມຈຸດປະສົງ ແລະ ເປົ້າໝາຍ ການນໍາໃຊ້ກອງທຶນດັ່ງກ່າວ ພ້ອມທັງໃຫ້ບຸລິມະສິດໃນການພັດທະນາຊຸມຊົນຢູ່ເຂດໃກ້ຄຽງ ແລະ ເຂດທີ່ໂຄງການຕັ້ງຢູ່;

19. ເອົາໃຈໃສ່ໂຄສະນາເຜີຍແຜ່ປຸກລະດົມໃຫ້ທຸກພາກສ່ວນທຸລະກິດ, ເອກະຊົນ ແລະ ປະຊາຊົນ ເຂົ້າໃຈ, ມີສ່ວນຮ່ວມ ແລະ ເຂົ້າຮ່ວມໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

# ຖະແຫຼງກ່ຽວກັບຜົນການພິຈາລະນາຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035

ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຊຸດທີ IX ຖະແຫຼງຂ່າວ ໃນວັນທີ 11 ກໍລະກົດ 2023 ກ່ຽວກັບຜົນການພິຈາລະນາຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດ ຮອດປີ 2035 ຕໍ່ບັນດາທ່ານ ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ແລະ ພໍ່ແມ່ພີ່ນ້ອງຊາວລາວທີ່ຢູ່ຕ່າງປະເທດ ໃຫ້ໄດ້ຮັບຊາບ ຢ່າງທົ່ວເຖິງກັນວ່າ:



ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ ຄົ້ນຄວ້າພິຈາລະນາຮ່າງຍຸດທະສາດການພັດທະນາແຮ່ທາດ 10 ປີ (2021-2030) ແລະ ວິໄສທັດຮອດປີ 2035 ໃນພາກເຊົ້າຂອງວັນທີ 30 ມິຖຸນາ 2023 ທີ່ຜ່ານມາ, ເຊິ່ງໃນວາລະດັ່ງກ່າວ ກອງປະຊຸມໄດ້ຮັບຟັງການລາຍງານ ຈາກ ທ່ານ ໂພໄຊ ໄຊຍະສອນ ລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ກ່ຽວກັບສະພາບ, ເຫດຜົນ ແລະ ຄວາມຈຳເປັນໃນການສ້າງຮ່າງຍຸດທະສາດ ແລະ ທ່ານປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ກໍໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ປະກອບຄວາມເຫັນ ຕໍ່ບົດລາຍງານການສ້າງຮ່າງຍຸດທະສາດ ສະບັບດັ່ງກ່າວ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດກໍໄດ້ນຳໃຊ້ສິດຂອງຕົນ ເອົາໃຈໃສ່ ສຸມສະຕິປັນຍາ ລົງເລິກ ຄົ້ນຄວ້າ ແລະ ປະກອບຄຳເຫັນກົງໄປກົງມາ ໂດຍມີການວິເຄາະ ວິໄຈ ຢ່າງເລິກເຊິ່ງ, ດ້ວຍເຫດ-ດ້ວຍຜົນ ຢ່າງມີຄວາມຮັບຜິດຊອບສູງ, ໄດ້ຍົກໃຫ້ເຫັນເຖິງພຶດຕິກຳຕົວຈິງ ທີ່ເກີດຂຶ້ນພາຍໃນເຂດເລືອກຕັ້ງຂອງຕົນ ເພື່ອນຳສະເໜີຕໍ່ລັດຖະບານ ກໍຄືຄະນະຮັບຜິດຊອບຮ່າງຍຸດທະສາດການພັດທະນາແຮ່ທາດ ໄດ້ນຳໄປຄົ້ນຄວ້າ, ປັບປຸງ ປະກອບເຂົ້າໃສ່ຮ່າງຍຸດທະສາດຂອງຕົນໃຫ້ມີຄວາມຄົບຖ້ວນ, ສົມບູນ, ຮັດກຸມ, ສອດຄ່ອງກັບສະພາບຕົວຈິງ ແລະ ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິພາບ. ພາຍຫຼັງທີ່ບັນດາທ່ານສະມາຊິກສະພາແຫ່ງຊາດໄດ້ມີຄຳເຫັນແລ້ວ ທ່ານລັດຖະມົນຕີ ກະຊວງພະລັງງານ ແລະ ບໍ່ແຮ່ ກໍໄດ້ໃຫ້ການຊີ້ແຈງ, ອະທິບາຍ ຕໍ່ກັບຄຳເຫັນ-ຄຳຊັກຖາມ ທີ່ຕັ້ງຂຶ້ນຢູ່ໃນກອງປະຊຸມ. ສະນັ້ນ ຂ້າພະເຈົ້າ ຂໍສັງລວມບາງເນື້ອໃນທີ່ສຳຄັນໃນການພິຈາລະນາຮ່າງຍຸດທະສາດສະບັບດັ່ງກ່າວ ດັ່ງນີ້:

1. ຍຸດທະສາດການພັດທະນາແຮ່ທາດ 10 ປີ ແລະ ວິໄສທັດຮອດປີ 2035 ມີຄວາມສຳຄັນເປັນຢ່າງຍິ່ງ. ສະນັ້ນ, ການກຳນົດເນື້ອໃນຂອງເອກະສານດັ່ງກ່າວ ຈະຕ້ອງຮັບປະກັນເຮັດໃຫ້ການຄຸ້ມຄອງ, ນຳໃຊ້ແຫຼ່ງຊັບພະຍາກອນແຮ່ທາດໃຫ້ມີຄວາມຍືນຍົງ, ມີປະສິດທິພາບ ແລະ ເກີດຜົນປະໂຫຍດລວມສູງສຸດໃຫ້ແກ່ປະເທດຊາດ; ສົ່ງເສີມການປຸງແຕ່ງແຮ່ທາດຢູ່ພາຍໃນໃຫ້ຫຼາຍ, ຫຼຸດຜ່ອນການສົ່ງອອກແຮ່ດິບ, ຄຸ້ມຄອງຢ່າງເຂັ້ມງວດຕໍ່ບັນດາໂຄງການແຮ່ທາດທີ່ໄດ້ອະນຸຍາດ. ການສ້າງຍຸດທະສາດ ແລະ ວິໄສທັດດັ່ງກ່າວ ຕ້ອງໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ຍຸດທະສາດຂອງຂະແໜງການອື່ນ ແລະ ກົດໝາຍທີ່ກ່ຽວຂ້ອງ. ພ້ອມກັນນັ້ນ ກໍຕ້ອງໄດ້ມີການໂຄສະນາ ເຜີຍແຜ່ ປຸກລະດົມໃຫ້ທຸກພາກສ່ວນທຸລະກິດ, ເອກະຊົນ ແລະ ປະຊາຊົນ ໄດ້ເຂົ້າໃຈ ແລະ ມີສ່ວນຮ່ວມ ໃນການຈັດຕັ້ງປະຕິບັດ.

2. ການຄຸ້ມຄອງແຮ່ທາດໃນໄລຍະຜ່ານມາ ເຖິງວ່າລັດຖະບານໄດ້ມີຄວາມເອົາໃຈໃສ່ໃນຫຼາຍດ້ານ ແຕ່ຍ້ອນຄວາມຮູ້ ແລະ ຄວາມສາມາດທາງດ້ານວິທະຍາສາດ, ວິຊາການກ່ຽວກັບແຮ່ທາດຂອງປະເທດເຮົາຍັງມີຂໍ້ຈຳກັດ, ຍັງຂາດເຂີນເຄື່ອງຈັກ, ເຕັກໂນໂລຊີທີ່ທັນສະໄໝ ຕົວຢ່າງ: ການຂຸດຄົ້ນແຮ່ຫາຍາກ ເຊິ່ງເປັນແຮ່ທີ່ພວກເຮົາບໍ່ທັນມີຄວາມຮູ້ຢ່າງເລິກເຊິ່ງ ທາງດ້ານວັດຖຸ ແລະ ເຄມີ, ຄຸນຄ່າລາຄາຂອງແຮ່ດັ່ງກ່າວ, ແຕ່ໄດ້ອະນຸມັດໃຫ້ບໍລິສັດຕ່າງປະເທດເຂົ້າມາຂຸດຄົ້ນ ຈຶ່ງເຮັດໃຫ້ປະຊາຊົນຈຳນວນຫຼາຍ ມີຄວາມເປັນຫ່ວງຫຼາຍ. ສະນັ້ນ, ສະພາແຫ່ງຊາດຈຶ່ງໄດ້ມອບໃຫ້ລັດຖະບານເພີ່ມທະວີຄວາມເອົາໃຈໃສ່ໃນການຄຸ້ມຄອງ, ຕິດຕາມກວດກາ ວຽກງານແຮ່ທາດ ເພື່ອບໍ່ໃຫ້ລັດເສຍຜົນປະໂຫຍດ, ໃຫ້ມີການປະເມີນຜົນກະທົບຕໍ່ສະພາບແວດລ້ອມທຳມະຊາດ ແລະ ສັງຄົມຢ່າງລະອຽດ, ເອົາໃຈໃສ່ການພັດທະນາບຸກຄະລາກອນດ້ານແຮ່ທາດໃຫ້ຕອບສະໜອງກັບວຽກງານໄລຍະໃໝ່, ສ້າງໃຫ້ໄດ້ພະນັກງານ ທີ່ເປັນຫົວຈັກຫຼັກແຫຼ່ງ ເພື່ອປະຕິບັດໜ້າທີ່ປະຈຳການ, ຕິດຕາມການດຳເນີນໂຄງການບໍ່ແຮ່ຕ່າງໆ ໃຫ້ມີຄວາມໂປ່ງໃສ, ສອດຄ່ອງກັບກົດໝາຍ, ຮັບປະກັນຜົນປະໂຫຍດຂອງລັດໃຫ້ໄດ້ຫຼາຍເທົ່າທີ່ຈະຫຼາຍໄດ້ (ສະມາຊິກສະພາແຫ່ງຊາດໄດ້ມີຄວາມເຫັນວ່າ ລັດຕ້ອງຖືຮຸ້ນຢ່າງໜ້ອຍໃຫ້ໄດ້ 50% ຂຶ້ນໄປ). ພ້ອມກັນນັ້ນ, ກໍໃຫ້ເລັ່ງປັບປຸງລັດວິສາຫະກິດແຮ່ທາດລາວໃຫ້ມີຄວາມເຂັ້ມແຂງ ເພື່ອຮອງຮັບການພັດທະນາຂົງເຂດດັ່ງກ່າວ;

3. ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດວຽກງານແຮ່ທາດ ເຊິ່ງເປັນຊັບພະຍາກອນທີ່ມີຈຳກັດ ໃຫ້ມີຄວາມຍືນຍົງນັ້ນ, ຍຸດທະສາດ ແລະ ວິໄສທັດກ່ຽວກັບວຽກງານແຮ່ທາດຈຳເປັນຕ້ອງເນັ້ນໃສ່ການຈັດສັນປະເພດແຮ່ທາດທີ່ມີຄຸນຄ່າສູງ ແລະ ຫາຍາກ, ກຳນົດແຈ້ງກ່ຽວກັບເຂດຫວງຫ້າມ, ເຂດຍຸດທະສາດທີ່ຈະຮັກສາໄວ້ຍາວນານ ເພື່ອລູກຫຼານໃນອະນາຄົດ, ຕ້ອງມີການສຳຫຼວດປະເມີນປະລິມານ ການສະສົມຂອງແຮ່ທາດ ແລະ ຕ້ອງສຶກສາຄົ້ນຄວ້າ ລວບລວມຂໍ້ມູນຢ່າງລະອຽດ ເພື່ອກຳນົດທິດທາງແຜນການຂຸດຄົ້ນ ໃຫ້ມີປະສິດທິພາບ ແລະ ຍືນຍົງ. ສະນັ້ນ, ລັດຖະບານຕ້ອງໄດ້ຄົ້ນຄວ້າຈັດສັນແຫຼ່ງທຶນ ເຂົ້າໃນວຽກງານສຳຫຼວດສ້າງແຜນທີ່ທໍລະນີສາດ-ແຮ່ທາດ ເພື່ອເປັນຂໍ້ມູນໃນການປະເມີນປະສິດທິຜົນທາງເສດຖະກິດ ແລະ ການກຳນົດເຂດສະຫງວນ-ເຂດຫວງຫ້າມຕ່າງໆ. ນອກນັ້ນ ກໍຕ້ອງໄດ້ຄົ້ນຄວ້າ ຊອກຫາວິທີການນຳເອົາແຮ່ທາດມາປຸງແຕ່ງຄືນ ເພື່ອຫຼຸດຜ່ອນຄວາມຕ້ອງການໃນການຂຸດຄົ້ນໃໝ່ ແລະ ຮັກສາແຫຼ່ງຊັບພະຍາກອນ ໃຫ້ສາມາດນຳໃຊ້ໄດ້ໃນໄລຍະຍາວ. ໃນການຄຸ້ມຄອງ, ການຂຸດຄົ້ນ ແລະ ປຸງແຕ່ງແຮ່ທາດ ທີ່ມີລັກສະນະຍຸດທະສາດ ຕ້ອງຮັບປະກັນວ່າ ຂຸດຄົ້ນແລ້ວ ຈຶ່ງປຸງແຕ່ງພາຍຫຼັງ ແລະ ຕ້ອງບໍ່ໃຫ້ເກີດມີຜົນກະທົບ ຫຼື ມົນລະພິດ ຕໍ່ກັບສິ່ງແວດລ້ອມ;

4. ແຮ່ທາດ ເປັນຊັບສົມບັດອັນລ້ຳຄ່າ ຂອງວົງຄານະຍາດຂອງຊາດ, ເປັນທ່າແຮງອັນສຳຄັນໃນການວາງແຜນຍຸດທະສາດ ພັດທະນາເສດຖະກິດ-ສັງຄົມ ຂອງປະເທດເຮົາ. ສະນັ້ນ, ການກຳນົດເນື້ອໃນຂອງຍຸດທະສາດ ແລະ ວິໄສທັດການຄຸ້ມຄອງແຮ່ທາດ ຕ້ອງກຳນົດໃຫ້ຊັດເຈນ ກ່ຽວກັບການແບ່ງຂັ້ນຄຸ້ມຄອງ ໂດຍໃຫ້ສູນກາງ ກໍຄືກະຊວງພະລັງງານ ແລະ ບໍ່ແຮ່ ເປັນຜູ້ຄຸ້ມຄອງມະຫາພາກ ສ່ວນທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດ. ໂດຍສະເພາະໂຄງການພັດທະນາແຮ່ທາດ ທີ່ມີມູນຄ່າສູງ, ມີຂະໜາດໃຫຍ່ ແລະ ເປັນໂຄງການທີ່ຕິດພັນກັບຫຼາຍຂະແໜງການ ຕ້ອງໄດ້ຜ່ານການພິຈາລະນາອະນຸມັດຈາກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເຊິ່ງເປັນອົງການຕົວແທນແຫ່ງສິດ ແລະ ຜົນປະໂຫຍດຂອງປະຊາຊົນບັນດາເຜົ່າເພື່ອສ່ອງແສງໃຫ້ເຫັນເຖິງຄວາມເປັນເຈົ້າຂອງປະເທດຊາດ ຂອງປະຊາຊົນລາວບັນດາເຜົ່າ (ຄວນມີນິຕິກຳລະອຽດຕື່ມ). ສຳລັບການໃຫ້ສິດຕົກລົງອະນຸມັດໂຄງການພັດທະນາແຮ່ທາດ ຕ້ອງສອດຄ່ອງກັບສະພາບຄວາມເປັນຈິງ ຕ້ອງໄດ້ມີການຄັດເລືອກ ເອົາບໍລິສັດໃຫຍ່ ທີ່ມີຄວາມໜ້າເຊື່ອຖື, ມີປະສົບການ ແລະ ມີຄວາມຊຳນິຊຳນານ ເຂົ້າມາລົງທຶນ.

ອີກເທື່ອໜຶ່ງ ຂ້າພະເຈົ້າ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຊຸດທີ IX, ຂໍສະແດງຄວາມຂອບໃຈມາຍັງບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າທຸກຊັ້ນຄົນ ທີ່ໄດ້ຕິດຕາມການດຳເນີນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຄັ້ງນີ້ ແລະ ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍຢ່າງຈິງໃຈມາຍັງສື່ມວນຊົນທຸກພາກສ່ວນ ລວມທັງໂທລະພາບແຫ່ງຊາດ ແລະ ວິທະຍຸກະຈາຍສຽງແຫ່ງຊາດ, ສື່ສິ່ງພິມປະເພດຕ່າງໆ ທີ່ໄດ້ຕິດຕາມຢ່າງໃກ້ຊິດ ເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການ ກ່ຽວກັບ ການດຳເນີນກອງປະຊຸມໃນຄັ້ງນີ້ໃຫ້ແກ່ສັງຄົມໄດ້ຮັບຊາບຢ່າງທົ່ວເຖິງ.

# ບົດລາຍງານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ

ວັນທີ 30 ມິຖຸນາ 2023 **ທ່ານ ນາງ ໃບຄຳ ຂັດຕິຍະ ລັດຖະມົນຕີ ກະຊວງແຮງງານ ແລະ ສະຫວັດດີການສັງຄົມ** ໄດ້ລາຍງານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ວ່າ:



**I. ບົດບາດ ແລະ ຄວາມສຳຄັນຂອງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ**

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ມີບົດບາດ ແລະ ຄວາມໝາຍສຳຄັນໃນການຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກກ່ຽວກັບການສ້າງສັງຄົມສາມັກຄີປອງດອງປະຊາທິປະໄຕ ສີວິໄລ ແລະ ຍຸຕິທຳ ທັງຕິດພັນກັບຍຸດທະສາດຂອງອົງການສະຫະປະຊາຊາດກ່ຽວກັບ "ການບໍ່ປະຖິ້ມໃຜຢູ່ຂ້າງຫລັງ". ລະບົບສະຫວັດດີການສັງຄົມແມ່ນການແຈກຢາຍລາຍໄດ້, ແຈກຢາຍໝາກຜົນຂອງການພັດທະນາໄປສູ່ທຸກກຸ່ມເປົ້າໝາຍໃນສັງຄົມ.

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໄດ້ຮັບການຄົ້ນຄວ້າປຶກສາຫາລືຮ່ວມກັນດ້ວຍຄວາມຮັບຜິດຊອບສູງລະຫວ່າງບັນດາຂະແໜງການຂອງລັດ, ອົງການຕາງໜ້າຜູ້ອອກແຮງງານ, ອົງການຕາງໜ້າຜູ້ໃຊ້ແຮງງານ, ອົງການເຄືອຂ່າຍສະຫະປະຊາຊາດ ແລະ ຄູ່ຮ່ວມພັດທະນາທີ່ກ່ຽວຂ້ອງຢ່າງກ້ວາງຂວາງ. ຜ່ານການປະກອບຄຳຄິດຄຳເຫັນຫຼາຍຄັ້ງທັງສູນກາງ, ທ້ອງຖິ່ນ ແລະ ໄດ້ຮັບຮອງປະກາດໃຊ້ຕາມດຳລັດຂອງທ່ານນາຍົກລັດຖະມົນຕີ ສະບັບເລກທີ 224/ນຍ, ລົງວັນທີ 1 ເມສາ 2020.

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ສະບັບນີ້ ສາມາດແຍກເປັນ 2 ລະບົບຄື: (1) ລະບົບປະກອບເງິນສົມທົບ ທີ່ເປັນລະບົບປະກັນສັງຄົມ ເຊິ່ງຜູ້ປະກອບເງິນສົມທົບ ແລະ ຜູ້ຢູ່ໃຕ້ການດູແລຂອງຜູ້ປະກອບເງິນສົມທົບຈະໄດ້ຮັບສິດອຸດໜູນ ຕາມເງື່ອນໄຂທີ່ກຳນົດໄວ້ໃນກົດໝາຍ; ແລະ (2) ລະບົບບໍ່ປະກອບເງິນສົມທົບ ທີ່ເປັນລະບົບສະຫວັດດີການສັງຄົມ ເຊິ່ງລັດ ແລະ ສັງຄົມສະໜອງຄວາມຕ້ອງການອັນຈຳເປັນຂັ້ນພື້ນຖານສຳລັບການດຳລົງຊີວິດໃຫ້ແກ່ກຸ່ມເປົ້າໝາຍທີ່ທຸກຍາກ, ຜູ້ດ້ອຍໂອກາດ ແລະ ຜູ້ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດສະບັບນີ້ໄດ້ກຳນົດວິໄສທັດ, ຫລັກການ ແລະ ເປົ້າໝາຍລວມ ຊຶ່ງມີເນື້ອໃນດັ່ງນີ້:

**1. ວິໄສທັດ**

ຮອດປີ 2030, ປະຊາຊົນລາວຕາມກຸ່ມເປົ້າໝາຍຕ່າງໆ ໄດ້ຮັບການເຂົ້າເຖິງການບໍລິການລະບົບປົກປ້ອງສັງຄົມດ້ານການປະກັນສຸຂະພາບ, ການປະກັນສັງຄົມ ແລະ ສະຫວັດດີການສັງຄົມຂັ້ນພື້ນຖານຢ່າງກ້ວາງຂວາງ, ສະເໝີພາບ, ມີປະສິດທິພາບ ແລະ ຄວາມຍືນຍົງ.

**2. ຫລັກການລວມ**

ອ່ານຕໍ່ໜ້າ 24...

## ບົດລາຍງານ...

(ຕໍ່ຈາກໜ້າ 23)

ຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ແມ່ນອີງໃສ່ຫລັກການຄວາມສະເໝີພາບ, ຄວາມພຽງພໍ, ປະສິດທິພາບ, ໃຫ້ກວມເອົາທຸກຄົນ, ຄວາມຄືບໜ້າ ແລະ ຄວາມຍືນຍົງ ພາຍໃຕ້ເງື່ອນໄຂໃຫ້ປະຊາຊົນລາວຕາມກຸ່ມເປົ້າໝາຍຕ່າງໆ ໄດ້ເຂົ້າເຖິງການບໍລິການປົກປ້ອງສັງຄົມໃນເງື່ອນໄຂດຽວກັນ ໂດຍບໍ່ຈຳແນກອາຍຸ, ເພດ, ພູມລຳເນົາ, ສະຖານະທາງເສດຖະກິດ-ສັງຄົມ ຫລື ອື່ນໆ.

**3. ເປົ້າໝາຍລວມ**

ຮອດປີ 2025, ລະບົບປົກປ້ອງສັງຄົມ ໄດ້ຮັບການພັດທະນາໃຫ້ມີຄວາມເຂັ້ມແຂງ ແລະ ມີປະສິດທິພາບດີຂຶ້ນ ໂດຍມີເປົ້າໝາຍໃນການໃຫ້ບໍລິການປົກປ້ອງສັງຄົມໃຫ້ກວມເອົາກຸ່ມເປົ້າໝາຍຢ່າງກ້ວາງຂວາງກ່ວາເກົ່າ ແລະ ມີມາດຕະຖານດ້ານການບໍລິການທີ່ມີຄຸນນະພາບທີ່ດີຂຶ້ນ, ຊຶ່ງໄດ້ກຳນົດ 3 ເປົ້າໝາຍຫລັກ ເພື່ອຂະຫຍາຍການປົກຄຸມຕາມກຸ່ມເປົ້າໝາຍໃນການເຂົ້າເຖິງການບໍລິການປົກປ້ອງສັງຄົມໃຫ້ມີປະສິດທິຜົນ ດັ່ງນີ້:1) ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສຸຂະພາບ; 2) ພັດທະນາ ແລະສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສັງຄົມ ແລະ 3) ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບສະຫວັດດີການສັງຄົມ, ເຊິ່ງປະກອບມີ 20 ກິດຈະກຳ ໂດຍສະແດງອອກດັ່ງນີ້:

**1) ເປົ້າໝາຍທີ 1:** ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສຸຂະພາບ, ມີ 5 ກິດຈະກຳ; (1) ພັດທະນາລະບົບນິຕິກຳກ່ຽວກັບວຽກປະກັນສຸຂະພາບສຳລັບທຸກຄົນ (2) ພັດທະນາລະບົບ ແລະ ສ້າງຄວາມອາດສາມາດໃຫ້ກັບອົງການຈັດຕັ້ງບໍລິຫານລະບົບປະກັນສຸຂະພາບແຫ່ງຊາດ ໃຫ້ມີປະສິດທິຜົນ; (3)ພັດທະນາ ແລະກຳນົດມາດຕະຖານຂັ້ນພື້ນຖານສຳລັບສະຖານທີ່ໃຫ້ບໍລິການປິ່ນປົວສຸຂະພາບ; (4) ຂະຫຍາຍການເຂົ້າເຖິງການບໍລິການປິ່ນປົວສຸຂະພາບຂອງປະຊາຊົນໃນເຂດຊົນນະບົດ; (5) ຈັດສັນງົບປະມານລັດ ແລະ ການລະດົມແຫຼ່ງທຶນໃຫ້ພຽງພໍກັບວຽກປະກັນສຸຂະພາບ.

**2) ເປົ້າໝາຍທີ 2:** ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສັງຄົມ, ມີ 6 ກິດຈະກຳ; (1)ຂະຫຍາຍການປົກຄຸມປະກັນສັງຄົມສຳລັບຜູ້ອອກແຮງງານໃຫ້ກວມເອົາກຸ່ມເປົ້າໝາຍຕ່າງໆ; (2) ຈັດຕັ້ງປະຕິບັດການກວດກາຫົວໜ່ວຍວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດ; (3)ສົ່ງເສີມການເຂົ້າຮ່ວມປະກັນສັງຄົມ; (4) ຄົ້ນຄ້ວາ ແລະ ວິໄຈຄະນິດສາດປະກັນສັງຄົມ;(5) ປັບປຸງລະບົບການເກັບທຶນສົມທົບຂອງປະກັນສັງຄົມ; (6) ສ້າງກົນໄກການບໍລິການ ໃນການເຂົ້າຮ່ວມລະບົບປະກັນສັງຄົມ ສຳລັບຜູ້ອອກແຮງງານນອກລະບົບຕາມກຸ່ມອາຊີບຕ່າງໆ ແລະການຮັບອຸດໜູນແບບເໝາະສົມ;

**3) ເປົ້າໝາຍທີ 3:** ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບສະຫວັດດີການສັງຄົມ, ມີ 9 ກິດຈະກຳ; (1) ການບໍລິການອຸດໜູນແລະການສົງເຄາະເດັກແມ່ຍິງຖືພາ ແລະ ເດັກ; (2) ການບໍລິການອຸດໜູນ ຫຼື ການສົງເຄາະຜູ້ພິການ ແລະ ຜູ້ທີ່ລອດຊີວິດຈາກອຸບັດຕິເຫດລະເບີດຕົກຄ້າງ; (3) ການບໍລິການອຸດໜູນ ຫຼື ການສົງເຄາະໃຫ້ຜູ້ອາຍຸສູງ; (4)ການບໍລິການສົງເຄາະໃຫ້ຜູ້ປະສົບເຄາະຮ້າຍຈາກໄພພິບັດຕ່າງໆ; (5) ຂະຫຍາຍໂຄງການອາຫານທ່ຽງສຳລັບເດັກນັກຮຽນທຸກຄົນໃນໂຮງຮຽນຂັ້ນອະນຸບານ,ກຽມປະຖົມ, ປະຖົມ ແລະ ມັດທະຍົມຕອນຕົ້ນຂອງລັດ ຢູ່ບັນດາບ້ານ ແລະ ເມືອງທີ່ທຸກຍາກໃນທົ່ວປະເທດ; (6) ເພີ່ມການສະໜອງທຶນການສຶກສາ ແລະ ເບ້ຍລ້ຽງອຸດໜູນ ສຳລັບນັກຮຽນມັດທະຍົມຕອນຕົ້ນໂດຍໃຫ້ບູລິມະສິດກັບນັກຮຽນຈາກຄອບຄົວທຸກຍາກ ແລະ ດ້ອຍໂອກາດ; (7) ເພີ່ມການສະໜອງງົບປະມານບໍລິຫານໂຮງຮຽນໃຫ້ທັນຕາມກຳນົດເວລາໂດຍຂະຫຍາຍຂອບເຂດການປົກຄຸມບັນດາໂຮງຮຽນລະບົບສາມັນໃນທົ່ວປະເທດ; (8) ໃຫ້ການສະໜອງທຶນອາຊີວະສຶກສາ, ຝຶກວິຊາຊີບຫຼືສີມືແຮງງານໃຫ້ຜູ້ຢູ່ໃນໄວອອກແຮງງານທີ່ທຸກຍາກ ແລະ ດ້ອຍໂອກາດໃຫ້ເຂົ້າເຖິງການມີວຽກເຮັດທີ່ມີຄຸນຄ່າ ແລະ ເປັນທຳ (9) ສົ່ງເສີມການຈັດຕັ້ງຮ່ວມມືການຜະລິດ, ສະຫະກອນ ແລະ ການບໍລິການດ້ວຍຮູບແບບຕ່າງໆເພື່ອການສ້າງວຽກເຮັດງານທຳທີ່ມີຄຸນຄ່າ ແລະ ເປັນທຳ.

**4. ກົນໄກການປະສານງານໃນການຈັດຕັ້ງປະຕິບັດຍຸດທະສາດ**

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ແລະ ຜົນສຳເລັດເທື່ອລະກ້າວ, ໄດ້ມີການແຕ່ງຕັ້ງຄະນະກຳມາການເພື່ອການປົກປ້ອງສັງຄົມຂັ້ນສູນກາງ ແລະ ຂັ້ນແຂວງທີ່ເປັນອົງການເຄື່ອນໄຫວບໍ່ປະຈຳການ ໂດຍປະກອບຜູ້ຕາງໜ້າຈາກກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສາທາລະນະສຸກ, ກະຊວງສຶກສາທິການ ແລະກິລາ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ, ສູນກາງສະຫະພັນກຳມະບານລາວ, ສະພາການຄ້າ ແລະ ອຸດສະຫະກຳແຫ່ງຊາດລາວ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງໂດຍມີຈຸດປະສານງານລວມຢູ່ກະຊວງແຮງງານ ແລະ ສະຫວັດດີການສັງຄົມ. ສຳລັບຄະນະກຳມາການເພື່ອການປົກປ້ອງສັງຄົມຂັ້ນແຂວງ-ນະຄອນຫຼວງ ແມ່ນທ່ານ ຮອງເຈົ້າແຂວງ, ຮອງເຈົ້າຄອງນະຄອນຫຼວງ ເປັນປະທານ ແລະ ປະກອບມີຄະນະນຳຈາກບັນດາພະແນກການອ້ອມຂ້າງແຂວງ-ນະຄອນຫຼວງ ທີ່ຄ້າຍຄືກັນກັບຂັ້ນສູນກາງ ໂດຍມີຈຸດປະສານງານລວມຢູ່ພະແນກແຮງງານ ແລະ ສະຫວັດດີການສັງຄົມແຂວງ ແລະ ນະຄອນຫລວງ, ປະຈຸບັນໄດ້ມີການແຕ່ງຕັ້ງຄະນະກຳມະການ ເພື່ອການປົກປ້ອງສັງຄົມຂັ້ນແຂວງ-ນະຄອນຫລວງ ສຳເລັດແລ້ວ 10 ແຂວງ, ສ່ວນທີ່ເຫລືອ ແມ່ນຍັງກຳລັງດຳເນີນ. ໄດ້ແບ່ງຄວາມຮັບຜິດຊອບໃຫ້ຂະແໜງການຫລັກເປັນໃຈກາງໃນການຈັດຕັ້ງປະຕິບັດຄື: ເປົ້າໝາຍທີ 1 ວຽກປະກັນສຸຂະພາບແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງ ກະຊວງສາທາລະນະສຸກ ໂດຍມີຫ້ອງການກອງທຶນປະກັນສຸຂະພາບແຫ່ງຊາດ ຮັບຜິດຊອບໃນການຈັດຕັ້ງປະຕິບັດ; ເປົ້າໝາຍທີ 2: ວຽກປະກັນສັງຄົມ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໂດຍມີອົງການປະກັນສັງຄົມແຫ່ງຊາດຮັບຜິດຊອບໃນການຈັດຕັ້ງປະຕິບັດ ແລະ ເປົ້າໝາຍທີ 3: ວຽກສະຫວັດດີການສັງຄົມ ແມ່ນຢູ່ພາຍໃຕ້ຄວາມຮັບຜິດຊອບຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ກະຊວງສຶກສາທິການ ແລະ ກິລາ ແລະ ກະຊວງກະສິກຳ ແລະ ປ່າໄມ້.

**II. ຜົນສຳເລັດການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ໃນໄລຍະ 2 ປີເຄິ່ງຜ່ານມາ.**

**2.1 ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສຸຂະພາບ.**

ໃນໄລຍະຜ່ານມາ, ຂະແໜງສາທາລະນະສຸກໄດ້ເປັນໃຈກາງພັດທະນາ ແລະ ໃຫ້ການບໍລິການປະກັນສຸຂະພາບ ເຊິ່ງເຮັດໃຫ້ປະຊາຊົນບັນດາເຜົ່າໄດ້ເຂົ້າເຖິງການບໍລິການປິ່ນປົວສຸຂະພາບທີ່ຈຳເປັນພື້ນຖານກວມເອົາ 94,5% ຂອງພົນລະເມືອງ, ປະກອບສ່ວນຫລຸດຜ່ອນຄ່າໃຊ້ຈ່າຍຂອງປະຊາຊົນຜູ້ທີ່ທຸກຍາກໃນເວລາໄປໃຊ້ບໍລິການປິ່ນປົວຢູ່ສະຖານທີ່ບໍລິການປິ່ນປົວຂອງລັດ ເຊິ່ງປະຊາຊົນໄດ້ຈ່າຍເງິນສົມທົບພຽງແຕ່ 5.000 ກີບ, 10.000 ກີບ ແລະ 15.000 ກີບ ເພື່ອກວດສຸຂະພາບຢູ່ເຂດນອກຂອງໂຮງໝໍນ້ອຍ, ຊຸມຊົນ ແລະ ແຂວງ ຕາມລຳດັບ ແລະ 30.000 ກີບສຳລັບຄົນເຈັບນອນໂຮງໝໍຊຸມຊົນ ແລະ ແຂວງ. ກອງທຶນປະກັນສຸຂະພາບແຫ່ງຊາດ ໄດ້ທົດແທນໃຫ້ສະຖານທີ່ບໍລິການແບບມອບເໝົາ ສຳ ລັບກວດເຂດນອກ ແລະ ຈ່າຍເປັນກໍລະນີສຳລັບນອນໂຮງໝໍ. ສຳລັບນະຄອນຫລວງວຽງຈັນ ຍັງບໍ່ໄດ້ຈັດຕັ້ງປະຕິບັດ ລະບົບຈ່າຍເປັນກໍລະນີ ໂດຍໃຊ້ວິທີແບບມອບເໝົາໃຫ້ໂຮງໝໍໃນອັດຕາ 130.000 ກີບ/ຜູ້ເກີດສິດ/ປີ, ຈ່າຍເພີ່ມສຳລັບ 6 ພະຍາດຊຳເຮື້ອ ແລະ ຄ່າໃຊ້ຈ່າຍສູງໃຫ້ໂຮງໝໍ, ອັດຕາການເຂົ້າເຖິງການບໍລິການຂອງແມ່ຍິງຖືພາ ແລະ ເດັກລຸ່ມ 05 ປີເພີ່ມຂຶ້ນ 10 ເທົ່າ ແລະ ເດັກລຸ່ມ 5 ປີມາໃຊ້ບໍລິການກວດເຂດນອກຈາກ 0,15 ເທື່ອຄົນ/ປີ ໃນປີ 2015 ເພີ່ມມາເປັນ 1.56 ເທື່ອຄົນ/ປີໃນປີ 2022). ຜົນສຳເລັດດັ່ງກ່າວ ໄດ້ປະກອບສ່ວນໃນການບັນລຸຕົວຊີ້ບອກຈຳນວນໜຶ່ງຂອງຂະແໜງສາທາລະນະສຸກ ເຊິ່ງເຮັດໃຫ້ ສປປ ລາວ ເປັນໜຶ່ງໃນ 57 ປະເທດທີ່ມີອັດຕາການຕາຍຂອງແມ່ ແລະ ເດັກຫລຸດລົງໄວ (78% ແລະ 40%). ພ້ອມນີ້, ຍັງໄດ້ສຳເລັດ ແຜນຍຸດທະສາດກອງທຶນປະກັນສຸຂະພາບແຫ່ງຊາດໄລຍະ ປີ 2021- 2025 ແລະ ຄົ້ນຄ້ວາປັບປຸງ ນິຕິກຳໃຕ້ກົດໝາຍ ກ່ຽວກັບກົນໄກການເກັບເງິນສົມທົບ, ການຈ່າຍເງິນ ແລະ ການຄິດໄລ່ອັດຕາຄ່າບໍລິການສຳລັບກອງທຶນປະກັນສຸຂະພາບແຫ່ງຊາດ ສຶກສາຄົ້ນຄວ້າຕົ້ນທຶນຄ່າບໍລິການສຸຂະພາບ.

**2.2. ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນສັງຄົມ**

ໂດຍອີງຕາມຜົນການສຳຫລວດເສດຖະກິດທົ່ວປະເທດ ຄັ້ງທີ 3 ປີ 2020 ມີຫົວໜ່ວຍທຸລະກິດທັງໝົດ133.997 ຫົວໜ່ວຍ, ມີຜູ້ອອກແຮງງານ, 490.373 ຄົນ ເຊິ່ງໃນໄລຍະ 2 ປີເຄິ່ງຜ່ານມາມີຫົວໜ່ວຍທຸລະກິດ ເຂົ້າເປັນສະມາຊິກປະກັນສັງຄົມທັງໝົດ 3.178 ຫົວໜ່ວຍ, ເທົ່າກັບ 2,37% ຂອງຫົວໜ່ວຍແຮງງານ (133.997 ຫົວໜ່ວຍ), ມີຜູ້ອອກແຮງງານໃນຫົວໜ່ວຍທຸລະກິດທີ່ເຂົ້າເປັນສະມາຊິກປະກັນສັງຄົມ ແລະ ຈ່າຍເງິນສົມທົບເຂົ້າກອງທຶນປະກັນສັງຄົມທັງໝົດ 148.842 ຄົນ, ເທົ່າກັບ 30,35% ຂອງຜູ້ອອກແຮງງານ (490.373 ຄົນ). ຄຽງຄູ່ກັບການຂະຫຍາຍອັດຕາການປົກຄຸມ ແລະ ການປະຕິບັດນະໂຍບາຍປະກັນສັງຄົມປະເພດຕ່າງໆ ແລ້ວຍັງໄດ້ປັບປຸງຂັ້ນຕອນການຂຶ້ນທະບຽນປະກັນສັງຄົມ ສຳລັບຫົວໜ່ວຍທຸລະກິດ ໃຫ້ໄວຂຶ້ນ ໂດຍໄດ້ຫລຸດເວລາຈາກ 30 ວັນເຫຼືອພຽງ 2 ວັນລັດຖະການ.

ປະຈຸບັນມີ ຜູ້ປະກັນຕົນ ທັງໝົດ 348.124 ຄົນ, ພາກລັດ 176.833ຄົນ, ຍິງ 83.678ຄົນ, ພາກວິສາຫະກິດ 148.842ຄົນ, ຍິງ 71.695 ຄົນແລະຜູ້ສະໝັກໃຈ 22.449 ຄົນ, ຍິງ 9.687 ຄົນ. ສັງລວມແລ້ວ, ມີຜູ້ປະກັນຕົນ ແລະ ສະມາຊິກຄອບຄົວຂອງເຂົາເຈົ້າ ທີ່ເກີດສິດ ທັງໝົດ 827.686 ຄົນ ຍິງ 430.510 ຄົນ, ເທົ່າກັບ 11,18% ( ທຽບໃສ່ພົນລະເມືອງໃນປີ 2022 ຈຳນວນ 7,4 ລ້ານຄົນ), ໃນນີ້: ພາກລັດມີ 494.793 ຄົນ, ຍິງ 255.054 ຄົນ, ພາກວິສາຫະກິດ ແລະ ຜູ້ສະໝັກໃຈ 332.893 ຄົນ, ຍິງ175.456 ຄົນ.

ຍັງໄດ້ເອົາໃຈໃສ່ປັບປຸງລະບົບການເກັບທຶນສົມທົບຂອງປະກັນສັງຄົມດ້ວຍການຫັນເປັນທັນສະໄໝເທື່ອລະກ້າວ ເຊິ່ງໄດ້ປັບປຸງການເກັບເງິນສົມທົບແລະການຈ່າຍເງິນອຸດໜູນປະເພດຕ່າງໆ ຈາກການບໍລິການຜ່ານເຄົາເຕີຂອງອົງການປະກັນສັງຄົມແຫ່ງຊາດ ແລະ ເຄົາເຕີຂອງບັນດາທະນາຄານ ໄປສູ່ການຂະຫຍາຍຊ່ອງທາງໃນການບໍລິການຜ່ານແອັບພລິເຄຊັນຂອງບັນດາທະນາຄານ, ຜ່ານລະບົບການເງິນດິຈິຕໍແອັບພລິເຄຊັນເທິງມືຖື M-Money, U-Money ແລະ ການບໍລິການປະກັນສັງຄົມແບບເຄື່ອນທີ່ເພື່ອສ້າງເງື່ອນໄຂໃຫ້ຜູ້ອອກແຮງງານນອກລະບົບ ຕາມກຸ່ມອາຊີບຕ່າງໆໃນຂັ້ນທ້ອງຖິ່ນໃຫ້ເຂົ້າເຖິງລະບົບປະກັນສັງຄົມແບບສະໝັກໃຈຢ່າງກ້ວາງຂວາງ ເຊິ່ງຜ່ານການຈັດຕັ້ງປະຕິບັດໃນໄລຍະ2ປີເຄິ່ງຜ່ານມາ ເຫັນວ່າຜູ້ສະໝັກໃຈໄດ້ມີທ່າອ່ຽງເພີ່ມຂຶ້ນຈາກ 5.401 ຄົນ ຂຶ້ນເປັນ 22.449 ຄົນ. ໃນປັດຈຸບັນ ໂດຍໄດ້ຮັບການສະໜັບສະໜູນຈາກອົງການຈັດຕັ້ງສາກົນໄດ້ລິເລີ່ມເຮັດໂຄງການທົດລອງ ດ້ວຍການໂຄສະນາ ແລະ ສະໜອງຂໍ້ມູນກ່ຽວກັບສິດ ແລະ ຜົນປະໂຫຍດດ້ານປະກັນສັງຄົມໃຫ້ແກ່ຜູ້ປະກອບອາຊີບອິດສະຫລະໃນຂົງເຂດກະສິກຳຢູ່ 34 ບ້ານ, 3 ເມືອງ ແລະ 3 ແຂວງ ຄື : ແຂວງ ສາລະວັນ, ເຊກອງ ແລະ ຈຳປາສັກ ເຊິ່ງກວມເອົາຊາວກະສິກອນຈຳນວນ 2.454 ຄົນ, ຍິງ 1.293 ຄົນ ແນໃສ່ສ້າງຄວາມເຂົ້າໃຈ ແລະ ເງື່ອນໄຂໃຫ້ເຂົາເຈົ້າໄດ້ຮັບການຄຸ້ມຄອງຈາກລະບົບປະກັນສັງຄົມໃນຕໍ່ໜ້າ.

ຄຽງຄູ່ກັນນີ້, ນະໂຍບາຍປະກັນສັງຄົມ ໄດ້ປະກອບສ່ວນສຳຄັນ ໃນການສ້າງຄວາມເຊື່ອໝັ້ນ ແລະສ້າງຄວາມສະຫງົບໃຫ້ຜູ້ອອກແຮງງານ ທີ່ເປັນຜູ້ປະກັນຕົນໃນລະດັບທີ່ແນ່ນອນ ເຊິ່ງສະແດງອອກໃນຊ່ວງທີ່ມີການແຜ່ລະບາດຂອງພະຍາດໂຄວິດ-19 ທີ່ຜູ້ອອກແຮງງານຈຳນວນໜຶ່ງຖືກປົດປ່ອຍອອກຈາກວຽກ ຫລື ໂຈະວຽກໄລຍະໃດໜຶ່ງຕາມກົດໝາຍກຳນົດນັ້ນ, ອົງການປະກັນສັງຄົມແຫ່ງຊາດໄດ້ເອົາໃຈໃສ່ປະຕິບັດນະໂຍບາຍອຸດໜູນປ່ອຍການ ແລະ ອຸດໜູນວ່າງງານສະເພາະໃນຊ່ວງການລະບາດພະຍາດໂຄວິດ-19 ໃນຂອບເຂດທົ່ວປະເທດ ທັງໝົດ 94.436 ເທື່ອຄົນ, ຍິງ 61.088 ເທື່ອຄົນ, ເປັນເງິນ 88,22 ຕື້ກ່ວາກີບ, ໃນນີ້: ນະໂຍບາຍອຸດໜູນປ່ອຍການຍ້ອນໂຄວິດ-19 ຈຳນວນ 21.795 ເທື່ອຄົນ, ຍິງ 11.356 ເທື່ອຄົນ, ເປັນເງິນ 20,30 ຕື້ກ່ວາກີບ ແລະ ອຸດໜູນວ່າງງານ ສະເພາະໂຄວິດ-19 ຈຳນວນ 72.641 ເທື່ອຄົນ, ຍິງ 49.732 ເທື່ອຄົນ, ມີ 1.107 ບໍລິສັດ ເປັນເງິນ 67,92 ຕື້ກ່ວາກີບ.

**2.3. ພັດທະນາ ແລະ ສ້າງຄວາມເຂັ້ມແຂງໃຫ້ລະບົບສະຫວັດດີການສັງຄົມ**

-ໄດ້ໃຫ້ການຊ່ວຍເຫຼືອສົງເຄາະ ແລະ ບັນເທົາທຸກປະຊາຊົນທີ່ທຸກຍາກ ແລະ ຜູ້ປະສົບໄພພິບັດເປັນເຂົ້າກິນຈຳນວນ 2.992 ໂຕນ, ມູນຄ່າ 25 ຕື້ກວ່າກີບ, ມີຜູ້ໄດ້ຮັບຜົນປະໂຫຍດ 81.250 ຄອບຄົວ, 239.003 ຄົນ, ຍິງ 112.596 ຄົນ, ສະໜອງເຄື່ອງອຸປະໂພກ ແລະ ບໍລິໂພກ ໃຫ້ແກ່ຜູ້ປະສົບໄພພິບັດ ແລະ ຜູ້ດ້ອຍໂອກາດໃນສັງຄົມມູນຄ່າ 4,2 ຕື້ກວ່າກີບ, ມີຜູ້ໄດ້ຮັບຜົນປະໂຫຍດ 42.900 ຄົນ, ຍິງ 22.068

ອ່ານຕໍ່ໜ້າ 25...

## ບົດລາຍງານ...

(ຕໍ່ຈາກໜ້າ 24)

ຄົນ; ຊ່ວຍເຫຼືອວັດຖຸສົມທົບປຸກສ້າງເຮືອນຢູ່ (ສັງກະສີ 32.460 ແຜ່ນ ແລະ ເຫຼັກຕະປູ 3.865 ກິໂລ) ມູນຄ່າ 1,2 ຕື້ກວ່າກີບ, ມີຜູ້ໄດ້ຮັບຜົນປະໂຫຍດ 901 ຄອບຄົວ;

-ໃຫ້ການຊ່ວຍເຫຼືອເດັກກຳພ້າ-ກຳພອຍດ້ອຍໂອກາດ ໂດຍຮັບເຂົ້າໄປເບິ່ງແຍງລ້ຽງດູຢູ່ບ້ານຊ່ວຍເຫຼືອເດັກນ້ອຍ ເອັສໂອເອັສລາວ ທັງ 6 ແຫ່ງຈຳນວນ 929 ຄົນ, ຍິງ 419 ຄົນ; ໃຫ້ການຊ່ວຍເຫຼືອເດັກ-ໄວໜຸ່ມດ້ອຍໂອກາດ ແລະ ຜູ້ມີຄວາມສ່ຽງຈາກການຄ້າມະນຸດດ້ວຍການຝຶກວິຊາຊີບ ແລະ ປະກອບວຽກເຮັດງານທຳຢູ່ໃນຊຸມຊົນຈຳນວນ 1.231 ຄົນ, ຍິງ 923 ຄົນ ແລະ ໃຫ້ການຊ່ວຍເຫຼືອເດັກດ້ອຍໂອກາດທີ່ຖືກປ່ອຍປະລະເລີຍຈຳນວນ 167 ຄົນ, ຍິງ 79 ຄົນ;

- ໄດ້ຈັດຕັ້ງປະຕິບັດໂຄງການທົດລອງໃຫ້ເງິນອຸດໜູນແກ່ແມ່ຍິງຖືພາ ແລະ ເດັກນ້ອຍກ່ອນໄວຮຽນຢູ່ເມືອງນອງແຂວງສະຫວັນນະເຂດ ແລະ ເມືອງສະໜາມໄຊ, ເມືອງພູວົງແຂວງອັດຕະປື ຊຶ່ງມີຜູ້ໄດ້ຮັບຜົນປະໂຫຍດທັງໝົດ 2.596 ຄົນ, ເປັນເງິນ 5 ຕື້ກວ່າກີບ ໂດຍໄດ້ຮັບການສະໜັບສະໜູນຈາກອົງການເຄືອຂ່າຍ ສປຊ;

-ເອົາໃຈໃສ່ຊຸກຍູ້ບັນດາແຂວງ ແລະ ນະຄອນຫຼວງສ້າງຕັ້ງກອງທຶນຄຸ້ມຄອງໄພພິບັດ ຂັ້ນແຂວງ ແລະ ເມືອງ ໄດ້ທັງໝົດ 53 ແຫ່ງ, ໃນນີ້: ຂັ້ນແຂວງ 9 ແຫ່ງ ແລະ ຂັ້ນເມືອງ 43 ແຫ່ງ. ພ້ອມນັ້ນ, ໃນແຕ່ລະປີກໍໄດ້ມີແຜນການກຽມຄວາມພ້ອມຕອບໂຕ້ໄພພິບັດ ໂດຍເນັ້ນໃສ່ 3 ມາດຕະການຄື: (1) ມາດຕະການປ້ອງກັນ ແລະ ຫຼຸດຜ່ອນຄວາມສ່ຽງໄພພິບັດ; (ຂ) ມາດຕະການໃນການຄວບຄຸມ/ຕອບໂຕ້ສຸກເສີນ; (3) ມາດຕະການໃນການຟື້ນຟູຫລັງໄພພິບັດ.

-ໄດ້ເອົາໃຈໃສ່ປະສານສົມທົບກັບຂະແໜງການກ່ຽວຂ້ອງຂະຫຍາຍລະບົບການສຶກສາຮຽນຮ່ວມຢູ່17 ແຂວງ, 137 ເມືອງ, 490 ໂຮງຮຽນ, ມີນັກຮຽນພິການທີ່ເຂົ້າຮຽນຮ່ວມຫລາຍກວ່າ 4.500 ຄົນ; ມີໂຮງຮຽນສຶກສາພິເສດ 2 ແຫ່ງ, ມີນັກຮຽນພິການທັງໝົດ 211 ຄົນ, ຍິງ 94 ຄົນ ທີ່ມາຈາກ 18 ແຂວງ.ນອກນີ້, ຍັງໄດ້ປັບປຸງ ແລະ ສ້າງຕຳລາການຮຽນການສອນ ໃຫ້ແທດເໝາະກັບປະເພດຄວາມພິການ. ຟື້ນຟູ, ບຳບັດຄົນພິການທາງດ້ານຈິດໃຈ ແລະ ຮ່າງກາຍໄດ້ 41.295 ຄົນ ພ້ອມທັງສະໜອງອຸປະກອນ ແລະ ເຄື່ອງຄ້ຳຊູທີ່ຈຳເປັນເຊັ່ນ: ລໍ້ເລື່ອນຄົນພິການ 2.729 ຄັນ, ລໍ້ໂຍກ 563 ຄັນ, ແຂນ-ຂາທຽມ 4.950 ອັນ, ເຄື່ອງຄ້ຳຊູ 656 ອັນ, ເຄື່ອງຊ່ວຍຟັງ 176 ອັນ ແລະ ແວ່ນຕາ 200 ກ່ວາຄູ່. ຝຶກວິຊາຊີບໃຫ້ຄົນພິການໄດ້ຫລາຍກວ່າ 1.100 ຄົນ, ໃນນີ້: 700 ກວ່າຄົນມີວຽກເຮັດງານທຳ ແລະ 230 ກວ່າຄົນມີທຸລະກິດສ່ວນຕົວ. ສ້າງສິ່ງອຳນວຍຄວາມສະດວກຢູ່ສະຖານທີ່ຕ່າງໆ ເຊັ່ນ: ທາງເນີນສຳລັບລໍ້ເລື່ອນ, ລິບ, ຮາວຈັບ, ປ້າຍບອກ ແລະອື່ນໆ ຢູ່ສະຖານທີ່ຕ່າງໆ ເຊັ່ນ:ໂຮງໝໍ, ໂຮງຮຽນ,ສະຖານການສຶກສາ, ທະນາຄານ, ສະໜາມບິນ ແລະ ສະຖານທີ່ສາທາລະນະອື່ນໆ. ພ້ອມນັ້ນຍັງໄດ້ນຳພານັກກິລາຄົນພິການໄປຮ່ວມການແຂ່ງຂັນຢູ່ຕ່າງປະເທດ ເຊິ່ງສາມາດຍາດຫລຽນຈຳນວນໜຶ່ງ.

- ໄດ້ເອົາໃຈໃສ່ເຮັດວຽກໂຄສະນາເຜີຍແຜ່ກ່ຽວກັບທີ່ມາຂອງລະເບີດບໍ່ທັນແຕກຕາມກຸ່ມບ້ານເປົ້າໝາຍຕ່າງໆໄດ້ 1.433 ເທື່ອບ້ານ, ມີຜູ້ເຂົ້າຮ່ວມຟັງທັງໝົດ 152.170 ຄົນ; ໃຫ້ການຊ່ວຍເຫຼືອດ້ານການຝຶກວິຊາຊີບ, ປະກອບອາຊີບ, ປິ່ນປົວຜູ້ລອດຊີວິດຈາກອຸບັດຕິເຫດລະເບີດບໍ່ທັນແຕກຕົກຄ້າງໄດ້ຈຳນວນ199 ຄົນ.

- ນັບແຕ່ປີ 1993-2020 ເປັນຕົ້ນມາ, ໄດ້ປະຕິບັດນະໂຍບາຍສະແດງຄວາມກະຕັນຍູຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດຮັບໃຊ້ການປະຕິວັດຊາດປະຊາທິປະໄຕ ທັງໝົດ 50.866 ທ່ານ, ເປັນເງິນ 746,92 ຕື້ກວ່າກີບ. ອີງຕາມມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 20/ສພຊ ກໍຄື ແຜນການພັດທະນາແຮງງານ ແລະ ສະຫວັດດີການສັງຄົມ 5 ປີ (2021-2025) ຄັ້ງທີ V ໄດ້ກຳນົດເປົ້າໝາຍສູ້ຊົນການປະຕິບັດນະໂຍບາຍໃຫ້ໄດ້ທັງໝົດ 16.000 ຄົນ ແລະ ມີຄວາມຕ້ອງການງົບປະມານ 418,82 ຕື້ກວ່າກີບ, ຜ່ານການຈັດຕັ້ງປະຕິບັດໃນໄລຍະສອງປີເຄິ່ງຜ່ານມາ ສາມາດປະຕິບັດໄດ້ 1.771 ທ່ານ, ເທົ່າກັບ 11,07% ຂອງແຜນການ 5 ປີ (16.000 ຄົນ) ເປັນເງິນ 42,99 ຕື້ກວ່າກີບ. ສະເພາະໃນມະຕິຂອງສະພາແຫ່ງຊາດ ສະບັບເລກທີ 82/ສພຊ, ລົງວັນທີ 30 ທັນວາ 2022 ໄດ້ຮັບຮອງເປົ້າໝາຍບູລິມະສິດ 562 ທ່ານ, ເປັນເງິນ 15 ຕື້ກີບ. ນອກຈາກນີ້, ຍັງໄດ້ສະເໜີງົບປະມານເພີ່ມຈຳນວນ 30 ຕື້ກີບ (ບ້ວງ 200 ຕື້ກີບ) ເພື່ອປະຕິບັດນະໂຍບາຍ ໃຫ້ເປົ້າໝາຍບູລິມະສິດຈຳນວນ 1.392 ທ່ານ ແຕ່ຍັງບໍ່ໄດ້ຮັບແຈ້ງຕົວເລກງົບປະມານເປັນທາງການເທື່ອ. ປີ 2023,ປັດຈຸບັນຍັງມີຜູ້ທີ່ຢູ່ໃນເປົ້າໝາຍບູລິມະສິດ ໃນຖານຂໍ້ມູນຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ທີ່ລໍຖ້າຮັບນະໂຍບາຍທັງໝົດ 28.604 ທ່ານ ຄາດຄະເນຄວາມຕ້ອງການງົບປະມານ 697,59 ຕື້ກວ່າກີບ, ໃນນີ້: ເປົ້າໝາຍເຂົ້າການປະຕິວັດ ປີ 1954 ຄືນຫຼັງ ຈຳນວນ 4.490 ທ່ານ ເປັນເງິນ 97,59 ຕື້ກວ່າກີບ ແລະ ເປົ້າໝາຍເຂົ້າການປະຕິວັດແຕ່ປີ 1955-1974 ຈຳນວນ 24.114 ທ່ານຕ້ອງການງົບປະມານ600 ຕື້ກ່ວາກີບ. ( ສະນັ້ນ, ຖ້າຫາກແຕ່ລະປີ ສາມາດສະໜອງງົບປະມານ ໄດ້ພຽງ 15 ຕື້ກີບນັ້ນ, ຈຳນວນ 28.604 ທ່ານ ທີ່ຕ້ອງການ ງົບປະມານ 697,59 ຕື້ກ່ວາກີບນີ້ ຈະໃຊ້ເວລາ ຕື່ມອີກ 47 ປີ ຈຶ່ງຈະສຳເລັດ; ຄິດໄລ່: 697,59 ຕື້ກີບ /15 ຕື້ກີບ = 47 ປີ ).

ໃນຂະນະດຽວກັນ, ຍັງໄດ້ສ້າງລະບົບຖານຂໍ້ມູນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດ ປະຊາທິປະໄຕສຳເລັດໂດຍພື້ນຖານ ເຊິ່ງລະບົບຖານຂໍ້ມູນນີ້ຈະເຮັດການກວດກາຂໍ້ມູນໃນການແກ້ໄຂນະໂຍບາຍຕໍ່ເປົ້າໝາຍຕ່າງໆຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນມີຄວາມຊັດເຈນຫລາຍຂຶ້ນ. ພ້ອມກັນນັ້ນ, ກໍ່ໄດ້ລົງສົມທົບກັບຄະນະກຳມະການຄົ້ນຄວ້າແກ້ໄຂນະໂຍບາຍຕາມດຳລັດ 272/ລບ ຂັ້ນແຂວງ ແລະ ເມືອງ ລົງກວດກາຂໍ້ມູນເປັນແຕ່ລະບ້ານ ເຊິ່ງມາເຖິງປັດຈຸບັນມີ ແຂວງບໍ່ແກ້ວ ໄດ້ປິດການປະຕິບັດນະໂຍບາຍ ສະເພາະເປົ້າໝາຍບູລິມະສິດ ໄປໃນປີ 2018 ແລະ ມີ 03 ແຂວງຄື: ແຂວງໄຊຍະບູລີ, ຊຽງຂວາງ ແລະ ຫົວພັນ ທີ່ໄດ້ສຳເລັດການເກັບກຳຂໍ້ມູນ ແລະ ປິດບັນຊີຮັບເອກະສານຄຳຮ້ອງຂໍນະໂຍບາຍໃນທົ່ວແຂວງ ແລະ ແຂວງອື່ນໆກໍ່ພວມເອົາໃຈໃສ່ເກັບກຳ, ກວດກາ ແລະ ສົມທຽບຂໍ້ມູນ ເພື່ອກ້າວໄປເຖິງການປິດບັນຊີຜູ້ສະເໜີຂໍນະໂຍບາຍຕາມລຳດັບ.

-ໄດ້ສຳເລັດການຖ່າຍໂອນໂຄງການອາຫານທ່ຽງໃນໂຮງຮຽນຈາກຜູ້ໃຫ້ທຶນມາໃຫ້ລັດຖະບານຄຸ້ມຄອງບໍລິຫານເອງຈຳນວນ 827 ໂຮງຮຽນ ພ້ອມທັງສະໜອງງົບປະມານໃຫ້ໂຮງຮຽນເປົ້າໝາຍໂຄງການອາຫານທ່ຽງ ໃນແຕ່ລະປີ, ເອົາໃຈໃສ່ຄຸ້ມຄອງໂຮງຮຽນສາມັນກິນນອນຊົນເຜົ່າ ແລະ ໂຮງຮຽນສຶກສາຄົນພິການທັງໝົດ 26 ແຫ່ງ, ມີນັກຮຽນທັງໝົດ 8.469 ຄົນ, ຍິງ 4.739 ຄົນດ້ວຍການສະໜອງທຶນການສຶກສາເປັນອຸປະກອນການຮຽນ, ຊຸດເຄື່ອງແບບນັກຮຽນ ແລະ ເບັ້ຍລ້ຽງອຸດໜູນສຳລັບນັກຮຽນຂັ້ນມັດທະຍົມຕອນຕົ້ນ ທີ່ເປັນນັກຮຽນຈາກຄອບຄົວທຸກຍາກ ແລະ ດ້ອຍໂອກາດ; ໄດ້ຈັດຊື້ອາຫານສົດປະຈຳສົກຮຽນ 2021-2022 ໃຫ້ໂຮງຮຽນເປົ້າໝາຍໂຄງການອາຫານທ່ຽງ ໃນ 07 ແຂວງ 36 ເມືອງ ທີ່ລັດຖະບານຄຸ້ມຄອງບໍລິຫານ, ລວມເປັນເງິນທັງໝົດ 19,46 ຕື້ກວ່າກີບ;

- ສົ່ງເສີມການຈັດຕັ້ງຮ່ວມມືການຜະລິດ, ສະຫະກອນ ແລະ ການບໍລິການດ້ວຍຮູບແບບຕ່າງໆເພື່ອການສ້າງວຽກເຮັດງານທຳທີ່ມີຄຸນຄ່າ ແລະ ເປັນທຳ ຊຶ່ງໄດ້ຍູ້ແຮງຂະບວນການຜະລິດເປັນສິນຄ້າເພື່ອຮັບໃຊ້ພາຍໃນ ແລະ ສົ່ງອອກດ້ວຍການສະໜອງແນວພັນພືດ-ແນວພັນສັດ, ຈັດຝຶກອົບຮົມດ້ານການປູກ-ການລ້ຽງ, ການບໍລິຫານຈັດການເສດຖະກິດຄອບຄົວ ແລະ ຟາມ ໃຫ້ແກ່ຊາວກະສິກອນ, ສ້າງ ແລະ ປັບປຸງກຸ່ມ ແລະ ສະຫະກອນໃຫ້ມີການຂະຫຍາຍຕົວ, ມາຮອດປັດຈຸບັນ ມີ 4.193 ກຸ່ມ, ສະຫະກອນການຜະລິດ 28 ສະຫະກອນ,ເຄືອຂ່າຍຊາວກະສິກອນ 66 ຫົວໜ່ວຍ. ພ້ອມນັ້ນ ໄດ້ອອກດຳລັດວ່າດ້ວຍກຸ່ມ ແລະ ສະຫະກອນ ແລະ ກະກຽມຍົກລະດັບເປັນ ກົດໝາຍວ່າດ້ວຍສະຫະກອນ.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດໄດ້ຮັບການຈັດຕັ້ງປະຕິບັດຢ່າງຕໍ່ເນື່ອງ ແລະ ມີຜົນສຳເລັດເທື່ອລະກ້າວ ພ້ອມທັງສາມາດເຊື່ອມສານເຂົ້າໃນແຜນພັດທະນາຂອງບັນດາຂະແໜງການ, ພວກເຮົາຈະໄດ້ສຸມໃສ່ບາງວຽກຕົ້ນຕໍ ດັ່ງນີ້:

1. ເພີ່ມທະວີຄວາມເອົາໃຈໃສ່ໃນການຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍໃຫ້ເປັນລະບົບສອດຄ່ອງກັບສະພາບຄວາມຕ້ອງການທີ່ຈຳເປັນແຕ່ລະກຸ່ມເປົ້າໝາຍ, ພ້ອມທັງຊຸກຍູ້ການຈັດຕັ້ງຜັນຂະຫຍາຍ ຢ່າງເປັນເອກະພາບ ແລະ ກວ້າງຂວາງ ໂດຍສະເພາະຈະສຸມໃສ່ປັບປຸງກົດໝາຍວ່າດ້ວຍການປະກັນສັງຄົມ ແລະ ກົດໝາຍວ່າດ້ວຍປະກັນສຸຂະພາບໃຫ້ສຳເລັດໃນປີ 2024 ແລະ ສ້າງກົດໝາຍວ່າດ້ວຍສັງຄົມສົງເຄາະ ໃຫ້ສຳເລັດໃນກາງປີ 2025;

2. ພັດທະນາວຽກປະກັນສຸຂະພາບໃຫ້ມີຄວາມເຂັ້ມແຂງ ດ້ວຍການຄົ້ນຄວ້າ ແລະ ໄຈ້ແຍກລະຫວ່າງ ກຸ່ມເປົ້າໝາຍທີ່ໄດ້ຮັບການຄຸ້ມຄອງຈາກລະບົບປະກັນສັງຄົມ ແລະ ກຸ່ມເປົ້າໝາຍທີ່ຢູ່ໃນເງື່ອນໄຂເຂົ້າເປັນສະມາຊິກປະກັນສຸຂະພາບ ກຸ່ມເປົ້າໝາຍທີ່ທຸກຍາກ ແລະ ດ້ອຍໂອກາດ ເພື່ອຮັບປະກັນໃຫ້ແຕ່ລະກຸ່ມເປົ້າໝາຍສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບ ທີ່ມີຄຸນນະພາບ ຫລື ອາດຈະພິຈາລະນາໃນການໂອນນະໂຍບາຍການອຸດໜູນປະກັນສຸຂະພາບພາກລັດ, ພາກວິສາຫະກິດ ແລະ ຜູ້ສະໝັກໃຈຂອງລະບົບປະກັນສັງຄົມ ກັບຄືນມາໃຫ້ອົງການປະກັນສັງຄົມແຫ່ງຊາດເປັນຜູ້ຄຸ້ມຄອງ ແລະ ຈັດຕັ້ງປະຕິບັດໄປຄຽງຄູ່ກັບ 8 ປະເພດອຸດໜູນ ຕາມກົດໝາຍວ່າດ້ວຍການປະກັນສັງຄົມກຳນົດໄວ້. ສຳລັບເປົ້າໝາຍປະຊາຊົນທົ່ວໄປ ທີ່ບໍ່ໄດ້ຈ່າຍເງິນສົມທົບເຂົ້າກອງທຶນປະກັນສຸຂະພາບແຫ່ງ ຕາມກົດໝາຍວ່າດ້ວຍການປິ່ນປົວ; ສືບຕໍ່ປັບປຸງລະບົບການຄຸ້ມຄອງ-ບໍລິຫານໃຫ້ມີຄວາມວ່ອງໄວທັນກັບຄວາມຮຽກຮ້ອງຕ້ອງການຂອງຫົວໜ່ວຍບໍລິການປິ່ນປົວສຸຂະພາບຢູ່ແຕ່ລະທ້ອງຖິ່ນລວມທັງປັບປຸງຂັ້ນຕອນ ແລະ ຈັນຍາບັນ ຈັນຍາທຳ ຂອງຜູ້ເຮັດໜ້າທີ່ການສະໜອງບໍລິການປິ່ນສຸຂະພາບໃຫ້ເປັນທີ່ເພິ່ງພໍໃຈຂອງຜູ້ໃຊ້ບໍລິການ.

3. ສືບຕໍ່ພັດທະນາວຽກປະກັນສັງຄົມໃຫ້ມີປະສິດທິພາບ ໂດຍສະເພາະການຂະຫຍາຍການປົກຄຸມປະກັນສັງຄົມໃຫ້ໄດ້ທັງໝົດ 78.750 ຄົນ, ໃນນີ້: ພາກລັດໃຫ້ໄດ້ 3.750 ຄົນ, ພາກວິສາຫະກິດໃຫ້ໄດ້ 67.500 ຄົນ ແລະ ຜູ້ປະກັນຕົນສະໝັກໃຈ 7.500 ຄົນ, ເອົາໃຈໃສ່ວຽກໂຄສະນາປະຊາສຳພັນດ້ວຍຫລາຍວິທີໄປຄຽງຄູ່ກັບການກວດກາວຽກງານປະກັນສັງຄົມໃຫ້ເຂັ້ມງວດ ແລະ ປະຕິບັດມາດຕະການຕໍ່ຜູ້ລະເມີດເພື່ອຂະຫຍາຍການຄຸ້ມຄອງເປົ້າໝາຍໃຫ້ກວ້າງຂວາງ ທັງສາມາດເກັບແຫຼ່ງເງິນສົມທົບເຂົ້າກອງທຶນປະກັນສັງຄົມ ເພື່ອຮອງຮັບໃຫ້ການບໍລິການອຸດໜູນປະກັນສັງຄົມປະເພດຕ່າງໆສຳລັບຜູ້ປະກັນຕົນທີ່ເປັນພະນັກງານ-ລັດຖະກອນ, ຜູ້ອອກແຮງງານໃນຫົວໜ່ວຍແຮງງານ, ຜູ້ປະກອບອາຊີບສ່ວນບຸກຄົນ ແລະ ສະມາຊິກຄອບຄົວທີ່ເກີດສິດ ໄດ້ຢ່າງພຽງພໍ ແລະ ທັນການ, ລວມທັງການຄຸ້ມຄອງກອງທຶນປະກັນສັງຄົມແຫ່ງຊາດ ໃຫ້ມີຄວາມໂປ່ງໃສ, ສາມາດກວດສອບໄດ້ ແລະ ຮັບປະກັນຄວາມຍືນຍົງ.

4. ພັດທະນາວຽກສະຫວັດດີການສັງຄົມໃຫ້ເປັນລະບົບ ແລະ ເຂັ້ມແຂງໄປເທື່ອລະກ້າວ ດ້ວຍການຄົ້ນຄວ້າຈັດສັນງົບປະມານເຂົ້າໃສ່ວຽກງານນີ້ໃນສັດສ່ວນທີ່ແນ່ນອນ ເພື່ອສາມາດໃຫ້ການບໍລິການສົງເຄາະ, ການອຸດໜູນໃຫ້ເດັກທີ່ຕ້ອງການປົກປ້ອງພິເສດ ຫຼື ດ້ອຍໂອກາດ, ຜູ້ພິການ, ຜູ້ອາຍຸສູງທີ່ປ່ຽວພອຍ ແລະ ຜູ້ທີ່ທຸກຍາກທີ່ບໍ່ສາມາດຊ່ວຍເຫຼືອຕົນເອງໄດ້, ສະໜອງການສົງເຄາະບັນເທົາທຸກສຸກເສີນຜູ້ປະສົບໄພພິບັດຕ່າງໆໃຫ້ທັນກັບສະພາບຄວາມຮຽກຮ້ອງຕ້ອງການ, ສະໜອງທຶນການບໍລິຫານໂຮງຮຽນ, ທຶນສຳລັບນັກຮຽນທີ່ທຸກຍາກໃນຊັ້ນຮຽນຕ່າງໆ ແລະ ອາຫານທ່ຽງໃນໂຮງຮຽນ; ສືບຕໍ່ສົ່ງເສີມການຈັດຕັ້ງກຸ່ມການຜະລິດ ແລະ ສະຫະກອນດ້ວຍຫລາຍວິທີ ພ້ອມທັງຊອກຫາຕະຫລາດຈຳໜ່າຍຜະລິດຕະພັນກະສິກຳຂອງຊາວກະສິກອນໃຫ້ກວ້າງຂວາງກວ່າເກົ່າ ເພື່ອປະກອບສ່ວນອັນສຳຄັນເຂົ້າໃນການຫຼຸດຜ່ອນຄວາມທຸກຍາກຂອງປະຊາຊົນ ໃນເຂດຊົນນະບົດໃຫ້ມີການຫັນປ່ຽນທີ່ຕັ້ງໜ້າ;

ພ້ອມກັນນີ້, ກໍ່ຈະສືບຕໍ່ຄົ້ນຄວ້າປັບປຸງບັນດານະໂຍບາຍທີ່ກຳນົດເປົ້າໝາຍ ແລະ ເງື່ອນໄຂຂອງຜູ້ທີ່ຈະໄດ້ຮັບການປະຕິບັດນະໂຍບາຍສະຫວັດດີການສັງຄົມໃຫ້ຮັດກຸມ ແລະ ຊັດເຈນ ເພື່ອແກ້ໄຂນະໂຍບາຍໃຫ້ຜູ້ທີ່ມີຄວາມຈຳເປັນທີ່ສຸດ ເນື່ອງຈາກນະໂຍບາຍດ້ານສະຫວັດດີການ ເປັນນະໂຍບາຍທີ່ຂ້ອນຂ້າງກ້ວາງຂວາງ ຖ້າຈະກວມເອົາທຸກເປົ້າໝາຍ ແມ່ນຈະບໍ່ສາມາດປະຕິບັດໄດ້ໃນເງື່ອນໄຂທີ່ລັດຖະບານກໍ່ຍັງຫຍຸ້ງຍາກດ້ານງົບປະມານ.

5. ສືບຕໍ່ປັບປຸງກົນໄກການປະສານງານໃນການຈັດຕັ້ງປະຕິບັດຍຸດທະສາດ ໂດຍສະເພາະແມ່ນຊຸກຍູ້ບັນດາແຂວງທີ່ຍັງບໍ່ທັນໄດ້ແຕ່ງຕັ້ງຄະນະກຳມະການ ເພື່ອການປົກປ້ອງສັງຄົມຂັ້ນແຂວງໃຫ້ສຳເລັດ ພ້ອມທັງປັບປຸງກອງເລຂາປະສານງານໃຫ້ມີຄວາມເຂັ້ມແຂງ ເພື່ອນຳເອົາບັນດາໜ້າວຽກທີ່ກຳນົດໄວ້ຢູ່ໃນແຕ່ລະເປົ້າໝາຍຂອງຍຸດທະສາດ ໄປເຊື່ອມສານເຂົ້າໃນແຜນພັດທະນາ ຂອງແຕ່ລະຂະແໜງການ ແລະ ທ້ອງຖິ່ນ ເພື່ອຈັດສັນງົບປະມານເຂົ້າໃສ່ແຕ່ລະວຽກໃຫ້ສາມາດຈັດຕັ້ງປະຕິບັດ ເປັນຮູບປະທຳ ເທື່ອລະກ້າວ.

# ບົດປະກອບຄຳເຫັນຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ



**ທ່ານ ນາງ ທຸມມາລີ ວົງພະຈັນ ປະທານກຳມາທິການວັດທະນະທຳ-ສັງຄົມ ຕ່າງໜ້າຄະນະປະຈຳສະພາແຫ່ງຊາດ** ໄດ້ປະກອບຄຳເຫັນຕໍ່ບົດລາຍງານຂອງລັດຖະບານກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ມີດັ່ງນີ້:

ຄະນະປະຈຳສະພາແຫ່ງຊາດ ຂໍສະແດງຄວາມຊົມເຊີຍ ແລະ ເຫັນດີເປັນເອກະພາບຕໍ່ບົດລາຍງານຂອງລັດຖະບານທີ່ມີຄວາມພະຍາຍາມສ້າງ ແລະ ນຳພາຈັດຕັ້ງປະຕິບັດແຜນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດໃຫ້ມີຜົນສຳເລັດຫຼາຍດ້ານ ປະກອບສ່ວນສຳຄັນເຂົ້າໃນການປົກປ້ອງພົນລະເມືອງຈາກຜົນກະທົບໃນການພັດທະນາທາງດ້ານເສດຖະກິດ ແລະ ສັງຄົມ, ໄພພິບັດທຳມະຊາດ ແລະ ຄວາມບອບບາງອື່ນໆ ຊຶ່ງເປັນການຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ສົນທິສັນຍາ, ສັນຍາສາກົນ, ເປົ້າໝາຍການພັດທະນາແບບຍືນຍົງ ຫຼື SDGs ມາເປັນແຜນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ; ຜ່ານການຈັດຕັ້ງປະຕິບັດແຜນຍຸດທະສາດດັ່ງກ່າວເຫັນວ່າ ປະຊາຊົນບັນດາເຜົ່າສາມາດເຂົ້າເຖິງການບໍລິການປິ່ນປົວສຸຂະພາບຂັ້ນພື້ນຖານ, ຜູ້ປະກັນຕົນ ແລະ ສະມາຊິກຄອບຄົວໄດ້ຮັບການອຸດໜູນຈາກກອງທຶນປະກັນສັງຄົມ ແລະ ກອງທຶນປະກັນສຸຂະພາບ; ໄດ້ປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ຄຸນງາມຄວາມດີໃນພາລະກິດປະຕິວັດຊາດປະຊາທິປະໄຕ, ສະໜອງການຊ່ວຍເຫຼືອສົງເຄາະ ແລະ ບັນເທົາທຸກແກ່ປະຊາຊົນທີ່ທຸກຍາກ, ແມ່ຍິງຖືພາ, ເດັກກຳພ້າ ກຳພອຍ, ຜູ້ດ້ອຍໂອກາດ, ຜູ້ປະສົບໄພພິບັດທາງທຳມະຊາດ, ສະໜອງອາຫານທ່ຽງໃຫ້ນັກຮຽນຢູ່ໂຮງຮຽນເປົ້າໝາຍຂອງໂຄງການ, ລວມທັງການສ້າງເງື່ອນໄຂໃຫ້ຜູ້ພິການ ແລະ ຜູ້ອາຍຸສູງໄດ້ຮັບການພັດທະນາດີຂຶ້ນເທື່ອລະກ້າວ.

ແຕ່ຄຽງຄູ່ກັນນັ້ນ ຜ່ານການຕິດຕາມກວດກາຂອງສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ຍັງເຫັນວ່າ ໃນໄລຍະຜ່ານມາ ເຖິງວ່າເສດຖະກິດມີການຂະຫຍາຍຕົວ ແຕ່ກໍ່ບໍ່ໝາຍຄວາມວ່າ ທຸກຄົນໄດ້ຮັບໝາກຜົນຈາກການເຕີບໂຕດ້ານເສດຖະກິດຂອງປະເທດຢ່າງເທົ່າທຽມກັນ, ອັດຕາຄວາມທຸກຍາກຂອງປະຊາຊົນຍັງສູງ, ການບໍລິການຂັ້ນພື້ນຖານ ຍັງບໍ່ທັນທົ່ວເຖິງໃນທຸກເມືອງແລະ ທຸກບ້ານ, ຄວາມບໍ່ເທົ່າທຽມກັນດ້ານລາຍຮັບ ແລະ ການພັດທະນາ ລະຫວ່າງຕົວເມືອງ ແລະ ຊົນນະບົດ, ລະຫວ່າງແຂວງຕໍ່ແຂວງ ຍັງເປັນອຸປະສັກຕໍ່ການພັດທະນາເສດຖະກິດ-ສັງຄົມ; ວຽກງານປະກັນສຸຂະພາບ ເຖິງວ່າລັດຖະບານໄດ້ເອົາໃຈໃສ່ແຕ່ການຄຸ້ມຄອງບໍລິຫານກອງທຶນປະກັນສຸຂະພາບບໍ່ທັນເຂັ້ມແຂງ, ງົບປະມານບໍ່ພຽງພໍ ພາໃຫ້ເກີດມີໜີ້ສິນສະສົມຮອດປັດຈຸບັນມີເຖິງ 171 ຕື້ກີບ (ຕົວເລກທ້າຍປີ 2022), ການຄິດໄລ່ຕົ້ນທຶນຂອງຄ່າບໍລິການຍັງບໍ່ທັນສອດຄ່ອງກັບການປ່ຽນແປງ ແລະ ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມໃນແຕ່ລະໄລຍະ ໂດຍສະເພາະໃນສະພາບເງິນເຟີ້ສູງ, ສະຖານທີ່ບໍລິການປິ່ນປົວຫຼາຍແຫ່ງຍັງຂາດຢາບາງລາຍການຕາມບັນຊີຢາປິ່ນປົວພື້ນຖານ; ກົນໄກ ແລະ ຄຸນນະພາບການບໍລິການບໍ່ທັນໄດ້ດີ ອີງຕາມຜົນການສຳຫຼວດເກັບກຳຂໍ້ມູນຂອງສະພາແຫ່ງຊາດ ໃນເດືອນເມສາ 2023 ຢູ່ໂຮງໝໍຂັ້ນສູນກາງ 3 ແຫ່ງ ໂດຍນຳໃຊ້ແບບສອບຖາມເຊິ່ງໜ້າກັບຜູ້ມາໃຊ້ບໍລິການ ຈຳນວນ 150 ຄົນ ພົບວ່າ ລະດັບຄວາມພໍໃຈຕໍ່ການບໍລິການໃນລະດັບດີມີພຽງ 20% ແລະ ບໍ່ດີ 66,66%, ການຕ້ອນຮັບ, ທ່າທີ ແລະ ການເວົ້າຈາບໍ່ເໝາະສົມຂອງແພດໝໍ ກວມ 48%, ຄົນເຈັບໄດ້ໄປຊື້ຢາຢູ່ນອກເນື່ອງຈາກຢູ່ໂຮງໝໍບໍ່ມີຢາ ມີເຖິງ 78%, ນອກນັ້ນ ຫ້ອງກວດ, ຫ້ອງຈ່າຍຢາ, ບ່ອນຈ່າຍເງິນຍັງຄັບແຄບ, ປ່ອງບໍລິການປະກັນຍັງມີໜ້ອຍປ່ອງ, ຫ້ອງນ້ຳບໍ່ທັນພຽງພໍ ແລະ ບໍ່ສະອາດ (ຄົນເຈັບ ແລະ ຄົນມາເຝົ້າຄົນເຈັບຍັງໄດ້ໃຊ້ຫ້ອງນ້ຳຮ່ວມກັນ); ໃນຈຳນວນຜູ້ຕອບແບບສອບຖາມທີ່ຕອບວ່າເຄີຍຮູ້ກ່ຽວກັບປະກັນສັງຄົມມີພຽງ 4%, ບໍ່ຮູ້ 64%, ບໍ່ຕອບ 32% ແລະ ເຫັນວ່າ ການຂະຫຍາຍອັດຕາປົກຄຸມປະກັນສັງຄົມຍັງຕ່ຳຫຼາຍເມື່ອທຽບໃສ່ປະຊາກອນກຸ່ມເປົ້າໝາຍ, ການໂຄສະນາ-ປະຊາສຳພັນວຽກງານປະກັນສັງຄົມ, ປະກັນສຸຂະພາບບໍ່ທັນກວ້າງຂວາງ, ເລິກເຊິ່ງ; ງົບປະມານຮັບໃຊ້ວຽກງານສະຫວັດດີການສັງຄົມຍັງຈຳກັດ ໂດຍສະເພາະການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ ແລະ ຄຸນງາມຄວາມດີໃນພາລະກິດປະຕິວັດຊາດ ປະຊາທິປະໄຕ, ການສະໜອງທຶນບໍລິຫານໂຮງຮຽນ, ເບ້ຍລ້ຽງ, ອາຫານທ່ຽງໃຫ້ນັກຮຽນຜູ້ທຸກຍາກ ແລະ ດ້ອຍໂອກາດຍັງບໍ່ທັນພຽງພໍ ແລະ ທົ່ວເຖິງ ເຮັດໃຫ້ນັກຮຽນປະລະການຮຽນ ຫຼືບໍ່ກັບໄປຮຽນອີກຫຼັງຈາກການແຜ່ລະບາດຂອງພະຍາດໂຄວິດ-19 ມີຈຳນວນເພີ່ມຂຶ້ນເພື່ອໄປຊອກວຽກເຮັດງານທຳຢູ່ຕົວເມືອງ ແລະໄປເຮັດວຽກຢູ່ປະເທດໃກ້ຄຽງແບບຜິດກົດໝາຍເປັນຈຳນວນຫຼວງຫຼາຍ, ຖານຂໍ້ມູນກ່ຽວກັບລະບົບປົກປ້ອງສັງຄົມແຫ່ງຊາດບໍ່ທັນຊັດເຈນ ແລະ ເປັນລະບົບ.

ຕໍ່ກັບວຽກງານຈຸດສຸມໃນຕໍ່ໜ້າ ທີ່ລັດຖະບານສະເໜີໄປນັ້ນ ໂດຍພື້ນຖານ ຄະນະປະຈຳສະພາແຫ່ງຊາດ ເຫັນດີເປັນເອກະພາບ, ແຕ່ເພື່ອຮັບປະກັນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດມີປະສິດທິພາບແລະປະສິດທິຜົນ ຄະນະປະຈຳສະພາແຫ່ງຊາດ ຈຶ່ງມີຂໍ້ສະເໜີໃຫ້ລັດຖະບານນຳໄປຄົ້ນຄວ້າພິຈາລະນາເພີ່ມເຕີມ ດັ່ງນີ້:

1. ໃຫ້ລັດຖະບານ ດຳເນີນການຕິດຕາມກວດກາ ແລະ ປະເມີນຜົນ ວຽກງານປະກັນສຸຂະພາບ, ປະກັນສັງຄົມ ເພື່ອຊອກໃຫ້ເຫັນດ້ານດີ, ຂໍ້ຄົງຄ້າງ, ສາເຫດ ແລະ ວິທີແກ້ໄຂໃນຕໍ່ໜ້າ ໂດຍສະເພາະ ໃນເງື່ອນໄຂທີ່ປະເທດເຮົາຍັງມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ຊີວິດການເປັນຢູ່ຂອງປະຊາຊົນຍັງມີຄວາມຫຍຸ້ງຍາກ, ບຸກຄະລາກອນທີ່ເປັນມືອາຊີບມີຈຳນວນຈຳກັດ, ການຕອບສະໜອງງົບປະມານຂອງລັດໃຫ້ແກ່ກອງທຶນປະກັນສຸຂະພາບ ແລະ ກອງທຶນປະກັນສັງຄົມ ຍັງມີຄວາມຈຳກັດ, ກອງປະຊຸມເຫັນຄວນໃຫ້ສອງກອງທຶນດັ່ງກ່າວໄປຂຶ້ນກັບອົງການຄຸ້ມຄອງດຽວກັນ ພາຍໃຕ້ການຊີ້ນຳໂດຍກົງຂອງລັດຖະບານ ເພື່ອເຮັດໃຫ້ວຽກງານປະກັນສຸຂະພາບ, ປະກັນສັງຄົມ ມີຄວາມເຂັ້ມແຂງ ແລະ ຍືນຍົງ, ຫຼຸດຜ່ອນການແບກຫາບດ້ານງົບປະມານຂອງລັດ ແລະ ເຮັດໃຫ້ກົງຈັກການຈັດຕັ້ງກະທັດຮັດ, ໂປ່ງໃສ, ກວດສອບໄດ້, ມີປະສິດທິພາບ ແລະ ປະສິດທິຜົນ;

2. ໃຫ້ລັດຖະບານສ້າງ ແລະ ປັບປຸງລະບົບຖານຂໍ້ມູນລະດັບຊາດກ່ຽວກັບວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມໃຫ້ລວມສູນ, ທັນສະໄໝ ແລະ ສາມາດເຊື່ອມຕໍ່ກັນໄດ້ລະຫວ່າງຂະແໜງການ, ທ້ອງຖິ່ນໃນຂອບເຂດທົ່ວປະເທດ, ສາມາດກຳນົດໄດ້ກຸ່ມເປົ້າໝາຍທີ່ຈະໄດ້ຮັບການຊ່ວຍເຫຼືອ ເປັນຕົ້ນ: ຜູ້ທີ່ມີຖານະເສດຖະກິດທຸກຍາກ, ປານກາງ, ຮັ່ງມີ, ກຸ່ມເປົ້າໝາຍທີ່ດ້ອຍໂອກາດ, ກຸ່ມທີ່ໄດ້ຮັບການປົກປ້ອງພິເສດ;

3. ໃຫ້ລັດຖະບານ ເອົາໃຈໃສ່ປັບປຸງກົນໄກການຄຸ້ມຄອງບໍລິຫານ, ບັນຫາຄຸນນະພາບການບໍລິການຂອງລະບົບປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ລວມທັງການປັບປຸງຈັນຍາບັນ, ຈັນຍາທຳຂອງບຸກຄະລາກອນ ໃຫ້ມີນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ ເພື່ອສ້າງແຮງຈູງໃຈແກ່ຜູ້ມາໃຊ້ບໍລິການ ທັງຂະຫຍາຍອັດຕາປົກຄຸມປະກັນສຸຂະພາບ ແລະ ປະກັນສັງຄົມໃຫ້ກວ້າງຂວາງ, ທົ່ວເຖິງທຸກກຸ່ມເປົ້າໝາຍ; ຄົ້ນຄວ້າການອອກບັດປະກັນສຸຂະພາບໃຫ້ທົ່ວເຖິງ, ປັບປຸງບັດປະກັນສັງຄົມ, ບັດປະກັນສຸຂະພາບ ໃຫ້ສາມາດນຳໃຊ້ໄດ້ຢ່າງສະດວກຢູ່ທຸກສະຖານບໍລິການປິ່ນປົວສຸຂະພາບໃນຂອບເຂດທົ່ວປະເທດ, ເອົາໃຈໃສ່ສ້າງຄູ່ມືກ່ຽວກັບມາດຕະຖານຄຸນນະພາບການປິ່ນປົວສຸຂະພາບຢູ່ໂຮງໝໍໃຫ້ສຳເລັດໂດຍໄວ;

4. ໃຫ້ລັດຖະບານ ທົບທວນຄືນລະບົບການຈ່າຍເງິນສົມທົບຂອງກຸ່ມເປົ້າໝາຍແລະຊຸດຜົນປະ ໂຫຍດ ຂອງລະບົບປະກັນສຸຂະພາບແຫ່ງຊາດ ໂດຍມີການສຶກສາຕົ້ນທຶນໃນການປິ່ນປົວ ແລະ ນຳໃຊ້ຕົ້ນທຶນການປິ່ນປົວໃຫ້ແທດເໝາະກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;

5. ໃຫ້ລັດຖະບານ ຄົ້ນຄ້ວາຈັດສັນງົບປະມານເພື່ອແກ້ໄຂບັນຫາໜີ້ສິນສະສົມມາຫຼາຍປີ ຂອງກອງທຶນປະກັນສຸຂະພາບເພື່ອບໍ່ໃຫ້ເກີດມີໜີ້ສິນສະສົມໄປເລື້ອຍໆ ແລະ ເພີ່ມງົບປະມານໃຫ້ແກ່ວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໃຫ້ສົມຄູ່ກັບຄວາມສຳຄັນ ແລະ ບັນດາຄາດໝາຍທີ່ກຳນົດໄວ້ໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໂດຍສະເພາະແມ່ນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ຄຸນງາມຄວາມດີໃນພາລະກິດປະຕິວັດຊາດ ປະຊາທິປະໄຕ ໃຫ້ສຳເລັດໂດຍໄວ, ປັບປຸງ ແລະ ພັດທະນາວຽກງານສະຫວັດດີການສັງຄົມ ເພື່ອໃຫ້ທຸກກຸ່ມເປົ້າໝາຍສາມາດເຂົ້າເຖິງການບໍລິ ການຊ່ວຍຫຼືອສັງຄົມສົງເຄາະ ຫຼື ການອຸດໜູນຕ່າງໆ; ເອົາໃຈໃສ່ຂະຫຍາຍເປົ້າໝາຍປະກັນສັງຄົມໃນພາກວິສາຫະກິດໃຫ້ໄວ ແລະ ກວ້າງຂວາງ;

6. ໃຫ້ລັດຖະບານ ເອົາໃຈໃສ່ຊີ້ນຳບັນດາຂະແໜງການກ່ຽວຂ້ອງຄົ້ນຄວ້າ, ສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ສະພາບຄວາມເປັນຈິງຂອງປະເທດເຮົາໃນແຕ່ລະໄລຍະ, ພ້ອມທັງຊຸກຍູ້, ຕິດຕາມ, ກວດກາ ການໂຄສະນາເຜີຍແຜ່ ແລະ ການຈັດຕັ້ງປະຕິບັດໃຫ້ແຂງແຮງ ແລະ ເຂັ້ມງວດ;

7. ໃຫ້ລັດຖະບານ ເອົາໃຈໃສ່ຕໍ່ການຈັດຕັ້ງກຸ່ມການຮ່ວມມືການຜະລິດ, ສະຫະກອນ ແລະ ການບໍລິການດ້ວຍຮູບແບບຕ່າງໆທີ່ເໝາະສົມ ເພື່ອສ້າງວຽກເຮັດງານທຳທີ່ມີຄຸນຄ່າ ແລະ ເປັນທຳ ແກ່ແຮງງານລາວ;

8. ໃຫ້ລັດຖະບານ ຊີ້ນຳຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເພື່ອປັບປຸງວິທີການ, ມາດຕະການຈັດຕັ້ງປະຕິບັດ 20 ກິດຈະກຳທີ່ກຳນົດໄວ້ໃນແຜນຍຸດທະສາດດັ່ງກ່າວໃຫ້ເກີດຜົນເປັນຈິງ;

9. ໃຫ້ລັດຖະບານ ຊີ້ນຳ ການຄົ້ນຄວ້າ ແລະ ປັບປຸງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມາທິການເພື່ອປົກປ້ອງສັງຄົມ, ປັບປຸງກົນໄກປະສານງານໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ລະຫວ່າງ ບັນດາຂະແໜງການຂັ້ນສູນກາງດ້ວຍກັນ ແລະ ລະຫວ່າງ ສູນກາງກັບທ້ອງຖິ່ນໃຫ້ມີຄວາມໂລ່ງລ່ຽນ, ກົມກຽວກັນ, ມີປະສິດທິພາບ ແລະ ປະສິດທິຜົນກວ່າເກົ່າ.



# ຖະແຫຼງຜົນສຳເລັດການພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ



**ທ່ານ ຄຳໃບ ດຳລັດ ຮອງປະທານສະພາແຫ່ງຊາດ** ໄດ້ຖະແຫຼງຂ່າວໃນວັນທີ 4 ກໍລະກົດ 2023 ກ່ຽວກັບຜົນສຳເລັດການພິຈາລະນາບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເຊິ່ງມີເນື້ອໃນດັ່ງນີ້:

ຕາງໜ້າຄະນະປະຈຳສະພາແຫ່ງຊາດ, ມີຄວາມຍິນດີ ແລະ ຖືເປັນກຽດຢ່າງສູງ, ແຈ້ງມາຍັງພະນັກງານ-ລັດຖະກອນ, ພໍ່ແມ່ພີ່ນ້ອງປະຊາຊົນລາວບັນດາເຜົ່າໃນທົ່ວປະເທດ ແລະ ພີ່ນ້ອງເຊື້ອຊາດລາວທີ່ອາໄສຢູ່ຕ່າງປະເທດ ຮັບຊາບຕໍ່ຜົນສຳເລັດຂອງການຄົ້ນຄວ້າ ແລະ ພິຈາລະນາວຽກງານໃນຂົງເຂດວັດທະນະທຳ-ສັງຄົມ ກ່ຽວກັບການຕິດຕາມກວດກາການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ.

ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃນຄັ້ງວັນທີ 30 ມິຖຸນາ 2023 ໄດ້ຮັບຟັງການລາຍງານໂດຍສັງເຂບຈາກລັດຖະບານ ທີ່ນຳສະເໜີໂດຍທ່ານລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ຫຼັງຈາກນັ້ນ ຜູ້ຕາງໜ້າຄະນະປະຈຳສະພາແຫ່ງຊາດ ໄດ້ຂຶ້ນມີຄຳເຫັນຕໍ່ບົດລາຍງານດັ່ງກ່າວ, ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ສຸມໃສ່ຄົ້ນຄວ້າ ແລະ ປະກອບຄວາມຄິດເຫັນຢ່າງກົງໄປກົງມາດ້ວຍຄວາມຮັບຜິດຊອບສູງ ໃນຖານະທີ່ເປັນຕົວແທນແຫ່ງສິດ ແລະ ຜົນປະໂຫຍດອັນຊອບທຳຂອງປະຊາຊົນລາວບັນດາເຜົ່າ, ພ້ອມທັງສະເໜີວິທີການ ແລະ ມາດຕະການ ເພື່ອໃຫ້ລັດຖະບານ ກໍຄືພາກສ່ວນກ່ຽວຂ້ອງນຳໄປຄົ້ນຄວ້າ, ປັບປຸງ ວຽກງານດັ່ງກ່າວໃຫ້ມີຜົນສຳເລັດດີຂຶ້ນ.

ຜູ້ແທນກອງປະຊຸມສ່ວນຫຼາຍ ແມ່ນເຫັນດີເປັນເອກະພາບຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເຊິ່ງໄລຍະຜ່ານມາ, ລັດຖະບານໄດ້ມີຄວາມພະຍາຍາມສ້າງ ແລະ ນຳພາຈັດຕັ້ງປະຕິບັດແຜນຍຸດທະສາດການປົກປ້ອງສັງຄົມແຫ່ງຊາດມີຜົນສຳເລັດຫຼາຍດ້ານ ແລະ ໄດ້ປະກອບສ່ວນສຳຄັນເຂົ້າໃນການປົກປ້ອງພົນລະເມືອງ ຈາກຜົນກະທົບທາງດ້ານເສດຖະກິດ-ສັງຄົມ, ໄພພິບັດທຳມະຊາດ ແລະ ກໍລະນີ ອື່ນໆ. ແຕ່ເຖິງຢ່າງໃດກໍຕາມ ຜ່ານການຕິດຕາມກວດກາຕົວຈິງຂອງສະພາແຫ່ງຊາດ, ຜູ້ແທນ ຍັງສະແດງຄວາມເປັນຫ່ວງເປັນໄຍ ແລະ ສະເໜີໃຫ້ລັດຖະບານເອົາໃຈໃສ່ແກ້ໄຂບາງດ້ານ ດັ່ງນີ້:

1. ໃຫ້ລັດຖະບານ ດຳເນີນການຕິດຕາມກວດກາ ແລະ ປະເມີນຜົນວຽກງານປະກັນສຸຂະພາບ, ປະກັນສັງຄົມ ເພື່ອຊອກໃຫ້ເຫັນດ້ານດີ, ຂໍ້ຄົງຄ້າງ, ສາເຫດ ແລະ ວິທີແກ້ໄຂໃນຕໍ່ໜ້າ ໂດຍສະເພາະໃນເງື່ອນໄຂທີ່ປະເທດເຮົາຍັງມີຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ຊີວິດການເປັນຢູ່ຂອງປະຊາຊົນຍັງມີຄວາມຫຍຸ້ງຍາກ, ການຕອບສະໜອງງົບປະມານຂອງລັດໃຫ້ແກ່ກອງທຶນປະກັນສຸຂະພາບ ແລະ ກອງທຶນປະກັນສັງຄົມ ຍັງມີຄວາມຈຳກັດ, ກອງປະຊຸມສະເໜີລັດຖະບານຄົ້ນຄວ້າໂຮມສອງກອງທຶນດັ່ງກ່າວໃຫ້ຂຶ້ນກັບອົງການຄຸ້ມຄອງດຽວກັນ ພາຍໃຕ້ການຊີ້ນຳໂດຍກົງຂອງລັດຖະບານ ເພື່ອເຮັດໃຫ້ວຽກງານປະກັນສຸຂະພາບ, ປະກັນສັງຄົມ ມີຄວາມເຂັ້ມແຂງ ແລະ ຍືນຍົງ, ຫຼຸດຜ່ອນການແບກຫາບດ້ານງົບປະມານຂອງລັດ;

2. ໃຫ້ລັດຖະບານສ້າງ ແລະ ປັບປຸງລະບົບຖານຂໍ້ມູນລະດັບຊາດ ກ່ຽວກັບວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໃຫ້ລວມສູນ, ທັນສະໄໝ ແລະ ສາມາດເຊື່ອມຕໍ່ກັນໄດ້ລະຫວ່າງຂະແໜງການ, ທ້ອງຖິ່ນໃນຂອບເຂດທົ່ວປະເທດ, ສາມາດກຳນົດໄດ້ກຸ່ມເປົ້າໝາຍທີ່ຈະໄດ້ຮັບການຊ່ວຍເຫຼືອ ເປັນຕົ້ນ: ຜູ້ທີ່ມີຖານະເສດຖະກິດທຸກຍາກ, ປານກາງ, ຜູ້ມີຖານະດີ, ກຸ່ມເປົ້າໝາຍທີ່ດ້ອຍໂອກາດ, ກຸ່ມທີ່ໄດ້ຮັບການປົກປ້ອງພິເສດ;

3. ໃຫ້ລັດຖະບານ ເອົາໃຈໃສ່ປັບປຸງກົນໄກການຄຸ້ມຄອງບໍລິຫານ, ບັນຫາຄຸນນະພາບການບໍລິການຂອງລະບົບປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມໃຫ້ມີປະສິດທິພາບ ແລະ ປະສິດທິຜົນ, ລວມທັງການປັບປຸງຈັນຍາບັນ, ຈັນຍາທຳຂອງບຸກຄະລາກອນ ໃຫ້ມີນ້ຳໃຈຮັບໃຊ້ຊາດ, ຮັບໃຊ້ປະຊາຊົນຢ່າງແທ້ຈິງ; ຄົ້ນຄວ້າການອອກບັດປະກັນສຸຂະພາບໃຫ້ທົ່ວເຖິງ, ປັບປຸງບັດປະກັນສັງຄົມ, ບັດປະກັນສຸຂະພາບ ໃຫ້ສາມາດນຳໃຊ້ໄດ້ຢ່າງສະດວກຢູ່ທຸກສະຖານທີ່ບໍລິການປິ່ນປົວສຸຂະພາບ ໃນຂອບເຂດທົ່ວປະເທດ;

4. ໃຫ້ລັດຖະບານ ຄົ້ນຄວ້າຈັດສັນງົບປະມານ ເພື່ອແກ້ໄຂບັນຫາໜີ້ສິນທີ່ສະສົມມາຫຼາຍປີ ຂອງກອງທຶນປະກັນສຸຂະພາບ ເພື່ອບໍ່ໃຫ້ເກີດມີໜີ້ສິນສະສົມໄປເລື້ອຍໆ ແລະ ເພີ່ມງົບປະມານໃຫ້ແກ່ວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໂດຍສະເພາະແມ່ນການປະຕິບັດນະໂຍບາຍຕໍ່ຜູ້ມີຜົນງານ, ຄຸນງາມຄວາມດີ ໃນພາລະກິດປະຕິວັດຊາດ ປະຊາທິປະໄຕ ໃຫ້ສຳເລັດໂດຍໄວ;

5. ໃຫ້ລັດຖະບານ ເອົາໃຈໃສ່ຊີ້ນຳບັນດາຂະແໜງການກ່ຽວຂ້ອງ ຄົ້ນຄວ້າສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍ ກ່ຽວກັບວຽກງານປະກັນສຸຂະພາບ, ປະກັນສັງຄົມ ແລະ ສະຫວັດດີການສັງຄົມ ໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ແລະ ສະພາບຄວາມເປັນຈິງຂອງແຕ່ລະໄລຍະ ພ້ອມທັງຊຸກຍູ້, ຕິດຕາມ, ກວດກາການໂຄສະນາເຜີຍແຜ່ ແລະ ການຈັດຕັ້ງປະຕິບັດໃຫ້ແຂງແຮງ;

6. ໃຫ້ລັດຖະບານ ຊີ້ນຳຄະນະກຳມາທິການແຫ່ງຊາດເພື່ອການປົກປ້ອງສັງຄົມ ດຳເນີນການປະເມີນຜົນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເພື່ອປັບປຸງວິທີການ, ມາດຕະການຈັດຕັ້ງປະຕິບັດ 20 ກິດຈະກຳທີ່ກຳນົດໄວ້ໃນແຜນຍຸດທະສາດດັ່ງກ່າວໃຫ້ເກີດຜົນເປັນຈິງ;

7. ໃຫ້ລັດຖະບານ ຊີ້ນຳການຄົ້ນຄວ້າ ແລະ ປັບປຸງພາລະບົດບາດ, ສິດ ແລະ ໜ້າທີ່ຂອງຄະນະກຳມາທິການເພື່ອປົກປ້ອງສັງຄົມ, ປັບປຸງກົນໄກປະສານງານໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ລະຫວ່າງ ບັນດາຂະແໜງການຂັ້ນສູນກາງດ້ວຍກັນ ແລະ ລະຫວ່າງ ສູນກາງກັບທ້ອງຖິ່ນ ໃຫ້ມີຄວາມໂລ່ງລ່ຽນ, ກົມກຽວກັນ, ມີປະສິດທິພາບ ແລະ ປະສິດທິຜົນກວ່າເກົ່າ.

ທັງໝົດນັ້ນ, ແມ່ນໄດ້ສະແດງເຖິງຄວາມຮັບຜິດຊອບໜ້າທີ່ການເມືອງຂອງລັດຖະບານ ໃນການຈັດຕັ້ງປະຕິບັດຍຸດທະສາດການປົກປ້ອງສັງຄົມແຫ່ງຊາດ ເພື່ອຮັບປະກັນໃຫ້ບັນດາຄາດໝາຍທີ່ກຳນົດໄວ້ໃນມະຕິກອງປະຊຸມສະພາແຫ່ງຊາດ ບັນລຸຕາມແຜນການທີ່ວາງໄວ້.

# ບົດລາຍງານຂອງລັດຖະບານກ່ຽວກັບຮ່າງຍຸດທະສາດການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030



ທ່ານ ຈັນທະເນດ ບົວລະພາ ລັດຖະມົນຕີກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (ກຊສ) ໄດ້ລາຍງານກ່ຽວກັບການສ້າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ໃນວາລະກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໃນວັນທີ 3 ກໍລະກົດ 2023 ເຊິ່ງມີເນື້ອໃນ ດັ່ງນີ້:

**I. ສະພາບລວມໃນການສ້າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ**

ໃນໄລຍະຜ່ານມາ, ກຊສ ໄດ້ແຕ່ງຕັ້ງຄະນະຮັບຜິດຊອບທົບທວນ ແລະ ສ້າງຍຸດທະສາດຂຶ້ນຕາມຂໍ້ຕົກລົງສະບັບເລກທີ 1089/ກຊສ, ລົງວັນທີ 12 ມີນາ 2020 ໂດຍໄດ້ເລີ່ມເກັບກຳຂໍ້ມູນ ແລະ ຮ່າງແຜນແຕ່ເດືອນມິຖຸນາ 2020 ເປັນຕົ້ນມາ ພ້ອມທັງໄດ້ນຳໄປທາບທາມຕໍ່ເນື້ອໃນຮ່າງຍຸດທະສາດຢ່າງກວ້າງຂວາງນຳພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນຫຼາຍຄັ້ງໃນຂອບເຂດທົ່ວປະເທດ ທັງໄດ້ຈັດກອງປະຊຸມປຶກສາຫາລືແບບເປີດກວ້າງ ຮ່ວມກັບອົງການຈັດຕັ້ງສາກົນ ແລະ ຜູ້ພັດທະນາໂຄງການ. ຈາກນັ້ນ, ກຊສ ກໍໄດ້ປັບປຸງຕາມຄຳເຫັນຂອງກອງປະຊຸມທາບທາມເປັນແຕ່ລະໄລຍະ ແລະ ໄປນຳເຂົ້າຜ່ານກອງປະຊຸມລັດຖະບານ ປະຈຳເດືອນກັນຍາ 2022 ແລະ ໃນວັນທີ 24 ພະຈິກ 2022 ນາຍົກລັດຖະມົນຕີ ໄດ້ອອກໜັງສືສະເໜີຄະນະປະຈຳສະພາແຫ່ງຊາດ ເພື່ອພິຈາລະນາຮັບຮອງ ເຊິ່ງກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃນວັນທີ 31 ມັງກອນ 2023 ໄດ້ເຫັນດີໂດຍພື້ນຖານຕໍ່ຮ່າງຍຸດທະສາດດັ່ງກ່າວ.

ກຊສ ໄດ້ສະເໜີຮ່າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຕໍ່ກອງປະຊຸມຍົກສູງຄຸນນະພາບທາງດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງ ກຊສ ໄດ້ປັບປຸງເນື້ອໃນຮ່າງຍຸດທະສາດຕາມຄຳເຫັນຂອງທີ່ປະຊຸມ ແລະ ພ້ອມແລ້ວທີ່ຈະສະເໜີຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເພື່ອພິຈາລະນາຮັບຮອງເອົາຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ຮອດປີ 2030.

**II. ທາດຜົນ ແລະ ຄວາມຈຳເປັນໃນການສ້າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ**

1. ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງມາດຕາ 10, 11 ແລະ 12 ໄດ້ກຳນົດຢ່າງຈະແຈ້ງກ່ຽວກັບການສ້າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ລະດັບຊາດ ແລະ ລະດັບທ້ອງຖິ່ນ;

2. ນ້ຳ ແລະ ຊັບພະຍາກອນນ້ຳ ມີຄວາມສຳຄັນ ແລະ ຈຳເປັນຕໍ່ສິ່ງທີ່ມີຊີວິດ ແລະ ການພັດທະນາເສດຖະກິດ-ສັງຄົມເຊິ່ງໃນໄລຍະຜ່ານມາແມ່ນຍັງບໍ່ທັນມີຍຸດທະສາດໃນການຄຸ້ມຄອງ ສະນັ້ນ, ຍຸດທະສາດສະບັບນີ້ ຈະເປັນເອກະສານທີ່ສຳຄັນຍິ່ງໃນການຄຸ້ມຄອງ, ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳຕາມຫຼັກການຄຸ້ມຄອງແບບເຊື່ອມສານ ເພື່ອຮັບປະກັນໃຫ້ມີຄຸນນະພາບດີ ແລະ ປະລິມານທີ່ພຽງພໍ ເພື່ອຕອບສະໜອງໃຫ້ແກ່ການອຸປະໂພກ-ບໍລິໂພກ ແລະ ການພັດທະນາແບບຍືນຍົງ ພ້ອມທັງຫຼຸດຜ່ອນຜົນເສຍຫາຍຈາກນ້ຳ.

**III. ໂຄງຮ່າງ ແລະ ເນື້ອໃນຕົ້ນຕໍຂອງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ**

ປະກອບດ້ວຍ IV ພາກ ດັ່ງນີ້:

**1) ພາກທີ I:** ພາກສະເໜີ ປະກອບມີ ສະພາບນ້ຳ ແລະ ຊັບພະຍາກອນນ້ຳ, ສະພາບການຄຸ້ມຄອງໃນໄລຍະຜ່ານມາ, ນະໂຍບາຍ ແລະ ສິ່ງທ້າທາຍໃນການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ;

**2) ພາກທີ II:** ປະກອບມີ ວິໄສທັດ, ຄາດໝາຍລວມ, ຫຼັກການ ແລະ ຄາດໝາຍສູ້ຊົນ;

**3) ພາກທີ III:** ແຜນງານ ແລະ ແຜນດຳເນີນງານ ປະກອບມີ 8 ແຜນງານ

**4) ພາກທີ IV:** ມາດຕະການໃນການຈັດຕັ້ງປະຕິບັດ

ຄຽງຄູ່ກັນນີ້ ໄດ້ກຳນົດແຜນດຳເນີນງານປີ 2021-2025 ປະກອບມີ 8 ແຜນດຳເນີນງານ, 15 ເປົ້າໝາຍ, 27 ວຽກຈຸດສຸມ ແລະ 85 ກິດຈະກຳ ຄື: ແຜນດຳເນີນງານທີ 1: ການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານ ປະກອບມີ 2 ເປົ້າໝາຍ, 3 ວຽກງານຈຸດສຸມ ແລະ 11 ກິດຈະກຳ; ແຜນດຳເນີນງານທີ 2: ການຄຸ້ມຄອງລະບົບຂໍ້ມູນຂ່າວສານນ້ຳ ແລະ ຊັບພະຍາກອນນ້ຳ ປະກອບມີ 2 ເປົ້າໝາຍ, 3 ວຽກງານຈຸດສຸມ ແລະ 7 ກິດຈະກຳ; ແຜນດຳເນີນງານທີ 3: ການປົກປັກຮັກສາ ແລະ ຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ປະກອບມີ 3 ເປົ້າໝາຍ, 5 ວຽກງານຈຸດສຸມ ແລະ 14 ກິດຈະກຳ;

ອ່ານຕໍ່ໜ້າ 28...

## ບົດລາຍງານ...

(ຕໍ່ຈາກໜ້າ 27)

ແຜນດຳເນີນງານທີ 4: ການຄຸ້ມຄອງນ້ຳໃຕ້ດິນ ປະກອບມີ 1 ເປົ້າໝາຍ, 3 ວຽກງານຈຸດສຸມ ແລະ 10 ກິດຈະກຳ; ແຜນດຳເນີນງານທີ 5: ການພັດທະນາໂຄງລ່າງພື້ນຖານທີ່ຕິດພັນກັບການນຳໃຊ້ນ້ຳ ປະກອບ ມີ 3 ເປົ້າໝາຍ, 6 ວຽກງານຈຸດສຸມ ແລະ 18 ກິດຈະກຳ; ແຜນດຳເນີນງານທີ 6: ການສ້າງກົນໄກທາງດ້ານການເງິນ ປະກອບມີ 1 ເປົ້າໝາຍ, 1 ວຽກງານຈຸດສຸມ ແລະ 3 ກິດຈະກຳ; ແຜນດຳເນີນງານທີ 7: ການພັດທະນາຊັບພະຍາກອນມະນຸດ ປະກອບມີ 2 ເປົ້າໝາຍ, 3 ວຽກງານຈຸດສຸມ, 17 ກິດຈະກຳ; ແຜນດຳເນີນງານທີ 8: ການຮ່ວມມືກັບສາກົນ ປະກອບມີ 1 ເປົ້າໝາຍ, 3 ວຽກງານຈຸດສຸມ ແລະ 5 ກິດຈະກຳ.

**IV. ຄາດຄະເນຜົນໄດ້ຮັບ**

ພາຍຫຼັງຍຸດທະສາດການຄຸ້ມຄອງນ້ຳ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ໄດ້ຜ່ານຮັບການຮັບຮອງ ແລະ ປະກາດໃຊ້ແລ້ວ ຄາດວ່າຈະເຮັດໃຫ້ບັນລຸຈຸດປະສົງຄາດໝາຍດັ່ງນີ້:

1) ເປັນການຈັດຕັ້ງຜັນຂະຫຍາຍມະຕິກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກປະຊາຊົນປະຕິວັດລາວ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ IX ແລະ ແຜນ 5 ປີ 2021-2025 ຂອງຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍສະເພາະແມ່ນການຜັນຂະຫຍາຍກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ສະບັບປັບປຸງ ປີ 2017 ລວມທັງແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ;

2) ມີຄວາມເປັນເອກະພາບ ແລະ ມີຄວາມເຂົ້າໃຈຮ່ວມກັນລະຫວ່າງບັນດາຂະແໜງການຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ, ການບໍລິຫານນ້ຳ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ແບບເຊື່ອມສານໃນການຄຸ້ມຄອງ, ປົກປັກຮັກສາ ແລະ ພັດທະນາຊັບພະຍາກອນນ້ຳ ເພື່ອໃຫ້ມີຄວາມອຸດົມສົມບູນຂອງລະບົບນິເວດວິທະຍາ ໂດຍຕິດພັນກັບການປັບປຸງຊີວິດການເປັນຢູ່ຂອງປະຊາຊົນໃຫ້ດີຂຶ້ນ;

3) ມີກົນໄກການຄຸ້ມຄອງ ແລະ ການມີສ່ວນຮ່ວມໃນຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳ ແລະ ຮັບປະກັນການມີສ່ວນຮ່ວມໃນການຄຸ້ມຄອງອ່າງຮັບນ້ຳໃຫ້ຫຼາຍຂຶ້ນ ລວມທັງການຄຸ້ມຄອງ, ການບໍລິຫານ ແລະ ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ຢ່າງມີປະສິດທິພາບສູງ, ຕອບສະໜອງຕໍ່ກັບການພັດທະນານ້ຳ ແລະ ຊັບພະຍາກອນນ້ຳຂອງບັນດາຂະແໜງການ, ການວາງແຜນການ, ການຕິດຕາມກວດກາ ແລະ ແຈ້ງເຕືອນໄພລ່ວງໜ້າ ພ້ອມທັງຮັບປະກັນການຄຸ້ມຄອງຂໍ້ມູນຂ່າວສານດ້ານຊັບພະຍາກອນນ້ຳ ຢ່າງເປັນລະບົບ;

4) ສາມາດຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບທີ່ເກີດຂຶ້ນຈາກໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ໂດຍປັບຕົວເຂົ້າກັບການປ່ຽນແປງດິນຟ້າອາກາດ, ປົກປັກຮັກສາ ແລະ ຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ມີຄຸນນະພາບທີ່ດີ ແລະ ມີຄວາມຫຼາກຫຼາຍ ແລະ ສົມດຸນທາງດ້ານລະບົບນິເວດວິທະຍາ, ປ່າໄມ້, ການປົກປັກຮັກສາສິ່ງແວດລ້ອມ ແລະ ການຄວບຄຸມມົນລະພິດທີ່ຕິດພັນກັບການຄຸ້ມຄອງຊັບພະຍາກອນນ້ຳ; ສະຫຼຸບແລ້ວ ການສ້າງຍຸດທະສາດສະບັບນີ້ ໄດ້ປະຕິບັດຕາມຂັ້ນຕອນໃນການສ້າງຍຸດທະສາດ ມີການຄົ້ນຄວ້າ, ມີການທາບທາມ ບັນດາກະຊວງ ແລະ ພາກສ່ວນທີ່ກ່ຽວຂ້ອງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ຫຼາຍຄັ້ງ ລວມທັງອົງການຈັດຕັ້ງສາກົນ ແລະ ຄູ່ຮ່ວມພັດທະນາ ຢ່າງກວ້າງຂວາງ ແລະ ໄດ້ຜ່ານການເຫັນດີຈາກລັດຖະບານແລ້ວ.

# ຄະນະປະຈຳສະພາແຫ່ງຊາດປະກອບຄຳເຫັນຕໍ່ຮ່າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030



ໃນຕອນເຊົ້າວັນທີ 3 ກໍລະກົດ 2023 **ທ່ານ ຣສ.ປອ ລິນຄຳ ດວງສະຫວັນ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ** ໄດ້ປະກອບຄຳເຫັນໃນນາມຕາງໜ້າຂອງຄະນະປະຈຳ ສພຊ ຕໍ່ບົດລາຍງານຂອງລັດຖະບານ ກ່ຽວກັບຮ່າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ວ່າ ໂດຍມີເນື້ອໃນດັ່ງນີ້:

ຄະນະປະຈຳ ສພຊ ສະແດງຄວາມຊົມເຊີຍລັດຖະບານ ທີ່ໄດ້ເອົາໃຈໃສ່ ແລະ ມີຄວາມພະຍາຍາມສູງ ໃນການຈັດຕັ້ງຜັນຂະຫຍາຍແນວທາງຂອງພັກ, ກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ປີ 2017 (ພາກທີ II ມາດຕາ 10 ແລະ ມາດຕາ 11) ເປັນຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ເຊິ່ງຈະເປັນທິດທາງ ແລະ ບ່ອນອີງໜຶ່ງທີ່ສຳຄັນໃຫ້ທຸກພາກສ່ວນໃນສັງຄົມ ມີສ່ວນຮ່ວມໃນການປົກປັກຮັກສາ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ມີປະສິດທິພາບ ແລະ ຍືນຍົງ ທັງຈະເປັນພື້ນຖານໃຫ້ແກ່ຂະແໜງການກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ໃນການຄຸ້ມຄອງ, ຕິດຕາມກວດກາການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ຕາມຫຼັກການຄຸ້ມຄອງແບບເຊື່ອມສານ ເພື່ອຮັບປະກັນໃຫ້ມີຄຸນນະພາບດີ ແລະ ມີປະລິມານພຽງພໍ ສາມາດຕອບສະໜອງໃຫ້ແກ່ການບໍລິໂພກ-ອຸປະໂພກ ແລະ ການພັດທະນາແບບຍືນຍົງ ພ້ອມທັງຈະຊ່ວຍຫຼຸດຜ່ອນຜົນເສຍຫາຍຈາກການນຳໃຊ້ນ້ຳ.

ຮ່າງຍຸດທະສາດສະບັບດັ່ງກ່າວ ຄະນະຮັບຜິດຊອບໄດ້ໃຊ້ເວລາກະກຽມມາແຕ່ຕົ້ນປີ 2020 ເປັນຕົ້ນມາ ໂດຍໄດ້ປະສານສົມທົບກັບພາກສ່ວນກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນ, ປະຕິບັດຕາມຂັ້ນຕອນການສ້າງ ແລະ ປັບປຸງນິຕິກຳ ຢ່າງເຂັ້ມງວດ, ນຳເຂົ້າຜ່ານໃນກອງປະຊຸມຄົບຄະນະ ປະຈຳປີ 2022 ຂອງກຳມາທິການເສດຖະກິດ ເຕັກໂນໂລຊີ ແລະ ສິ່ງແວດລ້ອມ, ກອງປະຊຸມຄະນະປະຈຳ ສພຊ, ກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ກ່ອນນຳເຂົ້າພິຈາລະນາໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງ ສພຊ ຊຸດທີ IX ໃນຄັ້ງນີ້.

ສປປ ລາວ ເປັນປະເທດໜຶ່ງທີ່ຕັ້ງຢູ່ພາກພື້ນອາຊີຕາເວັນອອກສ່ຽງໃຕ້ ແລະ ປະມານ 90% ຂອງເນື້ອທີ່ທົ່ວປະເທດ ຢູ່ໃນຂອບເຂດອ່າງແມ່ນ້ຳຂອງຕອນລຸ່ມ, ມີຄວາມອຸດົມສົມບູນໄປດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ມີອ່າງແມ່ນ້ຳຂອງ, ອ່າງນ້ຳ ສາຂາຂອງແມ່ນ້ຳຂອງ ແລະ ອ່າງຮັບນ້ຳສາຂາອື່ນ ໄຫຼຜ່ານແຕ່ເໜືອຕະຫຼອດໃຕ້ ເຊິ່ງເປັນປະໂຫຍດ ແລະ ມີຄຸນຄ່າສູງຕໍ່ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ ແລະ ເປັນທ່າແຮງທີ່ສຳຄັນໜຶ່ງໃນການຂັບເຄື່ອນການພັດທະນາເສດຖະກິດ-ສັງຄົມຂອງປະເທດຊາດ.

ລັດຖະບານ ໂດຍເຫັນໄດ້ຄວາມສຳຄັນໃນການຄຸ້ມຄອງນ້ຳ ແລະ ຊັບພະຍາກອນນ້ຳຈຶ່ງໄດ້ວາງແນວທາງ, ກຳນົດນະໂຍບາຍ, ສ້າງ ແລະ ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ເພື່ອຮັບປະກັນເຮັດໃຫ້ການຄຸ້ມຄອງວຽກງານດັ່ງກ່າວມີປະສິດທິພາບ ແລະ ປະສິດທິຜົນ ເປັນຕົ້ນແມ່ນກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ, ກົດໝາຍວ່າດ້ວຍທີ່ດິນ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ ເຮັດໃຫ້ລະບົບການຄຸ້ມຄອງວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ໄດ້ຮັບການປັບປຸງດີຂຶ້ນ ໂດຍໄດ້ມີການແບ່ງຂັ້ນຄຸ້ມຄອງ ລະຫວ່າງຂະແໜງການສູນກາງດ້ວຍກັນ, ຂະແໜງການສູນກາງ ແລະ ທ້ອງຖິ່ນດ້ວຍການກຳນົດຂອບເຂດສິດ, ໜ້າທີ່ໃນການຄຸ້ມຄອງທີ່ຈະແຈ້ງພໍສົມຄວນ.

ເຖິງຢ່າງໃດກໍຕາມ, ຜ່ານການຕິດຕາມກວດກາຂອງສະມາຊິກສະພາແຫ່ງ ແລະ ສະພາປະຊາຊົນຂັ້ນແຂວງ ໂດຍອີງໃສ່ກົດໝາຍ ແລະ ລະບຽບການກ່ຽວຂ້ອງທີ່ຕິດພັນກັບການຄຸ້ມຄອງ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ມາຮອດປັດຈຸບັນ ເຫັນວ່າຍັງມີຫຼາຍບັນຫາເປັນສິ່ງທ້າທາຍ ແລະ ຕ້ອງໄດ້ສືບຕໍ່ຄົ້ນຄວ້າປັບປຸງ ແລະ ແກ້ໄຂ ເຊັ່ນ:

1). ການຈັດຕັ້ງຜັນຂະຫຍາຍບາງມາດຕາຂອງກົດໝາຍວ່າດ້ວຍນ້ຳ ແລະ ຊັບພະຍາກອນນ້ຳ ເປັນນິຕິກຳໃຕ້ກົດໝາຍ ຍັງບໍ່ທັນສຳເລັດ ເປັນຕົ້ນແມ່ນມາດຕາ 31 ການອະນຸຍາດປ່ອຍນ້ຳເປື້ອນ, ມາດຕາ 34 ທີ່ດິນບໍລິເວນນ້ຳ, ມາດຕາ 56 ການບູລະນະຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ;

2). ການປົກປັກຮັກສາ ແລະ ການຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ຍັງເຮັດບໍ່ໄດ້ດີເທົ່າທີ່ຄວນ ເປັນຕົ້ນແມ່ນເຂດປ່າຍອດນ້ຳ, ທີ່ດິນບໍລິເວນນ້ຳ, ດິນທາມຖືກບຸກລຸກ ແລະ ທຳລາຍ ເຮັດໃຫ້ເກີດມີການເຊາະເຈື່ອນ ແລະ ການປ່ຽນແປງທາງໄຫຼຂອງນ້ຳ;

3). ການປ່ອຍນ້ຳເປື້ອນ, ນ້ຳເສຍຈາກຄົວເຮືອນ, ໂຮງງານອຸດສາຫະກຳ ແລະ ກິດຈະການອື່ນໆທີ່ຕິດພັນກັບການນຳໃຊ້ນ້ຳຍັງບໍ່ທັນມີການຄຸ້ມຄອງຢ່າງເປັນລະບົບ, ບໍ່ໄດ້ຜ່ານການກຳຈັດ ແລະ ບຳບັດກ່ອນປ່ອຍອອກສູ່ຄອງທຳມະຊາດ; ຢູ່ໃນຫຼາຍຕົວເມືອງ ຮ່ອງລະບາຍນ້ຳທີ່ໃຊ້ງົບປະມານຂອງລັດກໍ່ສ້າງກໍ່ຖືກຖົມ, ຫ້ວຍໜອງຄອງບຶງທຳມະຊາດ ກໍຖືກບຸກລຸກ ຈັບຈອງເອົາເປັນຂອງຕົນເອງ, ສ້າງອາຄານກວມເອົາຄອງລະບາຍນ້ຳ ແລະ ອື່ນໆ ເຊິ່ງໄດ້ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ, ທຳມະຊາດ ແລະ ການດຳລົງຊີວິດຂອງປະຊາຊົນ;

4). ການຄຸ້ມຄອງ, ຕິດຕາມກວດກາການນຳໃຊ້ນ້ຳໃຕ້ດິນ ຍັງບໍ່ເປັນລະບົບ ແລະ ເຂັ້ມງວດຕາມກົດໝາຍ, ບໍ່ຜ່ານຂະບວນການ ແລະ ຂັ້ນຕອນຕາມທີ່ກຳນົດໄວ້ໃນນິຕິກຳກ່ຽວກັບການຄຸ້ມຄອງນ້ຳໃຕ້ດິນ ຈຶ່ງເຮັດໃຫ້ເກີດມີການຂຸດເຈາະ ຫຼື ຊີເຈາະແບບຊະຊາຍ;

5). ກົນໄກການຄຸ້ມຄອງອ່າງຮັບນ້ຳແບບເຊື່ອມສານ ຍັງບໍ່ມີປະສິດທິພາບເທົ່າທີ່ຄວນ, ລະບົບການປະສານງານໃນການຄຸ້ມຄອງຍັງຂາດຄວາມເປັນເອກະພາບກັນ ລະຫວ່າງຂະແໜງການທີ່ກ່ຽວຂ້ອງ ເຊິ່ງການຄຸ້ມຄອງຍັງເຮັດໄປຕາມພາລະບົດບາດຂອງໃຜລາວ;

6). ການໂຄສະນາເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ປະຊາຊົນ ແລະ ສັງຄົມຮັບຮູ້ຍັງບໍ່ກວ້າງຂວາງເທົ່າທີ່ຄວນ.

ຜ່ານການຄົ້ນຄວ້າຮ່າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ໂດຍພື້ນຖານແລ້ວ ຄະນະປະຈຳສະພາແຫ່ງຊາດແມ່ນເຫັນດີເປັນເອກະພາບຕໍ່ເນື້ອໃນຂອງຮ່າງຍຸດທະສາດສະບັບດັ່ງກ່າວ ເປັນຕົ້ນແມ່ນແຜນງານ, ແຜນດຳເນີນງານ, ເປົ້າໝາຍ, ແຜນວຽກຈຸດສຸມ ແລະ ບັນດາກິດຈະກຳ ລວມທັງມາດຕະການໃນການຈັດຕັ້ງປະຕິບັດ ທີ່ໄດ້ກຳນົດໄວ້ໃນຮ່າງຍຸດທະສາດສະບັບນີ້ ແຕ່ເພື່ອຮັບປະກັນເຮັດໃຫ້ການຄຸ້ມຄອງ ແລະ ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ມີປະສິດທິພາບ ປະສິດທິຜົນ ຄະນະປະຈຳສະພາແຫ່ງຊາດ ສະເໜີບາງຄຳເຫັນ ດັ່ງນີ້:

1. ສືບຕໍ່ຄົ້ນຄວ້າສ້າງ, ປັບປຸງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດນ້ຳ ແລະ ຊັບພະຍາກອນນ້ຳ ເພື່ອເປັນເຄື່ອງມືໃຫ້ແກ່ການຈັດຕັ້ງປະຕິບັດຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ໃຫ້ສຳເລັດຕາມຄາດໝາຍ;

2. ຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ຕ້ອງໃຫ້ສອດຄ່ອງ

ອ່ານຕໍ່ໜ້າ 29...

## ຄະນະປະຈຳ...

(ຕໍ່ຈາກໜ້າ 28)

ກັບ ຍຸດທະສາດຂອງຂະແໜງການທີ່ກ່ຽວຂ້ອງ ເປັນຕົ້ນແມ່ນຂະແໜງກະສິກຳ ແລະ ປ່າໄມ້, ໂຍທາທິການ ແລະ ຂົນສົ່ງ, ພະລັງງານ ແລະ ບໍ່ແຮ່, ການທ່ອງທ່ຽວ, ສຶກສາ, ສາທາລະນະສຸກ ແລະ ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ;

3. ໃນການຈັດຕັ້ງຜັນຂະຫຍາຍຍຸດທະສາດສະບັບນີ້ ສະເໜີໃຫ້ມີການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ທັງສູນກາງ ແລະ ທ້ອງຖິ່ນຢ່າງກົມກຽວ ແລະ ເປັນເອກະພາບກັນ ເພື່ອຮັບປະກັນເຮັດໃຫ້ການຈັດຕັ້ງປະຕິບັດຍຸດທະສາດດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ;

4. ເອົາໃຈໃສ່ສ້າງກຳນົດກົນໄກການປະສານງານກັບພາກສ່ວນທີ່ກ່ຽວຂ້ອງ ໃຫ້ເປັນລະບົບຄົບຊຸດ ເປັນຕົ້ນແມ່ນສະໜອງຂໍ້ມູນຂ່າວສານ, ເຄື່ອງມືອຸປະກອນ ແລະ ການແບ່ງຄວາມຮັບຜິດຊອບ ຢ່າງຂາດຕົວ ເພື່ອບໍ່ໃຫ້ມີການຖິ້ມຄວາມຮັບຜິດຊອບໃຫ້ກັນ;

5. ເອົາໃຈໃສ່ໃນການຕິດຕາມກວດກາການຈຳກັດ ແລະ ບຳບັດນ້ຳເປື້ອນ, ນ້ຳເສຍຈາກຄົວເຮືອນ, ໂຮງງານອຸດສາຫະກຳ ແລະ ກິດຈະການອື່ນໆ ກ່ອນປ່ອຍອອກສູ່ຄອງ, ຮ່ອງລະບາຍນ້ຳ ແລະ ແມ່ນ້ຳທຳມະຊາດ ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ແລະ ທຳມະຊາດຫຼາຍ;

6. ຄຸ້ມຄອງຫ້ວຍ, ໜອງ, ຮ່ອງຄອງບຶງຕ່າງໆໂດຍບໍ່ໃຫ້ຖົມ, ສ້າງສິ່ງຂີດຂວາງຕໍ່ລະບົບລະບາຍນ້ຳ ຫຼື ຈັບຈອງເອົາເປັນຂອງສ່ວນຕົວ ພ້ອມທັງເຂັ້ມງວດປະຕິບັດມາດຕະການດ້ານກົດໝາຍຕໍ່ຜູ້ລະເມີດ;

7. ກົນໄກການຄຸ້ມຄອງບໍລິຫານ ແລະ ຈັດການນ້ຳຢູ່ໃນເຂດອ່າງຮັບນ້ຳ ຕ້ອງໄດ້ມີການປະສານສົມທົບ ແລະ ເອກະພາບກັນ ລະຫວ່າງຂະແໜງການທີ່ກ່ຽວຂ້ອງຂອງສູນກາງ ແລະ ທ້ອງຖິ່ນ ເພື່ອຮັບປະກັນບໍ່ໃຫ້ມີຜົນກະທົບຕໍ່ກັບການຄຸ້ມຄອງ, ນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ;

8. ເອົາໃຈໃສ່ໃນການປົກປັກຮັກສາ ແລະ ການຟື້ນຟູນ້ຳ ແລະ ຊັບພະຍາກອນນ້ຳ ເປັນຕົ້ນແມ່ນເຂດປ່າຍອດນ້ຳ, ທີ່ດິນບໍລິເວນນ້ຳ ເພື່ອຮັບປະກັນໃຫ້ນ້ຳມີຄຸນນະພາບດີມີປະລິມານທີ່ພຽງພໍ ເພື່ອຕອບສະໜອງໃຫ້ແກ່ການບໍລິໂພກ-ອຸປະໂພກ;

9. ເອົາໃຈໃສ່ໃນການຄຸ້ມຄອງຕິດຕາມກວດກາການນຳໃຊ້ນ້ຳໃຕ້ດິນ ໃຫ້ເປັນລະບົບ ແລະ ຖືກຕ້ອງຕາມລະບຽບການຄຸ້ມຄອງການນ້ຳໃຕ້ດິນ ເພື່ອຮັບປະກັນການນຳໃຊ້ນ້ຳໃຕ້ດິນໃຫ້ຖືກຕ້ອງຕາມເປົ້າໝາຍ, ປະຢັດ, ມີປະສິດທິຜົນແນໃສ່ຮັກສາຄວາມສົມດູນທາງດ້ານປະລິມານ ແລະ ຄຸນນະພາບຂອງນ້ຳໃຕ້ດິນ;

10. ສ້າງ ແລະ ພັດທະນາບຸກຄະລາກອນທີ່ຮັບຜິດຊອບວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ໄດ້ທັງປະລິມານ ແລະ ຄຸນນະພາບ ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການຂອງວຽກງານດັ່ງກ່າວ;

11. ເອົາໃຈໃສ່ໂຄສະນາເຜີຍແຜ່ຂໍ້ມູນຂ່າວສານວຽກງານນ້ຳ ແລະ ຊັບພະຍາກອນນ້ຳຢ່າງກວ້າງຂວາງ ໃຫ້ທຸກພາກສ່ວນໃນສັງຄົມ, ປະຊາຊົນເຂົ້າໃຈ, ເຂົ້າຮ່ວມ ແລະ ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ.

ທັງໝົດນີ້ ແມ່ນບາງຂໍ້ສະເໜີຂອງຄະນະປະຈຳສະພາແຫ່ງຊາດ ຕໍ່ຮ່າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ເພື່ອເປັນພື້ນຖານໃຫ້ບັນດາທ່ານສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມໃນຄັ້ງນີ້ ຄົ້ນຄວ້າປະກອບຄຳຄິດຄຳເຫັນຢ່າງກົງໄປກົງມາຕາມພາລະບົດບາດຂອງຕົນ ເພື່ອກ້າວໄປສູ່ການຮັບຮອງເອົາຮ່າງຍຸດທະສາດດັ່ງກ່າວ.

# ຖະແຫຼງກ່ຽວກັບຜົນການພິຈາລະນາຮ່າງຍຸດທະສາດການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ແຫ່ງຊາດ ຮອດປີ 2030

ໃນວັນທີ 11 ກໍລະກົດ 2023 **ທ່ານ ສົມມາດ ພົລເສນາ ຮອງປະທານສະພາແຫ່ງຊາດ** ໄດ້ຖະແຫລງຂ່າວຕໍ່ສື່ມວນຊົນວ່າ: ຂ້າພະເຈົ້າ ຂໍຖືເປັນກຽດຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ ຖະແຫຼງຂ່າວກ່ຽວກັບຜົນການພິຈາລະນາຮ່າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ຕໍ່ບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ນັກຮຽນນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າໃນຂອບເຂດທົ່ວປະເທດ ແລະ ພໍ່ແມ່ພີ່ນ້ອງຊາວລາວທີ່ຢູ່ຕ່າງປະເທດ ໃຫ້ໄດ້ຮັບຊາບຢ່າງທົ່ວເຖິງກັນ.



ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ ຄົ້ນຄວ້າພິຈາລະນາ ຮ່າງຍຸດທະສາດການຄຸ້ມຄອງ, ການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳແຫ່ງຊາດ ຮອດປີ 2030 ໃນພາກເຊົ້າຂອງວັນທີ 3 ກໍລະກົດ 2023 ທີ່ຜ່ານມາ, ເຊິ່ງໃນວາລະດັ່ງກ່າວ ກອງປະຊຸມໄດ້ຮັບຟັງການລາຍງານ ຈາກລັດຖະບານ ຕາງໜ້າໂດຍ ທ່ານ ຈັນທະເນດ ບົວລະພາ ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ທີ່ໄດ້ຮັບການມອບໝາຍ ຈາກທ່ານລັດຖະມົນຕີເພື່ອມາລາຍງານກ່ຽວກັບສະພາບຄວາມເປັນມາ, ເຫດຜົນ ແລະ ຄວາມຈຳເປັນໃນການສ້າງຮ່າງຍຸດທະສາດສະບັບດັ່ງກ່າວ ແລະ ທ່ານ ປະທານກຳມາທິການເສດຖະກິດ, ເຕັກໂນໂລຊີ ແລະ ສິ່ງແວດລ້ອມ ກໍໄດ້ຕາງໜ້າຄະນະປະຈຳສະພາແຫ່ງຊາດປະກອບຄຳເຫັນ ແລະ ບັນດາທ່ານສະມາຊິກສະພາແຫ່ງຊາດກໍໄດ້ນຳໃຊ້ສິດຂອງຕົນ ເອົາໃຈໃສ່ສຸມສະຕິປັນຍາ ລົງເລິກຄົ້ນຄວ້າ ແລະ ປະກອບຄຳເຫັນ ຢ່າງກົງໄປກົງມາ ໂດຍມີການວິເຄາະວິໄຈຢ່າງເລິກເຊິ່ງ, ດ້ວຍເຫດດ້ວຍຜົນ ແລະ ມີຄວາມຮັບຜິດຊອບສູງ ໂດຍໄດ້ຍົກໃຫ້ເຫັນໄດ້ພຶດຕິກຳຕົວຈິງ ທີ່ເກີດຂຶ້ນພາຍໃນເຂດເລືອກຕັ້ງຂອງຕົນ ເພື່ອສະເໜີໃຫ້ລັດຖະບານ ກໍຄືຄະນະຮັບຜິດຊອບຮ່າງຍຸດທະສາດດັ່ງກ່າວ ນຳໄປຄົ້ນຄວ້າ, ປັບປຸງປະກອບເນື້ອໃນ ໃສ່ຮ່າງຍຸດທະສາດ ໃຫ້ມີຄວາມຄົບຖ້ວນ, ສົມບູນ, ຮັດກຸມ, ສອດຄ່ອງກັບສະພາບຕົວຈິງ ແລະ ໃຫ້ສາມາດນຳໄປຈັດຕັ້ງປະຕິບັດໄດ້ຢ່າງມີປະສິດທິຜົນ ພາຍຫຼັງທີ່ຍຸດທະສາດ ດັ່ງກ່າວ ໄດ້ຖືກຮັບຮອງ. ພາຍຫຼັງທີ່ ບັນດາທ່ານສະມາຊິກສະພາແຫ່ງຊາດ ໄດ້ມີຄຳເຫັນແລ້ວ ທ່ານ ຮອງລັດຖະມົນຕີ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ກໍໄດ້ໃຫ້ການຊີ້ແຈງ, ອະທິບາຍຕໍ່ກັບຄຳເຫັນ-ຄຳຊັກຖາມ ທີ່ຕັ້ງຂຶ້ນຢູ່ໃນກອງປະຊຸມ. ສະນັ້ນ ຂ້າພະເຈົ້າ ຂໍສັງລວມບາງເນື້ອໃນ ທີ່ສຳຄັນ ດັ່ງນີ້:

1. ປະເທດເຮົາ ມີອາກາດຮ້ອນ, ຊຸ່ມຊື່ນ ເຊິ່ງເປັນເງື່ອນໄຂອຳນວຍຄວາມສະດວກໃຫ້ແກ່ການຜະລິດກະສິກຳ, ການສ້າງອຸດສາຫະກຳ ເຂື່ອນໄຟຟ້າ ແລະ ວຽກງານອື່ນໆ. ສະນັ້ນ, ສະພາແຫ່ງຊາດ ຈຶ່ງໄດ້ມອບໃຫ້ລັດຖະບານ ຄົ້ນຄວ້າກຳນົດກ່ຽວກັບການຄຸ້ມຄອງຢູ່ເນື້ອໃນແຜນຍຸດທະສາດນີ້ໃຫ້ລະອຽດ ແລະ ຈະແຈ້ງທີ່ສຸດ,ຕ້ອງໃຫ້ເຊື່ອມສານກັບຍຸດທະສາດຂອງຂະແໜງການອື່ນທີ່ກ່ຽວຂ້ອງ, ຕ້ອງມີການປະສານສົມທົບກັນຢ່າງກົມກຽວ ແລະ ເປັນເອກະພາບກັນ,ເພື່ອເຮັດໃຫ້ການຄຸ້ມຄອງການນຳໃຊ້ນ້ຳ ແລະ ຊັບພະຍາກອນນ້ຳ ມີປະສິດທິພາບ ແລະ ມີຜົນກະທົບໜ້ອຍທີ່ສຸດ ຕໍ່ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ;

2. ເພື່ອເຮັດໃຫ້ການຄຸ້ມຄອງແຫຼ່ງນ້ຳ ແລະ ການຮັກສານ້ຳໃຫ້ຍືນຍົງ ລັດຖະບານຕ້ອງເອົາໃຈໃສ່ຊີ້ນຳການໂຄສະນາເຜີຍແຜ່ກ່ຽວກັບການປົກປັກຮັກສາສາຍນ້ຳ ແລະ ການປະຕິບັດກົດໝາຍຢ່າງເຂັ້ມງວດ, ການມີສ່ວນຮ່ວມຂອງບັນດາກະຊວງ, ປຸກລະດົມຊຸມຊົນ ໃຫ້ມີສ່ວນຮ່ວມໃນການປົກປັກຮັກສາແຫຼ່ງນ້ຳລວມທັງການຮັກສາຄວາມສະອາດ ຕໍ່ແຫຼ່ງນ້ຳ; ເອົາໃຈໃສ່ພັດທະນາຊັບພະຍາກອນມະນຸດທີ່ຮັບຜິດຊອບວຽກງານນ້ຳ ແລະ ຊັບພະຍາກອນນ້ຳໃຫ້ສົມຄູ່ທາງດ້ານປະລິມານ ແລະ ຄຸນນະພາບ, ການຄົ້ນຄ້ວາສ້າງສະຖາບັນ ຄຸ້ມຄອງຊັບພະຍາກອນນ້ຳ ແລະ ອື່ນໆ;

3. ກິດຈະກຳໃນໂຮງງານອຸດສາຫະກຳປະເພດຕ່າງໆ, ການຜະລິດກະສິກຳ, ການຂຸດຄົ້ນແຮ່ທາດ ແມ່ນໄດ້ມີການນຳໃຊ້ນ້ຳເປັນຈຳນວນຫຼາຍ ຊຶ່ງໄດ້ສົ່ງຜົນກະທົບຕໍ່ຄຸນນະພາບຂອງນ້ຳ, ເຮັດໃຫ້ມີສານເຄມີຕົກລົງໃສ່ແມ່ນ້ຳລຳເຊນັບມື້ນັບເພີ່ມຂຶ້ນ, ສົ່ງຜົນກະທົບໂດຍກົງ ຕໍ່ການທຳມາຫາກິນຂອງປະຊາຊົນຢູ່ໃນເຂດທີ່ມີການຂຸດຄົ້ນແຮ່ທາດຕ່າງໆ. ເພື່ອແກ້ໄຂ ແລະ ຄວບຄຸມບັນຫາດັ່ງກ່າວ ສະພາແຫ່ງຊາດມອບໃຫ້ລັດຖະບານ ເອົາໃຈໃສ່ຄົ້ນຄວ້າ, ກຳນົດເນື້ອໃນຂອງຮ່າງຍຸດທະສາດ ວ່າດ້ວຍການຄຸ້ມຄອງນ້ຳ ໃຫ້ມີຄວາມຮັດກຸມ, ເປັນບ່ອນອີງໃນການແກ້ໄຂບັນຫາ ທີ່ເກີດຂຶ້ນໃນໄລຍະຜ່ານມາ, ສູ້ຊົນເຮັດໃຫ້ ແມ່ນ້ຳລຳເຊ ມີຄວາມສະອາດແລະເປັນມິດກັບສິ່ງແວດລ້ອມ.

4. ສະພາແຫ່ງຊາດ ມອບໃຫ້ລັດຖະບານ ເອົາໃຈໃສ່ຊີ້ນຳກະຊວງທີ່ກ່ຽວຂ້ອງ ເພື່ອເປັນເຈົ້າການໃນການຮັກສາ ແລະ ຟື້ນຟູນ້ຳ ເປັນຕົ້ນຍອດນ້ຳ, ບໍ່ນ້ຳທຳມະຊາດ, ດິນບໍລິເວນນ້ຳ, ບຶງ, ຫ້ວຍ, ຮ່ອງ, ນ້ຳໃຕ້ດິນ ເພື່ອສະໜອງນ້ຳໃຫ້ແກ່ວຽກກະສິກຳ, ວຽກທ່ອງທ່ຽວ ແລະ ຮັກສາລະບົບສິ່ງແວດລ້ອມ ແລະ ນິເວດໃຫ້ຍືນຍົງ. ພ້ອມດຽວກັນນີ້, ກໍຕ້ອງໄດ້ມີການຄົ້ນຄວ້າຕື່ມ ກ່ຽວກັບບົດບາດ ຂອງອົງການປົກຄອງທ້ອງຖິ່ນ, ສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ ໃນການຄຸ້ມຄອງ, ປົກປັກຮັກສາ ແລະ ນຳໃຊ້ ນ້ຳ ແລະ ຊັບພະຍາກອນນ້ຳ ແລະ ອື່ນໆ ພ້ອມທັງມີມາດຕະການລົງໂທດຕາມກົດໝາຍຢ່າງເຂັ້ມງວດ ຕໍ່ການປ່ອຍນ້ຳເສຍ ຈາກໂຮງຈັກ, ໂຮງງານ, ນິຄົມ, ຄົວເຮືອນ ແລະ ອື່ນໆ ໃຫ້ລະອຽດຈະແຈ້ງ. ເອົາໃຈໃສ່ໃນການສ້າງ ແລະ ພັດທະນາບຸກຄະລາກອນ ທີ່ຮັບຜິດຊອບວຽກງານນ້ຳ ແລະ ຊັບພະຍາກອນນ້ຳ ໃຫ້ໄດ້ທັງປະລິມານ ແລະຄຸນນະພາບຢ່າງມີຈຸດສຸມ ແລະ ເປົ້າໝາຍທີ່ແນ່ນອນ ສາມາດຕອບສະໜອງໄດ້ຕາມຄວາມຮຽກຮ້ອງຕ້ອງການ ຂອງວຽກງານດັ່ງກ່າວ.

ອີກເທື່ອໜຶ່ງ ຂ້າພະເຈົ້າ ຂໍຕາງໜ້າໃຫ້ຄະນະປະທານກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX, ຂໍສະແດງຄວາມຂອບໃຈມາຍັງ ບັນດາທ່ານພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ນັກຮຽນ, ນັກສຶກສາ, ປັນຍາຊົນ, ກຳມະກອນ, ຊາວຜູ້ອອກແຮງງານ, ພໍ່ແມ່ພີ່ນ້ອງ, ປະຊາຊົນລາວບັນດາເຜົ່າທຸກຊັ້ນຄົນ ໃນທົ່ວປະເທດ ແລະ ພີ່ນ້ອງຊາວລາວທີ່ອາໄສຢູ່ຕ່າງປະເທດ ທີ່ໄດ້ຕິດຕາມການດຳເນີນກອງປະຊຸມ ຄັ້ງນີ້ ແລະ ຂໍສະແດງຄວາມຂອບໃຈ ແລະ ຊົມເຊີຍຢ່າງຈິງໃຈ ມາຍັງສື່ມວນຊົນທຸກພາກສ່ວນ ລວມທັງໂທລະພາບແຫ່ງຊາດ ແລະ ວິທະຍຸກະຈາຍສຽງແຫ່ງຊາດ, ສື່ສິ່ງພິມປະເພດຕ່າງໆ ທີ່ໄດ້ຕິດຕາມຢ່າງໃກ້ຊິດ ເພື່ອເກັບກຳຂ່າວ ແລະ ເຜີຍແຜ່ຢ່າງທັນການກ່ຽວກັບການດຳເນີນກອງປະຊຸມໃນຄັ້ງນີ້ ໃຫ້ແກ່ສັງຄົມໄດ້ຮັບຊາບ ຢ່າງທົ່ວເຖິງ.

# ບົດລາຍງານສານປະຊາຊົນສູງສຸດ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ 2 ສະບັບ: ກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ



**ທ່ານ ສຈ. ປອ. ນາງ ວຽງທອງ ສີພັນດອນ ປະທານສານປະຊາຊົນສູງສຸດ** ໄດ້ລາຍງານກ່ຽວກັບການປະເມີນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງທ່ານໃຫ້ຮູ້ວ່າ: ກົດໝາຍວ່າດ້ວຍສານປະຊາຊົນ ສະບັບທຳອິດ ໄດ້ຖືກຮັບຮອງໃນກອງປະຊຸມສະໄໝສາມັນຄົບຄະນະເທື່ອທີ 2 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໃນປີ 1989 ແລະ ປະກາດນຳໃຊ້ຢ່າງເປັນທາງການ ຕາມດຳລັດຂອງປະທານປະເທດ ສະບັບເລກທີ 06, ລົງວັນທີ 09 ມັງກອນ 1990 ປະກອບມີ 6 ພາກ, 38 ມາດຕາ; ກົດໝາຍສະບັບນີ້ ຖືເປັນນິຕິກຳ ທີ່ມີຄວາມໝາຍສຳຄັນ ແລະ ເປັນເຄື່ອງມືພື້ນຖານໃນການສ້າງຕັ້ງ ແລະ ພັດທະນາລະບົບສານປະຊາຊົນ ທັງຢູ່ສູນກາງ, ແຂວງ, ກຳແພງນະຄອນ ແລະ ເມືອງ, ເປັນການກຳນົດພາລະບົດບາດ, ໜ້າທີ່ຂອງສານປະຊາຊົນແຕ່ລະຂັ້ນໃນການຕັດສິນຄະດີແລະການປະກອບຄະນະສານຕັດສິນ, ທັງເປັນບ່ອນອີງໃຫ້ສານປະຊາຊົນໄດ້ເຄື່ອນໄຫວປະຕິບັດໜ້າທີ່ ໄດ້ເປັນຢ່າງດີ.

ການປັບປຸງກົດໝາຍວ່າດ້ວຍສານປະຊາຊົນ ໃນແຕ່ລະຄັ້ງມີຄື: ຄັ້ງທີ 1 ໃນປີ 1991 ພາຍຫຼັງຮັບຮອງ ແລະ ປະກາດນຳໃຊ້ລັດຖະທຳມະນູນ ສະບັບທຳອິດ ຂອງ ສປປ ລາວ, ໄດ້ປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 1990 ທີ່ພົວພັນເຖິງການສ້າງຕັ້ງສານປະຊາຊົນ, ການພິຈາລະນາຕັດສິນຄະດີເປັນໝູ່ຄະນະ (ແຕ່ກ່ອນມີຕຸລາການປະຊາຊົນ ປະກອບເປັນຄະນະສານຕັດສິນ), ການຊີ້ນຳການຈັດຕັ້ງສານປະຊາຊົນ ແລະ ອື່ນໆ; ຄັ້ງທີ 2 ໃນປີ 2003 ເພື່ອຮັບປະກັນຄວາມສອດຄ່ອງກັບລັດຖະທຳມະນູນທີ່ໄດ້ຮັບການປັບປຸງ ຈຶ່ງໄດ້ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 1991 ເປັນ 6 ພາກ, 5 ໝວດ 66 ມາດຕາ ເພື່ອແນໃສ່ເຮັດໃຫ້ລະບົບການຈັດຕັ້ງສານປະຊາຊົນມີຄວາມໜັກແໜ້ນ, ເຂັ້ມແຂງ, ຍົກສູງປະສິດທິພາບໃນການບໍລິການຮັບໃຊ້ປະຊາຊົນດ້ານວຽກງານຍຸຕິທຳ; ຄັ້ງທີ 3 ໃນປີ 2009 ໄດ້ມີການທົບທວນລະບົບການຈັດຕັ້ງຂອງສານປະຊາຊົນເມືອງ ເພື່ອໃຫ້ສອດຄ່ອງກັບການປັບປຸງກົງຈັກບໍລິຫານລັດຂັ້ນເມືອງ ຕາມນະໂຍບາຍຂອງລັດຖະບານ ຈຶ່ງໄດ້ສະເໜີຄະນະປະຈຳສະພາແຫ່ງຊາດ ພິຈາລະນາອະນຸມັດໂຮມການຈັດຕັ້ງຂອງສານປະຊາຊົນຂັ້ນເມືອງ ມາເປັນສານປະຊາຊົນເຂດ ເພື່ອເພີ່ມສິດອຳນາດຂອງສານປະຊາຊົນເຂດ ແລະ ຫັນງົບປະມານຂອງສານປະຊາຊົນທົ່ວປະເທດຂຶ້ນກັບສາຍຕັ້ງສານປະຊາຊົນສູງສຸດ ຕາມມະຕິຕົກລົງ ສະບັບເລກທີ 113/ຄປຈ, ລົງວັນທີ 28 ພຶດສະພາ 2009 ຂອງຄະນະປະຈຳສະພາແຫ່ງຊາດ, ສະນັ້ນ ຈຶ່ງໄດ້ປັບປຸງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 2003 ເຊິ່ງປະກອບມີ 9 ພາກ, 5 ໝວດ ແລະ 66 ມາດຕາ; ຄັ້ງທີ 4 ໃນປີ 2017 ພາຍຫຼັງລັດຖະທຳມະນູນ ໄດ້ຮັບການປັບປຸງໃນປີ 2015 ຈຶ່ງໄດ້ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍສານປະຊາຊົນ ສະບັບປີ 2009 ຄືນໃໝ່ ເພື່ອເຮັດໃຫ້ການຈັດຕັ້ງສານປະຊາຊົນ ມີຄວາມໜັກແໜ້ນ, ເຂັ້ມແຂງ ເຊິ່ງໃນນັ້ນໄດ້ສ້າງຕັ້ງຄະນະສານປົກຄອງຂຶ້ນຢູ່ໃນລະບົບສານປະຊາຊົນ, ເຮັດໃຫ້ກົດໝາຍສະບັບນີ້ ປະກອບມີ 9 ພາກ, 5 ໝວດ ແລະ 69 ມາດຕາ; ຄັ້ງທີ 5 ໃນປີ 2022 ເພື່ອຮັບປະກັນການແບ່ງຂັ້ນຄຸ້ມຄອງ ແລະ ກະຈາຍອຳນາດໃຫ້ສານປະຊາຊົນແຕ່ລະຂັ້ນໃນການຄຸ້ມຄອງບໍລິຫານສານ ໂດຍສະເພາະສິດອຳນາດຂອງສານປະຊາຊົນສູງສຸດ ໃນການແຕ່ງຕັ້ງ, ຍົກຍ້າຍປົດຕຳແໜ່ງພະນັກງານບໍລິຫານຂອງສານ, ພະນັກງານຕຸລາການບາງຕຳແໜ່ງ ແລະ ການສັບປ່ຽນບ່ອນປະຈຳການຂອງພະນັກງານໃນລະບົບສານປະຊາຊົນ ຈຶ່ງໄດ້ປັບປຸງບາງມາດຕາຄື ມາດຕາ 2, 3, 21, 37 ແລະ ມາດຕາ 38 ທີ່ພົວພັນເຖິງສິດອຳນາດຂອງສານປະຊາຊົນສູງສຸດ.

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບທຳອິດ ໄດ້ຖືກຮັບຮອງ ແລະ ປະກາດໃຊ້ໃນປີ 1990 ຕາມມະຕິ ສະບັບເລກທີ 09/90/ສປສ, ລົງວັນທີ 29 ພະຈິກ 1990, ປະກອບມີ 6 ພາກ, 14 ໝວດ, 88 ມາດຕາ. ໃນນັ້ນ, ໄດ້ກຳນົດຂັ້ນຕອນ ແລະ ວິທີການ ໃນການດຳເນີນ, ຕັດສິນ ແລະ ພິພາກສາຄະດີແພ່ງ ໃຫ້ເປັນເອກະພາບ.

ການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງໃນແຕ່ລະຄັ້ງມີຄື: ຄັ້ງທີ 1 ໃນປີ 2004 ໄດ້ຄົ້ນຄວ້າປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ສະບັບປີ 1990 ໃຫ້ປະກອບມີ 11 ພາກ, 15 ໝວດ, 129 ມາດຕາ ໂດຍໄດ້ປັບປຸງຂັ້ນຂອງການດຳເນີນຄະດີ ຈາກ 2 ຂັ້ນ ມາເປັນ 3 ຂັ້ນ ຄື: ຂັ້ນຕົ້ນ, ຂັ້ນອຸທອນ ແລະ ຂັ້ນລົບລ້າງ ຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ,ພ້ອມທັງກຳນົດສິດອຳນາດ, ຂັ້ນຕອນ ແລະ ວິທີການດຳເນີນຄະດີຂອງສານຂັ້ນຕົ້ນ ແລະ ຂັ້ນອຸທອນ ໃຫ້ພິຈາລະນາດ້ານຫຼັກຖານ, ສ່ວນສານຂັ້ນລົບລ້າງ ມີສິດອຳນາດພິຈາລະນາແຕ່ບັນຫາທາງດ້ານກົດໝາຍເທົ່ານັ້ນ; ຄັ້ງທີ 2 ໃນປີ 2012 ໄດ້ປັບປຸງລະບົບການດຳເນີນຄະດີໃຫ້ສອດຄ່ອງກັບການປັບປຸງການຈັດຕັ້ງຂອງສານປະຊາຊົນ ໂດຍສະເພາະການໂຮມສານປະຊາຊົນເມືອງເປັນສານປະຊາຊົນເຂດ ແລະ ເພີ່ມສິດອຳນາດໃນການຕັດສິນຄະດີຂອງສານປະຊາຊົນເຂດ, ປັບປຸງຂັ້ນຕອນການດຳເນີນຄະດີນັບແຕ່ຂັ້ນຕອນການຮັບຄຳຮ້ອງຟ້ອງ, ການຄົ້ນຄວ້າ, ເກັບກຳຂໍ້ມູນຫຼັກຖານໃນຄະດີໃຫ້ລະອຽດ, ຄົບຖ້ວນມາແຕ່ເບື້ອງຕົ້ນ, ກຳນົດຫຼັກການ ແລະ ວິທີການໂຕ້ແຍ່ງ ເພື່ອໃຫ້ຄະດີມີຄວາມຈະແຈ້ງ, ການເກັບກຳຂໍ້ມູນຫຼັກຖານມີຄວາມຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ການຕັດສິນ ແລະ ພິພາກສາມີຄວາມຖືກຕ້ອງ ແລະ ກຳນົດການຮ່ວມມືສາກົນໃນການດຳເນີນຄະດີແພ່ງຢ່າງລະອຽດ ແລະ ສອດຄ່ອງກັບສົນທິສັນຍາ ແລະ ສັນຍາສາກົນທີ່ ສປປ ລາວ ເຂົ້າເປັນພາຄີ ເຊິ່ງກົດໝາຍສະບັບນີ້ ປະກອບມີ 18 ພາກ, 32 ໝວດ, 370 ມາດຕາ.

ກົດໝາຍວ່າດ້ວຍສານປະຊາຊົນ ໄດ້ຖືກຈັດພິມ ແລະ ແຈກຢາຍ ໃຫ້ພະນັກງານສານແຕ່ລະແຫ່ງເປັນເຄື່ອງມືນຳໃຊ້ ແລະ ໄດ້ແຈກຢາຍໃຫ້ພາກສ່ວນກ່ຽວຂ້ອງອື່ນຈຳນວນໜຶ່ງ, ພ້ອມນັ້ນ ກໍໄດ້ມີຄຳສັ່ງ, ຄຳແນະນຳໃຫ້ສານປະຊາຊົນແຕ່ລະຂັ້ນ ຄັດຈ້ອນເອົາບາງໝວດ, ບາງມາດຕາ, ສ້າງເປັນເອກະສານ ລົງເຜີຍແຜ່ໃຫ້ປະຊາຊົນຮັບຮູ້ໄດ້ຈຳນວນໜຶ່ງ. ເຖິງຢ່າງໃດກໍຕາມ ການຈັດຕັ້ງໂຄສະນາ, ເຜີຍແຜ່ ແລະ ການຍົກສູງສະຕິເຄົາລົບກົດໝາຍວ່າດ້ວຍສານປະຊາຊົນໃຫ້ແກ່ພະນັກງານຢູ່ບັນດາກະຊວງ, ອົງການ, ອຳນາດການປົກຄອງທ້ອງຖິ່ນ ແລະ ປະຊາຊົນບັນດາເຜົ່າ ຍັງເຮັດໄດ້ໜ້ອຍ, ຈຳກັດ, ບໍ່ທັນກວ້າງຂວາງ ແລະ ທົ່ວເຖິງ, ບໍ່ທັນໄດ້ຈັດຕັ້ງກອງປະຊຸມເຜີຍແຜ່ໂດຍກົງໃຫ້ແກ່ບັນດາກະຊວງ-ອົງການ ແລະ ພະແນກການຂັ້ນແຂວງ, ເມືອງ ເຮັດໃຫ້ສັງຄົມ, ປະຊາຊົນ ແລະ ບັນອົງການຈັດຕັ້ງຕ່າງໆ ບໍ່ເຂົ້າໃຈເຖິງພາລະບົດບາດ, ສິດ ແລະ ໜ້າທີ່ຂອງສານປະຊາຊົນເທົ່າທີ່ຄວນ.

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໄດ້ຖືກຈັດພິມເປັນປຶ້ມ ຈຳນວນ 30.000 ຫົວ ເພື່ອແຈກຢາຍໃຫ້ພະນັກງານຂອງສານ, ພະນັກງານຂະແໜງຍຸຕິທຳ, ທະນາຍຄວາມ, ບັນດາກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນລວມທັງປະຊາຊົນໄດ້ຮັບຮູ້ ແລະ ເຂົ້າໃຈການດຳເນີນຄະດີແພ່ງ, ໄດ້ອອກຄຳແນະນຳຈັດຕັ້ງປະຕິບັດ ແລະ ແນະນຳໃຫ້ສານແຕ່ລະຂັ້ນຈັດຕັ້ງໂຄສະນາເຜີຍແຜ່. ພ້ອມນັ້ນ ສານປະຊາຊົນສູງສຸດ ກໍໄດ້ຈັດຕັ້ງກອງປະຊຸມເຜີຍແຜ່ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ໃຫ້ພະນັກງານຂອງສານປະຊາຊົນ, ພະນັກງານໄອຍະການ, ບັນດາຄູອາຈານສອນກົດໝາຍ, ທະນາຍຄວາມ ແລະ ນັກກົດໝາຍ ຢູ່ 6 ຈຸດໃນຂອບເຂດທົ່ວປະເທດ, ສ້າງແຜນອາດການດຳເນີນຄະດີແພ່ງ, ປຶ້ມຄູ່ມືການດຳເນີນຄະດີແພ່ງແຈກຢາຍໃຫ້ພາກສ່ວນຕ່າງໆ ແລະ ສັງ ຄົມ, ໄດ້ຄັດຈ້ອນເອົາບາງໝວດ, ບາງມາດຕາ ລົງໂຄສະນາເຜີຍແຜ່ທາງໜັງສືພິມ, ວາລະສານ, ເວັບໄຊ, ເຟສເຟສບຸກຂອງສານປະຊາຊົນ ແລະ ສື່ອອນລາຍຕ່າງໆ ໂດຍສະເພາະເວັບໄຊ ແລະ ເຟສເຟສບຸກຂອງສານປະຊາຊົນສູງສຸດ ມີຜູ້ເຂົ້າເບິ່ງ ແລະ ຕິດຕາມຫຼາຍກວ່າ 300.000 ຄົນ. ເຖິງຢ່າງໃດກໍຕາມ ຖ້າທຽບໃສ່ຄວາມຮຽກຮ້ອງຕ້ອງການ ແລະ ການສ້າງລັດທີ່ປົກຄອງດ້ວຍກົດໝາຍ ກໍຄືການໃຫ້ປະຊາຊົນນຳໃຊ້ສິດໃນການດຳເນີນຄະດີຢ່າງຖືກຕ້ອງນັ້ນ ເຫັນວ່າການໂຄສະນາກົດໝາຍດຳເນີນຄະດີແພ່ງ ຍັງບໍ່ແຂງແຮງ ແລະ ທົ່ວເຖິງ ເຮັດໃຫ້ປະຊາຊົນບັນດາເຜົ່າ ບໍ່ເຂົ້າໃຈຕໍ່ລະບຽບກົດໝາຍ, ຂັ້ນຕອນການດຳເນີນຄະດີ, ເປັນສາເຫດໜຶ່ງພາໃຫ້ປະຊາຊົນທີ່ຢູ່ຫ່າງໄກສອກຫຼີກ ບໍ່ສາມາດເຂົ້າເຖິງຂະບວນການຍຸຕິທຳໄດ້ຢ່າງສະດວກເທົ່າທີ່ຄວນ.

ກົດໝາຍວ່າດ້ວຍສານປະຊາຊົນ ສະບັບປັບປຸງປີ 2017 ໄດ້ກຳນົດໃຫ້ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ມີ 6 ມາດຕາຄື: ມາດຕາ 4 ນະໂຍບາຍຂອງລັດກ່ຽວກັບສານປະຊາຊົນ; ມາດຕາ 13 ການພິຈາລະນາຄະດີເປັນໝູ່ຄະນະ; ມາດຕາ 31 ໂຄງປະກອບການຈັດຕັ້ງ; ມາດຕາ 32 ສະພາຜູ້ພິພາກສາ; ມາດຕາ 44 ສິດ ແລະ ໜ້າທີ່ຂອງຈ່າສານ; ມາດຕາ 63 ງົບປະມານ ຂອງສານປະຊາຊົນ.

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບປັບປຸງປີ 2012 ໄດ້ກຳນົດໃຫ້ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍຄື: ມາດຕາ 60 ສິດ ແລະ ໜ້າທີ່ຂອງພະນັກງານວິຊາການ; ມາດຕາ 156 ການເກັບເງິນວາງສານ; ມາດຕາ 218 ລະບຽບການລວມຂອງການປະຊຸມສານ.

ກົດໝາຍວ່າດ້ວຍສານປະຊາຊົນ ມາດຕາທີ່ປະຕິບັດບໍ່ໄດ້ ປະກອບມີ: ມາດຕາ 12, 21 ແລະ ມາດຕາ 32 ກ່ຽວກັບປະເພສານ ຍັງບໍ່ສາມາດສ້າງເປັນປະເພສານໄດ້ຢ່າງຈະແຈ້ງເທື່ອ; ມາດຕາ 19 ແລະ ມາດຕາ 24 ກຳນົດກ່ຽວກັບສານເດັກ ບໍ່ສາມາດຈັດຕັ້ງສານເດັກຂຶ້ນໄດ້, ຍັງນຳໃຊ້ຄະນະສານເດັກຕັດສິນ, ພິພາກສາຄະດີກ່ຽວກັບເດັກຢູ່ໃນປັດຈຸບັນ; ມາດຕາ 63 ກ່ຽວກັບດັດສະນີເງິນເດືອນສະເພາະຂອງຜູ້ພິພາກສາ, ຜູ້ຊ່ວຍຜູ້ພິພາກສາ ແລະ ຈ່າສານ ບໍ່ທັນໄດ້ແຍກສະເພາະຕາມກົດໝາຍກຳນົດໄວ້.

ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ ມາດຕາທີ່ປະຕິບັດບໍ່ໄດ້ ປະກອບມີ: ມາດຕາ 30 ກຳນົດເວລາໃນການພິຈາລະນາຕັດສິນຄະດີທີ່ກຳນົດໃຫ້ຄົ້ນຄວ້າ ແລະ ຕັດສິນຄະດີຢູ່ສານຂັ້ນຕົ້ນ 9 ເດືອນ, ຂັ້ນອຸທອນ 4 ເດືອນ, ຂັ້ນລົບລ້າງ 3 ເດືອນໃຫ້ສຳເລັດ. ແຕ່ການປະຕິບັດຕົວຈິງຄະດີສ່ວນຫຼາຍ ບໍ່ສາມາດຄົ້ນຄວ້າ ແລະ ຕັດສິນຄະດີສຳເລັດຕາມກຳນົດເວລາທີ່ກົດໝາຍກຳນົດໄວ້; ມາດຕາ 103 ການຍື່ນຫຼັກຖານໃຫ້ຍື່ນນັບແຕ່ວັນຮັບຄຳຮ້ອງຟ້ອງຈົນຮອດວັນປິດປະຊຸມສານຂັ້ນຕົ້ນ. ໃນພາກປະຕິບັດຕົວຈິງ ບໍ່ໄດ້ຍື່ນທັງໝົດຢູ່ສານຂັ້ນຕົ້ນ, ເມື່ອຕັດສິນໄປແລ້ວຄູ່ຄວາມຈະໄປຍື່ນຫຼັກຖານໃໝ່ເພີ່ມຕື່ມຢູ່ສານຂັ້ນອຸທອນ ຫຼື ຂັ້ນລົບລ້າງ ຫຼື ສິ້ນສຸດການດຳເນີນຄະດີຂອງສານກໍມີການຍື່ນຫຼັກຖານຕໍ່ພາກສ່ວນຕ່າງໆ ເຮັດໃຫ້ການດຳເນີນຄະດີຂອງສານຂັ້ນຕົ້ນ ບໍ່ຮັບປະກັນການພິຈາລະນາຫຼັກຖານຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ, ຄະດີສົ່ງກັບໄປ-ມາ ເຮັດໃຫ້ຊັກຊ້າ ແກ່ຍາວໃນການດຳເນີນຄະດີ; ມາດຕາ 124, 125 ແລະ 126 ມາດຕະການຂອງສານ ກ່ຽວກັບການຈຳກັດບໍລິເວນຄູ່ຄວາມໃນຄະດີແພ່ງ, ມາດຕະການບໍ່ໃຫ້ຄູ່ຄວາມເຄື່ອນໄຫວ ຫຼື ກະທຳອັນໃດໜຶ່ງ ແລະ ມາດຕະການບໍ່ໃຫ້ຄູ່ຄວາມປະຕິບັດຂໍ້ຜູກພັນອັນໃດໜຶ່ງ. ມາດຕະການດັ່ງກ່າວໃນພາກປະຕິບັດຕົວຈິງ ບໍ່ໄດ້ປະຕິບັດ ຫຼື ນຳໃຊ້ ເນື່ອງຈາກວ່າຄູ່ຄວາມບໍ່ໄດ້ຮ້ອງຂໍຕໍ່ສານໃຫ້ນຳໃຊ້ມາດຕະການດັ່ງກ່າວ ເຊິ່ງກົດໝາຍໄດ້ກຳນົດໄວ້ຕ້ອງໃຫ້ຄູ່ຄວາມຮ້ອງຂໍ, ສານຈຶ່ງສາມາດນຳໃຊ້ມາດຕະການດັ່ງກ່າວໄດ້ ເວັ້ນເສຍແຕ່ເປັນຜົນປະໂຫຍດຂອງລັດ, ສັງຄົມ ຫຼື ຂອງເດັກ; ມາດຕາ 190 ການໃຫ້ຄູ່ຄວາມມາມີສ່ວນຮ່ວມໃນການດຳເນີນຄະດີແຕ່ເບື້ອງຕົ້ນ, ໃນພາກປະຕິບັດຕົວຈິງ ປະຕິບັດບໍ່ໄດ້ ແລະ ຜູ້ພິພາກສາ ກໍບໍ່ທັນປະຕິບັດຕາມກົດໝາຍກຳນົດຢ່າງເຄັ່ງຄັດ ເນື່ອງຈາກວ່າຄູ່ຄວາມບໍ່ໃຫ້ຄວາມຮ່ວມມື,

ອ່ານຕໍ່ໜ້າ 31...

# ບົດລາຍງານອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ 2 ສະບັບ: ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ

**ທ່ານ ໄຊຊະນະ ໂຄດພູທອນ ຫົວໜ້າອົງການໄອຍະການປະຊາຊົນສູງສຸດ** ໄດ້ລາຍງານກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີດັ່ງນີ້: ພາຍຫຼັງ ສປປ ລາວ ໄດ້ຫັນການຄຸ້ມຄອງລັດ, ຄຸ້ມຄອງເສດຖະກິດ-ສັງຄົມ ດ້ວຍລັດຖະທຳມະນູນ ແລະ ກົດໝາຍ ກອງປະຊຸມສະໄໝສາມັນ ເທື່ອທີ 2 ຂອງສະພາປະຊາຊົນສູງສຸດ ຊຸດທີ II ໄດ້ຮັບຮອງເອົາກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບທຳອິດ, ຕາມມະຕິຂອງສະພາປະຊາຊົນສູງສຸດ ສະບັບເລກທີ 30/ສປສ ແລະ ສະບັບເລກທີ 31/ສປສ, ລົງວັນທີ 23 ທັນວາ 1989 ເຊິ່ງໄດ້ປະກາດໃຊ້ໂດຍລັດຖະດຳລັດ ຂອງປະທານປະເທດ ສະບັບເລກທີ 05/ປທທ ແລະ 07/ປທທ, ລົງວັນທີ9 ມັງກອນ 1990 ແລະ ໄດ້ຖືເອົາວັນທີ 9 ມັງກອນ 1990 ເປັນວັນສ້າງຕັ້ງອົງການໄອຍະການປະຊາຊົນ ແຫ່ງ ສປປ ລາວ ຢ່າງເປັນທາງການ.



ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນແຫ່ງ ສປປ ລາວ ສະບັບດັ່ງກ່າວ ປະກອບມີ VI ພາກ, 27 ມາດຕາ ແລະ ອົງການໄອຍະການປະຊາຊົນ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ. ຂັ້ນສູນກາງມີອົງການອະທິໄອຍະການປະຊາຊົນ, ຂັ້ນທ້ອງຖິ່ນ ມີອົງການໄອຍະການປະຊາຊົນແຂວງ, ກຳແພງນະຄອນ, ອົງການໄອຍະການປະຊາຊົນເມືອງ, ເທດສະບານ.

ສ່ວນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບທຳອິດ ປະກອບມີ VIII ພາກ, 10 ໝວດ ແລະ 96 ມາດຕາ. ກົດໝາຍສະບັບດັ່ງກ່າວ ໄດ້ກຳນົດສິດ, ໜ້າທີ່ ແລະ ຫຼັກການພື້ນຖານໃນການດຳເນີນຄະດີອາຍາ, ສິດ ແລະ ພັນທະ ຂອງຜູ້ເຂົ້າຮ່ວມໃນການດຳເນີນຄະດີອາຍາ,ບັນດາມາດຕະການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ, ຂັ້ນຕອນຕ່າງໆຂອງການດຳເນີນຄະດີອາຍາ ນັບແຕ່ຂັ້ນຕອນສືບສວນ-ສອບສວນ, ຂັ້ນຕອນສັ່ງຟ້ອງ ແລະ ຂັ້ນຕອນຕັດສິນຂອງສານ, ສິດໃນການຕິດຕາມກວດກາຂອງອົງການໄອຍະການປະຊາຊົນ, ການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ແລະ ອື່ນໆ.

ເພື່ອເຮັດໃຫ້ລະບົບການຈັດຕັ້ງຂອງອົງການໄອຍະການປະຊາຊົນມີຄວາມຮັດກຸມ, ສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຂອງປະເທດ. ປີ 2003 ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໄດ້ຮັບການປັບປຸງຄັ້ງທີໜຶ່ງ ຕາມມະຕິຂອງສະພາແຫ່ງຊາດ ສະບັບເລກທີ 06/ສພຊ, ລົງວັນທີ 21 ຕຸລາ 2003 ປະກອບມີ VII ພາກ, 8 ໝວດ ແລະ 56 ມາດຕາ. ພ້ອມກັນນັ້ນ, ກໍໄດ້ປ່ຽນຊື່ຈາກ "ອົງການອະທິໄອຍະການ" ມາເປັນ "ອົງການໄອຍະການປະຊາຊົນສູງສຸດ" ແລະ ໄດ້ປັບປຸງລະບົບການຈັດຕັ້ງຂອງອົງການໄອຍະການຄືນໃໝ່ ແນໃສ່ເຮັດໃຫ້ອົງການໄອຍະການປະຊາຊົນແຕ່ລະຂັ້ນ ສາມາດເຄື່ອນໄຫວຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນຕາມກົດໝາຍ.

ປີ 2009 ຄະນະປະຈຳສະພາແຫ່ງຊາດ ໄດ້ອອກມະຕິຕົກລົງ ສະບັບເລກທີ 113/ຄປຈ, ລົງວັນທີ 28 ພຶດສະພາ 2009 ວ່າດ້ວຍການໂຮມສານປະຊາຊົນເມືອງ ແລະ ອົງການໄອຍະການປະຊາຊົນເມືອງເຂົ້າເປັນສານປະຊາຊົນເຂດ ແລະ ອົງການໄອຍະການປະຊາຊົນເຂດ ພ້ອມທັງຫັນງົບປະມານຂອງສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ໃຫ້ຂຶ້ນກັບສາຍຕັ້ງແລະໃນປີດຽວກັນນີ້ ຄະນະປະຈຳສະພາແຫ່ງຊາດ ໄດ້ອອກມະຕິຕົກລົງ ສະບັບເລກທີ 179/ຄປຈ, ລົງວັນທີ 5 ຕຸລາ 2009 ປ່ຽນຊື່ຈາກ ອົງການໄອຍະການປະຊາຊົນຂັ້ນອຸທອນ ມາເປັນ "ອົງການໄອຍະການປະຊາຊົນພາກ".

ໂດຍປະຕິບັດຕາມມະຕິຕົກລົງດັ່ງກ່າວ ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໄດ້ຮັບການປັບປຸງເປັນຄັ້ງທີສອງ, ປະກອບມີ IX ພາກ, 9 ໝວດ ແລະ 70 ມາດຕາ ເຊິ່ງໄດ້ກາຍເປັນຂີດໝາຍສຳຄັນແຫ່ງການປັບປຸງ ແລະ ພັດທະນາລະບົບອົງການໄອຍະການປະຊາຊົນໃຫ້ມີຄວາມໜັກແໜ້ນ, ເຂັ້ມແຂງຂຶ້ນກວ່າເກົ່າ ເປັນຕົ້ນ ໄດ້ກຳນົດໃຫ້ອົງການໄອຍະການປະຊາຊົນພາກ ເຊິ່ງມີສິດ ແລະ ໜ້າທີ່ໃນການຄົ້ນຄວ້າ ແລະ ດຳເນີນຄະດີເປັນຂັ້ນອຸທອນ ສຳລັບຄະດີທີ່ຕັດສິນເປັນຂັ້ນຕົ້ນ ໂດຍສານປະຊາຊົນແຂວງ, ນະຄອນຫຼວງ ແລະ ຄົ້ນຄວ້າ, ດຳເນີນຄະດີເປັນຂັ້ນລົບລ້າງ ສຳລັບຄະດີທີ່ພິພາກສາເປັນຂັ້ນອຸທອນ ໂດຍສານປະຊາຊົນແຂວງ, ນະຄອນຫຼວງ ເຊິ່ງຖືກອຸທອນໂດຍຄູ່ຄວາມ ຫຼື ຖືກສະເໜີຄັດຄ້ານໂດຍຫົວໜ້າອົງການໄອຍະການປະຊາຊົນແຂວງ, ນະຄອນຫຼວງ.

ປີ 2017 ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ໄດ້ຮັບການປັບປຸງເປັນຄັ້ງທີສາມ, ປະກອບມີ IX ພາກ, 9 ໝວດ ແລະ 70 ມາດຕາ. ໃນນັ້ນ,ລະບົບການຈັດຕັ້ງຂອງອົງການໄອຍະການປະຊາຊົນກໍໄດ້ຮັບການປັບປຸງເພີ່ມຕື່ມ ໂດຍສະເພາະໃນມາດຕາ 18 ວັກ 3 ແລະ 4 ໄດ້ກຳນົດການສ້າງຕັ້ງອົງການໄອຍະການປະຊາຊົນເຂດ ໂດຍເອົາຫຼາຍເມືອງ, ເທດສະບານ, ນະຄອນ ມາໂຮມກັນເປັນເຂດໜຶ່ງ ຕາມສະພາບພູມສາດ, ການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ຫຼື ມີຄະດີເກີດຂຶ້ນຫຼາຍ. ສຳລັບເມືອງ, ເທດສະບານ, ນະຄອນ ທີ່ບໍ່ມີອົງການໄອຍະການປະຊາຊົນເຂດຕັ້ງຢູ່ນັ້ນ ໃຫ້ມີພະນັກງານໄອຍະການປະຊາຊົນ ຫຼື ພະນັກງານວິຊາການກົດໝາຍ ຂອງອົງການໄອຍະການປະຊາຊົນເຂດ ສາມຫາ ຫ້າຄົນ ປະຈຳຢູ່ຕາມການແຕ່ງຕັ້ງຂອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເພື່ອປະຕິບັດສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນເຂດຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

ເຖິງແມ່ນວ່າກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນໄດ້ມີການປັບປຸງ, ປ່ຽນແປງ ຕາມຄວາມຮຽກຮ້ອງຕ້ອງການໜ້າທີ່ການເມືອງຂອງພັກ-ລັດໃນແຕ່ລະໄລຍະກໍຕາມ ແຕ່ພາລະບົດບາດພື້ນຖານຂອງອົງການໄອຍະການປະຊາຊົນ ກໍຍັງແມ່ນການຕິດຕາມກວດກາການເຄົາລົບ, ປະຕິບັດກົດໝາຍ ແລະ ສັ່ງຟ້ອງຜູ້ຖືກຫາຂຶ້ນສານຕາມກົດໝາຍ. ພ້ອມກັນນັ້ນ, ອົງການໄອຍະການປະຊາຊົນແຕ່ລະຂັ້ນ ໄດ້ຮັບການຍົກສູງຄຸນນະພາບໃນການຄົ້ນຄວ້າ ແລະ ຖືເອົາການພິຈາລະນາຄະດີເປັນໜ້າທີ່ສຳຄັນຕົ້ນຕໍ ບົນພື້ນຖານຫຼັກການດຳເນີນຄະດີຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ໂດຍຍຶດໝັ້ນ 4 ຮັບປະກັນຄື: ຮັບປະກັນຄວາມຖືກຕ້ອງຕາມກົດໝາຍ, ຍຸຕິທຳ, ໂປ່ງໃສ ແລະ ທັນຕາມກຳນົດເວລາ.

ການປັບປຸງກົດໝາຍວ່າດ້ວຍການດຳເນີນຄະດີອາຍາຄັ້ງທີໜຶ່ງ ແມ່ນເນື່ອງມາຈາກການປັບປຸງລັດຖະທຳມະນູນ ແຫ່ງ ສປປ ລາວ ເຊິ່ງລັດຖະທຳມະນູນສະບັບປັບປຸງ ໄດ້ຖືກຮັບຮອງຕາມມະຕິຕົກລົງຂອງສະພາແຫ່ງຊາດ ສະບັບເລກທີ 25/ສພຊ, ລົງວັນທີ 6 ພຶດສະພາ 2003 ແລະ ມີຜົນບັງຄັບໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 32/ປປທ, ລົງວັນທີ 28 ພຶດສະພາ 2003 ເຊິ່ງໄດ້ສົ່ງຜົນໃຫ້ມີການປັບປຸງລະບົບກົດໝາຍ ແລະ ວຽກງານຍຸຕິທຳຢູ່ ສປປ ລາວ; ໃນນັ້ນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາກໍໄດ້ຮັບການປັບປຸງຄັ້ງທີໜຶ່ງ ໃນປີ 2004 ເພື່ອໃຫ້ສອດຄ່ອງຕາມລັດຖະທຳມະນູນແລະສອດຄ່ອງກັບສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມ ພ້ອມທັງເຮັດໃຫ້ການດຳເນີນຄະດີອາຍານັບມື້ເປັນລະບົບຄົບຊຸດ ແລະ ມີມາດຕະຖານດີຂຶ້ນ ເຊິ່ງກົດໝາຍສະບັບດັ່ງກ່າວ ຖືກຮັບຮອງເອົາໃນກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ V, ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 01/ສພຊ, ລົງວັນທີ 15 ພຶດສະພາ 2004, ປະກອບມີ XII ພາກ, 8 ໝວດ ແລະ 122 ມາດຕາ.

ປີ 2012 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ຮັບການປັບປຸງເປັນຄັ້ງທີສອງ ເຊິ່ງຖືກຮັບຮອງເອົາໃນກອງປະຊຸມສະພາແຫ່ງຊາດ ສະໄໝສາມັນ ເທື່ອທີ 3 ຂອງສະພາແຫ່ງຊາດ ຊຸດທີ VII, ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 079/ສພຊ, ລົງວັນທີ 10 ກໍລະກົດ 2012 ແລະ ປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 236/ປປທ, ລົງວັນທີ 01 ສິງ

ອ່ານຕໍ່ໜ້າ 32...

## ບົດລາຍງານ...

(ຕໍ່ຈາກໜ້າ 30)

ມີການອອກໝາຍຮຽກຫຼາຍຄັ້ງແຕ່ບໍ່ເຂົ້າມາສານ. ສະນັ້ນ, ໃນການດຳເນີນຄະດີຕົວຈິງ ຈະສືບຕໍ່ດຳເນີນຄະດີ ໂດຍບໍ່ປະຕິບັດຕາມຂັ້ນຕອນດັ່ງກ່າວທີ່ກົດໝາຍກຳນົດ; ມາດຕາ 278 ການພິພາກສາຂອງສານຂັ້ນອຸທອນເປັນຂັ້ນສຸດທ້າຍທາງດ້ານຂໍ້ມູນຫຼັກຖານ. ໃນພາກປະຕິບັດຕົວຈິງ ພາຍຫຼັງທີ່ສານອຸທອນພິພາກສາແລ້ວ ຄູ່ຄວາມຍັງສະເໜີຂໍ້ມູນຫຼັກຖານໃຫ້ສານຂັ້ນລົບລ້າງພິຈາລະນາ ແລະ ສານຂັ້ນລົບລ້າງຍັງພິຈາລະນາພິພາກສາກ່ຽວກັບຂໍ້ມູນຫຼັກຖານຕາມການສະເໜີ. ເຮັດໃຫ້ຂໍ້ມູນຫຼັກຖານບໍ່ສິ້ນສຸດຕາມກົດໝາຍກຳນົດ; ມາດຕາ 289, 296 ແລະ 298 ກ່ຽວກັບການພິພາກສາຂັ້ນລົບລ້າງທາງດ້ານກົດໝາຍ, ໃນພາກປະຕິບັດຕົວຈິງ, ຄູ່ຄວາມຍັງສະເໜີຫຼັກຖານໃຫ້ສານຂັ້ນລົບລ້າງພິຈາລະນາ ແລະ ສານຂັ້ນລົບລ້າງກໍຍັງພິພາກສາກ່ຽວກັບຫຼັກຖານ, ຍັງບໍ່ພິພາກສາບັນຫາກົດໝາຍເພື່ອອະທິບາຍດ້ານກົດໝາຍ ແລະ ສ້າງເປັນປະເພນີສານ, ບໍ່ທັນຮັບປະກັນຫຼັກການພິຈາລະນາຄະດີສາມຂັ້ນຕາມທີ່ກຳນົດໄວ້ໃນລັດຖະທຳມະນູນ ຢ່າງເຂັ້ມງວດ.

ຂໍ້ສະເໜີ:

1. ການຈັດຕັ້ງປະຕິບັດ

- ໃຫ້ພະນັກງານສານ, ອົງການຈັດຕັ້ງ ແລະ ປະຊາຊົນເພີ່ມທະວີການປະຕິບັດກົດໝາຍວ່າດ້ວຍສານປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງຢ່າງເຂັ້ມງວດ;
- ສ້າງເງື່ອນໄຂປະກອບວັດຖຸເຕັກນິກທີ່ທັນສະໄໝ ແລະ ເໝາະສົມ ໃນການປະຕິບັດພາລະບົດບາດ, ໜ້າທີ່ວຽກງານຂອງສານໃນການດຳເນີນ ແລະ ຕັດສິນຄະດີ;
- ສ້າງເງື່ອນໄຂ ໃຫ້ມີພາຫະນະ ເພື່ອນຳໃຊ້ເຂົ້າໃນການຈັດຕັ້ງຄະນະສານເຄື່ອນທີ່ລົງໄປຕັດສິນ ຢູ່ຄ້າຍຄຸມຂັງ ເພື່ອຮັບປະກັນຄວາມປອດໄພໃນການເຄື່ອນຍ້າຍຈຳເລີຍ ມາເຂົ້າຮ່ວມປະຊຸມສານ ຫຼື ເຂດຫ່າງໄກ ເພື່ອບໍລິຫານຮັບໃຊ້ປະຊາຊົນ;
- ສະໜອງງົບປະມານທີ່ຈຳເປັນ ແລະ ພຽງພໍ ເພື່ອຮັບໃຊ້ໃນການດຳເນີນຄະດີ, ປະກອບຂໍ້ມູນຫຼັກຖານ ແລະ ການຕັດສິນຄະດີ ໂດຍສະເພາະການຕັດສິນຄະດີອາຍາທີ່ກົດໝາຍກຳນົດໃຫ້ນຳໃຊ້ງົບປະມານຂອງລັດ.

2. ການປັບປຸງກົດໝາຍ

2.1 ກົດໝາຍວ່າດ້ວຍສານປະຊາຊົນ: ມາດຕາ 27 ສິດ ແລະ ໜ້າທີ່ ຂອງສານປະຊາຊົນເຂດ; ມາດຕາ 44 ສິດ ແລະ ໜ້າທີ່ຂອງຈ່າສານ; ມາດຕາ 48 ມາດຕະຖານ ແລະ ເງື່ອນໄຂຂອງຜູ້ພິພາກສາ.

2.2 ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ: ພາກທີ III ຈະສຸມໃສ່ປັບປຸງການກຳນົດເວລາສຳລັບການພິຈາລະນາຕັດສິນຄະດີ; ພາກທີ VII ໂດຍສຸມໃສ່ປັບປຸງການອອກຄຳສັ່ງອາຍັດຊັບ, ຍຶດຊັບ; ພາກທີ X ກ່ຽວກັບການດຳເນີນຄະດີຂອງສານຂັ້ນຕົ້ນ ໂດຍສຸມໃສ່ປັບປຸງການຮັບເອົາຄະດີມາພິຈາລະນາ, ການເກັບກຳຂໍ້ມູນຫຼັກຖານ ເປັນຕົ້ນ ການມອບຮັບຫຼັກຖານ ແລະ ວິທີການກວດກາ ຕີລາຄາຫຼັກຖານ; ການໂຕ້ແຍ່ງ ແລະ ອື່ນໆ ທີ່ເຫັນວ່າມີຄວາມຈຳເປັນ; ພາກທີ XI ຈະສຸມໃສ່ປັບປຸງການປະຊຸມສານ, ການຂຽນຄຳຕັດສິນ, ຄຳພິພາກສາ; ພາກທີ XVII ໂດຍສຸມໃສ່ປັບປຸງການຮັບຮູ້ຄຳຕັດສິນຂອງສານຕ່າງປະເທດ.

ນອກຈາກການປັບປຸງກົດໝາຍທີ່ກຳນົດໄວ້ແລ້ວ ຍັງມີຄວາມຈຳເປັນຕ້ອງໄດ້ເພີ່ມບາງມາດຕາເຂົ້າຕື່ມ ເພື່ອຮັບປະກັນໃຫ້ການປະກອບຫຼັກຖານ, ການປິດຮັບຫຼັກຖານ, ການໂຕ້ແຍ່ງ, ການໂຕ້ຖຽງຂອງຄູ່ຄວາມ ແລະ ອື່ນໆ ເພື່ອໃຫ້ການດຳເນີນຄະດີມີຄວາມວ່ອງໄວ, ຄົບຖ້ວນ, ຮອບດ້ານ ແລະ ພາວະວິໄສ ເຮັດໃຫ້ການຕັດສິນ, ພິພາກສາຄະດີ ຖືກຕ້ອງຕາມກົດໝາຍ ແລະ ຄວາມເປັນຈິງ.

## ບົດລາຍງານ...

(ຕໍ່ຈາກໜ້າ 31)

ທາ 2012, ປະກອບມີ XV ພາກ, 31 ໝວດ ແລະ 275 ມາດຕາ ເຊິ່ງໄດ້ກຳນົດບັນດາຫຼັກການພື້ນຖານຂອງການດຳເນີນຄະດີອາຍາ ໃຫ້ຈະແຈ້ງຂຶ້ນກວ່າເກົ່າ, ການສັ່ງຟ້ອງຜູ້ຖືກຫາຂຶ້ນສານຂອງຫົວໜ້າໄອຍະການປະຊາຊົນ ນອກຈາກການສັ່ງຟ້ອງໂດຍທົ່ວໄປແລ້ວ ຍັງກຳນົດໃຫ້ມີການສັ່ງຟ້ອງຂຶ້ນສານໂດຍກົງອີກ (ຕາມມາດຕາ 157-159) ແລະ ພ້ອມກັນນັ້ນ, ກໍໄດ້ກຳນົດໃຫ້ສານປະຊາຊົນພາກ ແລະ ສານປະຊາຊົນສູງສຸດ ມີສິດ ແລະ ໜ້າທີ່ໃນການພິຈາລະນາຄະດີເປັນຂັ້ນລົບລ້າງ, ກຳນົດໃຫ້ອົງການໄອຍະການປະຊາຊົນເຂດ ແລະ ສານປະຊາຊົນເຂດ ມີສິດ ແລະ ໜ້າທີ່ ພິຈາລະນາຄະດີເປັນຂັ້ນຕົ້ນ, ຄະດີອາຍາທີ່ກົດໝາຍກຳນົດໂທດຕັດອິດສະຫຼະພາບ 3 ປີລົງມາ ແລະ ມີມູນຄ່າຄວາມເສຍຫາຍທາງແພ່ງ 300 ລ້ານກີບລົງມາ. ການປັບປຸງຄັ້ງນີ້ເຫັນວ່າ ເປັນການປ່ຽນແປງຄັ້ງສຳຄັນໃນລະບົບສານປະຊາຊົນ ແລະ ລະບົບອົງການໄອຍະການປະຊາຊົນ ໃນການດຳເນີນຄະດີ ແລະ ພິຈາລະນາຕັດສິນຄະດີ.

ປີ 2017 ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໄດ້ຮັບການປັບປຸງເປັນຄັ້ງທີສາມ ເຊິ່ງຖືກຮັບຮອງເອົາໃນກອງປະຊຸມສະພາແຫ່ງຊາດ ສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII, ຕາມມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 069/ສພຊ, ລົງວັນທີ 14 ພະຈິກ 2017 ແລະ ປະກາດໃຊ້ຕາມລັດຖະດຳລັດຂອງປະທານປະເທດ ສະບັບເລກທີ 321/ປປທ, ລົງວັນທີ 22 ທັນວາ 2017.

ໂດຍລວມແລ້ວ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2017 ຍັງຮັກສາຕາມໂຄງຮ່າງຂອງກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບປັບປຸງປີ 2012 ເຊິ່ງປະກອບມີ XV ພາກ, 34 ໝວດ ແລະ 275 ມາດຕາຄືເກົ່າ ພຽງແຕ່ໄດ້ປັບປຸງບາງເນື້ອໃນ, ໃນບາງມາດຕາໃຫ້ສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ ແລະ ໃຫ້ມີເນື້ອໃນຈະແຈ້ງຂຶ້ນກວ່າເກົ່າ.

ອົງການໄອຍະການປະຊາຊົນ ຖືສຳຄັນວຽກງານໂຄສະນາເຜີຍແຜ່ກົດໝາຍ ເພື່ອໃຫ້ທົ່ວສັງຄົມມີຄວາມຮັບຮູ້, ເຂົ້າໃຈ, ເຄົາລົບ ແລະ ປະຕິບັດກົດໝາຍທັງສອງສະບັບຢ່າງຖືກຕ້ອງ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ ໂດຍໄດ້ຈັດພິມປຶ້ມກົດໝາຍ, ຈັດຊຸດຝຶກອົບຮົມ, ສຳມະນາ, ປາຖະກະຖາ, ອອກໜັງສືພິມ, ອອກລາຍການໂທລະພາບຢ່າງເປັນລະບົບ ເປັນຕົ້ນ ລາຍການກົດໝາຍເພື່ອປະຊາຊົນ ຂອງສະພາແຫ່ງຊາດ, ລາຍການລັດ ແລະ ກົດໝາຍ ຂອງໂທລະພາບແຫ່ງຊາດລາວ; ຈັດພິມກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ຈຳນວນ 5.000 ຫົວ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ 5.000 ຫົວ, ລົງເວັບໄຊຂອງສະພາແຫ່ງຊາດ http//na.gov.la, ເວັບໄຊຂອງລັດຖະບານ http://Laoofficialgazette.gov.la, ເວັບໄຊຂອງອົງການໄອຍະການປະຊາຊົນສູງສຸດ http//ospp.gov.la ຢ່າງກວ້າງຂວາງ ແລະ ທົ່ວເຖິງ, ໄດ້ສ້າງວາລະສານໄອຍະການປະຊາຊົນ ໃນປີ 2016 ຮອດປັດຈຸບັນ ເຊິ່ງໄດ້ຈັດພິມເປັນລາຍໄຕມາດ ເພື່ອເຜີຍແຜ່ໃຫ້ພະນັກງານໄອຍະການປະຊາຊົນ, ການຈັດຕັ້ງ ແລະ ສັງຄົມຜ່ານມາໄດ້ 29 ສະບັບ, ຈຳນວນ 43.500 ຫົວ, ພ້ອມທັງເກັບກຳຂ່າວລົງໜັງສືພິມ, ວາລະສານ ແລະ ເວັບໄຊ ຂອງອົງການໄອຍະການປະຊາຊົນສູງສຸດ ແລະ ອື່ນໆ.

ເຖິງຢ່າງໃດກໍຕາມ ການໂຄສະນາ, ເຜີຍແຜ່ກົດໝາຍ ແລະ ການຍົກສູງສະຕິເຄົາລົບກົດໝາຍໃຫ້ແກ່ພະນັກງານ, ທະຫານ, ຕຳຫຼວດ ແລະ ພໍ່ແມ່ປະຊາຊົນລາວບັນດາເຜົ່າ ຍັງມີລັກສະນະຈຳກັດ, ບໍ່ທັນກວ້າງຂວາງ ແລະ ທົ່ວເຖິງເທົ່າທີ່ຄວນ, ບໍ່ທັນໄດ້ລົງໂຄສະນາເປັນອັນສະເພາະໂດຍກົງຢູ່ຂັ້ນພື້ນຖານ ພຽງແຕ່ໄດ້ໂຄສະນາສອດທ້ອຍເຂົ້າວຽກງານຕົວຈິງກັບການດຳເນີນຄະດີ ແລະ ການໂຄສະນາລວມ ຮ່ວມກັບພາກສ່ວນອື່ນທີ່ກ່ຽວຂ້ອງເທົ່ານັ້ນ ເຮັດໃຫ້ປະຊາຊົນບັນດາເຜົ່າຈຳນວນໜຶ່ງຍັງບໍ່ທັນເຂົ້າໃຈຕໍ່ລະບຽບກົດໝາຍ, ຂັ້ນຕອນການດຳເນີນຄະດີ ທັງເປັນສາເຫດໜຶ່ງທີ່ພາໃຫ້ປະຊາຊົນທີ່ຢູ່ເຂດຫ່າງໄກສອກຫຼີກບໍ່ສາມາດເຂົ້າເຖິງຂໍ້ມູນຂ່າວສານ, ຂະບວນການຍຸຕິທຳໄດ້ຢ່າງສະດວກເທົ່າທີ່ຄວນ.

ໂດຍອີງຕາມຂໍ້ມູນຈາກການສັງລວມແບບຟອມສອບຖາມຜູ້ເຂົ້າຮ່ວມກອງປະຊຸມປະເມີນຜົນກົດໝາຍ ຢູ່ 3 ພາກ ເຊິ່ງມີຜູ້ເຂົ້າຮ່ວມ 316 ທ່ານທີ່ມາຈາກກະຊວງປ້ອງກັນຄວາມສະຫງົບ, ສານປະຊາຊົນ, ອົງການປົກຄອງທ້ອງຖິ່ນ, ສະພາປະຊາຊົນຂັ້ນແຂວງ, ທະນາຍຄວາມ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນໃນຂອບເຂດທົ່ວປະເທດ ເຫັນວ່າ 89,52% ຂອງຜູ້ເຂົ້າຮ່ວມກອງປະຊຸມແມ່ນໄດ້ຮັບການເຜີຍແຜ່ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ 10,48% ແມ່ນບໍ່ໄດ້ຮັບການເຜີຍແຜ່. ຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຂົ້າໃຈດີຕໍ່ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ 79,46%, ພໍເຂົ້າໃຈ 19,95% ແລະ 0,59% ເຫັນວ່າບໍ່ເຂົ້າໃຈ.

ສ່ວນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ເຫັນວ່າຜູ້ເຂົ້າຮ່ວມກອງປະຊຸມໄດ້ຮັບການເຜີຍແຜ່ 89,31%, ບໍ່ໄດ້ຮັບການເຜີຍແຜ່ 10,69%. ຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຂົ້າໃຈດີກ່ຽວກັບພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການດຳເນີນຄະດີອາຍາ 78%, ພໍເຂົ້າໃຈ 21,06% ແລະ 0,94 % ເຫັນວ່າບໍ່ເຂົ້າໃຈ. ຜູ້ເຂົ້າຮ່ວມມີຄວາມຮັບຮູ້ ແລະ ເຂົ້າໃຈດີກ່ຽວກັບຂັ້ນຕອນການດຳເນີນຄະດີອາຍາ 70,67%, ພໍເຂົ້າໃຈ 27,38% ແລະ 1,95% ເຫັນວ່າບໍ່ເຂົ້າໃຈ.

ໂດຍອີງຕາມຂໍ້ມູນທີ່ສັງລວມໄດ້ຈາກແບບຟອມສອບຖາມຜູ້ເຂົ້າຮ່ວມກອງປະຊຸມປະເມີນຜົນກົດໝາຍທີ່ກ່າວມານັ້ນ ການສະໜອງຂໍ້ມູນ ແລະ ການບໍລິການແກ່ປະຊາຊົນ ເຫັນວ່າເຮັດໄດ້ດີ 82,72%, ດີພໍໃຊ້ 12,13% ແລະ 5,15% ເຫັນວ່າຍັງມີຄວາມຫຍຸ້ງຍາກ. ການເຂົ້າເຖິງອົງການໄອຍະການປະຊາຊົນ ເຫັນວ່າມີສະດວກດີ 71,63%; ພໍເຂົ້າເຖິງໄດ້ 26,21% ແລະ 2,16% ເຫັນວ່າຍັງມີຄວາມຫຍຸ້ງຍາກ.

ສຳລັບອົງການດຳເນີນຄະດີອາຍາ ມີ 78,65% ຂອງຜູ້ເຂົ້າຮ່ວມ ເຫັນວ່າການສະໜອງຂໍ້ມູນ ແລະ ການບໍລິການແກ່ປະຊາຊົນເຮັດໄດ້ດີ, 17,33% ເຫັນວ່າພໍໃຊ້ໄດ້ ແລະ 4,02% ເຫັນວ່າມີຄວາມຫຍຸ້ງຍາກ. ການເຂົ້າເຖິງອົງການດຳເນີນຄະດີອາຍາ 77,16% ເຫັນວ່າສະດວກດີ, 17,52% ເຫັນວ່າ ພໍເຂົ້າເຖິງໄດ້ ແລະ 5,32% ເຫັນວ່າ ມີຄວາມຫຍຸ້ງຍາກ. ນອກຈາກນັ້ນ, ຍັງໄດ້ສອບຖາມກ່ຽວກັບກົນໄກປະສານງານ ລະຫວ່າງ ອົງການໄອຍະການປະຊາຊົນ ແລະ ອົງການດຳເນີນຄະດີອາຍາອື່ນ ມີ 74,01% ເຫັນວ່າມີຄວາມສະດວກດີ; 20,68% ເຫັນວ່າພໍໃຊ້ໄດ້ ແລະ 5,31% ເຫັນວ່າມີຄວາມຫຍຸ້ງຍາກ.

ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ສະບັບປັບປຸງປີ 2017 ໄດ້ກຳນົດໃຫ້ຜັນຂະຫຍາຍເປັນນິຕິກຳໃຕ້ກົດໝາຍ ມີ 3 ມາດຕາຄື: ມາດຕາ 21 ໂຄງປະກອບການຈັດຕັ້ງ; ມາດຕາ 25 ມາດຕະຖານຂອງຫົວໜ້າອົງການໄອຍະການປະຊາຊົນ ແລະ ພະນັກງານໄອຍະການປະຊາຊົນ ແລະ ມາດຕາ 68 ງົບປະມານຂອງອົງການໄອຍະການປະຊາຊົນ.

ນອກຈາກການຜັນຂະຫຍາຍ 3 ມາດຕາ ຕາມທີ່ກົດໝາຍໄດ້ກຳນົດໃຫ້ຜັນຂະຫຍາຍແລ້ວ ກໍຍັງໄດ້ຜັນຂະຫຍາຍມາດຕາອື່ນທີ່ກ່ຽວຂ້ອງກັບການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນຕື່ມອີກ 18 ນິຕິກຳ.

ມາດຕາທີ່ກຳນົດໃຫ້ຜັນຂະຫຍາຍ ມີ 8 ມາດຕາ ຄື: ມາດຕາ 83 ສິດທາງດ້ານພື້ນທີ່, ມາດຕາ 156 ຄຳຖະແຫຼງ, ມາດຕາ 172 ລະບຽບການປະຊຸມສານ, ມາດຕາ 205 ຄຳຕັດສິນ, ມາດຕາ 221 ຄຳພິພາກສາຂອງສານຂັ້ນອຸທອນ, ມາດຕາ 230 ຄຳພິພາກສາຂອງສານຂັ້ນລົບລ້າງ, ມາດຕາ 248 ການຍົກຍ້າຍນັກໂທດ ແລະ ມາດຕາ 256 ການປະຕິບັດຄຳຕັດສິນປະຫານຊີວິດ. ໃນຈຳນວນ 8 ມາດຕາທີ່ກ່າວມານັ້ນ, ມາດຕາທີ່ຕິດພັນກັບພາລະບົດບາດຂອງອົງການໄອຍະການປະຊາຊົນ ມີ 1 ມາດຕາຄື ມາດຕາ 156 ກ່ຽວກັບຄຳຖະແຫຼງ.

ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນເຫັນວ່າມາດຕາທີ່ຄວນປັບປຸງ ມີ 15 ມາດຕາຄື: ມາດຕາ 7 ການປົກປ້ອງ; ມາດຕາ 15 ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນພາກ; ມາດຕາ 18 ວັກ 4 ອົງການໄອຍະການປະຊາຊົນເຂດ; ມາດຕາ 23 ຄະນະກຳມະການໄອຍະການປະຊາຊົນທ້ອງຖິ່ນ; ມາດຕາ 27 ຂໍ້ 6 ລົບລ້າງຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມ ທີ່ບໍ່ຖືກຕ້ອງຕາມກົດໝາຍ; ມາດຕາ 31 ຂໍ້ 4 ລົບລ້າງຄຳສັ່ງບໍ່ຖືກຕ້ອງ ຂອງຫົວໜ້າອົງການໄອຍະການປະຊາຊົນຂັ້ນລຸ່ມທີ່ບໍ່ຖືກຕ້ອງຕາມກົດໝາຍ; ມາດຕາ 33 ຂໍ້ 4 ລົບລ້າງຄຳສັ່ງບໍ່ຖືກຕ້ອງຂອງຫົວໜ້າອົງການໄອຍະການປະຊາຊົນເຂດ; ມາດຕາ 39 ການຕິດຕາມກວດກາທົ່ວໄປ; ມາດຕາ 40 ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາທົ່ວໄປ; ມາດຕາ 41 ຜົນບັງຄັບປະຕິບັດນິຕິກຳ ຂອງອົງການໄອຍະການປະຊາຊົນຕໍ່ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ; ມາດຕາ 42 ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ; ມາດຕາ 47 ການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີຢູ່ສານ; ມາດຕາ 49 ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາການປະຕິບັດກົດໝາຍໃນການດຳເນີນຄະດີແພ່ງ, ການຄ້າ, ຄອບຄົວ, ເດັກ, ແຮງງານ ແລະ ຄະດີອື່ນໆ; ມາດຕາ 51 ການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ; ມາດຕາ 52 ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນໃນການຕິດຕາມກວດກາການປະຕິບັດຄຳຕັດສິນຂອງສານ.

ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ມາດຕາທີ່ບໍ່ໄດ້ຈັດຕັ້ງປະຕິບັດ ມີ 1 ມາດຕາຄື: ມາດຕາ 157 ການສັ່ງຟ້ອງຂຶ້ນສານໂດຍກົງ ເຊິ່ງໃນພາກປະຕິບັດຕົວຈິງ ເຫັນວ່າບັນດາອົງການດຳເນີນຄະດີອາຍາ ຍັງບໍ່ທັນຈັດຕັ້ງປະຕິບັດໄດ້.

ມາດຕາທີ່ຄວນປັບປຸງ ມີ 41 ມາດຕາຄື: ມາດຕາ 12 ການບໍ່ລ່ວງລະເມີດສິດ ແລະ ເສລີພາບຂອງພົນລະເມືອງ; ມາດຕາ 14 ການຮັບປະກັນສິດໃນການຕໍ່ສູ້ຄະດີ; ມາດຕາ 26 ການປະສານສົມທົບ; ມາດຕາ 30 ການເກັບໂຮມ ແລະ ການເກັບຮັກສາຫຼັກຖານທາງດ້ານວັດຖຸ ຫຼື ຂອງກາງຄະດີ; ມາດຕາ 46 ອົງການສືບສວນ-ສອບສວນ; ມາດຕາ 64 ແລະ ມາດຕາ 65 ສິດຂອງຜູ້ຖືກສົງໄສ ແລະ ສິດຂອງຜູ້ຖືກຫາ; ມາດຕາ 71 ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ; ມາດຕາ 74 ຜູ້ແປພາສາ; ມາດຕາ 77 ຂໍ້ 4 ສິດ ແລະ ໜ້າທີ່ຂອງອົງການສືບສວນ-ສອບສວນ ຂອງເຈົ້າໜ້າທີ່ທະຫານ; ມາດຕາ 84 ການເປີດການສືບສວນ-ສອບສວນ; ມາດຕາ 90 ກຳນົດເວລາໃນການພິຈາລະນາຄຳຮ້ອງຟ້ອງ ຫຼື ການແຈ້ງຄວາມ; ມາດຕາ 91 ຄຳສັ່ງເປີດການສືບສວນ-ສອບສວນ; ມາດຕາ 93 ຄຳສັ່ງບໍ່ເປີດການສືບສວນ-ສອບສວນ; ມາດຕາ 108 ການຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ; ມາດຕາ 110 ກຳນົດເວລາໃນການສືບສວນ-ສອບສວນ; ມາດຕາ 111 ກຳນົດເວລາການກັກຂັງພາງ; ມາດຕາ 121 ການກວດຄົ້ນ; ມາດຕາ 128 ການຍຶດ ຫຼື ອາຍັດຊັບ ທີ່ເປັນປະໂຫຍດໃຫ້ແກ່ການດຳເນີນຄະດີ; ມາດຕາ 139 ການຈັບຕົວ; ມາດຕາ 142 ການກັກຂັງພາງ; ມາດຕາ 143 ການປ່ອຍຕົວພາງ; ມາດຕາ 146 ການໂຈະການສືບສວນ-ສອບສວນ; ມາດຕາ 148 ການຊຸດມ້ຽນຄະດີ; ມາດຕາ 149 ການສືບຕໍ່ການສືບສວນ-ສອບສວນຄະດີທີ່ຖືກຊຸດມ້ຽນ; ມາດຕາ 150 ການສິ້ນສຸດການສືບສວນ-ສອບສວນ; ມາດຕາ 151 ສິດ ແລະ ໜ້າທີ່ ຂອງອົງການໄອຍະການ; ມາດຕາ 152 ກຳນົດເວລາໃນການຄົ້ນຄວ້າຄະດີ ແລະ ລົງຄຳເຫັນ; ມາດຕາ 154 ການສັ່ງຟ້ອງຜູ້ຖືກຫາຂຶ້ນສານ; ມາດຕາ 157 ການສັ່ງຟ້ອງຂຶ້ນສານໂດຍກົງ; ມາດຕາ 158 ເງື່ອນໄຂການສັ່ງຟ້ອງຂຶ້ນສານໂດຍກົງ; ມາດຕາ 174 ການເຂົ້າຮ່ວມຂອງຫົວໜ້າອົງການໄອຍະການ; ພາກທີ VIII, ໝວດທີ 5 ການໄຕ່ສວນໃນທີ່ປະຊຸມສານ; ມາດຕາ 201; ມາດຕາ 202; ມາດຕາ 203 ການໂຕ້ຖຽງໃນທີ່ປະຊຸມສານ; ມາດຕາ 209 ການປ່ອຍຕົວຈຳເລີຍ; ມາດຕາ 220 ຂອບເຂດສິດໃນການພິຈາລະນາຄະດີຂັ້ນອຸທອນ; ມາດຕາ 239 ວິທີການຈັດຕັ້ງປະຕິບັດການປ່ອຍຕົວນັກໂທດ; ມາດຕາ 246 ການປະຕິບັດໂທດປັບໄໝ ແລະ ການໃຊ້ແທນຄ່າເສຍຫາຍ; ມາດຕາ 259 ການສະເໜີຮື້ຟື້ນຄະດີ; ມາດຕາ 261 ກຳນົດເວລາໃນການຮື້ຟື້ນຄະດີ.

**ຂໍ້ສະເໜີ:**

- ສະເໜີປັບປຸງກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;
- ສະເໜີສ້າງກົດໝາຍວ່າດ້ວຍພະນັກງານໄອຍະການປະຊາຊົນ, ສ້າງ ແລະ ປັບປຸງນິຕິກຳໃຕ້ກົດໝາຍທີ່ຈຳເປັນ ເພື່ອເປັນບ່ອນອີງໃນການຈັດຕັ້ງປະຕິບັດກົດໝາຍທັງສອງສະບັບດັ່ງກ່າວໃຫ້ໄດ້ຮັບຜົນດີ;
- ສະໜີເພີ່ມງົບປະມານ ແລະ ໂກຕາພະນັກງານ-ລັດຖະກອນເພື່ອຮັບປະກັນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ແລະ ອົງການດຳເນີນຄະດີອາຍາຕາມກົດໝາຍ.

# ບົດປະກອບຄໍາເຫັນຄະນະປະຈໍາສະພາແຫ່ງຊາດ ຕໍ່ບົດລາຍງານການປະເມີນການຈັດຕັ້ງປະຕິບັດກົດໝາຍ 4 ສະບັບ: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ

ໃນວັນທີ 4 ກໍລະກົດ 2023 ທ່ານ ຄໍາແພງ ວິລະພັນ ປະທານກໍາມາທິການຍຸຕິທໍາ ຕາງໜ້າຄະນະປະຈໍາສະພາແຫ່ງຊາດ ໄດ້ປະກອບຄໍາເຫັນຕໍ່ບົດລາຍງານຂອງສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃນການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທໍາ 4 ສະບັບ ຢູ່ກອງປະຊຸມສະໄໝສາມັນ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີເນື້ອໃນ ດັ່ງນີ້: ຄະນະປະຈໍາສະພາແຫ່ງຊາດ ເຫັນດີໂດຍພື້ນຖານຕໍ່ເນື້ອໃນບົດລາຍງານຂອງ ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ກ່ຽວກັບການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍຂົງເຂດຍຸຕິທໍາ 4 ສະບັບດັ່ງກ່າວ ເຊິ່ງເຫັນວ່າ ບັນດາກົດໝາຍດັ່ງກ່າວ ໄດ້ກາຍເປັນເຄື່ອງມືທາງດ້ານນິຕິກໍາ ທີ່ເປັນລະບົບຄົບຊຸດ ໃຫ້ແກ່ການເຄື່ອນໄຫວວຽກງານຂອງ ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ພາກສ່ວນທີ່ກ່ຽວຂ້ອງໃນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງລັດ, ລວມໝູ່ ແລະ ພົນລະເມືອງ. ບັນດາອົງການ ແລະ ພາກສ່ວນທີ່ດໍາເນີນຄະດີ ຢູ່ໃນປະເທດເຮົາ ໄດ້ຮັບການສ້າງຕັ້ງຂຶ້ນຢ່າງເປັນລະບົບ ແລະ ໄດ້ຮັບການປັບປຸງໄປຄຽງຄູ່ກັບການກໍານົດພາລະບົດບາດ, ໜ້າທີ່ ແລະ ຂອບເຂດສິດອໍານາດຂອງແຕ່ລະອົງການ ໃນແຕ່ລະໄລຍະຢ່າງລະອຽດ, ຈະແຈ້ງ ເຮັດໃຫ້ບັນດາອົງການເຫຼົ່ານັ້ນ ມີການເຕີບໃຫຍ່, ໜັກແໜ້ນ ແລະ ເຂັ້ມແຂງເປັນກ້າວໆ ສາມາດເຄື່ອນໄຫວປະຕິບັດໜ້າທີ່ແກ້ໄຂຂໍ້ຂັດແຍ່ງຕ່າງໆໃນສັງຄົມໄດ້ເປັນຢ່າງດີ, ປະກອບສ່ວນສໍາຄັນເຂົ້າໃນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ກໍຄືການຍົກສູງຄຸນນະພາບໃນການຄຸ້ມຄອງລັດ ຄຸ້ມຄອງສັງຄົມດ້ວຍກົດໝາຍ ໃຫ້ມີຄວາມເຂັ້ມງວດ, ມີຄວາມຍຸຕິທໍາ ແລະ ສັກສິດເປັນກ້າວໆມາ.



ສໍາລັບທິດທາງໃນຕໍ່ໜ້າ ແລະ ມາດຕະການແກ້ໄຂ, ຄະນະປະຈໍາສະພາແຫ່ງຊາດ ຂໍເນັ້ນຕື່ມ ດັ່ງນີ້:

**ກ. ທິດທາງ ແລະ ມາດຕະການລວມ ທີ່ພົວພັນເຖິງການຈັດຕັ້ງປະຕິບັດກົດໝາຍທັງ 4 ສະບັບ**

1. ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ເພີ່ມທະວີການໂຄສະນາເຜີຍແຜ່ກົດໝາຍ 4 ສະບັບດັ່ງກ່າວ ໂດຍສະເພາະ ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ, ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ໃຫ້ກວ້າງຂວາງ, ເລິກເຊິ່ງ, ທົ່ວເຖິງ ແລະ ແທດເໝາະກັບແຕ່ລະເປົ້າໝາຍ ເປັນຕົ້ນ: ພະນັກງານທີ່ຮັບຜິດຊອບໃນການດໍາເນີນຄະດີຕາມຂະບວນການຍຸຕິທໍາ ແນໃສ່ສ້າງຄວາມເຂົ້າໃຈທີ່ຖືກຕ້ອງ ຕໍ່ເນື້ອໃນຂອງກົດໝາຍ, ຍົກສູງສະຕິເຄົາລົບ ແລະ ປະຕິບັດກົດໝາຍໃນທົ່ວສັງຄົມໃຫ້ສູງຂຶ້ນ ໂດຍຕິດພັນກັບການວາງມາດຕະການສະກັດກັ້ນ ແລະ ແກ້ໄຂບັນດາປາກົດການ ແລະ ພຶດຕິກໍາ ທີ່ເປັນການລະເມີດກົດໝາຍຢ່າງເຂັ້ມງວດ;

2. ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ຮີບຮ້ອນປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າຜັນຂະຫຍາຍບັນດາມາດຕາຂອງແຕ່ລະກົດໝາຍທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ເພື່ອເຮັດໃຫ້ມາດຕາເຫຼົ່ານັ້ນ ໄດ້ຮັບການຈັດຕັ້ງປະຕິບັດໂດຍໄວ; ພ້ອມກັນນັ້ນ, ກໍໃຫ້ສືບຕໍ່ຄົ້ນຄວ້າ ແລະ ປັບປຸງເນື້ອໃນບາງພາກ, ໝວດ ແລະ ມາດຕາຂອງແຕ່ລະກົດໝາຍ ທີ່ເຫັນວ່າບໍ່ສອດຄ່ອງ ຫຼື ຊໍ້າຊ້ອນກັບມາດຕາຂອງກົດໝາຍສະບັບອື່ນ ເພື່ອເຮັດໃຫ້ບັນດາກົດໝາຍດັ່ງກ່າວ ມີເນື້ອໃນຮັດກຸມ, ຈະແຈ້ງ, ສອດຄ່ອງ, ກົມກຽວ ແລະ ສາມາດປະຕິບັດໄດ້;

3. ສານປະຊາຊົນ, ອົງການໄອຍະການປະຊາຊົນ ແລະ ອົງການທີ່ຮັບຜິດຊອບການດໍາເນີນຄະດີຕາມຂະບວນການຍຸຕິທໍາ ຕ້ອງໄດ້ເອົາໃຈໃສ່ປັບປຸງກົງຈັກການຈັດຕັ້ງແຕ່ລະຂັ້ນ ຕິດພັນກັບການກໍານົດພາລະບົດບາດ, ສິດ, ໜ້າທີ່ ແລະ ແບບແຜນວິທີເຮັດວຽກ ໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງແຕ່ລະໄລຍະ ເພື່ອຮັບປະກັນໃຫ້ແກ່ການປະຕິບັດໜ້າທີ່ວຽກງານ ມີປະສິດທິພາບ ແລະ ປະສິດທິຜົນ;

4. ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ພາກສ່ວນທີ່ກ່ຽວຂ້ອງ ເພີ່ມທະວີການບໍາລຸງສ້າງ ຖັນແຖວບຸກຄະລາກອນທີ່ຮັບຜິດຊອບການດໍາເນີນຄະດີຕາມຂະບວນການຍຸຕິທໍາໃຫ້ມີຄຸນທາດການເມືອງ, ຄຸນສົມບັດສິນທໍາປະຕິວັດ, ຈັນຍາບັນ ແລະ ຈັນຍາທໍາ ໃຫ້ໜັກແໜ້ນ, ມີຄວາມຮູ້ຄວາມສາມາດ, ຄວາມຊໍານິຊໍານານງານ ແລະ ມີຄວາມຮັບຜິດຊອບສູງ ຕໍ່ການປະຕິບັດໜ້າທີ່ວຽກງານ, ພ້ອມທັງຊຸກຍູ້ຕິດຕາມກວດກາການປະຕິບັດໜ້າທີ່ແຕ່ລະໄລຍະ ແນໃສ່ສະກັດກັ້ນພະຍາດອາຍາສິດ, ການສວຍໃຊ້ໜ້າທີ່ຕໍາແໜ່ງເພື່ອຫາຜົນປະໂຫຍດສ່ວນຕົວ, ແກ້ໄຂທາງສຽງ ແລະປາກົດການຫຍໍ້ທໍ້ທີ່ເກີດຂຶ້ນພາຍໃນ ໃຫ້ຫຼຸດລົງຢ່າງເປັນຮູບປະທໍາ;

5. ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງໃນການດໍາເນີນຄະດີຕາມຂະບວນການຍຸຕິທໍາ ປັບປຸງກົນໄກການດໍາເນີນຄະດີ ໃຫ້ຮັບປະກັນຄວາມຖືກຕ້ອງ, ຮອບດ້ານ, ຄົບຖ້ວນ, ພາວະວິໄສ, ມີຄວາມໂປ່ງໃສ ແລະ ເປັນທໍາຢ່າງແທ້ຈິງ; ຮັບປະກັນສິດສະເໝີພາບຂອງພົນລະເມືອງຕໍ່ໜ້າກົດໝາຍ ຜູ້ກະທໍາຜິດຕ້ອງຖືກລົງໂທດຢ່າງເຂັ້ມງວດ ແລະ ຜູ້ບໍລິສຸດເດັດຂາດບໍ່ໃຫ້ຖືກລົງໂທດ; ການແກ້ໄຂຂໍ້ຂັດແຍ່ງທາງແພ່ງ ຕ້ອງຖືເອົາການສຶກສາອົບຮົມແນວຄິດເປັນພື້ນຖານ, ເອົາການໄກ່ເກ່ຍເປັນວິທີການແກ້ໄຂໃນເບື້ອງຕົ້ນ ແລະ ເອົາການຕັດສິນຂອງສານເປັນມາດຕະການສຸດທ້າຍ;

6. ສານປະຊາຊົນສູງສຸດ ແລະ ອົງການໄອຍະການປະຊາຊົນສູງສຸດ ໃຫ້ສືບຕໍ່ທົບທວນ ແລະ ປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຄວາມຮັບຜິດຊອບຂອງຕົນເປັນແຕ່ລະໄລຍະ ເພື່ອແກ້ໄຂບັນຫາໃຫ້ທັນກັບສະພາບການ ແລະ ແທດເໝາະກັບສະພາບຄວາມເປັນຈິງ;

7. ລັດຖະບານ ເພີ່ມທະວີການຊີ້ນໍາອົງການສືບສວນ-ສອບສວນຂອງເຈົ້າໜ້າທີ່ຕໍາຫຼວດ, ພາສີ, ປ່າໄມ້ ແລະ ອົງການປະຕິບັດຄໍາຕັດສິນຂອງສານ ຍົກສູງຄວາມຮັບຜິດຊອບໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ໃຫ້ມີປະສິດທິພາບ, ປະສິດທິຜົນ; ຄົ້ນຄວ້າເພີ່ມຈໍານວນລັດຖະກອນ, ງົບປະມານ, ອຸປະກອນ ແລະ ເຕັກນິກທີ່ຈໍາເປັນໃຫ້ແກ່ອົງການທີ່ຮັບຜິດຊອບໃນການດໍາເນີນຄະດີຕາມຂະບວນການຍຸຕິທໍາໂດຍສະເພາະແມ່ນ ສານປະຊາຊົນ ແລະ ອົງການໄອຍະການປະຊາຊົນ ຂັ້ນຕ່າງໆ ໃຫ້ສາມາດຕອບສະໜອງໜ້າທີ່ການເມືອງ ແຕ່ລະໄລຍະ;

8. ສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ເພີ່ມທະວີການຕິດຕາມ, ກວດກາ ການເຄົາລົບ ແລະ ປະຕິບັດກົດໝາຍຂົງເຂດຍຸຕິທໍາ ໃຫ້ເປັນລະບົບຕໍ່ເນື່ອງ, ຕິດຕາມກວດກາ ແລະ ຊຸກຍູ້ ການປະເມີນຜົນການຈັດຕັ້ງປະຕິບັດກົດໝາຍໃນຂົງເຂດຕ່າງໆ ເພື່ອລາຍງານຕໍ່ກອງປະຊຸມສະໄໝສາມັນຂອງສະພາແຫ່ງຊາດແຕ່ລະໄລຍະ.

**ຂ. ທິດທາງ ແລະ ມາດຕະການສະເພາະ ທີ່ພົວພັນເຖິງການຈັດຕັ້ງປະຕິບັດແຕ່ລະກົດໝາຍ**

**1. ກົດໝາຍວ່າດ້ວຍສານປະຊາຊົນ**

-ຄົ້ນຄວ້າປັບປຸງກົງຈັກການຈັດຕັ້ງ, ການກໍານົດສິດ ແລະ ໜ້າທີ່ ຂອງສານປະຊາຊົນແຕ່ລະຂັ້ນ ໃຫ້ຄົບຖ້ວນ, ລະອຽດຈະແຈ້ງ ເປັນຕົ້ນ ສານປະຊາຊົນເຂດ ໃນການພິຈາລະນາຕັດສິນຄະດີອາຍາ, ແພ່ງ, ການຄ້າ ແລະ ເດັກ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນປັດຈຸບັນ ເປັນຕົ້ນ: ມາດຕາ 26 ແລະ 27;

- ຄົ້ນຄວ້າປັບປຸງ ເນື້ອໃນມາດຕາ 44 ທີ່ກໍານົດສິດ ແລະ ໜ້າທີ່ຂອງຈ່າສານ ໃຫ້ລະອຽດ ແລະ ຈະແຈ້ງຕື່ມ;

- ເພີ່ມທະວີການປະຕິບັດສິດ, ອໍານາດຂອງສານປະຊາຊົນ ໃນການດໍາເນີນຄະດີຂອງສານຂັ້ນຕົ້ນ, ສານຂັ້ນອຸທອນ ແລະ ສານຂັ້ນລົບລ້າງ ໃຫ້ເຂັ້ມງວດ, ຖືກຕ້ອງຕາມກົດໝາຍ ແລະ ເຫດການຕົວຈິງ ເຮັດໃຫ້ຄໍາຕັດສິນ ແລະ ຄໍາພິພາກສາຂອງສານມີຄວາມສັກສິດ ແລະ ສາມາດຈັດຕັ້ງປະຕິບັດໄດ້.

**2. ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ**

- ປັບປຸງກົງຈັກການຈັດຕັ້ງ, ການກໍານົດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາການດໍາເນີນຄະດີປົກຄອງ ເພື່ອຮັບປະກັນໃຫ້ຄະນະສານປົກຄອງ ສາມາດເຄື່ອນໄຫວດໍາເນີນຄະດີຢ່າງເປັນຮູບປະທໍາ ແລະ ມີປະສິດທິຜົນ;

- ຄົ້ນຄວ້າເນື້ອໃນຂອງກົດໝາຍ ທີ່ຍັງບໍ່ສາມາດຈັດຕັ້ງປະຕິບັດໄດ້ ຈໍານວນ 3 ມາດຕາຄື: ມາດຕາ 23 ຄະນະກໍາມະການໄອຍະການປະຊາຊົນທ້ອງຖິ່ນ, ມາດຕາ 39 ການຕິດຕາມກວດກາທົ່ວໄປ ແລະ ມາດຕາ 40 ສິດ ແລະ ໜ້າທີ່ຂອງອົງການໄອຍະການປະຊາຊົນ ໃນການຕິດຕາມກວດກາທົ່ວໄປ ເພື່ອປັບປຸງໃນຕໍ່ໜ້າ;

- ຄົ້ນຄວ້າ ອອກຄໍາແນະນໍາລະອຽດກ່ຽວກັບການສັ່ງຟ້ອງຜູ້ຖືກຫາຂຶ້ນສານໂດຍກົງ ໃຫ້ອົງການໄອຍະການປະຊາຊົນແຕ່ລະຂັ້ນເຂົ້າໃຈໃນຂະບວນການປະຕິບັດຕົວຈິງຕາມທີ່ໄດ້ກໍານົດໄວ້ໃນ ມາດຕາ 46;

- ຄົ້ນຄວ້າ ສ້າງກົນໄກປະສານງານ ລະຫວ່າງ ອົງການໄອຍະການປະຊາຊົນສູງສຸດກັບພາກສ່ວນທີ່ກ່ຽວຂ້ອງເປັນຕົ້ນ: ຫ້ອງວ່າການສໍານັກງານນາຍົກລັດຖະມົນຕີ, ກະຊວງຍຸຕິທໍາ ແລະ ອົງການສືບສວນ-ສອບສວນ ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດມາດຕາ 40 ການຕິດຕາມກວດກາທົ່ວໄປ, ມາດຕາ 43 ການຕິດຕາມກວດກາການປະຕິບັດກົດໝາຍຂອງອົງການສືບສວນ-ສອບສວນ, ມາດຕາ 52 ການຕິດຕາມກວດກາປະຕິບັດຄໍາຕັດສິນຂອງສານ, ມາດຕາ 54 ການຕິດຕາມກວດກາການປະຕິບັດກົດໝາຍໃນສະຖານທີ່ກັກຕົວ, ສະຖານທີ່ກັກຂັງ, ສູນດັດສ້າງ ແລະ ຄ້າຍດັດສ້າງ.

**3. ກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ**

-ຜັນຂະຫຍາຍມາດຕາຂອງກົດໝາຍທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ຈໍານວນ 2 ມາດຕາໃຫ້ສໍາເລັດຄື: ມາດຕາ 38 ແລະ ມາດຕາ 60;

- ຄົ້ນຄວ້າປັບປຸງເນື້ອໃນຂອງກົດໝາຍວ່າດ້ວຍການດໍາເນີນຄະດີແພ່ງ ມາດຕາ 21 ສິດໜ້າທີ່ຂອງສານປະຊາຊົນເຂດ ແລະ ມາດຕາ 59 ສິດ ແລະ ໜ້າທີ່ຂອງຈ່າສານ ໃຫ້ສອດຄ່ອງກັນ;

- ເພີ່ມທະວີການປະຕິບັດຫຼັກການດໍາເນີນຄະດີຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 17 ໃຫ້ຖືກຕ້ອງ ແລະ ເຂັ້ມງວດ ໂດຍສະເພາະການປະກອບ ແລະ ເກັບກໍາຂໍ້ມູນຫຼັກຖານ, ການພິສູດຫຼັກຖານ ແລະ ການໂຕ້ແຍ່ງຫຼັກຖານໃນທີ່ປະຊຸມສານ;

- ເອົາໃຈໃສ່ປະຕິບັດກໍານົດເວລາໃນການດໍາເນີນຄະດີ ຢູ່ສານແຕ່ລະຂັ້ນ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ ເປັນຕົ້ນ: ຢູ່ສານຂັ້ນຕົ້ນ 9 ເດືອນ, ຂັ້ນອຸທອນ 4 ເດືອນ, ຂັ້ນລົບລ້າງ 3 ເດືອນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 30.

**4. ກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ**

-ຜັນຂະຫຍາຍມາດຕາຂອງກົດໝາຍທີ່ກໍານົດໃຫ້ອອກເປັນນິຕິກໍາໃຕ້ກົດໝາຍ ໃຫ້ສໍາເລັດຈໍານວນ 8 ມາດຕາຄື: ມາດຕາ 83, 156, 172, 205, 221, 230, 248 ແລະ ມາດຕາ 256;

- ເພີ່ມທະວີການປະຕິບັດ 16 ຫຼັກການພື້ນຖານໃນການດໍາເນີນຄະດີອາຍາ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 10 ເປັນຕົ້ນ: ມາດຕາ 14 ການຮັບປະກັນສິດໃນການຕໍ່ສູ້ຄະດີ, ມາດຕາ 24 ຫຼັກການດໍາເນີນຄະດີຮອບດ້ານ, ຄົບຖ້ວນ ແລະ ພາວະວິໄສ ໂດຍສະເພາະແມ່ນການນໍາໃຊ້ວິທີການສືບສວນ-ສອບສວນ, ການເກັບກໍາຂໍ້ມູນຫຼັກຖານ, ການພິສູດຫຼັກຖານ ຕ້ອງຮັບປະກັນຄວາມຖືກຕ້ອງຕາມກົດໝາຍທີ່ໄດ້ກໍານົດໄວ້;

- ເພີ່ມທະວີການປະຕິບັດ 7 ມາດຕະການສະກັດກັ້ນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 136 ເປັນຕົ້ນ: ການກັກຕົວ, ການຈັບຕົວ, ການກັກຂັງພາງ ແລະ ການປ່ອຍຕົວພາງ ຕ້ອງຮັບປະກັນຄວາມຖືກຕ້ອງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 138, 139, 142 ແລະ 143;

- ເອົາໃຈໃສ່ປະຕິບັດກໍານົດເວລາຢູ່ທຸກຂັ້ນຕອນການຄົ້ນຄວ້າຄະດີ ໃຫ້ຖືກຕ້ອງ ແລະ ເຂັ້ມງວດ ຕາມທີ່ກົດໝາຍກໍານົດໄວ້ ເປັນຕົ້ນ: ມາດຕາ 152 ກໍານົດເວລາໃນການຄົ້ນຄວ້າຄະດີ ແລະ ການລົງຄໍາເຫັນຂອງຫົວໜ້າອົງການໄອຍະການ ແລະ ມາດຕາອື່ນທີ່ກ່ຽວຂ້ອງ;

- ປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ທີ່ໄດ້ກໍານົດໄວ້ໃນກົດໝາຍ ທີ່ຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຄື: ມາດຕາ 157 ການສັ່ງຟ້ອງຂຶ້ນສານໂດຍກົງ ໃຫ້ເປັນຮູບປະທໍາ ໂດຍການປະສານສົມທົບກັບເຈົ້າໜ້າທີ່ ອົງການສືບສວນ-ສອບສວນ ແລະ ສານປະຊາຊົນ;

- ຄົ້ນຄວ້າວິທີການ ແລະ ມາດຕະການໃນການຈັດຕັ້ງປະຕິບັດ ມາດຕາ 255 ແລະ 256 ການປະຕິບັດຄໍາຕັດສິນປະຫານຊີວິດ.

# ບົດລາຍງານຂອງຄະນະປະຈຳສະພາສະແຫ່ງຊາດ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາເທື່ອທີ 5 ແລະ ທິດທາງແຜນການຮອດກອງປະຊຸມເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX

ໃນວັນທີ 5 ກໍລະກົດ 2023 **ທ່ານ ປອ. ນາງ ສຸນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ, ຕາງໜ້າຄະນະປະຈຳສະພາແຫ່ງຊາດ** ໄດ້ລາຍງານກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາເທື່ອທີ 5 ແລະ ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ດັ່ງນີ້:



**I. ການສະຫຼຸບຕີລາຄາການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX.**

**ກ. ດ້ານດີ ແລະ ຜົນສຳເລັດທີ່ໄດ້ຮັບ.**

**1. ການປະຕິບັດພາລະບົດບາດດ້ານນິຕິບັນຍັດ.**

1) ສຳເລັດການຮຽບຮຽງກົດໝາຍຈຳນວນ 12 ສະບັບ ທີ່ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ໄດ້ຮັບການປະກາດໃຊ້ຢ່າງເປັນທາງການ;

2) ສຳເລັດການທາບທາມ ແລະ ການກະກຽມຮ່າງກົດໝາຍ ຈຳນວນ 10 ສະບັບ ທີ່ຈະນຳເຂົ້າພິຈາລະນາຮັບຮອງຢູ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX;

3) ຄົ້ນຄວ້າ ແລະ ກະກຽມປະເມີນການຈັດຕັ້ງປະຕິບັດບັນດາກົດໝາຍ ຂົງເຂດສະພາແຫ່ງຊາດ ຈຳນວນ 4 ສະບັບ;

4) ຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍ, ນິຕິກຳໃຕ້ກົດໝາຍ ຈຳນວນ 3 ຫົວຂໍ້ ຄື: ຄຳວ່າ "ພະນັກງານ" ທີ່ກຳນົດຢູ່ປະມວນກົດໝາຍອາຍາ; ຄຳວ່າ "ພາກສ່ວນກ່ຽວຂ້ອງ" ທີ່ກຳນົດຢູ່ກົດໝາຍວ່າດ້ວຍງົບປະມານແຫ່ງລັດ; ຄຳວ່າ "ໂຮງແຮມ ແລະ ການບັນເທີງ" ທີ່ກຳນົດຢູ່ດຳລັດຂອງລັດຖະບານ;

5) ໂຄສະນາເຜີຍແຜ່ກົດໝາຍ ຜ່ານສື່ມວນຊົນຂອງສະພາແຫ່ງຊາດ; ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ລົງໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ຢູ່ບັນດາກະຊວງ, ອົງການ ໄດ້ຈຳນວນ 6 ພາກສ່ວນ;

6) ຈັດຕັ້ງປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ 4 ສະບັບ ໃນຈຳນວນ 9 ແຂວງ ເຊິ່ງມີຜູ້ເຂົ້າຮ່ວມທັງໝົດ 415 ເທື່ອຄົນ, ຍິງ 85 ເທື່ອຄົນ;

7) ໃຫ້ສັດຕະຍາບັນແກ່ສົນທິສັນຍາວ່າດ້ວຍການປົກປ້ອງວັດສະດຸນິວເຄຼຍ ທາງກາຍຍະພາບ, ສົນທິສັນຍາວ່າດ້ວຍຊາຍແດນລະຫວ່າງລາວ-ກຳປູເຈຍ ແລະ ຢັ້ງຢືນຮັບຊາບຂໍ້ຕົກລົງຂອງອົງການແຮງງານສາກົນ (ILO).

2. ການປະຕິບັດພາລະບົດບາດດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

1) ກະກຽມບັນດາເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ຈຳນວນ 23 ເນື້ອໃນ ແລະ ກະກຽມອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 20 ສະບັບ;

2) ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຈຳນວນ 7 ຄັ້ງ ເພື່ອພິຈາລະນາເນື້ອໃນຕ່າງໆ ຈຳນວນ 110 ເນື້ອໃນ ແລະ ໄດ້ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ຈຳນວນ 101 ສະບັບ, ໃນນີ້ ຮັບຮອງເອົາການປັບປຸງບຸກຄະລາກອນຂອງຄະນະລັດຖະບານຈຳນວນໜຶ່ງ.

3. ການປະຕິບັດພາລະບົດບາດດ້ານການຕິດຕາມກວດກາ

1) ເຄື່ອນໄຫວຕິດຕາມກວດກາວຽກງານເຄັ່ງຮ້ອນ ໄດ້ຈຳນວນ 10 ຄັ້ງ ໂດຍສະເພາະການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ການປະຕິບັດວາລະແຫ່ງຊາດ, ການຊົດເຊີຍຜົນກະທົບຈາກໂຄງການລົງທຶນ ແລະ ວຽກງານຮີບດ່ວນຈຳນວນໜຶ່ງ;

2) ໄດ້ຄົ້ນຄວ້າ ແລະ ກະກຽມເນື້ອໃນຄຳຊັກຖາມສິ່ງໃຫ້ລັດຖະບານ, ພາກສ່ວນກ່ຽວຂ້ອງ ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ດຳເນີນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດກັບຄະນະລັດຖະບານ ເພື່ອພິຈາລະນາເນື້ອໃນຕ່າງໆ ຈຳນວນ 7 ຫົວຂໍ້. ນອກນັ້ນ, ໄດ້ຈັດກອງປະຊຸມສຳມະນາວິທະຍາສາດເພີ່ມທະວີວິທີການຄຸ້ມຄອງການລົງທຶນຂອງລັດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນຈຳນວນ 7 ຫົວຂໍ້ 34;

3) ເກັບກຳສັງລວມຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ IX ໄດ້ຈຳນວນ 655 ສາຍ;

4) ໄດ້ພິຈາລະນາຄຳຮ້ອງຂໍຄວາມເປັນທຳ ແລະ ສົ່ງໃຫ້ພາກສ່ວນຕ່າງໆ ຈຳນວນ 304 ເລື່ອງ ເທົ່າກັບ 38,52% ຂອງຄຳຮ້ອງທັງໝົດ ຈຳນວນ 789 ເລື່ອງ; ຕ້ອນຮັບ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ ໄດ້ຈຳນວນ 136 ຄັ້ງ.

4. ການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາແຫ່ງຊາດ ແລະ ວຽກປິ່ນອ້ອມ

1) ໄດ້ດຳເນີນກອງປະຊຸມຍົກສູງຄຸນນະພາບດ້ານເນື້ອໃນ ໃຫ້ແກ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX; ຈັດຝຶກອົບຮົມສຳມະນາໃນຫົວຂໍ້ຕ່າງໆ ໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານ-ລັດຖະກອນ ໄດ້ຈຳນວນ 16 ຄັ້ງ;

2) ຄົ້ນຄວ້າ, ບັນຈຸ-ຊັບຊ້ອນ, ຍົກຍ້າຍ ແລະ ແຕ່ງຕັ້ງບຸກຄະກອນຂອງສະພາແຫ່ງຊາດ. ອັນພົ້ນເດັ່ນ ແມ່ນໄດ້ສຳເລັດການກຳນົດຕຳແໜ່ງງານຕິດພັນກັບການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງສະພາແຫ່ງຊາດ; ເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ຢູ່ເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ;

3) ປັບປຸງມະຕິຂອງຄະນະປະຈຳສະພາແຫ່ງຊາດ ວ່າດ້ວຍການປະເມີນຜົນຄວາມໄວ້ວາງໃຈ; ສືບຕໍ່ຊີ້ນຳການສ້າງ ແລະ ປັບປຸງບັນດານິຕິກຳຕ່າງໆ ຈຳນວນ 14 ສະບັບ, ໃນນີ້ ສຳເລັດ 4 ສະບັບ. ນອກນັ້ນ, ຍັງໄດ້ເຂົ້າຮ່ວມກະກຽມກອງປະຊຸມວຽກງານຫ້ອງວ່າການທົ່ວປະເທດ ຄັ້ງທີ IX;

4) ຄະນະປະຈຳສະພາແຫ່ງຊາດ ໄດ້ເອົາໃຈໃສ່ໃນການປະຕິບັດນະໂຍບາຍຕໍ່ສະມາຊິກສະພາແຫ່ງຊາດ ໂດຍສະເພາະແມ່ນການສະເໜີຂໍພິຈາລະນາຄືນໃໝ່ການປະຕິບັດນະໂຍບາຍອຸດໜູນຕຳແໜ່ງ ໃຫ້ແກ່ປະທານ ແລະ ຮອງປະທານສະພາປະຊາຊົນຂັ້ນແຂວງ ຄືກັນກັບສະພາແຫ່ງຊາດ ຊຸດທີ VIII ແລະ ໄດ້ຮັບການຕົກລົງຈາກກົມການເມືອງສູນກາງພັກແລ້ວ.

5. ການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ.

1) ປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II, ລົງເຜີຍແຜ່ຜົນສຳເລັດກອງປະຊຸມ ຕິດພັນກັບການລົງພົບປະປະຊາຊົນຜູ້ມີສິດເລືອກຕັ້ງ ໄດ້ຈຳນວນ 1.191 ຈຸດ, ມີຜູ້ເຂົ້າຮ່ວມ 125.162 ເທື່ອຄົນ, ຍິງ 59.658 ເທື່ອຄົນ; ລະດົມທຶນຊ່ວຍເຫຼືອ ແລະ ວັດຖຸເຄື່ອງໃຊ້ຕ່າງໆ ລວມເປັນມູນຄ່າທັງໝົດ 1.026.747.000 ກີບ ໜຶ່ງຕື້ຊາວຫົກລ້ານເຈັດແສນສີ່ສິບເຈັດພັນກີບ;

2) ຈັດກອງປະຊຸມປະເມີນຜົນການຈັດຕັ້ງປະຕິບັດກົດໝາຍ ຂົງເຂດຍຸຕິທຳ ຈຳນວນ 4 ສະບັບ ຢູ່ 3 ພາກ ກວມເອົາ 8 ແຂວງ ເຊິ່ງມີຜູ້ເຂົ້າຮ່ວມ ຈຳນວນ 351 ຄົນ, ຍິງ 72 ຄົນ; ຊີ້ນຳຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ໄດ້ສຳເລັດການດຳເນີນກອງປະຊຸມປະຈຳປີ 2022 ໃນ 17 ເຂດເລືອກຕັ້ງ.

6. ການເຄື່ອນໄຫວວຽກງານຕ່າງປະເທດ.

1) ສະພາແຫ່ງຊາດເອົາໃຈໃສ່ເຄື່ອນໄຫວວຽກງານຕ່າງປະເທດ ເຊິ່ງສະແດງອອກໃນການແລກປ່ຽນຢ້ຽມຢາມກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ຕ່າງປະເທດໄດ້ຈຳນວນ 8 ຄັ້ງ ໃນນັ້ນ ໄດ້ຕ້ອນຮັບ ແລະ ພົບປະກັບທ່ານປະທານປະເທດ ແຫ່ງ ສສ. ຫວຽດນາມ; ເລຂາທິການຄະນະຈັດຕັ້ງສູນກາງພັກຄອມມູນິດ ຈູບາ; ທ່ານ ນາຍົກລັດຖະມົນຕີ ມາເລເຊຍ, ເຂົ້າຮ່ວມກອງປະຊຸມລັດຖະສະພາພາກພື້ນ ແລະ ສາກົນ ຈຳນວນ 15 ຄັ້ງ; ກຽມພ້ອມຈັດກອງປະຊຸມສາກົນ ໃນທ້າຍປີ 2023 ແລະ 2024.

ຄະນະຜູ້ແທນສະພາແຫ່ງຊາດ ຍັງໄດ້ຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງປະເທດຕ່າງໆ ລວມທັງຄະນະມິດຕະພາບລັດຖະສະພາຕ່າງປະເທດ ຈຳນວນ 9 ຄະນະ; ຕ້ອນຮັບການເຂົ້າຢ້ຽມຂໍ່ານັບ, ການເຂົ້າອວຍພອນ ແລະ ອື່ນໆ ຈຳນວນ 19 ຄະນະ; ຈັດກອງປະຊຸມພົບປະເຮັດວຽກສອງຝ່າຍ ຈຳນວນ 4 ຄະນະ ນອກນັ້ນ, ຍັງໄດ້ອຳນວຍຄວາມສະດວກໃຫ້ແກ່ການນຳ, ອາດີດການນຳ ໄດ້ໄປກວດສຸຂະພາບ 7 ຄັ້ງ ແລະ ອື່ນໆ;

2) ສົ່ງສານຊົມເຊີຍ, ສານອວຍພອນ, ສານຂອບໃຈ ແລະ ອື່ນໆ ເຖິງບັນດາລັດຖະສະພາເພື່ອນມິດຕ່າງໆ ໄດ້ຫຼາຍກວ່າ 31 ສະບັບ.

**ຂ. ສາເຫດພາໃຫ້ມີຜົນສຳເລັດ.**

1. ຍ້ອນກົມການເມືອງສູນກາງພັກ, ຄະນະເລຂາທິການສູນກາງພັກ ໄດ້ເອົາໃຈໃສ່ນຳພາ-ຊີ້ນຳການເຄື່ອນໄຫວຂອງສະພາແຫ່ງຊາດ ຢ່າງເປັນລະບົບປົກກະຕິ;

2. ຄະນະປະຈຳສະພາແຫ່ງຊາດ ເອົາໃຈໃສ່ຈັດຕັ້ງດຳເນີນກອງປະຊຸມຂອງຕົນ ຢ່າງເປັນປົກກະຕິທຸກໆເດືອນແລະບາງເດືອນ ຍັງໄດ້ດຳເນີນກອງປະຊຸມວິສາມັນ ເພື່ອພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ;

3. ກົງຈັກເສນາທິການພ້ອມດ້ວຍພະນັກງານ-ລັດຖະກອນ ມີຄວາມຮັບຜິດຊອບໃນວຽກງານຂອງຕົນດ້ວຍຄວາມຫ້າວຫັນ;

4. ບັນດາສະມາຊິກສະພາແຫ່ງຊາດ ໄດ້ເປັນເຈົ້າການຍົກສູງບົດບາດການເຄື່ອນໄຫວວຽກງານຂອງຕົນ;

5. ບັນດາກົງຈັກເສນາທິການ ເອົາໃຈໃສ່ຜັນຂະຫຍາຍບັນດາກົດໝາຍ, ນິຕິກຳທີ່ກ່ຽວຂ້ອງ ເພື່ອເປັນບ່ອນອີງໃນການປະຕິບັດໜ້າທີ່ວຽກງານ.

**ຄ. ດ້ານຄົງຄ້າງ**

1. ການຈັດຕັ້ງປະຕິບັດແຜນການສ້າງ ແລະ ປັບປຸງກົດໝາຍ ຍັງມີລັກສະນະຟ້າວຟັ່ງ ແລ່ນນຳປະລິມານ ເພື່ອໃຫ້ໄດ້ຕາມແຜນການ;

2. ການກະກຽມເນື້ອໃນກອງປະຊຸມສະພາແຫ່ງຊາດ ຍັງບໍ່ທັນໄດ້ເອົາໃຈໃສ່ແຕ່ຫົວທີ ເຮັດໃຫ້ມີຄວາມຟ້າວຟັ່ງ, ສົ່ງຜົນກະທົບຕໍ່ການພິຈາລະນາຕົກລົງຂອງກອງປະຊຸມ;

3. ການກະກຽມເນື້ອໃນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ມີຄວາມຊັກຊ້າ, ບໍ່ທັນສາມາດສົ່ງເນື້ອໃນໃຫ້ຄະນະປະຈຳສະພາແຫ່ງຊາດຄົ້ນຄວ້າກ່ອນເຂົ້າຮ່ວມກອງປະຊຸມ;

ອ່ານຕໍ່ໜ້າ 35...

## ບົດລາຍງານ...

(ຕໍ່ຈາກໜ້າ 34)

4. ການຕິດຕາມກວດກາ ໄດ້ຈັດຕັ້ງປະຕິບັດຫຼາຍຫົວຂໍ້, ນຳໃຊ້ງົບປະມານຈຳນວນຫຼາຍ ແຕ່ການໃຫ້ຄຳແນະນຳ, ການແກ້ໄຂຜົນການຕິດຕາມກວດກາຍັງບໍ່ທັນມີປະສິດທິຜົນ; ການພິຈາລະນາແກ້ໄຂຄຳຮ້ອງຂໍຄວາມເປັນທຳຍັງຊັກຊ້າ, ມີຫຼາຍເລື່ອງຍັງແກ້ໄຂຫຼິບໄປຫຼິບມາຫຼາຍຄັ້ງ;

5.ການສ້າງຄວາມເຂັ້ມແຂງໄດ້ຮັບການຈັດຕັ້ງປະຕິບັດຫຼາຍ ແຕ່ການນຳໃຊ້ບົດຮຽນເຂົ້າໃນວຽກງານ ຍັງບໍ່ທັນມີການຫັນປ່ຽນຢ່າງຕັ້ງໜ້າ;

6. ການຜັນຂະຫຍາຍແຜນການລວມຂອງສະພາແຫ່ງຊາດ ເປັນແຜນການເຄື່ອນໄຫວວຽກງານລະອຽດຂອງບັນດາກຳມາທິການ ລວມທັງການສະຫຼຸບລາຍງານ ບາງຄັ້ງບໍ່ທັນເປັນລະບົບປົກກະຕິ;

7. ການເຄື່ອນໄຫວວຽກງານຕ່າງປະເທດ ໄດ້ຈັດຕັ້ງປະຕິບັດຈຳນວນຫຼາຍ ແລະ ມີການໃຊ້ຈ່າຍງົບປະມານສູງ ແຕ່ການນຳເອົາບົດຮຽນຂອງຕ່າງປະເທດມາໝູນໃຊ້ເຂົ້າໃນວຽກງານຂອງສະພາແຫ່ງຊາດ ຍັງບໍ່ທັນເຮັດໄດ້ຫຼາຍເທົ່າທີ່ຄວນ.

**ງ. ສາເຫດພາໃຫ້ມີດ້ານຄົງຄ້າງ.**

1. ຍ້ອນການຈັດຕັ້ງຜັນຂະຫຍາຍແຜນການສ້າງ ແລະ ປັບປຸງກົດໝາຍ ຍັງບໍ່ທັນໄດ້ເອົາໃຈໃສ່ແຕ່ຫົວທີ;

2. ຍ້ອນການຜັນຂະຫຍາຍນິຕິກຳຂອງຄະນະປະຈຳສະພາແຫ່ງຊາດ ອອກເປັນອັນລະອຽດ ຍັງມີຄວາມຊັກຊ້າ;

3. ຍ້ອນສ້າງແຜນການກຳນົດຫົວຂໍ້ຕິດຕາມກວດກາຂອງສະພາແຫ່ງຊາດ ຍັງບໍ່ທັນລະອຽດ, ລວມສູນ ແລະ ບໍ່ທັນມີອົງການຈັດຕັ້ງຮັບຜິດຊອບສະເພາະ;

4. ຍ້ອນການກຳແໜ້ນເຊື່ອມຊຶມນິຕິກຳທີ່ກ່ຽວຂ້ອງຈຳນວນໜຶ່ງ ບໍ່ທັນເລິກເຊິ່ງ.

**ຈ. ບົດຮຽນຖອດຖອນໄດ້.**

1. ການກະກຽມເນື້ອໃນກົດໝາຍແຕ່ຫົວທີ, ປຶກສາຫາລືຄວາມເປັນເອກະພາບກັບພາກສ່ວນກ່ຽວຂ້ອງ, ຈັດຕັ້ງປະຕິບັດຂັ້ນຕອນການສ້າງ ແລະ ປັບປຸງກົດໝາຍ ຈະເຮັດໃຫ້ຄຸນນະພາບຂອງການສ້າງກົດໝາຍດີຂຶ້ນ;

2. ການເພີ່ມທະວີການປະສານສົມທົບວຽກງານ ລະຫວ່າງ ສະພາແຫ່ງຊາດ, ບັນດາກຳມາທິການ ແລະ ລັດຖະບານ, ບັນດາກະຊວງ, ອົງການ ເຮັດໃຫ້ການປຶກສາຫາລືວຽກງານຕ່າງໆເປັນລະບົບປົກກະຕິ ແລະ ມີເນື້ອໃນຮັດກຸມ;

3. ການຄົ້ນຄວ້າກຳນົດແຜນການຕິດຕາມກວດກາ, ການກຳນົດຫົວຂໍ້, ແຕ່ງຕັ້ງຄະນະ, ກຳນົດເປົ້າໝາຍລົງຕິດຕາມກວດກາໃຫ້ລະອຽດ ຈະເຮັດໃຫ້ວຽກງານມີປະສິດທິຜົນຍິ່ງໆຂຶ້ນ.

**II. ທິດທາງແຜນການຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດຊຸດທີ IX.**

**ກ. ຈຸດປະສົງ**

1)ເພື່ອຮັບປະກັນການປະຕິບັດພາລະບົດບາດນິຕິບັນຍັດ ໂດຍສະເພາະແຜນການສ້າງ ແລະ ປັບປຸງກົດໝາຍ ໃນ 6 ເດືອນທ້າຍປີ 2023 ຂອງສະພາແຫ່ງຊາດ ໃຫ້ບັນລຸຕາມແຜນການທີ່ວາງໄວ້ ຈຳນວນ 12 ສະບັບ;

2)ເພື່ອຮັບປະກັນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຜ່ານກົນໄກການດຳເນີນກອງປະຊຸມຂອງຕົນໃຫ້ສອດຄ່ອງກັບແນວທາງນະໂຍບາຍ, ລັດຖະທຳມະນູນ, ກົດໝາຍ ຢ່າງເຂັ້ມງວດ;

3) ເພື່ອຮັບປະກັນການປະຕິບັດພາລະບົດບາດຕິດຕາມກວດກາຂອງສະພາແຫ່ງຊາດຕາມລັດຖະທຳມະນູນ ແລະ ກົດໝາຍໃຫ້ມີປະສິດທິພາບ, ປະສິດທິຜົນ ແລະ ສາມາດແກ້ໄຂບັນຫາຕ່າງໆທັນສະພາບການ.

**ຂ. ວຽກງານຈຸດສຸມແຕ່ລະດ້ານ.**

**1. ວຽກງານດ້ານນິຕິບັນຍັດ.**

1) ຮຽບຮຽງກົດໝາຍຈຳນວນ 10 ສະບັບ ທີ່ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີ IX ເພື່ອສາມາດອອກລັດຖະດຳລັດປະກາດໃຊ້; ກະກຽມຮ່າງກົດໝາຍ ຈຳນວນ 12 ສະບັບ ທີ່ຈະນຳເຂົ້າພິຈາລະນາ ຢູ່ໃນກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX;

2) ຄົ້ນຄວ້າກະກຽມການປະເມີນກົດໝາຍຂົງເຂດຂອງສະພາແຫ່ງຊາດ ຈຳນວນ 4 ສະບັບ; ປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ;

3) ເອົາໃຈໃສ່ຄົ້ນຄວ້າການຕີຄວາມໝາຍ ແລະ ອະທິບາຍກົດໝາຍ; ຄົ້ນຄວ້າໃຫ້ສັດຕະຍາບັນແກ່ສົນທິສັນຍາແລະສັນຍາສາກົນ ຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ.

2. ວຽກງານດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

1) ກະກຽມເນື້ອໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຄື:

(1) ບົດລາຍງານການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ແລະ ແຜນເງິນຕາ (ກາງສະໄໝ), ການຈັດຕັ້ງປະຕິບັດ ປະຈຳປີ 2023 ແລະ ແຜນການ ປະຈຳປີ 2024;

(2) ບົດລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ 2 ສະບັບ;

(3) ບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ (ກາງສະໄໝ), ການຈັດຕັ້ງປະຕິບັດ ປະຈຳປີ 2023 ຂອງອົງການກວດສອບແຫ່ງລັດ, ອົງການກວດກາແຫ່ງລັດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ສະພາແຫ່ງຊາດ ແລະ ແຜນການ ປະຈຳປີ 2024;

(4) ຈັດຕັ້ງປະເມີນຜົນຄວາມໄວ້ວາງໃຈຕໍ່ບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະຮັບຮອງເອົາການແຕ່ງຕັ້ງ;

(5) ວຽກງານສຳຄັນອື່ນໆຈຳນວນໜຶ່ງ.

3. ວຽກງານດ້ານການຕິດຕາມກວດກາ

1) ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ປະຈຳປີ 2023;

2) ຕິດຕາມກວດກາການຈັດຕັ້ງປະຕິບັດໜ້າທີ່ວຽກງານ ຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ;

3) ຕິດຕາມກວດກາການຈັດຕັ້ງປະຕິບັດວາລະແຫ່ງຊາດ;

4) ຕິດຕາມກວດກາໂຄງການລົງທຶນຂະໜາດໃຫຍ່ທີ່ເຫັນວ່າມີຄວາມຫຍຸ້ງຍາກ, ສັບສົນ ຫຼື ມີຜົນກະທົບ ຢ່າງຫຼວງຫຼາຍ ຕໍ່ການພັດທະນາເສດຖະກິດ-ສັງຄົມ ແລະ ຕໍ່ການທຳມາຫາກິນຂອງປະຊາຊົນ;

5) ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໃຫ້ໄດ້ 80% ຂຶ້ນໄປ.

4. ວຽກງານການສ້າງຄວາມເຂັ້ມແຂງ

1) ຈັດຕັ້ງປະຕິບັດແຜນການຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນຂັ້ນແຂວງ ຕາມຫົວຂໍ້ຕ່າງໆຕາມແຜນການ 5 ປີ ຂອງສະພາແຫ່ງຊາດ;

2) ຄົ້ນຄວ້າ ແລະ ຍົກລະດັບໃຫ້ແກ່ກຳມະການຂອງແຕ່ລະກຳມາທິການ ໄດ້ຝຶກອົບຮົມ, ທັດສະນະສຶກສາ ແລະ ແລກປ່ຽນບົດຮຽນວຽກງານຕ່າງໆແຕ່ລະຂົງເຂດ ທັງພາຍໃນ ແລະ ຕ່າງປະເທດ;

3) ຍົກລະດັບທາງດ້ານທິດສະດີການເມືອງ-ການປົກຄອງ, ດ້ານວິຊາສະເພາະໄລຍະສັ້ນ ແລະ ໄລຍະຍາວ ຢູ່ພາຍໃນ-ຕ່າງປະເທດ ໃຫ້ພະນັກງານຫຼັກແຫຼ່ງ ເປັນລະບົບຕໍ່ເນື່ອງ;

4) ຕິດຕາມຊຸກຍູ້ການສ້າງຫົວຂໍ້ວິທະຍາສາດ, ທັກສະ ແລະ ສ້າງປຶ້ມຄູ່ມື ທີ່ພົວພັນກັບການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ;

5) ດຳເນີນກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ທົ່ວປະເທດ ແລະ ຊີ້ນຳການດຳເນີນກອງປະຊຸມລະຫວ່າງບັນດາກຳມາທິການ, ກົງຈັກການຈັດຕັ້ງຂອງສະພາແຫ່ງຊາດ ກັບບັນດາກະຊວງ, ອົງການ ແລະ ພາກສ່ວນທີ່ກ່ຽວຂ້ອງ.

5. ວຽກງານການເຄື່ອນໄຫວຂອງຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ.

1) ປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ, ຄະນະພັກ, ອົງການປົກຄອງທ້ອງຖິ່ນ ໃນການເປັນເສນາທິການໃຫ້ແກ່ຄະນະປະຈຳສະພາແຫ່ງຊາດ;

2) ເຄື່ອນໄຫວວຽກງານຕ່າງໆ ເປັນຕົ້ນ ການສ້າງ ແລະ ປັບປຸງກົດໝາຍ, ການຕົກລົງບັນຫາສຳຄັນພື້ນຖານຂອງທ້ອງຖິ່ນ; ການຕິດຕາມກວດກາ ແລະ ວຽກງານອື່ນໆ ໃຫ້ມີປະສິດທິພາບ, ປະສິດທິຜົນ;

3) ກະກຽມ ແລະ ດຳເນີນກອງປະຊຸມສະໄໝສາມັນເທື່ອທີ 5 ແລະ ເທື່ອທີ 6 ຂອງສະພາປະຊາຊົນຂັ້ນແຂວງ ຊຸດທີ II ຕິດພັນກັບການລົງເຜີຍແຜ່ຜົນສຳເລັດກອງປະຊຸມສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

4) ປັບປຸງແບບແຜນວິທີເຮັດວຽກ ລະຫວ່າງກົງຈັກຂອງສະພາແຫ່ງຊາດ ກັບຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ແລະ ສະພາປະຊາຊົນຂັ້ນແຂວງ ພ້ອມທັງສະຫຼຸບລາຍງານການເຄື່ອນໄຫວວຽກງານ ໃຫ້ຄະນະປະຈຳສະພາແຫ່ງຊາດເປັນປົກກະຕິ;

5) ຊີ້ນຳການເກັບກຳຂໍ້ມູນ ສະພາບການເຄື່ອນໄຫວຂອງບັນດາກົງຈັກການຈັດຕັ້ງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ລາຍງານຄະນະປະຈຳສະພາແຫ່ງຊາດ;

6) ຈັດຕັ້ງກອງປະຊຸມຮ່ວມສະພາແຫ່ງຊາດ ຄະນະປະຈຳສະພາແຫ່ງຊາດ ແລະ ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ເພື່ອຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດໜ້າທີ່ໃນໄລຍະກາງສະໄໝ.

6. ວຽກງານການເຄື່ອນໄຫວວຽກງານຕ່າງປະເທດ.

ກະກຽມເປັນເຈົ້າພາບກອງປະຊຸມສຸດຍອດລັດຖະສະພາ ກຳປູເຈຍ-ລາວ-ຫວຽດນາມ (CLV) ໃນທ້າຍປີ 2023; ກະກຽມເຂົ້າຮ່ວມກອງປະຊຸມໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 44 ຢູ່ປະເທດອິນໂດເນເຊຍ ແລະ ກະກຽມເປັນເຈົ້າພາບກອງປະຊຸມໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ຢູ່ ສປປ ລາວ ໃນປີ 2024; ເພີ່ມທະວີການຕິດຕາມ, ຊຸກຍູ້ການຈັດຕັ້ງປະຕິບັດສົນທິສັນຍາ ແລະ ສັນຍາສາກົນ; ປະເມີນຜົນການຈັດຕັ້ງປະຕິບັດບັນດາສັນຍາກັບຕ່າງປະເທດ; ເຂົ້າຮ່ວມເຄື່ອນໄຫວຢ້ຽມຢາມ ແລະ ແລກປ່ຽນບົດຮຽນກັບປະເທດຕ່າງໆ ໃນຮູບແບບເຊິ່ງໜ້າ ແລະ ທາງໄກ; ຕ້ອນຮັບແຂກຕ່າງປະເທດ ທີ່ເຂົ້າພົບປະ, ຢ້ຽມຂ່ຳນັບ, ອຳລາ ແລະ ອື່ນໆ.

**III. ມາດຕະການຈັດຕັ້ງປະຕິບັດ.**

1) ເປັນໃຈກາງໃນການສົມທົບກະກຽມສ້າງ ແລະ ປັບປຸງກົດໝາຍ ທີ່ຈະນຳເຂົ້າພິຈາລະນາຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX;

2) ຍົກສູງການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ໂດຍຜ່ານກົນໄກການດຳເນີນໃນກອງປະຊຸມສະພາແຫ່ງຊາດ, ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມອື່ນໆ;

3) ເພີ່ມທະວີການສ້າງແຜນການຕິດຕາມກວດກາຢ່າງມີຈຸດສຸມ ໂດຍສະເພາະການກຳນົດຫົວຂໍ້, ຂັ້ນຕອນວິທີການຕິດຕາມກວດກາ ໃຫ້ມີຄວາມຊັດເຈນ;

4) ບັນດາກົງຈັກເສນາທິການຂອງສະພາແຫ່ງຊາດ ເອົາໃຈໃສ່ຜັນຂະຫຍາຍແຜນການເຄື່ອນໄຫວວຽກງານສະບັບນີ້ ເປັນອັນລະອຽດເຂົ້າໃນວຽກງານຂອງຕົນ ແລະ ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນສຳເລັດ.

# ຖະແຫຼງກ່ຽວກັບຜົນສຳເລັດການພິຈາລະນາຮັບຮອງເອົາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາ ເທື່ອທີ 5



ໃນວັນທີ 5 ກໍລະກົດ 2023 **ທ່ານ ປອ. ນາງ ສູນທອນ ໄຊຍະຈັກ ຮອງປະທານສະພາແຫ່ງຊາດ ຕາງໜ້າໃຫ້ຄະນະປະຈຳສະພາແຫ່ງຊາດ** ໄດ້ຖະແຫຼງຂ່າວຕໍ່ສື່ມວນຊົນ ໂດຍມີເນື້ອໃນດັ່ງນີ້ເພື່ອເປັນຂໍ້ມູນໃນການໂຄສະນາເຜີຍແຜ່ໃຫ້ພະນັກງານ-ລັດຖະກອນ, ທະຫານ, ຕຳຫລວດ, ປະຊາຊົນລາວບັນດາເຜົ່າ ໃນຂອບເຂດທົ່ວປະເທດ ແລະ ພໍ່ແມ່ພີ່ນ້ອງຊາວລາວ ທີ່ອາໄສຢູ່ຕ່າງປະເທດ ຮັບຊາບກ່ຽວກັບຜົນສຳເລັດການພິຈາລະນາຮັບຮອງເອົາການເຄື່ອນໄຫວວຽກງານຂອງສະພາແຫ່ງຊາດ ນັບແຕ່ກອງປະຊຸມສະໄໝສາມັນເທື່ອທີ 4 ຫາ ເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ເຊິ່ງມີວຽກງານພົ້ນເດັ່ນ:

**1. ດ້ານນິຕິບັນຍັດ**

1) ສຳເລັດການປັບປຸງ, ຮຽບຮຽງກົດໝາຍ ຈຳນວນ 12 ສະບັບ ທີ່ຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 4 ແລະ ໄດ້ນຳສະເໜີປະທານປະເທດ ອອກລັດຖະດຳລັດປະກາດໃຊ້ຕາມກົດໝາຍກຳນົດ, ໃນນີ້ ກົດໝາຍສ້າງໃໝ່ 3 ສະບັບ ແລະ ກົດໝາຍປັບປຸງ 9 ສະບັບ ກວມເອົາ 4 ຂົງເຂດ ຄື: ຂົງເຂດການປົກຄອງ 3 ສະບັບ, ຂົງເຂດເສດຖະກິດ-ການເງິນ 4 ສະບັບ, ຂົງເຂດວັດທະນະທຳ-ສັງຄົມ 4 ສະບັບ, ຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 1 ສະບັບ;

2) ພິຈາລະນາຮັບຮອງເອົາກົດໝາຍ ຈຳນວນ 10 ສະບັບ, ໃນນີ້ ກົດໝາຍສ້າງໃໝ່ 4 ສະບັບ ແລະ ກົດໝາຍປັບປຸງ 6 ສະບັບ;

3) ຄົ້ນຄວ້າ ແລະ ກະກຽມການປະເມີນປັບປຸງກົດໝາຍຂົງເຂດສະພາແຫ່ງຊາດ ຈຳນວນ 4 ສະບັບ ຄື: ກົດໝາຍວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍສະພາແຫ່ງຊາດ, ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ, ກົດໝາຍວ່າດ້ວຍການເລືອກຕັ້ງສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

4) ຄົ້ນຄວ້າຕີຄວາມໝາຍ ແລະ ອະທິບາຍກົດໝາຍຕາມການສະເໜີຂອງພາກສ່ວນກ່ຽວຂ້ອງ ຈຳນວນ 3 ຫົວຂໍ້ ທີ່ພົວພັນກັບປະມວນກົດໝາຍອາຍາ; ກົດໝາຍວ່າດ້ວຍງົບປະມານແຫ່ງລັດ ແລະ ດຳລັດຂອງລັດຖະບານ;

5) ໄດ້ໂຄສະນາເຜີຍແຜ່ບາງມາດຕາຂອງກົດໝາຍທີ່ຕິດພັນກັບບັນຫາເຄັ່ງຮ້ອນຂອງສັງຄົມຜ່ານສື່ມວນຊົນຂອງສະພາແຫ່ງຊາດ; ປະສານສົມທົບ ແລະ ຊຸກຍູ້ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງການລົງໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ຢູ່ບັນດາກະຊວງ, ອົງການ ໄດ້ຈຳນວນ 6 ພາກສ່ວນ; ຈັດກອງປະຊຸມເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໄດ້ຈຳນວນ 2 ຄັ້ງ;

6) ຈັດຕັ້ງປະເມີນຜົນການປະຕິບັດກົດໝາຍຂົງເຂດຍຸຕິທຳ 4 ສະບັບ ຄື: ກົດໝາຍວ່າດ້ວຍສານປະຊາຊົນ, ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງ, ກົດໝາຍວ່າດ້ວຍອົງການໄອຍະການປະຊາຊົນ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ໃຫ້ແກ່ເປົ້າໝາຍຕ່າງໆຢູ່ຈຳນວນ 9 ແຂວງ;

7) ຄົ້ນຄວ້າການໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນ ທີ່ ສປປ ລາວ ເປັນພາຄີ ຕາມການສະເໜີຂອງນາຍົກລັດຖະມົນຕີແຫ່ງ ສປປ ລາວ ໄດ້ຈຳນວນ 3 ສະບັບ;

**2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ** ເອົາໃຈໃສ່ຄົ້ນຄວ້າຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດ ດັ່ງນີ້:

1) ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ພິຈາລະນາ 23 ເນື້ອໃນ ແລະ ອອກເປັນມະຕິກອງປະຊຸມສະພາແຫ່ງຊາດ ຈຳນວນ 20 ສະບັບ ໃນນີ້, ວຽກງານລັດຖະບານ 5 ສະບັບ, ວຽກງານສະພາແຫ່ງຊາດ 1 ສະບັບ; ວຽກງານອົງການໄອຍະການປະຊາຊົນສູງສຸດ ແລະ ວຽກງານສານປະຊາຊົນສູງສຸດ 4 ສະບັບ, ວຽກງານການສ້າງ ແລະ ປັບປຸງກົດໝາຍ 10 ສະບັບ;

2) ໄດ້ດຳເນີນກອງປະຊຸມຄະນະປະຈຳສະພາແຫ່ງຊາດ ຈຳນວນ 7 ຄັ້ງ ເຊິ່ງໄດ້ຄົ້ນຄວ້າ, ພິຈາລະນາ ແລະ ຕົກລົງບັນດາເນື້ອໃນຕ່າງໆ ຈຳນວນ 110 ເນື້ອໃນ ແລະ ອອກເປັນມະຕິຄະນະປະຈຳສະພາແຫ່ງຊາດ ຈຳນວນ 101 ສະບັບ.

3. ດ້ານການຕິດຕາມກວດກາ

1) ການເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ ແລະ ເກັບກຳຂໍ້ມູນວຽກງານຕ່າງໆ ໄດ້ຈຳນວນ 10 ຄັ້ງ ທີ່ພົວພັນກັບການປະຕິບັດລັດຖະທຳມະນູນ ແລະ ກົດໝາຍ, ການຜັນຂະຫຍາຍເນື້ອໃນກົດໝາຍ ທີ່ເປັນນິຕິກຳໃຕ້ກົດໝາຍ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ ຕິດພັນກັບຄວາມຄືບໜ້າໃນການປະຕິບັດສອງວາລະແຫ່ງຊາດ, ການຊົດເຊີຍຜົນກະທົບຈາກການລົງທຶນຂອງລັດ;

2) ໄດ້ກະກຽມຄຳຊັກຖາມທີ່ເປັນບັນຫາເຄັ່ງຮ້ອນຂອງສັງຄົມ ເປັນຕົ້ນ ການຂຸດຄົ້ນແຮ່ທາດ, ການເໜັງຕີງຂອງລາຄາສິນຄ້າ, ບັນຫາອັດຕາແລກປ່ຽນ, ການຜະລິດເປັນສິນຄ້າທົດແທນການນຳເຂົ້າ, ບັນຫາໂກຕາຄູ, ການປະລະການຮຽນ ແລະ ບັນຫາແຮງງານທີ່ຫຼັ່ງໄຫຼໄປເຮັດວຽກຢູ່ປະເທດໃກ້ຄຽງ ເພື່ອໃຫ້ລັດຖະບານ, ພາກສ່ວນກ່ຽວຂ້ອງ ຊີ້ແຈງຕໍ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດ ຊຸດທີ IX;

3) ຄົ້ນຄວ້າຄຳສະເໜີຂອງປະຊາຊົນຜ່ານໂທລະສັບສາຍດ່ວນ ທີ່ສົ່ງເຖິງກອງປະຊຸມສະໄໝສາມັນເທື່ອທີ 4 ສະພາແຫ່ງຊາດ ຊຸດທີ IX ເຊິ່ງສັງລວມເອົາບັນຫາຕ່າງໆ ຈຳນວນ 352 ເນື້ອໃນ ສົ່ງໃຫ້ພາກສ່ວນກ່ຽວຂ້ອງພິຈາລະນາແກ້ໄຂ. ນອກນັ້ນ, ໄດ້ດຳເນີນກອງປະຊຸມຮ່ວມລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບຄະນະລັດຖະບານ ເພື່ອພິຈາລະນາເນື້ອໃນສຳຄັນຕ່າງໆ;

4) ໄດ້ຄົ້ນຄວ້າ, ພິຈາລະນາຄຳຮ້ອງຂໍຄວາມເປັນທຳຂອງພົນລະເມືອງ ໄດ້ຈຳນວນ 304 ເລື່ອງ; ຕ້ອນຮັບ ແລະ ໃຫ້ຄຳປຶກສາແກ່ປະຊາຊົນ ໄດ້ຈຳນວນ 136 ຄັ້ງ.

ນອກຈາກການປະຕິບັດພາລະບົດບາດຂອງສະພາແຫ່ງຊາດແລ້ວ ຍັງໄດ້ປະຕິບັດໜ້າທີ່ວຽກງານປິ່ນອ້ອມ ຈຳນວນໜຶ່ງ ດັ່ງນີ້:

5) ດຳເນີນການເລືອກຕັ້ງແທນສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 1 ນະຄອນຫຼວງວຽງຈັນ; ປະຕິບັດນະໂຍບາຍໃຫ້ແກ່ສະພາປະຊາຊົນຂັ້ນແຂວງ ຈຳນວນໜຶ່ງ; ສຳເລັດການຂຽນຕຳແໜ່ງງານຕິດພັນກັບການສ້າງແຜນກຳນົດພະນັກງານນຳພາ-ຄຸ້ມຄອງຂອງສະພາແຫ່ງຊາດ; ເອົາໃຈໃສ່ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ, ພະນັກງານ-ລັດຖະກອນ ທັງສູນກາງ ແລະ ທ້ອງຖິ່ນ ໄດ້ຈຳນວນ 16 ຄັ້ງ; ຄົ້ນຄວ້າ, ສ້າງ ແລະ ປັບປຸງນິຕິກຳຂອງສະພາແຫ່ງຊາດ ຈຳນວນ 14 ສະບັບ;

6) ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງປະຈຳເຂດເລືອກຕັ້ງ ໄດ້ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນຂັ້ນແຂວງ ຊຸດທີ II ຕິດພັນກັບການລົງພົບປະປະຊາຊົນຜູ້ມີສິດເລືອກຕັ້ງ ສຳເລັດໃນຂອບເຂດທົ່ວປະເທດ ໄດ້ຈຳນວນ 1.191 ຈຸດ, ມີຜູ້ເຂົ້າຮ່ວມ 125.162 ເທື່ອຄົນ, ຍິງ 59.658 ເທື່ອຄົນ; ນອກນັ້ນ, ຍັງໄດ້ລະດົມທຶນຊ່ວຍເຫຼືອດ້ານທຶນຮອນ ແລະ ວັດຖຸເຄື່ອງໃຊ້ຕ່າງໆໃຫ້ແກ່ປະຊາຊົນ ລວມເປັນມູນຄ່າທັງໝົດ 1.026.747.000 ກີບ; ສຳເລັດການດຳເນີນກອງປະຊຸມຄົບຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ປະຈຳປີ 2022;

7) ໄດ້ເອົາໃຈໃສ່ເຄື່ອນໄຫວວຽກງານຕ່າງປະເທດ ຮັບຜົນສຳເລັດເປັນຢ່າງດີ ເປັນຕົ້ນ ຢ້ຽມຢາມ ແລະ ແລກປ່ຽນບົດຮຽນ ກັບບັນດາປະເທດເພື່ອນມິດຍຸດທະສາດ ແລະ ຕ່າງປະເທດ 8 ຄັ້ງ; ເຂົ້າຮ່ວມກອງປະຊຸມລະດັບຕ່າງໆ ໃນພາກພື້ນ ແລະ ສາກົນ 15 ຄັ້ງ; ຕ້ອນຮັບຄະນະຜູ້ແທນຂັ້ນສູງຂອງປະເທດຕ່າງໆ 9 ຄະນະ ແລະ ຮັບການເຂົ້າຢ້ຽມຂໍ່ານັບ ຂອງຄະນະຜູ້ແທນປະເທດຕ່າງໆ 19 ຄະນະ ແລະ ອື່ນໆ;

ໃນ 6 ເດືອນຕໍ່ໜ້າ ສະພາແຫ່ງຊາດຈະໄດ້ສືບຕໍ່ເຄື່ອນໄຫວວຽກງານແຕ່ນີ້ຮອດກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ຕາມພາລະບົດບາດຂອງຕົນໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້ ດັ່ງນີ້:

1. ດ້ານນິຕິບັນຍັດ

1) ປັບປຸງ ແລະ ຮຽບຮຽງເນື້ອໃນກົດໝາຍ 10 ສະບັບ ທີ່ຮັບຮອງເອົາຢູ່ກອງປະຊຸມສະໄໝສາມັນເທື່ອທີ 5 ຂອງສະພາແຫ່ງຊາດຊຸດທີIX; ກະກຽມຮ່າງກົດໝາຍ 12 ສະບັບ, ໃນນີ້, ກົດໝາຍສ້າງໃໝ່ 3 ສະບັບ, ກົດໝາຍປັບປຸງ 9 ສະບັບ ທີ່ຈະນຳເຂົ້າພິຈາລະນາ ແລະ ຮັບຮອງເອົາຢູ່ໃນກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX; ຄົ້ນຄວ້າ ແລະ ປະເມີນກ້າວໄປເຖິງການປັບປຸງກົດໝາຍຂົງເຂດຂອງສະພາແຫ່ງຊາດ 4 ສະບັບ;

2) ກະກຽມປະເມີນການຈັດຕັ້ງປະຕິບັດກົດໝາຍຂົງເຂດປ້ອງກັນຊາດ-ປ້ອງກັນຄວາມສະຫງົບ 3 ສະບັບ ຄື: ກົດໝາຍວ່າດ້ວຍການປ້ອງກັນຊາດ, ກົດໝາຍວ່າດ້ວຍນາຍທະຫານກອງທັບປະຊາຊົນລາວ ແລະ ກົດໝາຍວ່າດ້ວຍປ້ອງກັນຄວາມສະຫງົບປະຊາຊົນ;

3) ຄົ້ນຄວ້າຕີຄວາມໝາຍ ຫຼື ອະທິບາຍກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງ; ຄົ້ນຄວ້າ, ໃຫ້ສັດຕະຍາບັນແກ່ສົນທິສັນຍາ-ສັນຍາສາກົນທີ່ສປປ ລາວ ເປັນພາຄີ ໃຫ້ມີຄຸນນະພາບຕາມກົດໝາຍກຳນົດ; ເຜີຍແຜ່ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ຕໍ່ເປົ້າໝາຍຕ່າງໆໃຫ້ໄດ້ຢ່າງກວ້າງຂວາງ.

2. ດ້ານການຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ

1) ຮັບປະກັນການພິຈາລະນາຮັບຮອງເອົາບັນດາເນື້ອໃນສຳຄັນຕ່າງໆທີ່ນຳມາຜ່ານກອງປະຊຸມສະໄໝສາມັນເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ເປັນຕົ້ນ ສະຫຼຸບການຈັດຕັ້ງປະຕິບັດແຜນການ 5 ປີ ກາງສະໄໝຂອງແຕ່ລະພາກສ່ວນ, ການປະເມີນຜົນຄວາມໄວ້ວາງໃຈຕໍ່ບຸກຄະລາກອນທີ່ສະພາແຫ່ງຊາດເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ແລະ ວຽກງານອື່ນໆ;

2) ເອົາໃຈໃສ່ພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງປະເທດຊາດ ຢູ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ໃຫ້ສອດຄ່ອງຕາມແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ.

**3. ດ້ານການຕິດຕາມກວດກາ**

1) ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະພາແຫ່ງຊາດ ແລະ ມະຕິກອງປະຊຸມຄະນະປະຈຳສະພາແຫ່ງຊາດ;

2) ຕິດຕາມກວດກາການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານ ແລະ ແຜນເງິນຕາ ຕິດພັນກັບວາລະແຫ່ງຊາດ; ການຈັດຕັ້ງປະຕິບັດໜ້າທີ່ຂອງສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການສືບສວນ-ສອບສວນ ແລະ ອົງການຈັດຕັ້ງປະຕິບັດຄຳຕັດສິນຂອງສານ ເພື່ອເປັນຂໍ້ມູນໃຫ້ແກ່ກອງປະຊຸມສະພາແຫ່ງຊາດ ໃນຄັ້ງຕໍ່ໄປ;

3) ຕິດຕາມກວດກາໂຄງການລົງທຶນຂະໜາດໃຫຍ່ທີ່ສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນລາວບັນດາເຜົ່າ ແລະ ຕິດຕາມກວດກາວຽກງານອື່ນໆ ຈຳນວນໜຶ່ງ;

4) ຕິດຕາມກວດກາຜ່ານກົນໄກການຮັບ ແລະ ພິຈາລະນາຄຳສະເໜີ, ຄຳຮ້ອງຂໍຄວາມເປັນທຳຂອງປະຊາຊົນໃຫ້ໄດ້ 80% ຂຶ້ນໄປຂອງຈຳນວນຄຳຮ້ອງທີ່ເຂົ້າມາສະພາແຫ່ງຊາດ.

**4. ການປະຕິບັດວຽກງານປິ່ນອ້ອມຕ່າງໆ**

1) ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາແຫ່ງຊາດ, ສະມາຊິກສະພາປະຊາຊົນຂັ້ນແຂວງ ແລະ ພະນັກງານ-ລັດຖະກອນ ຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ ໃນຫົວຂໍ້ຕ່າງໆ; ຄົ້ນຄວ້າຫົວຂໍ້ວິທະຍາສາດ, ທັກສະ ແລະ ສ້າງປຶ້ມຄູ່ມື ທີ່ພົວພັນກັບພາລະບົດບາດ ຂອງສະພາແຫ່ງຊາດ ແລະ ວິທີການບໍລິການ, ບໍລິຫານຮັບໃຊ້ຕ່າງໆ; ດຳເນີນກອງປະຊຸມຮ່ວມ ລະຫວ່າງຄະນະປະຈຳສະພາແຫ່ງຊາດ ກັບ ປະທານຄະນະປະຈຳສະພາປະຊາຊົນຂັ້ນແຂວງ ທົ່ວປະເທດ; ອຳນວຍຄວາມສະດວກໃຫ້ແກ່ການເຄື່ອນໄຫວວຽກງານຕ່າງໆຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນຂັ້ນແຂວງ;

2) ຄະນະສະມາຊິກສະພາແຫ່ງຊາດປະຈຳເຂດເລືອກຕັ້ງ ເອົາໃຈໃສ່ປະສານສົມທົບກັບສະພາປະຊາຊົນຂັ້ນແຂວງ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອຮັບປະກັນການປະຕິບັດພາລະບົດບາດຂອງສະພາແຫ່ງຊາດ ຢູ່ແຕ່ລະທ້ອງຖິ່ນ ຕາມກົດໝາຍກຳນົດ.

3) ເອົາໃຈໃສ່ເຄື່ອນໄຫວວຽກງານການຕ່າງປະເທດໃຫ້ສອດຄ່ອງຕາມແນວທາງການຕ່າງປະເທດຂອງພັກ ດ້ວຍຄວາມເປັນເຈົ້າການ ແລະ ມີຜົນສຳເລັດເປັນຢ່າງດີ ເປັນຕົ້ນ ວຽກງານພົວພັນຮ່ວມມືໃນຂອບສອງຝ່າຍແລະຫຼາຍຝ່າຍ. ອັນພົ້ນເດັ່ນແມ່ນກະກຽມເປັນເຈົ້າພາບກອງປະຊຸມສຸດຍອດລັດຖະສະພາ 3 ປະເທດ ລາວ-ຫວຽດນາມ-ກຳປູເຈຍ; ກະກຽມເຂົ້າຮ່ວມກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 44 ຢູ່ປະເທດອິນໂດເນເຊຍ ແລະ ເລີ່ມກະກຽມຮອບດ້ານໃຫ້ແກ່ການເປັນເຈົ້າພາບກອງປະຊຸມສະມັດຊາໃຫຍ່ລັດຖະສະພາລະຫວ່າງຊາດອາຊຽນ (AIPA) ຄັ້ງທີ 45 ຢູ່ ສປປ ລາວ.

# ປະມວນຮູບພາບກອງປະຊຸມສະໄໝສາມັນ ເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX





















# ປະມວນຮູບພາບກອງປະຊຸມສະໄໝສາມັນ ເທື່ອທີ 5 ສະພາແຫ່ງຊາດ ຊຸດທີ IX

























ທະນາຄານພັດທະນາລາວ
LDB Bank
ບໍລິສັດ ຫຼວງພະບາງ ພາວເວີ ຈຳກັດ
LUANG PRABANG POWER COMPANY LIMITED
ອຸດສາຫະກຳ ຈົ່ງຈູ້
中鉅實業
ຮ້ານຄຳພູວົງ
PV
PHOUVONG JEWELRY
SCNG
SOMCHAYNEUK GROUP

**ຜູ້ຊີ້ນຳ**
ທ່ານ ສິງຄຳ ວົງພະຈັນ

**ຄະນະຊ່ຽວຊານທີ່ປຶກສາ**
ທ່ານ ສີສຸພັນ ແສງສະຫວັນ
ທ່ານ ວິເສດ ສະແຫວງສຶກສາ
ທ່ານ ທອງດາ ສຸພາສິດ
ທ່ານ ຄຳຫວັນ ດາລາວົງ

**ຄະນະບັນນາທິການ**
ທ່ານ ປອ. ພິດສະໄໝ ບຸນວິໄລ ຫົວໜ້າ
ທ່ານ ອັນທະວີ ວົງພະຈັນ ຮອງ ບກ
ທ່ານ ເປຄຳ ລໍຄຳສອນ ຮອງ ບກ

**ກອງບັນນາທິການ**
ນາງ ກົງໃຈ ແສງອຳພັນ
ນາງ ສຸພາວັນ ທອມສະນິດ
ນາງ ປາກາລັກ ພົມມີໄຊ

**ອອກແບບ-ຈັດໜ້າ**
ນາງ ນິດຕາ ຄຸນປາກດີ